ໄຟປະຕິວັດ
ລຸກເປັນແປວ

ໂດຍ: ຈຳປາແດງ

ໄຟປະຕິວັດ
ລຸກເປັນແປວ

ໂດຍ: ຈໍາປາແດງ

ສໍານັກພິມຈໍາໜ່າຍ ສປປລາວ

1979

ໄພປະຕິວັດລຸກເປັນແປວ

ເມືອງເຊບັ້ງໄຟເປັນເມືອງຫນຶ່ງທີ່ອຸດົມສົມບູນໄປດ້ວຍເຂົ້າຢູ່ໃນນາ ປູປາຢູ່ໃນນ້ຳ, ມີພືດພັນຜົນລະປູກອັນດົກຫນາແລະ ສັດລ້ຽງຢ່າງມາກມາຍ. ເມືອງເຊບັ້ງໄຟແມ່ນໄດ້ນາມມາຈາກສາຍນ້ຳເຊບັ້ງໄຟ ຊຶ່ງເປັນຫນຶ່ງໃນສາຂາຂອງແມ່ນ້ຳຂອງທີ່ສວຍງາມ.

ເມືອງເຊບັ້ງໄຟ ເປັນເມືອງທີ່ມີແຜ່ນດິນຮາບພຽງແລະນອນຢູ່ລຽບແຄມແມ່ນ້ຳຂອງ ຈາກແດນທ່າແຂກລົງໄປທາງທິດໃຕ້, ມີພົນລະເມືອງ ສາມຫມື່ນເກົ້າພັນກວ່າຄົນ, ປະຊາຊົນທົ່ວເມືອງເກືອບ ໑໐໐%. ປະກອບອາຊີບເປັນຊາວກະສິກອນ, ແຕ່ລະປີ ນອກຈາກປູກເຂົ້າເປັນອາຊີບຕົ້ນຕໍແລ້ວ ພິເສດແມ່ນຍັງປູກປາດູດ, ຫມາກໂມ, ອ້ອຍ ແລະ ຫມາກພ້າວ ຢ່າງຫລວງຫລາຍ. ລັກສະ

ນະຂອງບ້ານເຮືອນ ເຂົາເຈົ້າມັກຢູ່ເຮືອນຮ້ານ, ພື້ນ ແລະ ຝາແອ້ມແປ້ນມຸງສັງກະສີ ຫລື ຫຍ້າຄາ ຢູ່ແຕ່ລະບ້ານ ລ້ວນແຕ່ມີຕົ້ນຫມາກ, ຕົ້ນພ້າວ, ຕົ້ນມ່ວງ, ຕົ້ນມີ້, ຕົ້ນ ຂາມ ແລະ ກົກດອກໄມ້ນາໆຊະນິດ ປົງຊອນຂຶ້ນຢູ່ຫນ້າ ບ້ານ ແລະ ແຄມເຮືອນຂຽວອຸ່ມຫຸ່ມ.

ເມືອງເຊບັ້ງໄຟມີສາຍທາງລົດເສັ້ນດຽວ ຄືຈາກທ່າ ແຂກລຽບແຄມແມ່ນ້ຳຂອງ ລົງຈຸປາກເຊບັ້ງໄຟ ຍາວປະ ມານ ໓໐ ກ່ວາຫລັກ ປະຊາຊົນຊາວສວນ ຊາວນາ ພາກັນຕັ້ງບ້ານເຮືອນຕິດຕໍ່ຫນໍ່ເນືອງ ລຽບຕາມແຄມຖະ ຫນົນ ແຕ່ເຫນືອຈົນຮອດໃຕ້. ດິນແດນ ເມືອງເຊບັ້ງໄຟ ເປັນບ່ອນອຸດົມຮັ່ງມີ ແຕ່ແລ້ວປະຊາຊົນຊ້ຳພັດຕົກທຸກໄດ້ ຍາກ, ລະບອບປົກຄອງເກົ່າ ໄດ້ວາງກົດຫມາຍຫລາຍ ສິ່ງຫລາຍຢ່າງອອກມາ ເພື່ອຜູກມັດຊາວນາ. ໂດຍສະ ເພາະແມ່ນລະບອບພາສີ, ຈຳກັດການຜະລິດ, ການບືດ ຈ່ອງດິນດອນຕອນຫຍ້າ, ເກັບເກນແຮງງານ, ປະຊາຊົນ ບໍ່ມີສິດເສລີພາບໃນການດຳລົງຊີວິດຢູ່ ແລະ ອື່ນໆ...ອີກບໍ່ ພໍພວກອາດຍາສິດຄອບຄອງ ພັດສວຍໂອກາດສໍ້ລາດບັງ ຫລວງ ເພື່ອກອບໂກຍ ແລະ ສ້າງຮັ່ງຄູນມີແກ່ສ່ວນຕົວ ຢ່າງທະວີຄູນ ພວກເຂົາຫາທຸກໂອກາດ ຫາທຸກຊ່ອງ

ທາງ ສະເຫວີ່ຍຄວາມສຸກຢູ່ເທິງປາດເຫື່ອ ປາດເລືອດ ຂອງປະຊາຊົນ. ດັ່ງນັ້ນໃນຫລາຍສັດຕະວັດຜ່ານມາ ປະຊາຊົນເມືອງເຊບັ້ງໄຟ ຈຶ່ງຕົກຢູ່ໃນສະພາບແຫ່ງຄວາມໂງ່ຊ້າຫລ້າຫລັງ ແລະ ເປັນຂ້ອຍຂ້າໃຫ້ແກ່ພວກອາດຍາສິດຢ່າງຫລົ້ມຫົວຈົມທ້າຍ... ເນື່ອງຈາກສະພາບການຂອງໂລກ ແລະ ໂດຍສະເພາະແມ່ນຢູ່ລາວ ມີການຫັນປ່ຽນມາຫລາຍຍຸກສະໄຫມ, ຕົກມາເຖິງທ້າຍສັດຕະວັດທີ ໒໐ ນີ້, ປະຊາຊົນຊາວເມືອງຜູ້ຖືກກົດຂີ່ອັບໄພສານ ຈຶ່ງມີໂອກາດໄດ້ລຸກຮືຂຶ້ນ ທັບມ້າງຊີກໄສ້ແຫ່ງລະບອບລາຊານັ້ນມຸ່ນທະລາຍລົງຢ່າງສົບເຊີງ.

x x

x

* ມື້ຫນຶ່ງໃນລະດູໜາວຂອງເດືອນມັງກອນ ໑໙໖໕ ເມື່ອຮູ້ຂ່າວວ່າຢູ່ທ່າແຂກມີຂະບວນ ລຸກ ຮື ຂຶ້ນ ຕໍ່ສູ້ ເພື່ອຄວາມເປັນທຳແລ້ວ ຊາວເມືອງເຊບັ້ງໄຟໃຜໆ ກໍຕົກໃຈແລະ ຕື່ນເຕັ້ນ. ຜູ້ໄປໄຮ່ກໍຟ້າວຫລົບຄືນມາ ຜູ້ໄປນາກໍຟ້າວຕ່າວຄືນເມືອບ້ານ, ໄທບ້ານໄທເມືອງທີ່ພວມທຳມາຫາກິນຢູ່ກາງປ່າກາງດົງກາງແມ່ນ້ຳລຳທານ ກໍຟ້າວເອີ້ນເອົາລູກເອົາຫລານຫລຸຫລັ່ງເຂົ້າເມືອງແຂວງເຫມືອນດັ່ງ

ມີເຫດຮ້ອນ. ມື້ນັ້ນຢູ່ຕົວເມືອງ ແລະ ບາງບ້ານນ້ອຍຢູ່ລຽບແຄມຂອງ ແຄມເຊມັກມີຄົນໄປປີ້ນເປັນຈຸ ເປັນຈຸ້ມຢູ່ກາງບ້ານແລ້ວໂອ້ລົມຊຸບຊິບຕໍ່ກັນໃນຍາມໃກ້ຈະຄ່ຳ. ຄັນເຖິງຍາມຕາເວັນຕົກແລ້ວ ມີຊຸມຜູ້ເຖົ້າສ່ວນຫນຶ່ງຢູ່ທາງແຄມເຊຊຶ່ງຖືວ່າມີເວດມົນກົນຄາຖາ ຫລືຫມໍທັນຫມໍທວາຍກໍພາກັນສ່ຽງໂຊກສ່ຽງໄຊເປັນການໃຫຍ່, ຫມໍບາງຄົນເວົ້າວ່າ: "ບ້ານເມືອງຊິເປັນຮ້ອນ", ບາງຄົນພັດເວົ້າຕ່າງວ່າ: "ປີນີ້ເປັນປີພະອິນຊີລົງນິລະມິດຢູ່ບ້ານ ຫົວລ້ານຊິແຕກຫນີ" ຫລືເວົ້າຕາມຕຳລາບູຮານກ່າວໄວ້: "ປີນີ້ເປັນປີນ້ຳຂອງຈະພົດຂຶ້ນລ້າງສ່ວນເມືອງເຮົາ ຕໍ່ຫນ້າຈະເປັນສຸກ" ແລະຫລາຍຫມໍກໍເວົ້າໄປຕ່າງໆບາງ...

ນັບແຕ່ມື້ນັ້ນມາ ບັນຍາກາດທົ່ວໄປຢູ່ເມືອງເຊບັ້ງໄຟປະກົດວ່າມິດງຽບ ແລະເສົ້າຫມອງລົງຕື່ມສຽງຂັບລຳແວວວອນຂອງບ່າວສາວທີ່ເຄີຍໄດ້ຍິນຢູ່ລຽບແຄມຂອງໃນ ຍາມຫາປາ, ຍາມບົວລະບັດໃນປ່າຢູ່ໃນສວນ ແລະ ຍາມເກັບດອກໄມ້ປ່າກໍຈາງຫາຍໄປ. ສິ່ງທີ່ຍັງເຫລືອໄວ້ກໍມີແຕ່ແສງແດດກ້າ ແລະ ກະແສລົມພັດຕ້ອງປາຍພ້າວແລະກິ່ງກ້ານກົກບົກເປັນບາງຄັ້ງຄາວ, ຢູ່ຕາມສາຍທາງຫລວງເຂົ້າສູ່ເມືອງທ່າແຂກກໍຕົກຢູ່ໃນສະພາບ ຫມົນ ຫມອງ ເຊັ່ນ ດຽວ

ກັນ, ພວກທະຫານ "ເພງເງົາ" ກວດກາເວນຍາມຢ່າງເຄັ່ງຄັດ, ຊາວເມືອງບໍ່ມີຜູ້ໃດກ້າທ່ອງທ່ຽວ, ເມື່ອຮອດຍາມຄ່ຳມາ ລົດຈິບຈຸລະສານຄັນແລ່ນຂຶ້ນ ແລ່ນລົງຢູ່ບໍ່ຂາດ, ພວກເຂົາຕິດໄຟນີໃສ່ຫົວລົດແລ້ວ ເອັ້ນຫາ ກອງ ບັນ ຊາການເປັນປະຈຳ, ຢູ່ແຄມທົ່ງໄຮ່ທົ່ງນາ, ແຄມແມ່ນ້ຳລຳເຊ, ບ່ອນໃດກໍມີທະຫານເປັນຫມູ່ເປັນຫມວດລີ້ຊ່ອນ ຢູ່. ດົນໆສຽງປືນດັງຂຶ້ນເທື່ອຫນຶ່ງ, ສະພາບການບ້ານເມືອງຄືຈັ່ງວ່າເຄັ່ງຕຶງຂຶ້ນນຳທຸກມື້, ຊາວເມືອງເຊບັ້ງໄຟໄພງກໍວິຕົກເປັນຫ່ວງ ແລະ ສະທ້ານຢ້ານກົວ.

ຂ່າວຊ່າລືຢູ່ເມືອງທ່າແຂກໄດ້ຜ່ານພົ້ນໄປ ບໍ່ພໍເທົ່າໃດມື້. ເຫດການນ້ອຍຫນຶ່ງໄດ້ກຳເນີດເກີດຂຶ້ນ, ເລື່ອງລາວມັນເປັນແນວນີ້: ຢູ່ທີ່ຫນອງບົກ ມີຜູ້ຊາຍອາວຸໂສຄະນະຫນຶ່ງເປັນຜູ້ສົນໃຈນຳບັນຫາທ່າແຂກຫລາຍທີ່ສຸດ, ບໍ່ວ່າຍາມໃດພວກເພິ່ນກໍມັກຣີບຕອງຄົ້ນຄິດ ແລະສົ້ງຊອມເບິງເຫດຮ້າຍແຕ່ລະມື້ແຕ່ລະຊົ່ວໂມງ, ອາດຈະເວົ້າວ່າທຸກໆມື້ ຄັນຫາກເຖິງຍາມກິນແລງແລ້ວ ພວກເພິ່ນເຄີຍນັດພົບກັນຢູ່ທີ່ເຮືອນຂອງຈານບົນເພື່ອຖົກຖຽງບັນຫາ, ໃນຫມູ່ຄະນະຂອງເພິ່ນບໍ່ຫລາຍຄົນປານໃດດອກມີພຽງແຕ່ສີ່ - ຫ້າຄົນສ່ວນຫນຶ່ງຊ້ຳພັດຫົວຫງອກແລ້ວ, ມີຫລາຍເທື່ອເວລາ

ພົບກັນ ພໍ່ເຖົ້າຊຽງຊຽນເຄີຍເວົ້າປອກແກມອື່ຫລືວ່າ ຄົນຜິນຂາວຄືຊຸມເຮົາແມ່ນມີກຽດ ແລະ ຫາຍາກ ເພາະວ່າມັນເປັນສັນຍາລັກອັນຫນຶ່ງບອກໃຫ້ຮູ້ວ່າພວກເຮົາໄດ້ ມີຊີວິດຢູ່ເທິງຫນ່ວຍໂລກດວງຊຽວນີ້ເຫິງ ນານ ພໍ ສົມ ຄວນ, ໂລກບາງແຫ່ງກໍເປັນຫນ້າຮັກຫນ້າຖະຫນອມ ແລະບາງແຫ່ງກໍເປັນຫນ້າຫນ່າຍຊັງ... ຄຳເວົ້າແຕ່ລະຄຳທີ່ ເພິ່ນເວົ້າອອກ ຫມູ່ຄະນະຂອງເພິ່ນມັກຄືດນຳທີ່ສຸດເພາະວ່າເພິ່ນເວົ້າມີເຫດຜົນຫລາຍບັນຫາ. ໃນຄືນຫນຶ່ງເປັນຄືນສຸດທ້າຍຂອງການປະຊຸມລັບທີ່ໄດ້ຈັດຂຶ້ນຢູ່ບ້ານເຖົ້າຊຽງຊຽນ (ບ້ານຊຽງຫວາງທົ່ງ) ຈາກຫນອງບົກໄປທາງເຫນືອປະມານ ໆ ຫລັກ ພາຍຫລັງຄົບຫນ້າ ແລະ ອັດປະຕູແຈບແລ້ວ ທ້າວສຳລີເວົ້າຂຶ້ນຄ່ອຍໆຢ່າງລະມັດລະວັງວ່າ:

– ຖ້າພວກເຮົາຫາກເຮັດຂຶ້ນຊິບໍ່ກາຍເປັນເລື່ອງໃຫຍ່ບໍ່ ? ຄວາມເຮົາຄິດ, ເລື່ອງນີ້ມັນບໍ່ແນ່ນອນບາງທີຊາວເມືອງອາດຈະເລຍຮອດເລືອດເນື້ອ, ຄັນຄວາມຫວັງຫາກລົ້ມລະລາຍຜູ້ອອກຫນ້າ ອອກຕາຄືຊຸມເຮົານີ້ຊິບໍ່ຖືກເຈົ້ານາຍເພິ່ນຈັບກຸມ ຫລືລອບຂ້າລອບຍິງບໍ່?

ເມື່ອສຳລີເວົ້າບຸຕິລົງ, ຢູ່ໃນຫ້ອງເຮືອນອັນນ້ອຍໆແລະຄັບແຄບໄດ້ຕົກຢູ່ໃນຄວາມງຽບເຫງົາ, ບໍ່ມີສຽງເຫນັງຕີງ

ພວກເພິ່ນພາກັນນັ່ງອ້ອມແສງຕະກຽງນ້ອຍ ຮຸ່ງພໍມົນ ມຽງ. ຄອບໆແສງໄຟແຕກປ້ອບແປັບຂຶ້ນ, ຮູບພາບອັນເສົ້າຫມອງໃນຍາມລາຕີໄດ້ເຮັດໃຫ້ທຸກຄົນຄົ້ນຄິດຈົນຫນັກສະຫມອງ. ພວກເພິ່ນບໍ່ມອງເຫັນຫົນທາງໃດອື່ນອີກແລ້ວ, ເຈົ້ານາຍເພິ່ນເປັນຄົນມີປັນຍາສູງ. ມີທະຫານເປັນຫມື່ນເປັນແສນ, ມີລົດເກາະ, ລົດຕັງ, ມີຍົນບິນຢູ່ຟ້າ, ນາດຫລຽວເບິ່ງຊາວບ້ານຊາວເມືອງພັດມີແຕ່ຫອກແຕ່ງ້າວ, ມັນຕັ້ງໄກກັນຫລາຍໂພດ ເຮັດແນວໃດຊິສູ້ເພິ່ນໄດ້ ..ຄິດແລ້ວໃຜໆກໍນ້ອຍໃຈ, ວັນເວລາໄດ້ລ່ວງກາຍໄປຊັກໄຊ້, ຂ້ອນເດິກເຂົ້າມາ ແຕ່ກົງກັນຂ້າມເລື່ອງທີ່ນຳມາປຶກສາຫາລືກັນພັດຍັງບໍ່ທັນລົງລອຍກັນເທື່ອ, ໃນເວລານັ້ນບັນຍາກາດຍັງສະຫງົບຢູ່ ບັງເອີນມີສຽງຂອງຄົນຜູ້ຫນຶ່ງແຕກດັງຂຶ້ນໃນເງົາມືດ, ຄວາມເວົ້າອັນຫນັກແຫນ້ນໄດ້ກະຈາຍອອກມາວ່າ :

– ຕາມເຮົາ ອີງໃສ່ສະພາບປະຈຸບັນນີ້ແມ່ນເຖິງເວລາແລ້ວທີ່ຊາວເມືອງຈະຕ້ອງພາກັນລຸກຂຶ້ນປົດແອກອອກຈາກບ່າ, ປົດໂສ້ອອກຈາກຕີນ ແລະ ໄຂຫູໄຂຕາໃຫ້ມອງກວ້າງເຫັນໄກ...ພໍ່ເຖົ້າຊຽງຂຽນຮີບຢາເຂົ້າປອດຄັກໆບາດຫນຶ່ງແລ້ວພົ່ນຄວັນອອກຮູດຍາວໆ ເພື່ອເອົາແຮງ,

ບຶດຫນຶ່ງ ເພິ່ນ ຈຶ່ງເວົ້າຕໍ່ດ້ວຍ ສຳນຽງຊຸບຊຶມໃນລຳຄໍວ່າ: ພະພຸດທະເຈົ້າເພິ່ນກ່າວໄວ້ວ່າ ໂຕເອງຕ້ອງເປັນທີ່ເພິ່ງຂອງໂຕເອງ. ຊາວເມືອງເຮົາ ຜູ້ໃດກໍມັກຄວາມຢູ່ເຢັນເປັນສຸກ. ແຕ່ໃນເມື່ອບໍ່ມີສິ່ງເຫລົ່ານີ້ ພວກເຮົາຕ້ອງເປັນຜູ້ສະແຫວງຫາເອົາເອງ. ຄວາມສຸກບໍ່ອາດເກີດຂຶ້ນດ້ວຍຕົວຂອງມັນເອງໄດ້ ຖ້າຫາກປາສະຈາກການດັດສ້າງຂອງຄົນ ຄັນຄົນໃນເມືອງເຮົາຫາກຕັດສິນໃຈ, ເປັນອັນຫນຶ່ງອັນດຽວກັນແລ້ວ ເຊື່ອຫມັ້ນວ່າບໍ່ມີເຈົ້ານາຍຄົນໃດເຮັດຟ້າເຮັດໄຟຂຶ້ນໄດ້...ຫວ່າງແລ້ວນີ້ເດ! ປູ່ເມືອງຫ້ວຍຊາຍ (໑) ເຂົາກໍບັງກ້າລຸກຂຶ້ນ. ບາດນາເບິ່ງເມືອງເຮົາກໍເປັນເມືອງໃຫຍ່. ອຸດົມສົມບູນ ແລະ ມີມູນເຊື້ອຕໍ່ສູ້ຕ້ານພວກຮຸກຮານມາຫລາຍເຊັ່ນຄົນແລ້ວເປັນຫຍັງຊິເຮັດບໍ່ໄດ້...

ຫລັງຈາກເວົ້າຫມົດປະໂຫຍກ, ຫມູ່ຄະນະຂອງເພິ່ນໃນໆ ກໍງຶກຫົວເຫັນດີ ບຶດຫນຶ່ງຈານນິນພັດຖາມຂຶ້ນວ່າ

-- ເລື່ອງປູ່ຫ້ວຍຊາຍມັນເປັນແນວໃດແທ້ ຣື!

– ເລື່ອງມັນເປັນແນວນີ້, ເມືອງຫ້ວຍຊາຍເປັນເມືອງນ້ອຍ, ແຕ່ຫາກເປັນດິນດອນທີ່ອຸດົມສົມບູນຮັ່ງມີ, ປູ່ຫັ້ນມີຊາວໄຮ່ນາ, ພໍ່ຄ້າຊາວຂາຍ ແລະ ມີກຳມະກອນຄືເມືອງ

---

(1) ເມືອງຫນຶ່ງຂອງແຂວງໄຊຍະບູລີ (ໃນປະຈຸບັນ)

ເຮົານີ້ລະ! ຊັ້ນຄົນທີ່ກ່າວມານີ້ ລ້ວນແຕ່ຖືກກົດຂີ່ຂູດຮີດ ຢ່າງຫນັກຈາກເຈົ້ານາຍ. ເຂົາເຈົ້າບໍ່ມີໂອກາດໄດ້ຮັບ ຄວາມສຸກ ແລະ ອີ່ມຫົວດ້ວຍຄວາມພໍໃຈຈັກເທື່ອ; ລະ ບອບປົກຄອງ ແມ່ນລະບອບສັ້ລາດບັງຫລວງ ແບບປາ ໃຫຍ່ກິນປານ້ອຍຫລືເຮົາເຄີຍເວົ້າວ່າ ໄຫໃຫຍ່ລົ້ນໄຫນ້ອຍ ພັດບໍ່ເຕັມ, ຜ່ານການທົນທຸກທໍລະມານເປັນເວລານານ ແລ້ວນັບມື້ນັບຫນັກເຂົ້າ. ເຫັນວ່າອົດບໍ່ລົງທົນບໍ່ໄຫວແລ້ວ ເຂົາກໍພ້ອມກັນລຸກຮືຂຶ້ນຊຸ້ນບ່າ! ຫລັງຈາກລຸກຂຶ້ນແລ້ວ ກໍປະກາດຂຶ້ນກັບລັດຖະບານປະສົມໂດຍກົງ, ໃນໄລຍະນັ້ນ ເຂົາເຈົ້າມີຄວາມສະດວກຢ່າງຫນຶ່ງເພາະວ່າມີກໍາລັງທະ ຫານຫນູນຊ່ວຍ, ກອງຮ້ອຍນັ້ນເປັນທະຫານກ້າວຫນ້າມີ ແນວຄິດກ້າຫານ ແລະ ເປັນໃຈ ສະນັ້ນຈຶ່ງສະດວກທຸກ ຢ່າງ.

- ໂອ໋! ຫວ່າງແລ້ວບິນຂ່າວປູ່ດອກ.

- ຫລັງຈາກການຕໍ່ສູ້ບຸດຕິລົງແລ້ວເປັນແນວໃດ ?.

- ດຽວນີ້ຫວະ? ດຽວນີ້ເຂົາສະບາຍ, ສະພາບເສດຖະ ກິດກໍ່ຄືຊີວິດການເປັນຢູ່ ນັບມື້ນັບດີຂຶ້ນ ການໄປມາລະ ຫວ່າງສອງເຂດເຊັ່ນວ່າ ຄ້າຂາຍ, ແລກປ່ຽນເສດຖະກິດ, ໄປຢື້ປາມຍາດຕິພີ່ນ້ອງ ແລະ ໄປຫລິ້ນໄປທ່ຽວສະບາຍດີ

ຫຍັງນີ້.

ເວົ້າມາຮອດຕອນນີ້ ຫມູ່ຄະນະຂອງເພິ່ນຮູ້ສຶກວ່າເບົາສະຫນອງ ແລະ ລົງອົກລົງໃຈ. ພວກເພິ່ນພາກັນຄິດນຳຫົນທາງຕໍ່ສູ້, ຄຶດຮອດມື້ໄດ້ຮັບໄຊຊະນະ ແລະ ຄຶດຮອດມື້ທີ່ບ້ານເມືອງຈະໄດ້ຢູ່ເຢັນ ເປັນສຸກ, ສະ ຫນຸກ ສະ ບາຍເຫມືອນດັ່ງເມືອງຫ້ວຍຊາຍ, ພວກເພິ່ນເຊື່ອຫມັ້ນພໍ່ເຖົ້າຊຽງຊຽນທີ່ສຸດ. ພໍ່ເຖົ້າຊຽງຊຽນເປັນຄົນເຖົ້າແລ້ວແຕ່ມັນສະຫມອງຍັງດີ, ປັນຍາຍັງເລິກ, ເວົ້າມີເຫດມີຜົນ, ຊາວບ້ານຊາວເມືອງໃຜໆ ກໍ່ຮັກແພງນັບຖືເພິ່ນ.

ຄືນນັ້ນລົມຫນາວຄ່ອຍພັດຜ່ານໄຊຍນາ, ໂງ່ນນ້ຳຫມອກຄ່ອຍໆ ເລື່ອນລອຍເຂົ້າປົກຄຸມເມືອງເປັນຄວັນ ສີ ຂາວ ຄືນອງຝ້າຍ, ເດິກດື່ນທ່ຽງຄືນແລ້ວໄດ້ຍິນແຕ່ສຽງຫມາເຫົ່າຫອນຢູ່ຫົວບ້ານ ແລະກ້ຽວມາໃສ່ແຄມປ່າຊ້າຝາກທົ່ງນາ, ພໍ່ເຖົ້າຊຽງຊຽນນອນພິກຄຶງໄປມາຫລາຍເທື່ອ ແຕ່ ຍັງ ບໍ່ຫລັບ, ເພິ່ນຄຶ້ນຄິດຫລາຍສິ່ງຫລາຍຢ່າງ, ຄິດບັນຫານີ້ແລ້ວຕໍ່ໃສ່ບັນຫາໃຫມ່ເລື້ອຍໆ... "ສາມສິບປີຫລັງນີ້ຈັ່ງແມ່ນຊາດມັນ, ນັບແຕ່ມື້ມີຊີວິດຮູ້ຈັກຄວາມມາ ຜູ້ເປັນພໍ່ເປັນແມ່ຮັກໆແພງໆ, ຖະຫນຸຖະຫນອມດັ່ງດວງໃຈ, ພວກເພິ່ນບໍ່ເຄີຍດ່າເຄີຍຕີຈັກເທື່ອ, ພວກ ເພິ່ນ ສັ່ງ ສອນ ແຕ່

ຄວາມດີຄວາມງາມຈາກນ້ອຍຈົນໃຫຍ່, ຈາກໃຫຍ່ຈົນເຖົ້າ ປານນີ້ບໍ່ມີໃຜເຮັດໃສ່ຄືຈ່າເພັງ, ມື້ນັ້ນກໍນ້ອນເປັນຫ່ວງນໍາ ລູກເຈັບເປັນນີ້ລະ? ແອ່ວກິນປູກິນປາ, ຈັບຄັນເບັດໄປຕຶກ ປູ່ແຄມໜອງຫັ້ນ, ເມື່ອໄດ້ສອງສາມໂຕກໍຟ້າວແລ່ນມາ ບ້ານ, ຕັ້ງໃຈຊິມາປີ້ງໃຫ້ລູກ, ເບິ່ງໃນງມັດປູ່ແອບຄືບໍ່ທັນ ເດີກທັນດຶ່ນຫຍັງບ່າ! ຟ້າມືດຊຸ້ມລຸ້ມນີ້ແລ້ວ, ບັກຈ່າເພັງ ໃຜຊິບໍ່ຮູ້ຫນ້າມັນຕັ້ງແກ້ງຫາເລື່ອງໃສ່ວ່າ " ເປັນໃຈແນວ ລາວ", ໄປພົວພັນ "ຄອມມູນິດ", ເມື່ອເວົ້າເລື່ອງຈິງສູ່ຟັງ ພັດອ້າງວ່າຖຽງຄວາມ, ບໍ່ເຄົາລົບນັບຖືເຈົ້ານາຍ, ຫາວ່າ ມີອະພິສິດເຫນືອກົດໝາຍ, ມັນຍົກຝ່າມືຕົບຫນ້າຫມົດ ແຮງຈົນແນງຫົງຫງັ່ງແຕກອອກ, ເມື່ອຕັ້ງສະຕິຂຶ້ນໄດ້ ກໍ ຫລຽງຮ້າຍແດກໃສ່ຫນ້າມັນສາ, ຄິດວ່າຊິຊຶກຄືນຈັກບາດ ແຕ່ບໍ່ຄອບ ສະພາບຕົນຊ້ວງຢຽບປາກນົກຍັງມີຢູ່, ມັນຊິ ເປັນເລື່ອງເປັນລາວໃຫຍ່ຂຶ້ນ, ປານນັ້ນຍັງບໍ່ພໍໃຈ ມັນສັ່ງ ທະຫານມັດສອກແລ້ວຄຸມຕົວເຂົ້າເມືອຄ້າຍ, ຄັນຊາວບ້ານ ບໍ່ໄປຕໍ່ສູ້ເອົາ ຄືຊິບັງເຫັງພວກເຂົາຊິປ່ອຍ, ບາງເທື່ອຊີວິດ ອາດຈະມຸດມອດລົງແລ້ວກໍເປັນໄດ້... ແມ່ນ! ຈ່າເພັງຢາກ ເຮັດໃຫ້ສິ້ນໃຈ, ເລື່ອງນັ້ນເລີນບໍ່ພໍໃຈນັບແຕ່ມື້ໄປລົມອີຄໍາ ພອນມື້ນັ້ນ, ນາອ້ອນວອນວ່າປາກເປັນພີ່ເປັນນ້ອງ, ແຕ່

ໃຜຊິຫ້າມຄວາມຮັກໄດ້, ລູກຫລານເຂົາບໍ່ຕອບສະໜອງ ກໍແມ່ນເລື້ອງຈຳເປັນ ຂອງມັນນີ້ຊູ້ມີສາວແລ້ວ, ປານນັ້ນກໍ ຍັງຊູຊິປູ່, ຄິດໄປຄິດມາເປັນຕາໜ່າຍ ຈັກແມ່ນທະຫານ ແບບໃດ, ທີ່ຜ່ານມາເພິ່ນເວົ້າກາຍຫູເລື້ອຍໆວ່າ: ທະຫານ ເປັນຮົ້ວປ້ອງກັນຊາດ-ຕໍ່ຕ້ານສັດຕູຮຸກຮານ ! ບາດມາເບິ່ງ ເປັດໄກ່ປະໄວ້ປູ່ບຳລຸງໄຮ່ ຖຽງນາກໍ່ໄປລັກກິນຈົນກ້ຽງເອີດ ເຕີດ, ບຶດໜຶ່ງໄດ້ຍິນຂ່າວບ້ານໃຕ້ເສຍຄວາຍ, ຄາວໜຶ່ງ ໄດ້ຍິນຂ່າວບ້ານເໜືອມີທະຫານປຸ້ນຈີ້,ຄົນຂ້າກັນຍິງກັນ, ກໍລະນີຂົ່ມຂືນຍິງສາວ, ຄະດີຜູ້ ຮ້າຍ ຊາຍ ໂຈນ ເກີດ ຂຶ້ນ ເລື້ອຍໆ... ຈັ່ງແມ່ນວຸ້ນວາຍບ້ານເມືອງອັນນີ້ "ຄິດມາຮອດ ນີ້ບັງເອີນສຽງປືນດັງຂຶ້ນສາມນັດ, ສຽງປືນດັງຂຶ້ນຕິດໆກັນ ຢູ່ທາງຫາງບ້ານ, ບຶດໜຶ່ງປະກົດມີສຽງຄົນຮ້ອງໄຫ້ຂຶ້ນ ແຊວໆອາດຈະແມ່ນທະຫານ " ຜີບ້າ " ນັ້ນໄປກໍເລື້ອງ ອີກແລ້ວ...

ພໍ່ເຖົ້າ ຊຽງ ຂຽນ ເຊືອບ ຫລັບ ໄປ ຊົ່ວ ໄລ ຍະ ໜຶ່ງ ບັງ ເອີນ ໄດ້ຍິນສຽງລົດທະຫານແລ່ນຂຶ້ນແລ້ນລົງຜິດປົກກະຕິ ລົດແລ່ນເຂົ້າເມືອງທ່າແຂກບໍ່ຂາດສາຍ ໃນຍາມເດິກໄດ້ ກໍ່ສຽງເບື່ອງນັ້ນ ຂຶ້ນ ຄັບ ບ້ານ, ພໍ່ ເຖົ້າ ຊຽງ ຂຽນຟ້າວລຸກ ຂຶ້ນມາສ່ອງເບິ່ງຂ້າງຝາເຮືອນ, ເວລານັ້ນເຫັນລົດເກາະ,

ລົດຕັງລົດແກ່ປືນໃຫຍ່ ແລະ ລົດຂົນທະຫານແລ່ນເປັນສາຍຂຶ້ນເມືອ, ອາດຈະແມ່ນເຂົາຍ້າຍກຳລັງເຂົ້າຄຸ້ມຂະບວນປະທ້ວງຢູ່ທ່າແຂກ ຫລືໄປຕັ້ງທັບຢູ່ຜາຮອມ (໑) ເພາະວ່າສອງມື້ກ່ອນນີ້ໄດ້ຍິນວິທະຍຸປະເທດລາວ ປະກາດວ່າ ທະຫານວຽງຈັນລະເມີດສັນຍາຢຸດຍິງກໍເລີຍຖືກທະຫານຝ່າຍບັນດາກຳລັງຮັກຊາດບຸກຕີຕະເຫລີດເຂົ້າມາໃກ້ທ່າແຂກ ... ຄັນເຂົາຍົກເອົາກຳລັງໃຫຍ່ອອກຈາກເມືອງນີ້ໄປແລ້ວມັນກໍເປັນໂອກາດດີລະຕີ! ບຶດຫນຶ່ງເລີຍໄກ່ຂັນຂ້ອນແຈ້ງ ເພິ່ນລຸກຂຶ້ນມາຝົນຫອກຊວາດງຢູ່ປາຍຊານແລ້ວເພິ່ນໄດ້ຫໍ່ເອົາເຂົ້າ, ຮ່າຍເອົານ້ຳໃສ່ບົດົງກຽມຕົວອອກໄປສູ່ບ່ອນນັດຫມາຍ.

ຕອນເຊົ້າມື້ໃຫມ່ໄດ້ວຽນມາເຖິງ. ຫລັງຈາກດວງຕາເວັນຂຶ້ນພົ້ນຂອບຟ້າແລ້ວ ແສງແດດສີເຫລືອງອ່ອນກໍເລີ່ມກະຈາຍລົງມາ, ອາກາດຂອງວັນນັ້ນຊຸ່ມເຢັນຜິດປົກກະຕິ, ຊາວເມືອງເຊບັ້ງໄຟຕັ້ງແຕ່ບ້ານຫນອງຫລົ່ມ, ດອນຂຽວໃຕ້, ດອນຂຽວກາງ, ດອນຂຽວເຫນືອ, ບ້ານບຶງສານທ່າ, ບ້ານນາມັນປາ, ບ້ານຫນອງບົກ ແລະ ບ້ານອື່ນໆ

---

(1) ແມ່ນຊາຍແດນເຂດປົດປ່ອຍລະຫວ່າງເມືອງນະຫາໄຊກັບເມືອງທ່າແຂກ ແລະ ເປັນຈຸດປັກຫລັກຫມາຍຈຸດໜຶ່ງໃນສັນຍາ.

ຂຶ້ນເມືອທາງເຫນືອໄດ້ຢູ່ໃນທ່າກຽນພ້ອມ, ມື້ນັ້ນບໍ່ມີຄົນ
ທາງໃດຈະໄປນອກອອກນາ,ເຮືອນຊານບ້ານຊ່ອງທຸກຫລັງ
ຖືກອັດປະຕູ, ໂຮງຮຽນ, ໂຮງຫມໍ ແລະ ໂຮງການກໍ່ມິດອິມ
ຊິມບໍ່ມີຄົນເຄື່ອນໄຫວ, ເມື່ອຮອດໂມງນັດ, ປູ່ເທິງຜືນແຜ່ນ
ດິນຂອງເມືອງເຊບັ້ງໄຟ ປະກົດມີສຽງຄ້ອງສຽງກອງ ແລະ
ສຽງຄົນຮ້ອງໂຮອຶກກະທຶກຂຶ້ນ, ສຽງຟົດສະຫນັ່ນລັ່ນສະ
ເທືອນໃນຍາມນັ້ນມັນໄດ້ບົງບອກໃຫ້ຮູ້ ວ່າ ນ້ຳ ໃຈ ຮັກ ຊາດ
ຮັກບ້ານເກີດເມືອງນອນ ແລະ ຄວາມຄຽດແຄ້ນແຫນ້ນໃຈ
ຂອງຊາວຜູ້ຖືກກົດຂີ່ໄດ້ໄຫມ້ລຸກລາມ ອອກແລ້ວ. ຄວາມ
ທຸກລະເກີນຂົ້ນຂຶ້ນຍ້ອນລະບອບປົກຄອງ ຊຶ່ງ ມີ ປາກ ບໍ່ໄດ້
ເວົ້າ, ມີຕາບໍ່ໄດ້ເບິ່ງອັນງາມ. ມີຫູບໍ່ໄດ້ຟັງອັນມ່ວນ ມັນໄດ້
ບົ່ມຂັງໄວ້ຕັ້ງນານປີຈົນມາເຖິງມື້ນີ້ ເຂົ້າ ຈຶ່ງມີ ໂອ ກາດ ລຸກ
ຂຶ້ນຕໍ່ສູ້ເພື່ອທວງເອົາອິດສະຫລະພາບ ແລະ ຫມາຍຈະ
ລົບລ້າງລະບຽບກົດຫມາຍທີ່ບໍ່ສອດຄ່ອງ ກັບ ບ້ານ ເມືອງ,
ມວນ ຊົນ ນັບ ເປັນຫມື່ນເປັນແສນຈັບມືກັນລຸກຮືຂຶ້ນ ມີທຸກ
ເພດທຸກໄວ, ທຸກຊັ້ນວັນນະ, ມີຂະບວນຊາວຫນຸ່ມ, ຊາວໄຮ່
ນາ, ລາຊະການ ພໍ່ຄ້າຊາວຂາຍທັງລາວ ແລະ ຕ່າງດ້າວ.
ຄວາມສາມັກຄີອັນເປັນປຶກແຜ່ນແຫນ້ນຫນາຂອງຊາວເມືອງ
ທີ່ລຸກຂຶ້ນມັນມີອະນຸພາບແຮງກ້າ ເຫມືອນດັ່ງຝົນລົມຫ່າ

ໃຫຍ່, ທ່າຝັ່ງ ແລະ ລົມແດງນັ້ນບໍ່ແມ່ນບໍ່ມີອິດທິກຳລັງ ໃດໆຈະມາກີດຂວາງໄວ້ໄດ້. ເມື່ອບັກຂະບວນອອກສູ່ທາງ ຫລວງແລ້ວຊາວເມືອງເຊບັ້ງໄຟ ກໍພ້ອມກັນມຸ່ງໜ້າເຂົ້າ ສູ່ເມືອງທ່າແຂກ ພວກເຂົາເຈົ້າຊູປ້າຍຄຳຂວັນຈຳນວນ ພັນໆແຜ່ນຂຶ້ນສູງກາຍຫົວ ແລະ ບັກກຳປັ້ນຂຶ້ນເປັ່ງສຽງ ອອກມາວ່າ:

- ລັດຖະບານປະສົມຊີວການ...ເຂັ້ມແຂງ!
- ຄະນະມົນຕີປະສົມການເມືອງ...ໝັ້ນຍືນ!
- ພວກປະຕິການຂວາຈັດຈົ່ງຈິບຫາຍ!
- ສັນຕິພາບ ຈົ່ງຈະເລີນ !

ສຽງຮ້ອງໂຮ ແລະ ສຽງປ່ອຍຄຳເຈົ້ານາຍຜູ້ມີອຳນາດ ແມ່ນເປັນຄັ້ງທຳອິດໃນປະຫວັດສາດ ຊຶ່ງຊາວເມືອງເຊບັ້ງ ໄຟບໍ່ມີຜູ້ໃດຈົ່ງຈຽມ ແລະ ສະທ້ານປ້ານກົວຫຍັງໝົດ. ເຂົາເຈົ້າທັງຄັດຄ້ານ ກ່າວປະນາມທັງຄືບໜ້າເຂົ້າສູ່ຈຸດ ໝາຍຍຶດໆບໍ່ມີບານປຸດບັ້ງ ເໝືອນດັ່ງກະແສນ້ຳລຳຂອງ ພວນລ່ອງໄຫລລົງໄດ້, ຂະບວນປະທ້ວງເຄື່ອນກຳລັງໄປ ຮອດບ້ານໃດ ຄົນຢູ່ບ້ານນັ້ນກໍພາກັນຫລັ່ງໄຫລມາໂຮມກັນ ເຂົ້າເຮັດໃຫ້ກຳລັງໃຫຍ່ແຮງຂຶ້ນກວ່າເກົ່າ. ນີບາງຄອບ ຄົວໃສ່ກະແຈປະຕູເຮືອນແລ້ວຟ້າວເອີ້ນເອົາລູກເອົາຫລານ

ແລ່ນລົງນາ, ມີບາງບ້ານຍັງເຫລືອໄວ້ແຕ່ເດັກນ້ອຍ ແລະ ຜູ້ເຖົ້າເຝົ້າເຮືອນ, ນອກນັ້ນໄດ້ອອກສູ່ສະໜາມຣົບທັງໝົດ, ເລີ່ມແຕ່ເຊົ້າຊາວເມືອງເຊບັ້ງໄຟແຫ່ຂະບວນໄປຕໍ່ສູ້ ກົນເວລາຊົ່ວໂມງເຄິ່ງ ບັງເອີນປູ່ເບື້ອງໜ້າແມ່ນປ້ອມທະຫານຍານ, ປູ່ຫັ້ງມີ ທະຫານສີ່ຫ້າ ຄົນ ປະ ຈຳການບໍ່ຂາດ, ເມື່ອໄດ້ຍິນສຽງຮ້ອງໂຮສະນັ່ນຟ້າ ຂອງຊາວເມືອງເຊບັ້ງໄຟເຄື່ອນເຂົ້າມາ, ພວກເຂົາກໍຟ້າວເຕັ້ນກະຟຸບກະຟາບອອກໄປເບິ່ງ ພາຍຫລັງຮູ້ວ່າມີເລື່ອງເກີດຂຶ້ນຜິດປົກກະຕິແລ້ວ, ເວ ລາ ນັ້ນ ນາຍ ຈ່າ ຖະ ຫວິນ ຫົວ ໃຈຕຳເຂົ້າຕຶກໆ ໝົດແຮງ, ຫມໍແລ່ນໄປຄວາໃສ່ໂຟນີດິງອັງແຕັງຂຶ້ນ:

– ອາໂລ! ອາໂລ! ບີ ໐໒! ບີ ໐໒ ແລ້ວບໍ?.

– ອາໂລ! ເອຊີຣັດ! ຣ່າ! ເອຊີຣັດ! ລາຍງານທ່ານຮ້ອຍເອກ, ເຫດຮ້າຍພວມຈະເກີດຂຶ້ນ, ດຽວນີ້ຄອມມູນິດບັງຄັບປະຊາຊົນຍົກທັບໃຫຍ່ມາຮອດດ່ານແລ້ວ, ຄາດວ່າເຂົາຊິບຸກເຂົ້າທ່າແຂກແນ່ນອນ... ອາໂລ! ຊິເຮັດຈັ່ງໃດຂະນ້ອຍ?.

– ຣື! ອາໂລ! ແມ່ນເລື່ອງຫຍັງ? ຄອມມູນິດຫວະ? ປະຊາຊົນຍົກທັບຫວະ? ປາບ–ຕ້ອງປາບໃຫ້ຮາບຄາບໄດ້ຍິນບໍ່?.

– ທະຈ ທ່າທ່ານຮ້ອຍເອກ ! ອາໄລ ພວກຂະນ້ອຍບໍ່ສາມາດ, ຄົນຫລາຍທີ່ສຸດ, ຫລາຍກໍ່ຝູງມິດຝູງປວກ... ໝໍທັງເວົ້າທັງສັ່ນວັກໆ ເຫມືອນດັ່ງໝານ້ອຍຕົກນ້ຳ, ເມື່ອໄດ້ຍິນຄຳເວົ້າວ່າບໍ່... ຫມໍ່ຮ້ອຍເອກແສງສຸກຜູ້ບັນຊາການປູ່ຊາຍແດນເມືອງທ່າແຂກ ກັບເມືອງເຊບັງໄຟ ຈຶ່ງ ຮ້າຍຂຶ້ນ:

– ຮ້ວາຍ ! ບໍ່ໄດ້ຫວະ ! ປືນປູ່ໃນນີ້ເອົາໄວ້ເຮັດຫຍັງ? ຄັນລະເມີດຄຳສັ່ງພວກສູຈະຖືກຍິງເປົ້າຮູ້ແລ້ວບໍ່ ?.

ຫມໍ່ຮ້ອຍເອກອັດໄຟນີປົງໄວ້ເທິງໂຕະ, ຫມໍ່ໃນໂຫເລີຍຍົກບີດົງເຫລົ້າຖອກໃສ່ປາກສອງສາມກົກແລ້ວເຮັດ ຫນ້າຫຍຸ້ງ, ຄິ້ວສິນເຂົ້າ, ຫມໍ່ເອົາມືມາຂັດຫລັງຍ່າງວົດໆ ປູ່ກາງເຮືອນຄືຄົນບ່ວງບ້າ. "ເລື່ອງມັນເກີດຂຶ້ນບັງເອີນຊິເຮັດຈັ່ງໃດ ? ຄອບຖ້າທະຫານປູ່ສະຫວັນນະເຂດກໍ່ຍັງບໍ່ມາຮອດ, ຊິໄປຄຸມປູ່ທ່າແຂກກໍ່ຍາກແລ້ວ, ຄັນເຂົາບຸກເຂົ້າຮອດໃນເມືອງ, ຊາຕາກຳຂອງເຈົ້າແມ່ນຫຍັງ ? ຈະຖືກກະໂລແບັນ (ຫັດສະດີ) ຕັດຄໍ" ຮ້ອຍເອກແສງສຸກຄິດແລ້ວຄິດອີກ ແຕ່ອັບປັນຍາ ຫມໍ່ຖິ້ມກົ້ງລົງໃສ່ຕຽງນອນຄືຄົນຫມົດວົນຍ່າງໄປແລ້ວ.

ປູ່ປ້ອມຍາມເຂດດານແສງຫນອງບົກ, ເມື່ອໄດ້ຮັບຄຳສັ່ງ

ອັນເກີດຂາດທີ່ເປັນຕາປ້ານ, ທະຫານບານກໍ່ຟ້າວຈັບເອົາ
ປືນແອັມ ໑໖ ອອກມາຕັ້ງທາງໄວ້, ເຂົາໃສ່ເຄື່ອງຊຸດລາຍ
ແບບຫນັງເສືອ, ຫົວໃສ່ຫມວກເຫລັກເຕື່ອຍລົງປົກຮີມຕາ,
ໃສ່ເກີບໄຊຫຸບດີນສົ້ງ, ອ້ອມແອວມີແຕ່ຖົງລູກລະເບີດລູກ
ປືນເປັນຮວດຢ່ອນຊໍາຊະ, ເຂົາພາກັນປືນຈ່າງຈະຈັບປືນ
ຈໍ້ແລະວາງທ່າທີ່ຂຶງຂັງຄືສັດຮ້າຍ, ເວລານອນຊຸບເຄື່ອນ
ກໍາລັງເຂົ້າມາໃກ້ລໍາໄມ້ໄຜ່ອັດທາງ ສຽງຫມາກຫວິດດັງ
ຂື້ນຮູດຫນຶ່ງແລ້ວນາຍຈ່າຖະຫວິນກໍ່ຟ້າວຈັບເອົາມິກກະ
ໂລຂື້ນມາແປະໃສ່ປາກ; ມັນແຜດສຽງຂື້ນຫມິດແຮງວ່າ:

– ອາໂລ! ອາໂລ! ໃຫ້ປຸດປູ່ນີ້ບໍ່ມີໃຜມີສິດລ່ວງກາຍ,
ຄົນໃຜບໍ່ຢາກຕາຍໃຫ້ກັບຄືນບ້ານດຽວນີ້, ຖ້າຫາກຍັງມີ
ບຸກຄົນດື້ດ້ານຢ່າງດີນເຂົ້າມາບາດກ້າວຫນຶ່ງແມ່ນມີຫວັງ
ລົ້ມລົງຟູມເລືອດ... ອາໂລ! ໄດ້ຍິນແລ້ວໃຫ້ຮີບຫນີ-ຮີບ
ຫນີໄວໆ...

ພາຍຫລັງສຽງກ່າວເຕືອນປຸດຕິລົງ, ຈ່າຖະຫວິນກໍ່ປິດ
ມິກກະໂລລົງ, ມັນປືນຄ້ຳແອວເຮັດຕາຮີບປູ່ຄືຮູບປັ້ນ, ຮູບ
ຊົງລວດລາຍທີ່ຫນໍສະແດງອອກມານັ້ນບໍ່ຕ່າງຫຍັງກັບຜູ້
ທີ່ຖືກເສຍໄຊ, ຫນໍເປັນຄົນຮ່າງນ້ອຍ, ຈ່ອຍຜອມ, ຫນ້າ
ກົມ, ວັງຫ້ວນ, ຕາໂກບ, ມີຫນວດດິດແຍມແຍະປູ່ຄາງ

ກະໂດ ແລະ ຈຶ່ງພົນໂກ້ງບ່ອນຫນຶ່ງປ່ອນລົງປົກຫນ້າພາກ ແດະແຊະ, ຫນັງຫນ້າເຫລື້ອມຄືຂົນຫາງກາ, ເບິ່ງແລ້ວ ເປັນດາປາກຫົວ, ຊາວເມືອງໃຜໆກໍ່ສຸມແສງຕາໄປໃສ່ດ້ວຍ ຄວາມຄຽດຊັງ, ເມື່ອບໍ່ເຫັນຄົນໂຕ້ຕອບ ແລະ ເຫນັງຕິງ ຫນໍກໍ່ຍິ່ງກື້ງຕາ ແລະ ເປົ່ງລົມອອກທໍາທ່າເປັນໃຫຍ່ ຂຶ້ນ ກ່ວາເກົ່າ. ໂດຍບໍ່ເອົາຫົວຊາດຕໍ່ການຂົ່ມຂູ່ ຊາວເມືອງເຊບັ້ງໄຟເຄືອນກໍາລັງເຂົ້າໄປອີກສອງກ້າວ ແລ້ວພໍ່ເຖົ້າຊຽງຂຽນ ເວົ້າຂຶ້ນຢ່າງຫນັກແຫນ້ນວ່າ:

– ພວກເຈົ້າກໍແມ່ນຄົນລາວ, ກິນເຂົ້າລາວຈຶ່ງໃຫຍ່ ຂຶ້ນ, ເມື່ອໃຫຍ່ຂຶ້ນແລ້ວ ພັດໄປຈັບເອົາປືນອາເມລິກາມາ ຍິງພີ່ນ້ອງຮ່ວມຊາດດຽວກັນຊັ້ນບໍ່? ພວກຂ້ອຍບໍ່ໄດ້ເປັນ ສັດຕູ ພິດ ຫຍັງ ກັບ ພວກ ເຈົ້າ, ເປັນຫຍັງພວກເຈົ້າຈຶ່ງ ເປັນເດືອດເປັນແຄ້ນຕໍ່ພວກຂ້ອຍ? ເວົ້າຫຍັງຂຶ້ນມາມີແຕ ປາກຂ້າປາກຍິງ ເອົາ! ຍິງເບິ່ງດູ! ພວກຂ້ອຍເຂົ້າໄປ ທ່າແຂກພຸ້ນມັນຊິຮ້ອນຊິເດືອງຫົວພວກເຈົ້າຫຍັງ?

ພໍ່ເຖົ້າຊຽງຂຽນ ທັງເວົ້າທັງຈີກກະດຸມເສື້ອໃສ່ຕໍ່ຫນ້າ ມັນ, ເວລານັ້ນມວນຊົນໃຜໆກໍ່ສັກລາຍຕາໄປໃສ່ຢ່າງຫນີບ ປະຫນາດ, ບັນຍາກາດຍັງຄຶງງຽບສະຫງັດຢູ່ ຫນໍ່ເກີດໂມ ໂຫເລີຍອອກຄໍາສັ່ງ:

– ທັງຫມົດ ກຽມ!

ທະຫານຮັບຈ້າງ ສາມສີຄົນຍົກປືນຂຶ້ນແລ້ວເລັງສູນ ເຂົ້າໃສ່ມວນຊົນເພື່ອລໍຖ້າລັ່ນໄກ, ມັນຮ້ອງຂຶ້ນອີກວ່າ:

– ພວກເຈົ້າຫິວແຂງບໍ້?

– ເອົາແມ້ສູ! ຄັນຄໍມັນແມ້! ຈົ່ງໄວ້ະຣັດຫຍັງ! ເດັກນ້ອຍເກີດນີ້ວານນີ້ສັງມາຈ່ອງຫອງແທ້? ມວນຊົນອັນໄພສານຮ້ອງໂຮຂຶ້ນພ້ອມ ໆກັນ, ເຂົາ ພາ ກັນ ປ້ອຍ ດ່າ ດ້ວຍຄວາມຄຽດແຄ້ນ ແລະ ຫຸ້ມເຂົ້າໄປກຽມຈະລົງມືໂຕ້ຕອບແຕ່ຜູ້ເປັນພໍ່ແມ່ ແລະ ຍາດມິດໄດ້ຊຶງເຂົ້າໄປຊື້ຫນ້າກ່ອນ, ເມື່ອເປັນແນວນັ້ນ ທະ ຫານ ຮັບ ຈ້າງຈຶ່ງໃຈອ່ອນໂຍນລົງຄືຜັກຫນຶ່ງ ພວກເຂົາປະປືນໄວ້ແລ້ວພາກັນເລາະປູ່ແຄມຖະຫນົນ ແລະ ຫລຽວ ເບິ່ງ ຫນ້າ ກັນ ນອມ ແນມປູ່ດ້ວຍຄວາມອາຍ ຫລັງຈາກທະຫານປົດອາວຸດລົງແລ້ວຫມາຍຄວາມວ່າກ່ານຍາມຕອນທີ່ຫນຶ່ງຖືກທຳລາຍ, ຊາວເມືອງເຊບັ້ງໄຟສືບຕໍ່ມຸ່ງຫນ້າໄປສູ່ຈຸດທີ່ຫມາຍ ເຂົາເຈົ້າເຄື່ອນຂະບວນໄປເປັນສາຍຍືດຽຈົນຄັບຫົນທາງ, ທ່ຽງມື້ນັ້ນອາກາດຮ້ອນອົບເອົ້າຄືໄຟເຜົາ, ບ່າວສາວປູ່ເມືອງເຊບັ້ງໄຟຜູ້ໃດກໍຫນ້າແດງຮືດໆ ແລະເຫື່ອຍ້ອຍອາບຫນ້າອາບຕາແຕ່ຫາກວ່າແນວຄິດຈິດໃຈຂອງເຂົາເຈົ້າ ບັງສະຫງ່າຜ່າເຜີຍ

ປູ່ຕະຫລອດເວລາ, ປູ່ແຖວຫລັງພໍ່ເຖົ້າບົວໂຮມສັກໄມ້ຄ້ອນເທົ້າຍ່າງຄຸກຄີກເຂົ້າໄປເອົາສອກເດະໆ ຂ້າງຂອງຈານແກ້ວແລ້ວເວົ້າຂຶ້ນວ່າ:

- ເຮີຍເຖົ້າ! ເປັນແນວໃດອີນະບີຈັບກໍຍັງຮູ້ຂ່າວມັນບໍ?

ຈານແກ້ວເງີຍຫນ້າຂຶ້ນ, ເອົາແພມົນມາເຊັດຫນ້າຜາກ, ເພິ່ນຫາຍໃຈຫັ້ງຮຸດຫນຶ່ງແລ້ວຕອບວ່າ:

- ເອີ! ໄດ້ຍິນຂ່າວມັນແນວຢູ່ແຕ່ຍັງບໍ່ຄັກ. ຕາມເຖົ້າຄຳກອງ ເລົ່າສູ່ຟັງປູ່ທ່າແຂກມື້ນັ້ນວ່າ ຫລັງຈາກມີເລື່ອງບໍ່ດີແລ້ວ ກໍໄດ້ເຂົ້າໄປເຮັດການຢູ່ໂຮງບາຫລັງຫນຶ່ງຢູ່ດົງປ່າລານ (໑) ວ່າຊັ້ນ.

- ປູ່ດົງປ່າລານຫວະ? ຕາຍ! ໂອ່ຍເສຍດາຍຄົນເດ່ຊັ້ນກົກປາຍສາຍເຫດມັນເປັນແນວໃດແທ້ຮີ! ລອງເລົ່າສູ່ຟັງແດ່ດູ, ອັນນີ້ກໍຮູ້ແຕ່ເລື່ອງບໍ່ຈະແຈ້ງປານໃດ.

- ມັນແມ່ນແນວນີ້ນາ ໃນເວລາທ່ານນາຍພົນສັງມາໂຄສະນາເລືອກຜູ້ແທນສະພາຊຸດທີ ໗ ນັ້ນລະ, ເພິ່ນໄດ້ຮູ້ຈັກກັບລູກສາວເຮົານີ້, ອີນະບີຈັບກໍຄືວ່າຫັ້ນແລ້ວ ມັນກໍເປັນຄົນຂຶ້ນໃຫມ່ແດ່ກໍເປັນຫນ້າຮັກໄອ້ເກາະ, ປູ່ຕໍ່ມາເພິ່ນ

(1) ດົງປ່າລານແມ່ນຄຸ້ມໂສເພນີໃຫຍ່ແຫ່ງຫນຶ່ງຢູ່ວຽງຈັນ ສະໄຫມບໍ່ທັນໄດ້ຮັບການປົດປ່ອຍ.

ກໍຫງວຂຶ້ນຫງວລົງເຮືອນເຮົາ, ເຮັດຮັກເຮັດແພງນັບຖືເປັນພີ່ເປັນນ້ອງກັນ, ມີຫຍັງເພິ່ນກໍເຄີຍມາປຸ່ນມາກິນ, ຊຸມເຂົ້າຊຸມເຫລົ້າເລື້ອຍໆ, ເປັນເຄື່ອງເປັນຂອງ, ເງິນຄໍາໃຊ້ຈ່າຍເພິ່ນກໍໄດ້ປາຍໃຫ້ເດັກນ້ອຍຫລາຍເຕີບໂອ່, ເມື່ອຮອດຍາມເລືອກກັ້ງແລ້ວໆເພິ່ນກໍໄດ້ເປັນຜູ້ແທນອິຫລີ ໃນເວລາຊີຂຶ້ນເມືອວຽງ: ເພິ່ນເລີຍຮັບເອົາອື້ມະນີຈັບໄປນໍາ, ທໍາອິດຕົກລົງວ່າຈະເອົາໄປເປັນລູກລ້ຽງ, ເມື່ອໄປຮອດວຽງຈະສົ່ງມັນເຂົ້າໂຮງຮຽນຕໍ່ເທີ ລີເຊ, ກໍຄືວ່າຫັ້ນແລ້ວເຮົາກັບເພິ່ນກໍແມ່ນຄົນຮູ້ຈັກກັນແຕ່ໃດມາກະເຊື່ອອົກເຊື່ອໃຈ ເພິ່ນຄຶດວ່າເພິ່ນເປັນໃຫຍ່ແລ້ວຈະເປັນທີ່ເພິ່ງພາອາໄສແລະເບິ່ງແຍງເອົາເຮົາໃນຍາມຍາກ. ບາດໄປຮອດວຽງຈັນບໍ່ເຖິງສອງປີ ເພິ່ນກໍຫາວິທີຂົ່ມຂືນອີນາງເຮົາ ຈົນເກີດມີເລື່ອງມີລາຍຂຶ້ນກັບເມຍຂອງເພິ່ນ, ເກີດເປັນນີ້ມາມີແຕ່ຖືກເມຍເພິ່ນຮ້າຍດ່າເຕະຕີ ຄືຫມູຄືໝານີ້, ສັ່ງໃຫ້ມັນເຮັດວຽກເຮືອນ. ຊັກເຄື່ອງຊັກຂອງຈົນບໍ່ມີເວລາຮໍ່າຮຽນ. ປູ່ຕໍ່ ມາ ມື້ ຫນຶ່ງ ເມຍ ຂອງເພິ່ນ ອາດຈະແມ່ນປາກໄລ່ອີນາງຫນີຈາກເຮືອນເພິ່ນເລີຍຫາເລື່ອງໃສ່ວ່າມັນລັກເງິນ ໑໐.໐໐໐ ກີບວ່າຊັ້ນ. ຈາກນັ້ນອີນາງກໍຖືກເຕະອອກຈາກບ້ານໄປໂລດ. ໂປ່ວ. ຜູ້ຍິງເດັກນ້ອຍເນາະ. ເຂົາບໍ່ທັນມີຫົວຄຶດປັນຍາ. ບໍ່ມີບ່ອນເພິ່ງພາ

ອາໄສກໍເລີຍເປັນປ່ວງເປັນເມົາໄປທົ່ວທິບ. ເມື່ອຫມົດຫົນທາງແລ້ວ ນາມື້ຫນຶ່ງໄປພົບແມ່ໂປ່ໃນທີ່ສຸດກໍຖືກແມ່ໂປ່ຫລອກລວງຈູງແຂນເຂົ້າເຮັດການບຳນັບ ເປັນແນວນັ້ນລະເຖົ້າເອີຍ!.

– ໂອ່ຍໆ! ເປັນແນວນັ້ນເນາະ! ນັ້ນແລ້ວເພິ່ນວ່າຟັງຄວາມຄິດມັນຈົນໃຈໂຕເຖົ້າເອີຍ!.

– ອື! ກາຍວ່າແຄ້ນໃຈແທ້ລະເຖົ້າເຮີຍ! ຄຳບູຮານເພິ່ນເວົ້າວ່າພົບຄົນດີມີສີແກ່ຕົວ. ພົບຄົນຊົ່ວພາຕົວຫມົ່ນໝອງແມ່ນມີແທ້ໃດ!.

– ຄັນຊັ້ນເຖົ້າກໍອົດໄປນຳເອົາມັນກັບມາສາເດ່ຊີບໍ່ດີບໍ່?

– ເລື່ອງນັ້ນກໍບໍ່ງ່າຍປານໃດເດີເຖົ້າ! ເລື່ອງເງິນຄຳຊື້ປີ້ຍົນຫລືຈ້າງລົດໂດຍສານກໍຄືດຍາກຢູ່ແລ້ວ ແຕ່ເຕັມທີບໍ່ເຖົ້າແກ່ປານນີ້ຊິຂີ່ລົດຂີ່ລາງໄປໄກ ເຮົາຢ້ານໃຈຂາດກາງທາງກ່ອນ. ເລື່ອງວ່າຂີ່ຍົນນັ້ນ. ກໍຄືດງໍ້. ໂຕເອງກໍເປັນພະຍາດບາດເບົາ ອັນຫນຶ່ງກໍຈັກວ່າອີນາງຍັງຢູ່ຫັ້ນຫລືຍ້າຍໄປແຫ່ງອື່ນແລ້ວກໍບໍ່ຮູ້, ເມື່ອໄປຮອດຍັງຈ້າງບ່ອນພັກອາໄສ, ໃຊ້ຈ່າຍກິນຢູ່, ທວງທາວຫາຮ່ອມໃດຈັ່ງຊິຮູ້ ເງິນຄ່າຊີໄປໄຖ່ເອົາລູກໂຕກໍບໍ່ມີ, ມັນກໍບໍ່ຂຽນຫນັງສືມາຫາ ຈັກເທື່ອ. ເຮັດແນວໃດຊິແກ້ໄດ້...

ສຽງຈົມພຶມພຳຂອງສອງເຖົ້າ ໄດ້ ເຮັດ ໃຫ້ ຜູ້ ຄົນ ທັງຫລາຍສົນໃຈ ແລະ ຍ່າງເຂົ້າມາໃກ້, ຄັນໃຜຫາກຮູ້ເລື່ອງແລ້ວກໍສະແດງຄວາມເສຍໃຈ ແລະ ຄຽດແຄ້ນທີ່ສຸດ. ຂະບວນປະທ້ວງເພື່ອຄວາມເປັນທຳ ເຄື່ອນ ກຳ ລັງ ເຂົ້າ ສູ່ເມືອງເອກຂອງແຂວງໄດ້ໄປຮອດດ່ານຍາມຕອນທີ່ສອງເວລາຕາເວັນຄ້າຍ, ປ້ອມຍາມແຫ່ງນັ້ນຍັງຫ່າງໄກຈາກທ່າແຂກ ໑໐ ປາຍຫລັກ, ຢູ່ຫັ້ນມີທະຫານຮັບຈ້າງປະຈຳການສອງກອງຮ້ອຍ ສຽງຮ້ອງໂຮຂອງມວນຊົນຜູ້ເປັນທຳກຶກກ້ອງຂຶ້ນເທື່ອໃດ ມັນໄດ້ສັ່ນສະເທືອນເຖິງເຫງົ້າໝາກຫົວໃຈຈຳນວນບໍ່ທໍ່ໃດໜ່ວຍຂອງຄົນຂາຍຊາດ, ໜໍ່ຮ້ອຍເອກແສງສຸກຈິ່ງສັ່ງໃຫ້ທະຫານກອງຮ້ອຍທີ ໑ ອອກໄປດັບທາງໄວ້ສາມຊັ້ນ, ພວກເຂົາຕາມກະບີໃສ່ປາຍປືນໄຂ່ວກັນຄືໜາມໝາກຈັບ, ກອງຮ້ອຍທີ່ສອງອອກໄປລີ້ຢູ່ຕາມພຸ່ມໄມ້ສອງຟາກທາງ, ພວກເຂົາຈັບປືນແອັມ-໑ຝີ ແລະແອັມ-ກຸລ ຈໍ້ຢູ່ໃນທ່າສູ້ຮົບ, ເວລານັ້ນຊາວເມືອງເຊບັ້ງໄຟເຄື່ອນເຂົ້າໄປອີກສິບແມັດ,ບັງເອີນມີນາຍທະຫານສອງຄົນແຂວນປືນສັ້ນຢູ່ແອວເດື່ອຍເຕະເຊະ ອອກມາຢືນຈ່າງຈະມືຄ້ຳແອວແລ້ວຍົກມືຂຶ້ນສັບຍາວໃຫ້ປຸດ ນາຍທະຫານທັງສອງເປັນຄົນຈ່ອຍສູງ, ໃສ່ໜວກເບເລແດງ, ມີກາດອກ

ຈັບຕົດໃສ່ຫົວ ແລະ ໃສ່ສົ້ງເສື້ອລາຍສີໃບໄມ້ແຫ້ງ. ໃບໜ້າຂອງມັນເຄັ່ງຄືໜ້າກອງເພນ, ໝໍຮ້ອຍເອກກວາດແສງຕາໄປເບິ່ງມວນຊົນບຶດໜຶ່ງ ແລ້ວເວົ້າຂຶ້ນດ້ວຍສຽງໜັກໆວ່າ:

– ພວກເຈົ້າຊິໄປໃສ ? ຣະ !

ບໍ່ມີສຽງຕອບ, ຊາວເມືອງເຊບັ້ງໄຟບໍ່ມີໃຜປາກໃຜດັ່ງ. ເຂົາເຈົ້າສຸມແສງຕາໄປໃສ່ໝໍດ້ວຍຄວາມຄຽດຊັງ. ບັນຍາກາດຕົກຢູ່ໃນສະພາບມິດງຽບ ເປັນເວລາດົນພໍສົມຄວນຈຶ່ງມີຄົນຜູ້ໜຶ່ງເວົ້າຂຶ້ນຢ່າງເຂັ້ມແຂງວ່າ:

– ພວກຂ້ອຍໄປຊອກຫາສັນຕິພາບ. ພວກເຈົ້າຍະຫາງອອກ !.

– ຮື ! ປາກຫົວດວາ ! ຄັນບໍ່ປາກຕາຍໃຫ້ພວກສູກັບຄືນເມືອບ້ານສາ ! ໃຜບໍ່ມີສິດຜ່ານເຂດນີ້ໄປໄດ້ເດັດຂາດ, ຜູ້ໃດດື້ດ້ານຍ່າງກາຍໄປ ໑ ແມັດ ຜູ້ນັ້ນຈະຖືກຍິງເປົ້າ – ຮູ້ແລ້ວບໍ ?.

– ພວກເຈົ້າມາຂັດຂວາງເສັ້ນທາງເດີນຂອງພວກຂ້ອຍເພື່ອຜົນປະໂຫຍດຫຍັງ ? ພໍ່ເຖົ້າຊຽງຂຽນເວົ້າຕໍ່ໄປວ່າ : ພວກຂ້ອຍຄຶດວ່າການເຄື່ອນໄຫວແບບນີ້ ບໍ່ມີຫຍັງເປັນປໍລະປັກກັບພວກເຈົ້າທັງໝົດ ພວກຂ້ອຍລຸກຂຶ້ນ

ຕໍ່ສູ້ແມ່ນເພື່ອຕ້ອງການປາກນີ້ສັນຕິພາບ, ປາກນີ້ອິດສະຫລະພາບແລະ ປາກດັດແປງອຳນາດການປົກຄອງ ມັນກໍຍັງດີກວ່າຄົນຈຳນວນຫນຶ່ງທຳລາຍຊາດ ແລ້ວໄປເປັນຂ້າທາດຂອງເງິນດອນລາອາເມລິການັ້ນດວາ !.

– ເຈົ້າບໍ ! ຫມໍ່ຮ້ອຍເອກເອົານິ້ວຊີ້ໃສ່ຫນ້າພໍ່ຊຽງຂຽນແລ້ວເວົ້າຕໍ່ໄປວ່າ : ປານນີ້ຈຶ່ງເຫັນຫົວກະທິໂປໂລອອກມາເອ້ ! ເຈົ້າອອກມານີ້, ບອກນັ້ນຣີບຫນີໄປບ້ານໄວໆດຽວນີ້ !

ເມື່ອຖືກບັງຄັບ, ພໍ່ເຖົ້າຊຽງຂຽນກຽມຕົວຊີ້ຍ່າງອອກໄປປະເຊີນຫນ້າກັບພວກມັນ ແຕ່ຫມູ່ຄະນະຂອງເພິ່ນດຶງແຂນໄວ້ ຫມໍ່ຮ້ອຍເອກໂມໂຫເລືອດຂຶ້ນຫນ້າ ກໍຟ້າວຍ່າງວິດໆເຂົ້າໄປດຶງຄໍເສື້ອ, ໂດຍບໍ່ຍອມປະໃຫ້ເພື່ອນຮ່ວມຮົບຜູ້ສະຫນິດຂອງຕົນຕົກຢູ່ໃນກຳມືຂອງສັດຮ້າຍ ການປະທະກັນດ້ວຍມືເປົ່າໄດ້ເກີດຂຶ້ນ. ພວກທະຫານ "ແມງເງົາ" ດຶງເອົາໄສ້ເຫລັກໃຫຍ່ສໍ່າແຂນສາມເສັ້ນ ມາເບັ່ງຕັ້ງທ່າງໄວ້. ການຕໍ່ສູ້ກັນດ້ວຍກຳປັ້ນໄດ້ກ້າວເຂົ້າສູ່ຄວາມຮຸນແຮງ, ຊາວເມືອງຜູ້ພົລະອາດຫານ ພາກັນຮ້ອງໂຮຂຶ້ນ ປ້ອຍດ່າພວກ ທະ ຫານ ຜູ້ ຂາຍ ຊາດ ແລະ ບຸກ ລຸກ ເຂົ້າ ທຸບ ຕີໄສ້ເຫລັກຈົນມຸ່ນທະລາຍ, ນວນຊຸບຄືບຫນ້າເຂົ້າໄປຈ່າກະພີປາຍປືນ ແລ້ວແຫຍ້ເຂົ້າຫມົດແຮງ ຈົນເຮັດໃຫ້ຮູບແຖວ

ຂອງທະຫານຮັບຈ້າງ ທີ່ປືນເປັນຮົ້ວຕັ້ງໜ້າເຊອກບອກຖະໜົນ ໃນເວລານັ້ນບັງເອີນ ມີສຽງປືນດັງຂຶ້ນເປັນຮູດບາວໆ. ປະກາຍໄຟແຕກຍາບໆອອກມາຈາກປ່າ. ພວກທະຫານຍິງປືນຂ້າມຫົວປະຊາຊົນຫລາຍນັດ, ໃບໄມ້ແລະກິ່ງກ້ານຫັກຫລົ່ນລົງໃສ່ຫົນທາງຍ່າວ ໆ ເໝືອນດັ່ງລົມພາຍຸໃຫຍ່ພັດພືນມາ.

– ປຸດແມ້ ! ປຸດແມ້ ! ສຽງນົກກະໂລຂອງກອງຮ້ອຍທີ່ສອງກະແທກມາຈາກພຸ່ມໄມ້. ແຕ່ກົງກັນຂ້າມສຽງຮ້ອງໂຮຂອງຊາວເມືອງເຊບັ້ງໄຟຍັງຄົງຟົດສະໜັ່ນຢູ່. ບ່ອນອັບປັນຍາ, ບໍ່ມີອຳນາດຄວາມແຮງໃດໆ ນາຂົ່ມຂູ່ໄດ້ອີກແລ້ວ ບອກ ຈາກ ເຮັດໃຫ້ສຽງປືນດັງແຮງຂຶ້ນກວ່າເກົ່າ. ພວກເຂົາໄດ້ຍິງປືນສຸມໃສ່ສອງຟາກທາງ, ຍິງຕັດໜ້າ, ເວລານັ້ນລູກປືນບິນໄປຊິດຂ້າງຊິດແອວຈົ້ວໆຈ້າວໆ. ລູກປືນສະຕ້ອກແຕກລັດໜ້າລັດຫລັງ ເໝືອນສະໜາມຮົບໃນຍາມສົງຄາມ, ເມື່ອເຫັນວ່າຈະກ້າວເຂົ້າສູ່ຄວາມອັນຕະລາຍແລ້ວ, ຄະນະນຳຂອງສາມຄົນຈຶ່ງສັ່ງໃຫ້ນອນຊົບບຸດຕິ, ເພື່ອເຮັດໃຫ້ສຽງປືນຫລຸດຜ່ອນລົງ. ຫລັງຈາກໄດ້ຊັດປາກໜ່ຮ້ອຍເອກ ແລະ ຫລຸດພົ້ນຈາກເງື້ອມມືຂອງຄົນຮ້າຍແລ້ວ ພໍ່ເຖົ້າຊຽງຂຽນກໍຍ່າງອອກມາຢືນຢູ່ຕໍ່ໜ້າທະ

ທານປ່າງອົງອາດ, ເພິ່ນເອົາມືຖ້າແອວ ລະ ກະດຸມເສື້ອອອກບຶດຫນຶ່ງເພິ່ນເປົ່ງສຽງຂຶ້ນ:

– ພວກສູ່ຊິຂ້າປະຊາຊົນຊຸ້ນບໍ ? ພວກຂ້ອຍມີຄວາມຜິດຫຍັງກັບພວກເຈົ້າ? ອັນພວກເຈົ້ານັ້ນແມ່ນຄົນບໍ່ມີຫົວໃຈ, ໄປເປັນໝາພານໃຫ້ເຂົາແລ້ວກັບຄືນມາກັດມາຫຍ້ຳຊາວບ້ານຊາວເມືອງໂຕເອງໃຜຊິຍ້ອງ, ຄັນອ້າງວ່າມີລິດມີເດດແທ້ ເປັນຫຍັງບໍ່ໄປສູ້ຣົບກັບທະຫານຂອງບັນດາກຳລັງຮັກຊາດຢູ່ສະໜາມພຸ້ນ. ພໍ່ເຖົ້າຊຽງຂຽນເວົ້າສຸດຄວາມ, ຊາວເມືອງເຊບັ້ງໄຟຮ້ອງຂຶ້ນເປັນສຽງດຽວກັນວ່າ:

– ຄັດຄ້ານ! ຄັດຄ້ານຄົນທໍລະຍົດຂັດຂວາງເສັ້ນທາງຂອງພວກເຮົາ!

– ພວກບ້າເລືອດຈົ່ງຈິບຫາຍ!

– ບ້ານເມືອງ, ບໍ່ເພິ່ງປາຖະໜາຄົນຂ້ອຍຂ້າຄືພວກເຈົ້າ!!!

ທາງສຽງສະຫນັບສະຫນູນພໍ່ເຖົ້າຊຽງຂຽນ ຂອງມະຫາຊົນນັ້ນໄດ້ເຜີຍແປໃຫ້ເຫັນໃຈດຳອຳມະຫິດຂອງເຫລົ່າທະຫານຮັບຈ້າງ, ພວກເຂົາເລືອດຂຶ້ນຫນ້າ ແລະ ປວດຫົວບ້ອນໂລກປະສາດ, ຄວາມອັນຕະລາຍໄດ້ເກີດຂຶ້ນຢ່າງບັງເອີນ:

– ບັກເຖົ້າ ! ມຶງຢ່າປາກ, ນາຍທະຫານຜູ້ຫນຶ່ງເອີ້ນອອກມາຈາກກົກໄມ້ ແລ້ວສຽງປືນສັ້ນດັງຂຶ້ນສາມນັດຕິດໆກັນ.

ສຽງຮ້ອງ "ໂອ້ຍ" ເທື່ອຫນຶ່ງ, ພໍ່ເຖົ້າຊຽງຂຽນເອົາມືມຸບທ້ອງແລ້ວລົ້ມຟຸບລົງ, ສຽງປືນຍິງຂົ່ມຂູ່ດັງ ພົດ ສະຫນັ່ນຂຶ້ນອີກ. ເຫມືອນດັ່ງຟ້າຊິປິ່ນດິນຊິຫລຸບ, ຢູ່ຫນ້າຖະຫນົນດິນຟຸ້ງຂຶ້ນກຸ່ນໆ. ຢູ່ເທິງຫົວໃບໄມ້ເປັນປຸ້ມເປັນຕ່ອນຂຸລົງຍ່າວໆ ລູກປືນລະຕ໊ອກຕົກລົງແຕກຢູ່ໃຈກາງຂອງມວນຊົນສອງສາມລູກອີກ, ຂີ້ຝຸ່ນຂີ້ດິນໄງ່ກຸບຂຶ້ນ ຊາວເມືອງເຊບັ້ງໄຟສິບເອັດຄົນລົ້ມລົງພາບດຽວ, ສຽງຮ້ອງສຽງຄາງຂອງຄົນເຈັບດັງອຶກກະທຶກຢູ່ໃນໃຈກາງຂອງຄວັນລະເບີດ, ສ່ວນຫນຶ່ງເມົາຄວັນລະເບີດເມົາຄວັນລູກປືນພາກັນອັດຫູອັດຕາປົບຫນີກະຈັດກະຈາຍເຂົ້າປ່າໄປ. ສຽງປືນຍັງບໍ່ທັນຢຸດຕິ, ພວກທະຫານຮັບຈ້າງໄດ້ເປີດໄຟນີເອີ້ນຫາກອງບັນຊາການທ່າແຂກເປັນປະຈຳ, ຕໍ່ມາບໍ່ຮອດ ໑໐ ນາທີເຮືອບິນສັງເກດການ "ແອັນເລີ ໑໙" ລຳຫນຶ່ງກໍປະກົດຕົວຢູ່ເທິງທ້ອງຟ້າ, ມັນບິນເຈີດໄປເຈີດມາເຫມືອນດັ່ງໂຕແຫລວໄລ່ນົກນ້ອຍ, ບໍ່ພໍຄາວສຽງລົດກົດໆພັດດັງມໍ່ເຂົ້າມາ, ລົດບັນທຸກທະຫານເຄື່ອນທັບຈາກທ່າແຂກ ໓ ຄັນ,

ໄດ້ຈອດໄວ້ຢູ່ຕໍ່ຫນ້າ, ພວກທະຫານໂດດລົງຈຸດຈັດ! ຈຸດຈັດມາອັດທາງໄວ້ຫລາຍຊັ້ນ. ເຂົາຈັບປືນຈໍ້ຢູ່ໃນທ່າກຽມພ້ອມເພື່ອປະເຊີນຫນ້າກັບມວນຊົນຜູ້ເປັນທໍາ, ຊາວເມືອງເຊບັ້ງໄຟ ພ້າວພາກັນຫຸ້ມເຂົ້າໄປໂຊມເອົາພໍ່ເຖົ້າຊຽງຂຽນຂຶ້ນມາຊັກສັ່ນແລະເອີ້ນຊື່ຂອງເພິ່ນສອງສາມສຽງ. ເວລານັ້ນເພິ່ນໄດ້ມືນຕາຂຶ້ນເທື່ອຫນຶ່ງ ຮີບສົບສອງເບື້ອງເຫນັງຕິງມຸບມິບ, ມຸບມິບ ຄາວດຽວແລ້ວຫນ່ວຍຕາສອງກ້າກໍຄ່ອຍໆ ເຊືອບລົງຄ້າຍກັບວ່າເພິ່ນຍັງປາກເວົ້າສິງໃດ ສິງຫນຶ່ງເພື່ອອໍາລາເປັນຄໍາສຸດທ້າຍ, ບ້ອນລູກປືນຖືກບ່ອນສໍາຄັນຈຶງເຮັດໃຫ້ເພິ່ນຫມົດສະຕິ, ເລືອດຂອງເພິ່ນໄດ້ໄຫລອາບຫນ້າຄະຫນົບຈົນກາຍເປັນສີແດງຊ້ໍາ, ພໍ່ເຖົ້າຊຽງຂຽນໄດ້ຈາກໂລກໄປແລ້ວ, ຊີວິດແລະວິນຍານຂອງເພິ່ນບໍ່ມີວັນຈະກັບຄືນມາສູ່ເມືອງເຊບັ້ງໄຟໄດ້ອີກ, ແຕ່ວ່ານ້ໍາໃຈປະຕິວັດຂອງເພິ່ນ ແລະ ຄຸນງາມຄວາມດີຂອງເພິ່ນຍາມໃດກໍຝັງແຫນ້ນຢູ່ໃນດວງໃຈ ຂອງຊາວເມືອງຜູ້ພິລະອາດຫານທຸກຄົນ.

– ເອ່! ເອົາໄປປັນກັບກິນສາ! ຄັນບໍ່ກິນເອົາໄປເຮັດປາແດກຢູ່ບ້ານພຸ້ນ, ຮີບເອົາຫນີໄວ!!!

ສຽງຈວາດຂອງນາຍທະຫານຜູ້ຫນຶ່ງ ກະແທກຂຶ້ນໄດ້

ເຮັດໃຫ້ຊາວເມືອງຜູ້ໄປໂຊມເອົາສົບພໍ່ເຖົ້າຊຽງຂຽງນັ້ນ ຮູ້ສຶກເຈັບແຄ້ນແຫນ້ນໃຈບໍ່ມີສິງໃດຈະປຽບປານໄດ້.

x x
x

* ຢູ່ທ່າແຂກ ຂະບວນ ລຸກຮືຂຶ້ນ ຕໍ່ສູ້ເພື່ອຄວາມເປັນທຳ ບ່ອງດຳເນີນໄປຢ່າງສັບສົນແລະດຸເດືອດບັນດານັກຮຽນ ນັກສຶກສາ, ກຳມະກອນແລະຊາວຜູ້ອອກແຮງງານໄດ້ຫລັ່ງ ໄຫລໄປໂຮມຢູ່ຜະແນກໂຍທາ ນັບມື້ນັບຫລາຍຂຶ້ນ. ພວກ ເຂົາເຈົ້າອອກຖະແຫລງການສະບັບຫນຶ່ງ ທວງໃຫ້ລັດຖະບານ ປະ ສົມ ປົດ ຕຳ ແຫນ່ງ ເຈົ້າ ນາຍຜູ້ສໍ້ລາດບັງຫລວງ. ດັດແປງອຳນາດການປົກຄອງໃຫ້ຂາວສະອາດ, ສ້າງທ່າແຂກໃຫ້ເປັນເຂດສັນຕິພາບ ເຮັດໃຫ້ປະຊາຊົນມີສິດເສລີພາບປະຊາທິປະໄຕ ແລະ ຂຶ້ນກັບລັດຖະບານປະສົມໂດຍກົງ. ເຂົາອາໄສເຄື່ອງຂະຫຍາຍສຽງ ປະກາດຖະແຫລງການ ແລະ ປ່າວເຕືອນໃຫ້ຊາວເມືອງຮູ້ເຖິງຈຸດປະສົງຂອງການຕໍ່ສູ້ຄັ້ງນີ້. ນັບແຕ່ມື້ນັ້ນເປັນຕົ້ນມາ ເມືອງທ່າແຂກໄດ້ຕົກຢູ່ໃນສະພາບພາວະສຸກເສີນ, ເຮືອນຊານປະຊາຊົນຢູ່ບ່ອນໃດກໍອັດປະຕູ, ໂຮງຮຽນໂຮງຫມໍ. ໂຮງຮູບເງົາກໍຖືກ

ອັດ, ຊາວເມືອງບໍ່ວ່າຜູ້ນ້ອຍ, ຜູ້ໃຫຍ່, ເຖົ້າແກ່ຍິງຊາຍ ໄດ້ຫລຸຫລັ່ງເຂົ້າໄປອັ້ງອໍ່ຢູ່ອ້ອມພະແນກໂຍທາ ເພື່ອສະຫນັບສະຫນູນອຸ້ມຊູຂະບວນປະທ້ວງ.

ຂະບວນລຸກຮື້ຂຶ້ນຂອງຊາວເມືອງທ່າແຂກ ນັບວັນນັບແຜ່ຂະຫຍາຍ ແລະ ກ້າວຂຶ້ນສູ່ກະແສສູງ, ເຫມືອນດັ່ງໄຟໄຫມ້ໄຮ່ໃນເດືອນ ໕. ສຽງຮ້ອງໂຮອັນຫນັກແຫນ້ນຂອງມວນຊົນຟົດສະຫນັ່ນຂຶ້ນຄັ້ງໃດ ໄດ້ເຮັດໃຫ້ເຈົ້ານາຍບາງຄົນເດືອດຮ້ອນ, ກິນບໍ່ແຊບ, ນອນບໍ່ຫລັບ ແລະ ກຳນະຈອນກະຕຸກແຮງຄືຄົນປ່ວງບ້າ, ພວກນາຍທະຫານຊັ້ນສູງປະຈຳພາກສາມຈຶ່ງຂ້ຽວເປີດກອງປະຊຸມລັບຂຶ້ນ, ເຂົາໄດ້ສົມຮູ້ຮ່ວມຄິດກັນວາງແຜນການ "ມອດແປວໄຟ" ລົງຢ່າງບໍ່ໃຫ້ເຫັນຄວັນ. ບຸດທະສາດແບບນີ້ເຂົານຶກຍິ້ມຢູ່ໃນໃຈວ່າ ຂະບວນປະທ້ວງຈະຖືກສະລາຍຕົວລົງນາດດຽວໂລດ.

ເຊົ້າມື້ໃຫມ່ໄດ້ມາເຖິງ ໃນເວລາ ໗ ໂມງສາມສິບນາທີ ເຮືອບິນເອເລກົນ ຝີ ລຳໄດ້ເລີ່ມປະກົດຕົວຢູ່ບົນທ້ອງຟ້າເມືອງທ່າແຂກ, ພວກເຂົາຜັດປ່ຽນກັນຂຶ້ນ ລົງ ຢູ່ເດີ່ນ ຊຶ່ງໄກ ຈາກ ພະແນກ ໂຍທາ ໄປ ທາງ ທິດ ໃຕ້ ປະມານ ໑ ຫລັກ ບໍ່ຂາດສາຍ ປານຝູງກາເຈີດລົງຕອມຊາກເນົ່າຢູ່

ກາງທົ່ງ ທະ ຫານ ຫລາຍ ກອງ ພັນ, ລົດຊາອາແອັນ ຫລາຍຄັນ, ປືນໃຫຍ່ຫລາຍກະບອກ ໄດ້ຖືກສົ່ງມາຈາກ ສະຫວັນນະເຂດ, ເມື່ອ ເຄື່ອນ ບ້ານ ກຳ ລັງ ມາ ຮອດແລ້ວ ນາຍພົນບຸນເລີດ ຊະນີຈັນ ໄດ້ສັ່ງໃຫ້ລົມທົບກັບທະຫານ ປະຈຳທ່າແຂກປິດລ້ອມຜະແນກໂຍທາຫ້າຊັ້ນ, ສອງຊັ້ນ ທຳອິດແມ່ນລວດຫນາມຫນາກຈັບ, ຊັ້ນທີສາມ ແລະ ທີ ສີແມ່ນທະຫານຈັບອາວຸດອ້ອມເປັນວົງມົນ, ຊັ້ນສຸດທ້າຍ ແມ່ນລົດຊາ, ອາແອັນ ແລະ ປືນໃຫຍ່ຈອດໄວ້ສີທິດ, ເຂົາ ປິ່ນປາກປືນເຂົ້າໃສ່ຈຸດໃຈກາງ, ຈຳນວນປ້າຍຄຳຂວັນນັບ ເປັນສິບເປັນຊາວກາງໄວ້ ກໍຖືກທະຫານບຸກລຸກເຂົ້າໄປຈີກ ຖິ້ມຫມົດ, ຊາວເມືອງທ່າແຂກທີ່ໄປອັ່ງອໍ່ຢູ່ນອກກຳແພງ ກໍຖືກພວກເຂົາຕະລຸມບອນເຂົ້າທຸບຕີ ແລະ ໄລ່ຫນີເມືອ ບ້ານ, ເຂົາຫ້າມຄົນໃນບໍ່ໃຫ້ອອກຄົນນອກບໍ່ໃຫ້ເຂົ້າ ນົກ ກະໂລທີ່ຕິດຢູ່ຫົວລົດຊາ ໄດ້ປິ່ນເຂົ້າໄປໃສ່ຂະບວນປະທ້ວງ ແລ້ວເວົ້າຫລ້ຳໄປຫລ້ຳມາວ່າ:

– ອາໂລ! ພວກເຈົ້າຊິຍອມຫລືບໍ່ຍອມ! ຄັນປາກມີ ຊີວິດຢູ່ເບິ່ງໂລກ ໃຫ້ຍົກທຸງຂາວຂຶ້ນແລ້ວອອກມາໂຮມຢູ່ ເດີ່ນດ່ງວນີ້, ຄັນຫາກບັງດື້ດ້ານ ພວກເຈົ້າຈະກາຍເປັນ ເຫຍື່ອຂີ້ກະເດືອນປ່າງບໍ່ສົງໄສ ອາໂລ! ໄດ້ຍິນແລ້ວບໍ?

ຄັນໄດ້ຍິນແລ້ວພວກເຈົ້າຈິງເລືອກເອົາ!!!

ຄວາມອັນຕະລາຍໄດ້ຫຍັບມ່ເຂົ້າມາທຸກວິນາທີ, ການຕິດຕໍ່ພົວພັນກັບທາງນອກ ໄດ້ຖືກຕັດຂາດກັອກນ້ຳຖືກທຳລາຍ ເຂົ້າກິນກໍ່ມ່ຊິຫມົດ ບາງຄົນກໍ່ຄິດນ້ອຍໃຈ ຈັກວ່າຊີມີຊີວິດຢູ່ໄດ້ຮອດມື້ໃດ ຜູ້ຍິງສອງສາມຄົນຮ້ອງໄຫ້ ສົ່ງສຽງສະອື້ນ ອອກມາ ອືກໆ ເມື່ອສະພາບເປັນແນວນັ້ນ ທ້າວບົງ ໄຊຍະກຸມມານຜູ້ເປັນຫົວຫນ້າຄະນະປະທ້ວງ ໄດ້ປີນຂຶ້ນເທິງໂຕະຫນ່ວຍຫນຶ່ງ ລາວກວາດສາຍຕາໄປເບິ່ງເພື່ອນສະຫາຍ ຂອງຕົນ ສອງສາມ ເທື່ອແລ້ວ ເອົາມືຄ້ຳແອວເທິງເຕິບຈິງເວົ້າວ່າ :

ພວກເພື່ອນທັງຫລາຍ ! ມະນຸດຜູ້ຫນຶ່ງກໍ່ຄືກັນກັບຕົ້ນໄມ້ຕົ້ນຫນຶ່ງເທົ່ານັ້ນ, ມັນຊີມີຊີວິດຢູ່ ພຽງແຕ່ເທື່ອດຽວ, "ຄວາມຕາຍ" ທຳມະຊາດໄດ້ກຳນົດໄວ້ໃຫ້ມະນຸດທຸກຄົນ, ມະນຸດທຸກຄົນບໍ່ມີໃຜຈະຫລີກລ່ຽງໄດ້ແຕ່ວ່າເມື່ອພວກເຮົາຍັງມີຊີວິດຢູ່ຜູ້ໃດກໍ່ຕ້ອງການຄວາມສຸກ, ຕ້ອງການຄວາມເປັນທຳ, ຕ້ອງການກຽດຂອງຄວາມເປັນຊາດ ແລະ ມີອິດສະລະພາບ, ຖ້າຫາກປາສະຈາກສິ່ງເຫລົ່ານັ້ນແລ້ວມີຊີວິດຢູ່ກະຊິມີຄວາມຫມາຍຫຍັງ ? ໃນຫລາຍບຸກສະໄຫມຕົກເປັນເມືອງຂຶ້ນຂອງຈັກກະພັດຕ່າງດ້າວຮຸກຮານ, ບັນພະບຸລຸດ

ລາວມັກເວົ້າວ່າ : "ຕາຍເປັນຜີຍັງດີກ່ວາເປັນຂ້ອຍຂ້າ" ອັນນີ້ມັນເປັນຄວາມຈິງ, ຖ້າກໍລະນີຈຳເປັນພວກເຮົາຫາກລົ້ມລົງກໍແມ່ນກາລະໂອກາດທີ່ເໝາະສົມແລ້ວ, ພວກເຮົາຫາກຈາກໂລກໄປ ຄົນລາວຜູ້ຮັກຊາດນັບເປັນແສນ ເປັນລ້ານກໍຈະລຸກຂຶ້ນແກ້ແຄ້ນແທນຄືນ, ຊື່ສຽງ ແລະ ຄຸນງາມຄວາມດີຂອງພວກເຮົາ ຈະໄດ້ຈາລຶກໄວ້ໃນປຶ້ມ ປະ ຫວັດສາດຂອງຊາດຈີນເທົ່າໃດໆ... ພວກເພື່ອນ! ພວກເພື່ອນຮູ້ແລ້ວບໍ່ ສະພາບການບ້ານເມືອງປະຈຸບັນນີ້ເປັນແນວໃດ? ເຂດປົດປ່ອຍມີກອມດິນແດນທົ່ວປະເທດ ໔/໕, ມີລັດຖະບານປະສົມຢູ່ວຽງຈັນ, ຄັນພວກຫມາພານຫາກຖະຫລົ່ມພວກເຮົາ, ບັນດາກຳລັງຮັກຊາດ, ກອງທັບປົດປ່ອຍຈະບໍ່ປືນເບິ່ງພວກເຮົາລ້າດອກ...

ທ້າວບົງ ໄດ້ໂອ້ລົມອົບອຸ່ນຊາວເມືອງທີ່ຍັງເຫລືອຢູ່ເປັນເວລານານພໍສົມຄວນ, ໃຫ້ເມືອງ ທ່າແຂກ ໂດຍ ສະເພາະແມ່ນພວກກຳມະກອນປະກົດວ່າຄ່ອຍໆມີຈິດໃຈອົບອຸ່ນ ແລະ ເຂັ້ມແຂງຂຶ້ນຕື່ມ, ເຂົາເຈົ້າເຊື່ອຫມັ້ນຄຳເວົ້າຂອງທ້າວບົງ ແລະ ຂັນອາສາວ່າຈະຕໍ່ສູ້ຕໍ່ໄປຈົນເຖິງວິນາທີສຸດທ້າຍ, ມີກກະໂລເຄື່ອງດຽວຊຶ່ງເປັນຕົວແທນໃຫ້ແກ່ມວນຊົນສີ່ຮ້ອຍກວ່າຄົນ ຢູ່ໃນສຳນັກໂຍທາ ໄດ້ເປັ່ງສຽງ

ອອກ. ຜູ້ເປັນໂຄສົກຍັງສືບຕໍ່ປະນາມພວກປະຕິການປືນ ຢັນຫລັກໝັ້ນອັນບໍ່ປ່ຽນແປງ ໃນການຕໍ່ສູ້ເພື່ອອິດສະລະພາບ ແລະ ຄວາມຮົ່ມເຢັນເປັນສຸກຂອງປະຊາຊົນ.

ເວລາໄດ້ລ່ວງກາຍໄປຈາກເຊົ້າເຖິງສວາຍ ແລະ ຈາກສວາຍເຖິງແລງ ຈົນດວງຕາເວັນລົງລັບຂອບຟ້າຝັ່ງຂອງເບື້ອງນັ້ນແລ້ວຄວາມມືດກໍຄ່ອຍໆຄືບຄານເຂົ້າມາແທນທີ່, ມັນໄດ້ກາຍເວລານັດໄປຫລາຍຊົ່ວໂມງ ແລະ ກໍຍັງບໍ່ທັນເຫັນຂະບວນໄຫຍ່ຂອງເມືອງເຊບັ້ງໄຟມາຮອດ. ກຳນົດແມ່ນ ໕ ໂມງແລງ ຈະໃຫ້ເຖິງທ່າແຂກ ແລະ ຄືນນີ້ຕ້ອງຟ້ອນລຳວົງຮ່ວມກັນ ເພື່ອສະຫລອງ... ນີ້ແມ່ນແຜນການທີ່ກະໄວ້ ປານນີ້ກໍບໍ່ຮູ້ຂ່າວຫຍັງເລີຍ, ອາດຈະເປັນເລື່ອງໃຫມ່ແລ້ວຫລືບໍ່? ຄະນະປະທ້ວງສົນທະນາກັນຢູ່ໃນຫ້ອງນ້ອຍໆດ້ວຍຄວາມວິຕົກກັງວົນທີ່ສຸດ.

ຄືນນີ້ສະພາບພາຍນອກ ຫມົ່ນ ຫມອງ ກ່ວາ ມື້ ວານ, ພວກທະຫານເຄື່ອນຍ້າຍກຳລັງໄປໆ ມາໆ ຜິດປົກກະຕິ, ລູກຈ້ອງສີແດງແຕກກະຈາຍຢູ່ບົນທ້ອງຟ້າເປັນບາງ ຄັ້ງ, ຄະນະປະທ້ວງຍາມນັ້ນຂາດການຕິດຕໍ່ກັບຂະບວນ ເມືອງເຊບັ້ງໄຟ.

ຄືນຫນຶ່ງອີກເກືອບຜ່ານພົ້ນໄປ ບໍ່ທັນມີເລື່ອງ ຫຍັງ ເກີດ

ຂຶ້ນ, ຕອນເຊົ້ານີ້ໃໝ່ໄດ້ວຽນມາເວລາ ໗ ໂມງ ວິທະຍຸກະ
ຈາຍສຽງຂອງຝ່າຍປະເທດລາວ ໄດ້ ປະ ກາດ ຂ່າວ ຊາວ
ເມືອງທ່າແຂກແລະໜອງບົກລຸກຂຶ້ນຕໍ່ສູ້... ມິນຊິນໃຜໆກໍ
ຊິນຊື່ນບໍ່ຈັກຮ້ອງໄຮ, ບໍ່ຈັກເຕັ້ນຈັກດີດ, ເຂົາໝັ້ນໃຈວ່າ:
ບໍ່ມື້ໃດກໍມື້ໜຶ່ງຈະມີຜູ້ຕາງໜ້າລັດຖະບານລົງມາແກ້ໄຂ
ຄືກັບກັບຫ້ວຍຊາຍ, ໃຜກໍຄືດຮອດມື້ໄດ້ຮັບໄຊຊະນະ ແລະ
ຄິດຮອດມື້ຈະ ໄດ້ ມີ ຊີ ວິດ ໃໝ່ ຢູ່ ບ້ານ ເກີດ ເມືອງ ນອນ,
ຄວາມຈິງພັດບໍ່ແມ່ນງ່າຍດາຍຄືດັ່ງພວມຄິດ, ເພາະວ່າ
ຕໍ່ໜ້າຂອງເຂົາຍັງແມ່ນ "ຄວາມຕາຍ", ຄວາມຫວັງ
ຂອງນາຍທະຫານຊັ້ນສູງຜູ້ທໍລະຍົດຄິດວ່າໄຊ້ອຸບາຍແບບ
ນີ້ແມ່ນຖືກແລ້ວ ຂະບວນປະທ້ວງຫາກຈະສະລາຍຕົວລົງ
ເອງ, ຄົນເຮົາມີຊີວິດຢູ່ໄດ້ກໍຕໍ່ເມື່ອມີການກິນ, ດື່ມ, ນຸ່ງຖື
ແລະ ນອນ, ແຕ່ວ່າຂະບວນປະທ້ວງຖືກປິດລ້ອມເປັນເວ
ລາຫລາຍວັນແລ້ວເຂົາເຈົ້າຍັງຄົງມີ ຊີວິດຢູ່, ທຸກໆມື້ເມື່ອ
ຮອດຕອນຄ່ຳຍາມຄືນມາ ຢູ່ລຽບກຳແພງຈະມີທະຫານຜູ້
ຮັກຊາດເອົາອາຫານແລະນ້ຳໄປສົ່ງໃຫ້, ຫາກເຕັມທີບາງ
ມື້ກໍກິນເຂົ້າປຽກ, ດື່ມນ້ຳຜູ້ລະຈອກນ້ອຍ, ດັ່ງນັ້ນຮ່າງກາຍ
ກໍອ່ອນໄຊ, ໜ້າຕາຫລ່າເຫລືອງລົງຊັກໄຊ້.

x x

x

*ຢູ່ນະຄອນຫລວງວຽງຈັນ ເມື່ອຮູ້ຂ່າວວ່າຢູ່ທ່າແຂກ ໜອງບົກ ນີ້ຂະບວນລຸກຂຶ້ນຂໍຄວາມເປັນທຳ ແຕ່ຖືກຄວບຄຸມດ້ວຍກຳລັງທະຫານ ແລະ ສະພາບການປະສົບຄວາມເດືອດຮ້ອນແບບນັ້ນແລ້ວ, ກອງປະຊຸມຄະນະລັດຖະບານປະຈຳສັປະດາ ໄດ້ນຳເອົາບັນຫານີ້ໄປຄົ້ນຄວ້າ, ສຸວັນນະພູມາ (*) ໄດ້ເວົ້າວ່າ: ຂໍ້ສະເໜີຂອງເຂົາບໍ່ມີຫຍັງຜິດກັບສັນຍາ ແລະ ອະນຸສັນຍາ, ກອງປະຊຸມມີມະຕິຕົກລົງ ແຕ່ງຕັ້ງຜູ້ຕາງໜ້າຂອງລັດຖະບານ ລົງໄປແກ້ໄຂ, ຕົວຈິງແລ້ວພວກປະຕິການຈຳນວນໜຶ່ງຊຶ່ງມີ ຊີ-ໄອ-ເອ. ເຊື່ອງໜ້າຢູ່ເບື້ອງຫລັງ ໄດ້ພະຍາຍາມປົກປິດເລື່ອງທ່າແຂກ ແລະ ໜອງບົກບໍ່ໃຫ້ຜິວພັ້ງອອກໄປ, ສີສຸກ ນະຈຳປາສັກ (**) ເວົ້າຂຶ້ນວ່າ :

– ເລື່ອງເກີດຂຶ້ນຢູ່ທ່າແຂກ ມັນບໍ່ແມ່ນເລື່ອງໃຫຍ່ເລື່ອງເຕພີສັງ ! ລັດຖະບານບໍ່ຈຳເປັນລົງໄປ. ເລື່ອງຈິງມັນແມ່ນກຳມະກອນໄຍທາ ໑໐ ກວ່າຄົນຂັດແຍ່ງກັນ ແລ້ວເຮັດປະທ້ວງຂຶ້ນຊື່ງ...

ຄົນຈຳນວນໜຶ່ງທີ່ມີທ່າອ່ຽງຂວາຢູ່ໃນວົງການລັດຖະ

(*) ເປັນນາຍົກລັດຖະມົນຕີຂອງລັດຖະບານປະສົມຊຸດລາວ.

(**) ເປັນລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

ບານກໍຫາອຸບາຍລາຍຫລ່ຽມຫລາຍຢ່າງ ເພື່ອຂັດຂວາງ ແຕ່ວ່າຍ້ອນມີຕົວແທນຂອງຝ່າຍບັງດາກຳລັງຮັກຊາດປະກອບໃນຄະນະລັດຖະບານສູ້ຢັ້ງຢ່າງມີເຫດຜົນ ສຸດທ້າຍກອງປະຊຸມໄດ້ຕົກລົງມອບໃຫ້ ຄ-ປ-ສ (***) ສອງຝ່າຍເປັນຜູ້ຮັບຜິດຊອບແກ້ໄຂ.

ຮອດຕອນເຊົ້າມື້ລຸນມາ ຂ່າວລັບທາງທະຫານລາຍງານໃຫ້ຮູ້ວ່າ ພວກປະຕິການຂວາຈັດ ໄດ້ທ້ອນໂຮມເອົາທະຫານພາກ ໕ ສອງກອງຮ້ອຍ, ເກັບເອົາລົດຊາສອງຄັນ ແລະ ຂົນເອົາທະຫານລາບອາກາດຫມາຍເລກ "ກ໑໔" ຈາກວຽງຈັນ ສົ່ງໄປທ່າແຂກ, ເວລານັ້ນ ຫນັງສືພິມຈຳນວນຫນຶ່ງຊຶ່ງແມ່ນປາກສຽງຂອງພວກປະຕິການ (ຢູ່ວຽງຈັນ) ເປັນຕົ້ນແມ່ນຫນັງສືພິມ "ຊາດລາວ", "ສຽງເສລີ" "ຟື້ນຟູຊາດ", "ປະຊາສຳພັນ", "ສາຍກາງ" ແລະ ອື່ນໆ... ໄດ້ລົງພິມຂ່າວອະກຸສົນ, ໃນຄໍລຳທີ່ສຳຄັນແຕ່ລະສະບັບມັນຂຽນວ່າ: ເຫດການທາງການເມືອງເກີດຂຶ້ນຢູ່ທ່າແຂກ; ຢູ່ຫນອງບົກນັ້ນແມ່ນຍ້ອນຝ່າຍບັງດາກຳລັງຮັກຊາດ ເປັນຜູ້ບຸແບ່ຢູ່ເບື້ອງຫລັງ ... ກຳລັງທັບແຫ່ງຊາດ ເຄື່ອນເຂົ້າທ່າແຂກ ແລະ ຫນອງບົກ ມັນບໍ່ແມ່ນສ້າງຄວາມເຄັ່ງຕຶງ

(***) ຄະນະປະສົມສູນກາງເພື່ອປະຕິບັດສັນຍາ (ຝ່າຍທະຫານ)

ແຕ່ປາງໃດ. ການເຄື່ອນຍ້າຍກຳລັງນັ້ນ ແມ່ນເພື່ອຮັກສາ ຄວາມປອດໄພ ໃຫ້ແກ່ຂະບວນປະທ້ວງ.

– ທາງໜຶ່ງ ກໍເພື່ອ ສະກັດກັ້ນບັນດາກຳລັງຮັກຊາດ ບຸກໂຈມຕີ ແລະ ຂ່າວບິດເບືອນອື່ນໆອີກ...

ການຮ້ອງໂຮທາງໜັງສືພິມ ແລະ ວິທະຍຸຂອງກຸ່ມ ຂວາຈັດປູ່ວຽງຈັນເປີດໂປ່ງອອກບໍ່ພໍສາມມື້ ໃນມື້ໜຶ່ງຕົວ ແທນຂອງຊາວເມືອງທ່າແຂກ ແລະ ເມືອງເຊບັ້ງໄຟສອງ ຄົນໄດ້ເດີນທາງມາເຖິງວຽງຈັນໂດຍບັງເອີນ, ປູ່ຕໍ່ໜ້າກະ ຊວງສຶກສາທິການ ບັນດານັກຮຽນ ນັກສຶກສາ ແລະ ກຳ ມະກອນພາກັນຈັດງານໂຮມຊຸມນຸມຂຶ້ນ ແລ້ວໄປເຊີນເອົາ ເພື່ອນຮ່ວມຮົບຜູ້ສະໜິດມາເລົ່າເລື່ອງສູ່ຟັງ. ນາງພາ (****). ທ້າວສຳລີ (*****) ໄດ້ຮັບກຽດຂຶ້ນກ່າວຄຳ ຄິດຄຳເຫັນປູ່ເທິງເວທີ. ເຂົາທັງເລົ່າທັງເອົາມືມາເຊັດນ້ຳ ຕາປ່າງລະທົມຂົມຂື່ນ ແລະ ເຈັບແຄ້ນແໜ້ນໃຈຫາສິ່ງ ປຽບບໍ່ໄດ້. ຊາວວຽງບາງຄົນເຂົ້າຟັງ ເມື່ອກະທົບກັບຄວາມ ສັງເວດຈົນຫລົງຮ້ອງຂຶ້ນ ດ້ວຍຄວາມຄຽດແຄ້ນ. ມວນຊົນ ຈຳນວນຫລວງຫລາຍ ພາກັນຮ້ອງໂຮຂຶ້ນ ເພື່ອປ້ອຍດ່າ

(****) ຕົວແທນຂອງຊາວເມືອງທ່າແຂກ.

(*****) ຕົວແທນຂອງຊາວເມືອງເຊບັ້ງໄຟ

ຄົນລາວກຸ່ມໜຶ່ງທີ່ມີໜີ້ເລືອດ ແລະ ຂາຍຊາດ ຂາຍປະຊາຊົນຢ່າງຮຸນແຮງ ສຽງຄັດຄ້ານ ກ່າວປະນາມຂອງມວນຊົນຜູ້ເປັນທຳ ໄດ້ດັງກ້ອງກັງວານ ໄປທຸກແຫ່ງຫົນ ຂອງເມືອງລາວ, ນັບແຕ່ນີ້ນັ້ນມາ, ບັນດາສະຖາບັນການສຶກສາ, ກຳມະກອນ, ອົງການຈັດຕັ້ງ ແລະ ໒໑ ອົງການ (*) ໄດ້ຕີພິມບົດຖະແຫລງການ ເພື່ອສະໜັບສະໜູນ ຂະບວນປະທ້ວງ, ກ່າວປະນາມພວກທໍລະຍົດຕໍ່ຊາດ, ທວງໃຫ້ລັດຖະບານປະສົມ ມີວິທີການແກ້ໄຂ ດ້ວຍຄວາມເຮັ່ງຮ້ອນ.

ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ອັນສັກກາລະບູຊາຂອງປະຊາຊົນ ຈາກນັ້ນມາສອງສາມ ມື້ກອງປະຊຸມລັດຖະບານໄດ້ໄຂຂຶ້ນອີກ, ເພື່ອທົບທວນ ເຖິງການປະຕິບັດໜ້າທີ່ຂອງ ຄ-ປ-ສ, ດັ່ງກ່ອນໄດ້ຖືກຫລົ້ມເຫລວຍ້ອນການຂັດຂວາງຂອງກຸ່ມນິຍົມ ຊີ-ໄອ-ເອ, ເທື່ອນີ້ນາຍົກຈຶ່ງອອກຄຳສັ່ງສານຂ້ຽນວ່າ:

ໃຫ້ເຊົາການປິດລ້ອມຂະບວນປະທ້ວງ, ໃຫ້ທະຫານກັບຄືນເຂົ້າຄ້າຍແລະ ໃຫ້ແກ້ໄຂບັນຫາໂດຍສັນຕິ, ຄຳສັ່ງຂອງນາຍົກລັດຖະມົນຕີ ຖືກມອບໝາຍໃຫ້ເຈົ້າແຂວງບົວ

(*) ແມ່ນອົງການຈັດຕັ້ງຂອງມະຫາຊົນຫລາຍອົງການໂຮມເຂົ້າເປັນສູນກາງອັນດຽວ ເພື່ອສະໜັບສະໜູນການພື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ ຫລັງຈາກມີສັນຍາປີ 1973.

ໂຮມເປັນຜູ້ລົງໄປໄກ່ເກ່ຍ.

ເມື່ອຮຸ່ງເຊົ້ານີ້ຕໍ່ມາເຮືອບິນລາວເດີນອາກາດພິເສດລຳໜຶ່ງ ໄດ້ບິນຂຶ້ນຈາກສະໜາມບິນວັດໄຕແລ້ວມຸ່ງໜ້າໄປສູ່ທ່າແຂກດ້ວຍຄວາມເຄັ່ງຮ້ອນ, ພາຍຫລັງບິນເຈີດລົງສູ່ເດີ່ນບໍ່ພໍເທົ່າໃດນາທີ ຕໍ່ມາເຈົ້າແຂວງບົວໂຮມກໍຟ້າວຟັ່ງໄປພົບກັບ ບັນດານາຍທະຫານຊັ້ນສູງໂລດ, ຄ່ຳນີ້ນັບຫລັງຈາກປະຊຸມກັບບັນດານາຍທະຫານເປັນເວລາ ມີ ຊົ່ວໂມງສິ້ນສຸດລົງ, ຢູ່ໂຮງການແຂວງເຂົາໄດ້ຈັດງານລ້ຽງ ຕຳຈອກເຫລົ້ານຳກັນອຶກກະທຶກ, ຢູ່ອ້ອມແອ້ມພະແນກໂຍທາ ເຂົາໄດ້ສັບປ່ຽນກຳລັງທະຫານໃຫມ່. ລົດອາເອັມຕິດປືນກົນໜັກ ແລະ ມີນິກກະໂລໄຫຍ່ ໄດ້ເຄື່ອນເຂົ້າຈອດ ຢູ່ຕໍ່ໜ້າໂຮງການ, ຈຳນວນສອງຄັນອີກຢູ່ຄ້າຍທະຫານກໍກຽມພ້ອມເຂົາພະຍາຍາມຈະເຮັດໃຫ້ສະພາບການຍຸຕິລົງໂດຍໄວ.

ຕອນເຊົ້ານີ້ລຸນມາ ດວງຕາເວັນຍັງບໍ່ທັນຂຶ້ນພົ້ນຂອບຟ້າຊ້ຳ, ຢູ່ຕໍ່ໜ້າພະແນກໂຍທາສຽງນິກກະໂລໄດ້ດັງຂຶ້ນເປັ່ງໆວ່າ :...

– ອາໂລ ! ອາໂລ ! ນີ້ນີ້ເຈົ້າແຂວງບົວໂຮມໄດ້ຮັບການແຕ່ງຕັ້ງຈາກນາຍົກລົງມາ ເພື່ອສັ່ງໃຫ້ປຸດຕິການປະທ້ວງພາຍໃນ ໒໔ ຊົ່ວໂມງ... ຢູ່ພະແນກໂຍທາ ຫ້າມບໍ່

ໃຫ້ຊາວເມືອງຢູ່ນອກເຂົ້າໄປຫຍຸ້ງກ່ຽວ. ກັບຜູ້ ທີ່ມີ ຄວາມຜິດ, ຖ້າຜູ້ໃດບໍ່ປະຕິບັດຕາມແລ້ວຈະຖືວ່າເປັນຜູ້ລະເມີດຕໍ່ກົດໝາຍຂອງບ້ານເມືອງ ແລະຈະໄດ້ປັບໄໝໃສ່ໂທດຈຳຄຸກ ສອງປີຂຶ້ນເມືອ...

ສຽງປ່າວເຕືອນໄດ້ຫລຳໄປຫລ່ຳມາຫລາຍຫລິບຫາຍຕ່າວຈົນໜວກຫູ, ເມື່ອສະພາບເຄັ່ງຕຶງແບບນັ້ນບັນດານັກຕໍ່ສູ້ຜູ້ອົງອາດ ຮູ້ສຶກແປກປະຫລາດ, ບໍ່ຮູ້ວ່າສະພາບຈະຜັນປ່ຽນໄປແບບໃດ, ສິ່ງທີ່ພໍອຸ່ນໃຈແດ່ກໍຄື ເຂົາເຊື່ອໝັ້ນສັນຍາ ແລະ ອານຸສັນຍາ ເຊື່ອໝັ້ນໃນອົງການລັດຖະບານປະສົມ ອັນມີຄົນຂອງບັນດາກຳລັງຮັກຊາດສັງກັດຢູ່ເຄິ່ງຫນຶ່ງ, ຄັນຫາກສິ່ງເຫລົ່ານີ້ບໍ່ມີຄວາມສາມາດຊ່ວຍຊູເອົາຊີວິດຂອງເຂົາໄດ້ ຫລື ວ່າ ພວກຂວາຈັດ ຫາກສ່ຽງໄພ, ຄວາມຫວັງເທື່ອສຸດທ້າຍກໍແມ່ນ " ຄວາມຕາຍ " ແລະຕາຍໄປຢ່າງໝັ້ນໃຈວ່າຈະມີຄົນລາວ ຜູ້ຮັກຊາດສືບຕໍ່ແກ້ແຄ້ນແທນຄືນເພື່ອທວງເອົາໜີ້ເລືອດ ຄວາມທຸກຍາກລຳບາກຂອງຜູ້ທີ່ຢູ່ໃນຄັ້ງນີ້ຂອງສັດຮ້າຍ ນັບມື້ນັບຫຍຸ້ງຍາກສັບສົນ, ການກິນດື່ມບໍ່ພຽງພໍ, ສຸກຂະພາບອ່ອນເພຍ, ຢູ່ໃນຫ້ອງເຮືອນມີຄົນສະຫລົບ ແລະ ມີຄົນອົດອາຫານ ແຕ່ອຸປະສັກເຫລົ່ານັ້ນບໍ່ໄດ້ເຮັດໃຫ້ຈິດໃຈຕໍ່ສູ້ປ່ຽນແປງ.

ຄືນຫນຶ່ງຜ່ານພົ້ນໄປ, ເຊົ້າວັນໃໝ່ໄດ້ວຽນມາເຖິງທ້ອງຟ້າເມືອງທ່າແຂກຍັງມືດມົວໄປດ້ວຍນ້ຳໝອກ ແລະ ມ່ານເມກສີຂາວອາກາດຍາມເຊົ້າເປືອກເປັນ, ຄົນໃນເມືອງສ່ວນຫນຶ່ງບໍ່ທັນລຸກນອນ,ບັງເອີນມີເລື່ອງຫນຶ່ງເກີດຂຶ້ນ, ຢູ່ໃນໂຮງການພະແນກ ໂຍທາປະກິດເຫັນປືນແອັມ ໑໖ ຫລາຍສິບກະບອກເຮ່ຍຊະຊາຍຕາມລະບຽງ, ປືນຈຳນວນນັ້ນບໍ່ມີລູກຈັກນັດ,ໃຜເຫັນກໍ່ປະຫລາດໃຈ, ບິງໄຊຍະກຸມມານນັ່ງຄຶດຢູ່ເທິງຕຽງນອນບຶດຫນຶ່ງແລ້ວຈິ່ງເຕືອນໃຫ້ຫມົດທຸກຄົນ ລະມັດລະວັງ,ນີ້ແມ່ນເຂົາອາດຈະປັ້ນເລື່ອງຂຶ້ນວ່າພວກເຮົາມີອາວຸດເພື່ອສ້າງເງື່ອນໄຂໃຫ້ເຂົາໄດ້ ໃຊ້ອາວຸດປາບປາມ... ບິງເວົ້າເກືອບບໍ່ສຸດ, ສຽງໝາກແຕກ ໄດ້ແຕກຂຶ້ນສະໜັ່ນຟ້າສະເທືອນດິນ, ຢ່າງລຽນຕິດ, ຝາປະທາຍໂຮງການຂຸລົງຍ່າວໆ, ຄວັນຫມາກແຕກທີ່ມີອາຍພິດຫລາຍລູກ ໄດ້ເຮັດໃຫ້ຜູ້ຄົນເມົາ. ສຽງໂອ, ສຽງຮ້ອງອຶກກະທຶກອອກມາເບື້ອງນອກ, ສວຍໂອກາດຍາມສົນລະວົນ ເຂົາສັ່ງໃຫ້ທະຫານບຸກເຂົ້າໄປຈັບເອົາຄະນະປະທ້ວງ ໑໑ ຄົນອອກມາມັດສອກລຽນແຖວໄວ້. ການປະທະກັນດ້ວຍຕີນມື ແລະ ໄມ້ຄ້ອນກ້ອນຫີນໄດ້ເກີດຂຶ້ນ, ເນື່ອງຈາກເຫລັກ ຫລາຍກວ່າຖ່ານຊາວເມືອງທ່າແຂກ ໄດ້ຖືກກຳລັງທະຫານທຳລາຍ, ເຮັດ

ໃຫ້ມວນຊົນແຕກກະຈັດກະຈາຍກັບເມືອບ້ານ.

ຊາວນາທີຕໍ່ມາ ເຮືອບິນ "ລາວເດີນອາກາດຂອງກອງທັບ" ລຳຫນຶ່ງໄດ້ປະກົດຕົວຢູ່ເທິງທ້ອງຟ້າແລ້ວກໍເຈີດລົງສູ່ເດີ່ນ, ນາຍທະຫານຄົນຫນຶ່ງຍ່າງເຂົ້າໄປຈົກປືນຈໍ້.

– ໄປ ! ໄປຂຶ້ນຍົນພຸ້ນ !

ບົງ ໄຊຍະກຸມມານ ແລະ ເພື່ອນຮ່ວມຮົບຫລຽວເບີງຫນ້າມັນດ້ວຍຄວາມຄຽດແຄ້ນ, ເຮືອບິນລາວເດີນອາກາດຂອງກອງທັບສີຂຽວໄດ້ບິນອອກຈາກທ່າແຂກ ມຸ່ງຫນ້າຂຶ້ນສູ່ເວຫາອັນສູງລິ່ວ, ນັກຮົບ ໑໑ ຄົນພາກັນຫລຽວລົງໄປເບິ່ງທ່າແຂກອີກຄັ້ງຫນຶ່ງ ເຂົາສາມາດແນມເຫັນບ້ານເກີດເມືອງນອນເຫັນພະແນກໂຍທາໄດ້ປົກຄຸມໄປດ້ວຍພູມີພາບແຫ່ງຄວາມເສົ້າຫມອງ, ເຂົາຮູ້ສຶກເຈັບແສບໃນດວງໃຈ ແລະ ປາກໂຕນລົງມາເພື່ອສືບຕໍ່ ຕໍ່ສູ້ໃຫ້ຮຸນແຮງກ່ວາເກົ່າ, ຟົດເດືອດກ່ວາເກົ່າໃຫ້ສົມກັບຄວາມແຄ້ນ...

ຫລັງຈາກເຮືອບິນເຈີດລົງສູ່ເດີ່ນສະຫວັນນະເຂດແລ້ວ ລົດກັດງຂີ້ຫມ້ຽງຄັນຫນຶ່ງກໍແລ່ນເຂົ້າມາຈອດເອົາຄົນ ຖືກຈັບ, ມີທະຫານໆ ຫ້າຄົນເອົາປືນຄຸມຕົວໄປໃສ່ຄຸກ.

x x
x

*ເມື່ອຊາວເມືອງເຊບັ້ງໄຟ ນຳເອົາສົບຂອງພໍ່ເຖົ້າຊຽງຂຽນໄປຣອດບ້ານແລ້ວ ໄທບ້ານໄທເມືອງກໍໄປຄົບງັນຕາມຣີດຄອງປະເພນີ, ຜູ້ຖືກບາດເຈັບຍ້ອນລູກປືນ ກໍຈັດສົ່ງໄປປົວປາພື້ນເມືອງຢູ່ສະຖານທີ່ປິດລັບແຫ່ງຫນຶ່ງ. ຢູ່ທີ່ເຮືອນຂອງພໍ່ເຖົ້າຊຽງຂຽນ ແຕ່ລະມື້ແຕ່ລະຄືນມີຄົນບ້ານໃຕ້ບ້ານເຫນືອ ຫລັ່ງໄຫລເນືອອົບອຸ່ນບໍ່ຂາດ. ໃຜໆກໍສະແດງຄວາມອາໄລອາວອນອີດູກູບາ, ຍ້ອນຄວາມທຸກໂສກສົນໃສ່ຄວາມຄຽດແຄ້ນຊາວບ້ານຫລາຍຄົນອົດບໍ່ໄດ້ ຈົນນ້ຳຕາໄຫລອອກມາອາບແກ້ມ ຢ່າງລະທົມຂົມຂື່ນ... ພິທີຄົບງັນໄດ້ລ່ວງກາຍໄປເຖິງ ໗ ມື້ເຈັດຄືນແລ້ວ, ມື້ທີເຈັດເປັນມື້ຕັດສົບສົ່ງສະການນີ ຊາວບ້ານ ຊາວເມືອງ ນັບເປັນພັນເປັນຫມື່ນໄດ້ມາໂຮມກັນຢູ່ກາງບ້ານ, ເຂົາເຈົ້າກຽມຈະແຫ່ສົບໄປປ່າຊ້າ, ໃນເວລານັ້ນ ຢູ່ກ້ອງຕະລ່າງຍັງມີຈານບິນ, ແມ່ບຸນພ້ອມດ້ວຍຄະນະຂອງເພິ່ນ ພວມປຶກສາຫາລືບ່ອນປົງສົບຢູ່.

– ຈັກໂມງຊິເອົາໄປນໍ້ລຸງ ? ທ້າວສຳລີຖາມ.

– ເອີ ! ຈັກຫນ້ອຍນີ້ແລ້ວ, ກຽມຕົວສາ ! ຈານບິນເວົ້າແລ້ວນັ່ງມິດຢູ່ບຶດຫນຶ່ງ. ແມ່ບຸນເລີຍເວົ້າຂຶ້ນ :

– ນີ້ນ່າເຖົ້າ! ອັນນີ້ມັນເປັນຂອງກາງໄດ! ຄັນເຮົາເອົາໄວ້

ບາງທີ ຈະເປັນປະໂຫຍດໃຫ້ແກ່ບ້ານເມືອງ ກໍອາດເປັນໄດ້.

ຄໍາເວົ້າປະໂຫຍກນີ້ ໄດ້ເຮັດໃຫ້ຫມູ່ຄະນະ ຜູ້ສືບທອດ ຄົ້ນຄິດ ພິຈາລະນາເຫິງເຕີບ ແລ້ວງຶກຫົວ ໄປຕາມໆກັນ,

1) ບ່ອນມ້ຽນທົບສົບ ຂອງລຸງຊຽງຊຽນ ໄດ້ໂອບອ້ອມໄປດ້ວຍຕົ້ນກ້ວຍ, ໄມ້ແຂງ ລວດເຫຼັກ ແລະຄົນຍາມເພື່ອປ້ອງກັນສັດຕູບຸກເຂົ້າບອງຮ້າຍ

ຄ້າຍກັບວ່າພວກເພິ່ນ ໄດ້ມອງເຫັນຫົນທາງ ອອກໄປຕໍ່ສູ້ ເພື່ອຍາດເອົາໄຊຊະນະ ໃນບັ້ນໃຫມ່ແລ້ວ.

ເມື່ອດວງຕາເວັນຂຶ້ນພົ້ນຂອບຟ້າ ກໍພໍດີເຖິງໂມງບັດ, ຊາວບ້ານ ຊາວເມືອງ ພ້ອມ ກັນ ຫາມ ເອົາສົບຂອງພໍ່ເຖົ້າ

ຊຽງຂຽນ ແຫ່ອອກໄປ ເປັນສາຍຍືດໆ ລົງຕາມທາງລົດ ແລ້ວແວ່ເຂົ້າ ສູ່ໂຮງການເມືອງ, ຢູ່ທີ່ນັ້ນ ມີກົກໄມ້ໃຫຍ່ ສອງກົກ ເຂົາເອົາຫີບສົບໄປປອງໄວ້ຫວ່າງກາງ, ຢູ່ຂົງ ເຂດເດີ່ນຫຍ້ານີ້ ອາກາດ ປອດໂປ່ງດີ, ເມື່ອສາຍລົມເປັນ ພັດມາຄັ້ງໃດໃບໄມ້ ແລະ ກິ່ງກ້ານອັນດົກໜາຂຽວອຸ່ມ ຫຸ່ມ ກໍເປື້ອງປິ່ນໂອນເອັນ ຢ່າງສວຍງາມ, ຊຸມບ່າວໆ ສາວໆ, ນ້ອງນ້ອຍນັກຮຽນຫລັ່ງໄຫລ ເຂົ້າໄປຕັດດອກໄມ້ ເຈັ້ນ ເຂົານັ່ງຈຸ້ມເປັນຈຸເປັນໝູ່ ປະດັບລວດລາຍໃສ່ຫີບ ສົບ. ຫລຽວເບິ່ງຮູບດອກໄມ້ທີ່ສະທ້ອນໃສ່ແສງຕາເວັນ ສະ ຫລັບສີ ເຫລື້ອມຍິບໆ ຄືກັນກັບທໍ່ຜາສາດຄໍາ, ຮອດ ຕອນກາງຄືນມາ ແສງຕະກຽງ (ນັງຊີງ) ຮຸ່ງຂື້ນຄັບທີ່ນ, ຄົນຢູ່ເມືອງເຊບັ້ງໄຟບໍ່ວ່າຜູ້ເຖົ້າ ຜູ້ແກ່ແມ່ຍິງເດັກນ້ອຍຕະ ຫລອດຮອດແມ່ຄ້າຊາວຂາຍ ກໍໄດ້ເຂົ້າໄປຄັບງັນ, ຂາຍ ເຄື່ອງຢູ່ອ້ອມຫີບສົບ, ຊາຍໜຸ່ມຍິງໜຸ່ມຫລາຍຄົນ ບັງ ຄືກະຈັບປີສີຊໍ ແລະ ເຄື່ອງເສບພື້ນເມືອງເຂົ້າໄປພ້ອມເຂົາ ພາກັນມ່ວນຊື່ນລື່ນເລີງຢູ່ໝົດມື້ໝົດຄືນ.

ຂະບວນລຸກຮື້ຂຶ້ນຕໍ່ສູ້ ຢູ່ທ່າແຂກຖືກປາບ ແລະ ສະ ລາຍຕົວລົງແລ້ວ, ຢູ່ເມືອງເຊບັ້ງໄຟພັດມີເລື່ອງໃຫມ່ເກີດ ຂຶ້ນ,ພວກປະຕິການຂວາຈັດຍິ່ງເກີດມີຄວາມສະທ້ານປ້ານ

ກົວເພາະຄົນໄປປ້ານຈະເປັນເລື່ອງເປັນລາວໃຫຍ່ຂຶ້ນ. ມື້ ຫນຶ່ງເຂົາໄດ້ສົ່ງກຳລັງທະຫານສາມກອງພັນລົງໄປເຄື່ອນ ໄຫວຢູ່ຂອບເຂດເມືອງເຊບັ້ງໄຟຢ່າງເຄັ່ງຄັດ. ນັບແຕ່ມື້ນັ້ນ ມາພວກເຂົາໄດ້ອອກຄຳສັ່ງບໍ່ໃຫ້ ຊາວເມືອງອອກໄປທົ່ງໄຮ່ ທົ່ງນາ, ບໍ່ໃຫ້ໄປ ຢື້ ຢາມ ຍາດຕິພີ່ນ້ອງຕ່າງບ້ານ ແລະ ຫ້າມບໍ່ໃຫ້ຄົນລົງເຮືອນໃນຍາມຄ່ຳຄືນ, ຖ້າໃຜລະເມີດຈະ ຖືວ່າເປັນ "ຄອມມູນິດ" ແລ້ວຈະຖືກຕັດສິນປະຫານຊີວິດ. ທະຫານ "ແມງເງົາ" ມັກເລາະໄປເລາະມາເປັນຈຸເປັນຫມູ່ ເພື່ອກວດກາສາລະເວ, ຢູ່ກາງບ້ານທຸກມື້ທຸກຄືນ ໄດ້ຍິນ ແຕ່ສຽງປ້ອຍດ່າອັນຫຍາບຊ້າ, ຫມາເຫົ່າ ກໍ່ເອົາ ປືນ ຍິງ ຫມາ, ແມວຮ້ອງກໍຍິງແມວ, ຜົນລະປູກລູກໄມ້ຢູ່ໃນສວນ ແຄມບ້ານ ເຂົາກໍເຂົ້າໄປ ລັກເອົາຈົນກ້ຽງ ຊາວເມືອງເຊ ບັ້ງໄຟໃຜໆ ກໍຄຽດແຄ້ນໜ່າຍຊັງ ແຕ່ວ່າບໍ່ມີໃຜຈະປາກ ໄດ້ຍ້ອນອຳນາດປາຍກະບີ້ປາຍປືນ.

ນັບວ່າຫລາຍວັນຜ່ານພົ້ນໄປ ຊາວເມືອງເຊບັ້ງໄຟ ບໍ່ ຍອມເອົາສົບຂອງຜູ້ເສຍຊີວິດໄປສົ່ງສະການ ຄົນໃນເມືອງ ພາກັນຫລັ່ງໄຫລເຂົ້າຄົບງັນນັບມື້ນັບ ຫລາຍ ຂຶ້ນ, ມື້ ຫນຶ່ງບັ້ງເອີນມີທະຫານກອງຮ້ອຍຫນຶ່ງໄປປິດລ້ອມ ເຂົາ ຂະຫຍາຍແຖວໄວວາຢ່າງຟ້າແມບ ຢູ່ຕໍ່ຫນ້າປາກປະຕູ

ໂຂງປະກົດມີນາຍທະຫານຄົນໜຶ່ງ ຈົກປືນສັ້ນອອກມາ ຈີ້ໃສ່ຕາບເອິກຂອງຄົນຍາມ.

– ພວກເຈົ້າມັກດີຫລືມັກຮ້າຍ? ຄັນບໍ່ຢາກຟຸມເລືອດ ໃຫ້ຣີບເອົາຂອງພິດາຍໄປຖິ້ມດຽວນີ້ ໄດ້ຍິນບໍ່ຣື! ຄົນຍາມ ຫົວໃຈເຕັ້ນຕຶກໆ, ເຂົາຢືນເຣັດໂຕແຂງຢູ່ຄືຮູບປັ້ນເມື່ອຕັ້ງ ສະຕິໄດ້ຈຶ່ງເວົ້າແດກໃສ່ໜ້າມັນວ່າ:

– ເຈົ້າຊິຂ້າຂ້ອຍຫວະ?

– ຢ່າວູ່ປາກ!

– ເຊີນໂລດ, ເຈົ້ານັ້ນຄວນປຸດເຊົາການເປັນລູກແຫລ້ງ ໃຫ້ຈັກກະພັດ ຍັງດີກວ່າມາຫ້າມພວກຂ້ອຍ.

ບັງເອີນເຫັນແຂນລ້າສັນສອງເບື້ອງ ເດ່ນມາຈັບຄໍແລ້ວ ອັດປາກ ເຂົາຮູ້ສຶກຫັນໃຈຝືດ, ປາກອ້າປາກຮ້ອງຂຶ້ນ ແຕ່ບໍ່ ອອກສຽງ ແລະ ຮູ້ສຶກວ່າສອງແຂນຖືກມັດແໜ້ນຈົນເຈັບ, ສຽງໝາກຫວີດດັງຂຶ້ນຮູດໜຶ່ງ, ພວກໝາພານທີ່ລີ້ຊ່ອນ ຢູ່ຕາມພຸ່ມໄມ້ແຄມຮົ້ວ ພ້ອມກັບໂດດ ເຂົ້າ ໃນ ເດີ່ນ ຫຍ້າ ນາບໆ, ເຂົາໝາຍຈະບຸກເຂົ້າໄປຍາດເອົາຫີບສິບໄປຖິ້ມ, ໃນຂະນະນັ້ນສຽງກອງໝາກແຄ້ວງ (*) ໄດ້ດັງສະໜັ່ນ

(*) ກອງໝາກແລ້ວງ: ແມ່ນກອງສັກສິດຢູ່ໃນນິທານເລື່ອງທ້າວຂອງອິນບູຊານ, ເມື່ອມີເສິກສຽງກອງໝາກແລ້ວງດັງຂຶ້ນແລ້ວ ຈະມີເສນາອາມາດເປັນລ້ານໆ ຈັບອາວຸດລົ້ນມາຈາກເມືອງນາກ ເພື່ອອີເສິກຊ່ວຍ.

ຂຶ້ນພ້ອມນັ້ນສຽງນິກກະໂລກໍໄດ້ປ່າວເຕືອນໃຫ້ຮູ້ວ່າມີ ເສິກ ສົງຄາມ, ເມື່ອສຽງສັນຍານດັງຮອດຫູ ແລະ ສະເທືອນ ໝາກຫົວໃຈແລ້ວ ຊາວເມືອງເຊບັ້ງໄຟ ນັບ ເປັນ ຫມື່ນໆ ແສນໆ ກໍຟ້າວຫລັ່ງໄຫລເຂົ້າມາອ້ອມເອົາຫີບສົບຈົນເຕັມ ເດີ່ນຫຍ້າມວນຊົນຜູ້ຈັບໄມ້ຄ້ອນກ້ອນຫີນ, ຈັບພ້າຈັບມີດ, ຈັບຫອກຈັບງ້າວ ແລະ ຖືປືນແກັບປືນເພີງຢູ່ໃນທ່າກຽມ ພ້ອມ, ການປະທະກັນຢູ່ແຄມຮົ້ວໄດ້ເກີດຂຶ້ນ, ຊາວເມືອງ ພາກັນແກ່ວງໄມ້ຄ້ອນ, ກ້ອນຫີນອອກມາ ບາງຄົນກໍຈູ ເອົານ້ຳຫມາເຜັດ, ນ້ຳເກືອ, ນ້ຳເຄມີພຸ່ງໄປໃສ່ຫນ້າໃສ່ຕາ ພວກທະຫານ ສ່ວນປືນແກັບປືນເພີງຫນ້າຫນ້ອງຢູ່ໃຈ ກາງກໍໄດ້ຍິງອອກບໍ່ຂາດ, ທະຫານ "ແມງເງົາ" ເສຍຂວັນ ກໍພ້ອມກັນຫອບພົກປົບຫນີເຂົ້າປ່າ.

ຄວາມອັນຕະລາຍຂອງມື້ນັ້ນ ໄດ້ຜ່ານພົ້ນໄປ. ມັນໄດ້ ສ້າງຄວາມຫຍຸ້ງຍາກ ລຳບາກທີ່ສຸດ ໃຫ້ແກ່ ຊາວເມືອງ ຍ້ອນຄົນຍາມ ຂາດສະຕິໄປຫນ້ອຍຫນຶ່ງ ຈຶ່ງມີເລື່ອງເລວ ກັນ, ຊາວເມືອງບາງຄົນຖືກເຈັບສາຫັດ, ບາງຄົນມີບາດ ແຜເລືອດໄຫລອອກ, ບາງຄົນສົ້ງເສື້ອຂາດສ້ອຍ, ຊຶ່ງຄະນະ ປະທ້ວງຖືວ່າເປັນຂໍ້ບົກພ່ອງໃຫຍ່ທີ່ສຸດ ທີ່ກະກຽມບໍ່ຮອບ ຄອບ ມື້ລຸນມາ ຈານນົນ, ແມ່ບຸນ ແລະ ຄະນະຂອງເພິ່ນ

ກໍພ້າວເຂົ້າໄປປຶກສາຫາລືຢູ່ໃນຫ້ອງການ, ເພື່ອເຮັດແນວ
ໃດຕ້ອງຍຶດໝັ້ນຮັກສາສິບຜູ້ເສຍຊີວິດ ແລະ ສືບຕໍ່ ຕໍ່ສູ້ໄປ
ຈົນກ່ວາຈະໄດ້ຮັບໄຊຊະນະ, ເລື່ອງນີ້ພະນັກງານຂອງບັນ
ດາກຳລັງຮັກຊາດທີ່ເຊື່ອງຊ້ອນຊີ້ນຳຢູ່ໃນປ່າ ກໍເຫັນດີນຳ.
ນັບແຕ່ມື້ນັ້ນມາ, ຊາວໜຸ່ມຈຳນວນຫລວງຫລາຍພາກັນ

ຕະລຸມບອນເຂົ້າປ່າ, ເພື່ອຕັດເອົາໄມ້ມາເຮັດຫລັກຮົ້ວ, ເອົາ
ລ້ອມຮົ້ວອ້ອມເດີ່ນໂຮງການເມືອງສອງຊັ້ນ, ຊັ້ນໜຶ່ງແມ່ນ
ໄມ້ໄຜ່ໜາມຊັ້ນທີສອງແມ່ນລວດໜາມໜາກຈັບ, ຢູ່ທີ່
ຫີບສິບ, ເຂົາກໍເອົາກິກກ້ວຍມາໂອບໄວ້ຫລາຍຊັ້ນ ແລ້ວ
ເອົາລວດເຫລັກກ້ານາກ່ຽວຄອບໃສ່ກັບ ປູ່ທາງໜ້າຂອງ

ສິບມີເຈັບຂາວໃບຫນຶ່ງຂຽນຫນັງສືຕິດໄວ້ວ່າ "ກໍາແພງດິນກ້ວຍເພື່ອປ້ອງກັນໄຟ" ຢູ່ຫົວບໍລິເວນນັ້ນເຕັມແຕ່ປ້າຍຄໍາຂວັນກາງໄວ້, ຫໍຂ່າວກໍໄດ້ຕັ້ງຂຶ້ນຫລາຍບ່ອນ, ຮູບສຽດສີຫລາຍແຜ່ນຕິດໃສ່ຈົນເຕັມ, ເຂົາແຕ້ມຮູບຄົນຫ້ອງປຸ້ງກິນດອນລາ ຮູບທະຫານເອົາປືນຍິງພໍ່ເຖົ້າຊຽງຂຽນ, ຮູບທະຫານລັກກິນເປັດກິນໄກ່, ຮູບຂົ່ມຂູ່ປະຊາຊົນ ແລະອື່ນໆ... ເມື່ອຄົນເຂົ້າໄປແລ້ວກໍພາກັນໄປເລາະເບິ່ງເປັນຈຸເປັນຫມູ່ ດັ່ງຫາກອ່ານເບິ່ງແລ້ວຄວາມເຈັບແຄ້ນແຫນ້ນໃຈປະກົດວ່າໄດ້ເພີ້ມທະວີຂຶ້ນ.

ຊາວຫນຸ່ມຜູ້ແຂງແຮງໄດ້ຈັດວາງໃຫ້ຢູ່ຮັກສາຫົບສິບ. ສ່ວນຜູ້ຍິງເດັກນ້ອຍ ແລະ ຜູ້ເຖົ້າທີ່ຢູ່ບ້ານໃກ້ຄຽງໃຫ້ພາກັນກັບຄືນໄປຢູ່ບ້ານເພື່ອເຝົ້າເຮືອນ, ຖ້າມີເຫດຮ້າຍເກີດຂຶ້ນຫລືໄດ້ຍິນສຽງກອງຈຶ່ງໃຫ້ຕະລຸມບອນໄປຊ່ວຍຕໍ່ສູ້ ທັງນີ້ ກໍເພື່ອບໍ່ໃຫ້ປະເຮືອນຊານ ເບິ່ງແຍງສັດສາວາສິງ ແລະອີກຕົນຜູ້ມີລູກເຕົ້າເຂົ້າອອນ.

ເປັນເວລາ ໑໕ ມື້ ໑໕ ຄືນແລ້ວທີ່ຊາວເມືອງເຊບັ້ງໄຟຕໍ່ສູ້ຢູ່ໃນຫມາກຫົວໃຈຂອງສັດຕູ. ເຂົາບໍ່ໄດ້ຮັບຂ່າວຄາວຫຍັງຢູ່ທ່າແຂກ ແລະ ຢູ່ວຽງຈັນ, ຢູ່ທ່າແຂກຈັກວ່າຄຶກສະລາຍຕົວແລ້ວຫລືຍັງ ແລະ ລັດຖະບານຊີໄດ້ຮັບຂ່າວ

ແນວໃດບໍ ? ເມື່ອຈະຫາທາງອອກ ໄປສືບເບິ່ງສະພາບ ກໍ່ອອກບໍ່ໄດ້, ໄປບ່ອນໃດກໍ່ມີທະຫານອັດທາງໄວ້, ເມື່ອເປັນແນວນັ້ນ ໃຫ້ບ້ານສ່ວນຫນຶ່ງອິດເມື່ອຍ ຫງ່ວມ ເຫງົາ, ບັນບາກາດແຫ່ງການຕໍ່ສູ້ອັນຄຶກຄື້ນ ປະກົດວ່າຄ່ອຍໆ ຫລຸດຜ່ອນລົງເລັກນ້ອຍ.

ມື້ຫນຶ່ງ, ຊາວຫນຸ່ມເມືອງຊຽງໄຟ ໄດ້ໄປໂຮມຢູ່ໂຮງຮຽນມັດທະຍົມ ຫນອງບົກ ໃກ້ໆໂຮງການເມືອງ ຊາວຫນຸ່ມບົງ ແລະ ຊາຍພາກັນນັ່ງຟັງນາງພິດສະໄຫມໂອ້ລົມຫລາຍບັນຫາ, ນາງພະຍາຍາມຄະທິບາຍສະພາບການບ້ານເມືອງສູ່ຟັງ, ນາງເວົ້າເຖິງຈຸດປະສົງຂອງການຕໍ່ສູ້ ແລະ ເລົ່າໂທດກຳຂອງພວກປະຕິການ ຕາມທີ່ນາງໄດ້ຍິນບົງ ໄຊຍະກຸມມານ ເວົ້າສູ່ນາງຟັງກ່ອນນີ້ປະທ້ວງຢູ່ທ່າແຂກ. ນາງບົກເອົາເລື່ອງຫນຶ່ງຂຶ້ນມາເວົ້າວ່າ:

– ເປັນຫຍັງສອງສາມປີຫລັງນີ້ ຢູ່ໂຮງຮຽນຂອງເຮົາມີບາງຄົນ ສອບເສັງໄດ້ຄະແນນດີ ພັດບໍ່ໄດ້ຂຶ້ນຫ້ອງ ສ່ວນລູກຂອງອາດຍາເຈົ້ານາຍບາງຄົນຮຽນອ່ອນ ເສັງຕົກ ບາດພໍ່ແມ່ເອົາເງິນຍັດໃຫ້ຄູແລ້ວກໍ່ໄດ້ເປັນທີ ໑ ທີ ໒, ສ່ວນລູກຜູ້ທຸກ ເສັງໄດ້ຄະແນນດີ ກໍ່ຖືກຂ້າຊື່ອອກ, ອັນນັ້ນແຫລະ, ເຂົາເອີ້ນວ່າ "ຄວາມບໍ່ຍຸດຕິທຳຢູ່ໃນສັງຄົມ..." ເຮົາຢາກລົບ

ລ້າງສິ່ງເຫລົ່ານີ້ໄດ້ຕ້ອງຮ່ວມແຮງຮ່ວມໃຈກັນຕໍ່ສູ້ແລະ ຕໍ່ສູ້ຈົນເຖິງທີ່ສຸດ...

ນາງພິດສະໄຫມ ເປັນຄົນບ້ານີ້ອາຍຸອ່ອນ ພຽງແຕ່ ໑໕ ປີ ແຕ່ນາງເປັນຄົນມີພົບໄຫວ, ປັນຍາແຫລມ ຮັບຮູ້ງ່າຍ ແລະ ມີແວວສວຍງາມ ເວລານາງຍິ້ມ, ເມື່ອເວົ້າຈາໂອ້ລົມກັບຫມູ່ ມັກມີເຫດຜົນ ຢູ່ໃນຫ້ອງຮຽນ ບໍ່ວ່າຍິງ ຫລື ຊາຍໃຜໆກໍ່ຮັກແພງ ແລະ ນັບຖືນາງ.

ຕອນຄ່ຳຂອງມື້ນັ້ນ ຫລັງຈາກກິນແລງແລ້ວນັກຮຽນນັດທະຍົນຫນອງບົກພັດມາເຕົ້າໂຮມກັນອີກ. ເທື່ອນີ້ເຂົາແບ່ງວຽກໃຫ້ທຸກຄົນ ເພື່ອຊ່ວຍເຫລືອຊາວບ້ານ ເຮັດປະທ້ວງ, ນາງຈຸມີຫນ້າທີ່ແຜ່ເຂົ້ານຳຊາວບ້ານ ນາງຈຸສຳຫລັບເຄື່ອນໄຫວສືບເບິ່ງທະຫານ "ແມງເງົາ". ນາງພາກສ່ວນກໍ່ໄປເປັນແມ່ຄົວໃຫ້ຄະນະ ຄືນມື້ນັ້ນເຂົາພາກັນຂຽນຄຳຂວັນຈົນເດິກດື່ນ. ພໍຮອດຮຸ່ງເຊົ້າມື້ລຸນມາ ນັກຮຽນຍິງແລະ ຊາຍສົມທົບກັບຊາວຫນຸ່ມຫລາຍບ້ານ ໄດ້ພາກັນເຫນັງຕີງຂຶ້ນ, ເຂົາຖືປ້າຍຄຳຂວັນ ນັບເປັນຮ້ອຍໆ ປ້າຍພ້ອມກັບຕີຄ້ອງຕີກອງອອກສູ່ທາງຫລວງ ສຽງຮ້ອງໂຮຟົດສະຫນັ່ນບໍ່ຂາດ. ຊາວຫນຸ່ມສາມສີ່ຮ້ອຍຄົນໄດ້ແຫ່ຂະບວນເຂົ້າບ້ານນີ້ບ້ານຫນ້າ ແລ້ວເລາະລົງຕາມແຄມຂອງ

ບັງເອີນ ເຂົາພົບກັບທະຫານສາມຄົນ ປືນປູ່ສົ້ນຂົວຫາງ ບ້ານ ເຂົາພາກັນເຄື່ອນກຳລັງເຂົ້າໄປຊື້ໜ້າ ແລະ ຮ້ອງ ຂຶ້ນເປັນສຽງດຽວວ່າ :

– ຄັດຄ້ານທະຫານປະຕິການຂ້າປະຊາຊົນ !

– ກຸ່ມຂວາຈັດຈົ່ງຈິບຫາຍ !

– ສັນຕິພາບຈົ່ງຈະເລີນ !

– ພວກ ປຸ້ນ ຊາດ ຈົ່ງ ຮີບ ໜີ ຈາກ ບ້ານ ຂອງ ພວກ ເຮົາ !!!.

ເມື່ອຖືກເດັກນ້ອຍກວນສະໝອງ, ທະຫານສາມໂຕບໍ່ ສາມາດຫລຽວເບິ່ງຊື່ງໄດ້,ມີຫນໍ່ໜື່ງເປັນຄົນຕໍ່າເຕ້ຍພາຍ ປືນລ່າມໆເກືອບລາກດິນ,ຫນໍ່ຍ່າງກືກໆເຂົ້າມາເອົາມືຊີ້ໃສ່ ໜ້າພິດສະໄຫມທັງຈວາດຂຶ້ນວ່າ:

– ອີນີ້ ມັນແມ່ນລູກຂອງໃຜ ສັງມາຫົວແຂງແຕ່ ນ້ອຍແທ້ຣື !.

ນາງພິດສະໄຫມຟ້າວເວົ້າແດກໃສ່ໜ້າມັນວ່າ:

– ຄົນລາວຜູ້ຮັກຊາດມີແຕ່ຜູ້ຫົວແຂງທັງຫມົດ, ມີແຕ່ ຜູ້ໃດໄປຈ້າງກິນ ນ້ຳນ້ອຍສອກ ຂອງຈັກກະພັດ ແລະ ປະ ຕິ ການຄືພວກເຈົ້າຫັ້ນແລ້ວຈຶ່ງມີຫົວອອ່ນແອ !.

ທະຫານຮັບຈ້າງເກີດໂມໂຫຍົງປືນຂຶ້ນຟ້າ

– ພວກສູປາກຕາຍບໍ ?.

– ພວກເຈົ້າຊິເຮັດຫຍັງໃຫ້ພວກຂ້ອຍ? ສ່ຳປືນບໍ່ໄດ້ສະເທືອນດອກ!.

– ອີຫລີຫວະ ?.

– ເຊີນ! ພວກຂ້ອຍຕາຍຫມົດນີ້ກໍບໍ່ກິນແໜງ, ຕາຍເພື່ອຊາດ ເພື່ອປະຊາຊົນ ຍັງມີກຽດສູງກ່ວາໄປເປັນຂ້ອຍໃຫ້ຊາດອື່ນຄືພວກເຈົ້າ.

– ມັນຈອງຫອງແທ້ ອີນ້ອຍນີ້!.

ມັນຫລຸບເຂົ້າມາ ໝາຍຈະບີບຄໍພິດສະໄໝ ແຕ່ ຫມູ່ເພື່ອນນັບເປັນຮ້ອຍໆໄດ້ເຂົ້າມາອ້ອມເອົານາງໄວ້, ສຽງຄົນຮ້ອງໂຮປ້ອຍດ່າສະຫນັ່ນເນືອງ, ຂະບວນຊາວຫນຸ່ມຈັບໄມ້ຄ້ອນແກ່ວງເຂົ້າໄປໃສ່ອຶກກະທຶກຄຶກໂຄມ, ເວລານັ້ນກໍພໍດີຫນ່ວຍຮັກສາຄວາມສະຫງົບຂອງຄະນະປະທ້ວງໄປຮອດ, ເຂົາຈັບປືນແກັບປືນເພີງຕະລຸມບອນໄປຊ່ວຍຕໍ່ສູ້ພວກທະຫານສາມຄົນອີກສັ່ນຂວັນຫາຍກໍພ້ອມກັນປົບເຂົ້າປ່າ.

ນັບແຕ່ນີ້ນັ້ນມາແມ່ນຫນ້ອຍເທື່ອທີ່ຈະປະກົດເຫັນທະຫານອອກມາບ້ານ ໃນຕອນກາງເວັນ, ພວກເຂົາມັກລີ້ຢູ່ແຄມທົ່ງໄຮ່ທົ່ງນາ, ອັດທາງບໍ່ໃຫ້ຄົນອອກຈາກບ້ານນີ້ ໄປສູ່ບ້ານອື່ນ, ເມື່ອຮອດຍາມຕາເວັນລັບຂອບຟ້າ ແລ້ວ ຈິງ

ອອກມາເຄື່ອນໄຫວ. ສະພາບຢູ່ເຂດບ້ານຫນອງບົກປະກົດວ່າຍາມລົງເລັກນ້ອຍ, ແຕ່ຊາວບ້ານຊາວເມືອງກໍຍັງອອກຈາກບ້ານບໍ່ໄດ້, ບໍ່ມີຜູ້ໃດກ້າໄປໄຮ່ໄປນາຫລືໄປທຳມາຫາກິນຄືແຕ່ເກົ່າ, ຢູ່ສະຖານທີ່ງັບສິບຫຸກງືບຄິບຍັງໄປຂາຍເຂົ້າຫລາມ, ປີ້ງໄກ່, ໝາກໄມ້ ແລະ ເຄື່ອງດື່ມອັ່ງອໍ່ເຕັມເດີ່ນຫຍ້າ, ພວກນ້ອງນ້ອຍນັກຮຽນໄປນັ່ງອ້ອມເປັນວົງມົນເປັນຈຸເປັນຫມູ່ແລ້ວເລົ່າເລື່ອງ, ຫລິ້ນຫມາກດ້າມ, ຫລິ້ນຫມາກເສືອກິນຫມູ ແລະ ຫັດຮ້ອງເພງແຊວໆ, ບົດເພງທີ່ມັກຕິດອົກຕິດໃຈກ່ວາຫມູ່ ກໍແມ່ນ "ແດນແຫ່ງອິດສະຫລະ, ເພງນົກສັນຕິພາບ, ເຂົາມັກສະເຫນີໃຫ້ພິດສະໄໝອອກມາຮ້ອງດ່ຽວເລື້ອຍໆ, ຈຸດພິເສດຂອງນາງແມ່ນສຽງດີ, ຮ້ອງມ່ວນ, ຫມູ່ຄູ່ເຂົາເຈົ້າເອີ້ນນາງວ່ານັກຮ້ອງສຽງທອງຫລືເອີ້ນວ່າສຽງຫວານເມືອງເຊບັ້ງໄຟພຸ້ນລະ! ຄັນນາງຫາກອອກເວທີຄັ້ງໃດເດັກນ້ອຍໃນບ້ານມັກຫລັ່ງໄຫລມາຟັງຈົນຄັບຄັ່ງໄປທົ່ວເດີ່ນຫຍ້າ.

ນີ້ຫນຶ່ງວິທະຍຸກະຈາຍສຽງຂອງຝ່າຍປະເທດລາວປະກາດວ່າ: ຜູ້ຕາງຫນ້າລັດຖະບານໂດຍແມ່ນ ຄ–ປ–ສ ສອງຝ່າຍຊຶ່ງຈະເປັນຜູ້ເຈລະຈາ ແກ້ໄຂບັນຫາຢູ່ຫນອງບົກໄດ້ເດີນທາງມາທ່າແຂກແລ້ວ, ເມື່ອຮູ້ຂ່າວນີ້ຊາວເມືອງເຊບັ້ງ

ໄຟໄໝ້ໆກໍຮ້ອງໄຊໂຍ ແລະ ຕົບມືພືຜ້າ. ເຂົາເຊື່ອໝັ້ນຢູ່ໃນ ໃຈວ່າບໍ່ມື້ໃດກໍ່ມື້ໜຶ່ງຂ້າງໜ້າເຂົາຈະໄດ້ພົບໜ້າພໍ່ຕາ ພວກເພິ່ນຢູ່ເທິງດິນແດນໜອງບົກຢ່າງມີໄຊ. ຄວາມຈິງ ກໍເປັນເວລາຊາວເອັດມື້ຊາວເອັດຄືນແລ້ວຈຶ່ງຮູ້ຂ່າວນີ້, ປູ່ ວຽງຈັນບັບແຕ່ມື້ເຈົ້າແຂວງບົວໂຮມ ລົງໄປຮອດທ່າແຂກ ປະກົດວ່າບໍ່ໄດ້ຮັບຂ່າວຄາວຫຍັງກ່ຽວກັບໜອງບົກ ແລະ ທ່າແຂກເລີຍ, ກອງປະຊຸມຄະນະລັດຖະບານໄດ້ເປີດຂຶ້ນ ຫລາຍຄັ້ງ, ຄັ້ງໃດກໍ່ຕົກລົງວ່າໃຫ້ ຄ-ປ-ສ ສອງຝ່າຍ ເປັນຜູ້ແກ້ໄຂ, ເມື່ອ ຄ-ປ-ສ ໄດ້ຮັບການມອບໝາຍຈາກ ລັດຖະບານຝ່າຍວຽງຈັນມັກອ້າງເຫດອ້າງຜົນວ່າ:

ທ່າແຂກເປັນເຂດກວດກາຂອງຝ່າຍວຽງຈັນ, ຝ່າຍ ບັນດາກໍາລັງຮັກຊາດບໍ່ມີສິດເຂົ້າຫຍຸ້ງກ່ຽວ.

ເຂົາຫາທຸກວິທີ ເພື່ອປັບປັ້ງ ແລະ ປ່ອຍໂອກາດໃຫ້ ແກ່ກໍາລັງທະຫານປິດລ້ອມ ປາບປາມປະຊາຊົນຜູ້ເປັນທໍາ ທຸກອຸບາຍລາຍລ່ຽມ ທີ່ຂັດຂວາງຂອງເຂົາ ໄດ້ຖືກຝ່າຍ ບັນດາກໍາລັງຮັກຊາດໂຕ້ຖຽງເປີດແປ, ເມື່ອປົກປິດໃຈດໍາ ອໍາມະຫິດໄວ້ບໍ່ໄດ້ ແລະ ຖືກທາງສຽງ ຂອງຊາວລາວຜູ້ ຮັກຊາດຄັດຄ້ານກ່າວປະນາມຢ່າງກ້ວາງຂວາງ ເຂົາຈຶ່ງ ແຕ່ງໃຫ້ພັນເອກລຸນ ສີສຸບິນ ໂຫລະສັບໄປຫາທ່ານເພົ້າ

ບຸນນະພົນ ຄ-ປ-ສ ຝ່າຍບັນດາກຳລັງຮັກຊາດ ແລ້ວເດີນ ທາງຈາກວຽງຈັນໄປທ່າແຂກຢ່າງຮີບດ່ວນທີ່ສຸດ.

ຫລັງຈາກເຮືອບິນເອເລກົບສີຂຽວ ຕິດເຄື່ອງຫມາຍ ຄ-ປ-ສ ລົງຈອດເດີນທາງໃຕ້ຂອງເມືອງບໍ່ພໍສິບນາທີ ລົດຈິບທະຫານກໍມາຕ້ອນແລ້ວມຸ່ງຫນ້າເຂົ້າສູ່ຕົວເມືອງ.

ພັກຜ່ອນຢູ່ໂຮງແຮມ "ສຸກສະບາຍ" ບໍ່ຮອດສິບຫ້ານາ ທີ ທ່ານເພົ້າ ບຸນນະພົນ ກໍຊວນເອົາພັນເອກລຸນ ສີສຸບົນ ໄປໂຮງການແຂວງໂລດ, ເມື່ອເຈົ້າແຂວງບົວໂຮມ ພ້ອມ ດ້ວຍນາຍທະຫານຊັ້ນສູງຫລາຍເຫັນ ຄ-ປ-ສ ສອງຝ່າຍ ກໍສະແດງທ່າທີປະຈົບປະແຈງອອກມາຕ້ອນຮັບ ແລະ ເຊີນເຂົ້າຫ້ອງ, ຫລັງຈາກສຳພັດມື ແລະ ດື່ມນ້ຳນຳກັນ ແລ້ວ ທ່ານເພົ້າ ບຸນນະພົນ ໄດ້ຍົກຄຳສັ່ງຂອງລັດຖະບານ ໃຫ້ເຂົາຫັງເວົ້າຂຶ້ນວ່າ:

- ພວກຂ້າພະເຈົ້າມານີ້ ແມ່ນປະຕິບັດຕາມຄຳສັ່ງ ຂອງນາຍົກເພື່ອກຳສະພາບ ແລະ ພ້ອມກັບພວກທ່ານ ແກ້ໄຂບັນຫາຕ່າງໆໂດຍສັນຕິ ແລ້ວຈະນຳເມືອລາຍງານ ຕໍ່ລັດຖະບານ, ຫວັງວ່າພວກທ່ານຈະຮ່ວມໄມ້ຮ່ວມມືນຳ ດ້ວຍ...

ຫລັງຈາກເວົ້າສິ້ນສຸດລົງ, ເຈົ້າແຂວງບົວໂຮມຖອນໃຈ

ບາວແລ້ວເອົາຫລັງເອື້ອບລົງໃສ່ກ້າວອີ້ ແລະ ຊຶກຫົວເຂົ້າຂຶ້ນປອງກັນ ບຶດຫນຶ່ງຈຶ່ງເວົ້າວ່າ:

– ເລື່ອງລາວເກີດຂຶ້ນນັ້ນ ພວກຂ້າພະເຈົ້າ ແກ້ໄຂຫມົດແລ້ວ, ສ່ວນທີ່ຍັງຄົງຄ້າງເລັກໆ ນ້ອຍໆ ພວກຂ້າ

໓) ຢູ່ທີ່ສະໜາມບິນທ່າແຂກ ຄ.ປ.ສ ສອງຝ່າຍໄດ້ເດີນທາງມາເຖິງເພື່ອ
ຈະໄປເຈລະຈາກັບຄະນະປະທ້ວງ

ພະເຈົ້າຈະສືບຕໍ່ແກ້ໄຂເອງ, ເພາະວ່າຄຳສັ່ງຂອງນາຍົກຢູ່ນຳຂ້າພະເຈົ້າຍັງໃຊ້ໄດ້ຢູ່, ຕາບໃດຫາກບໍ່ຖືກລົບລ້າງຂ້ອບບໍ່ໃຫ້ໃຜມາກ່ຽວເດັດຂາດ...

ທ່ານເພົ້າ ບຸນນະພົນ ເວົ້າຊ້ອນຂຶ້ນອີກວ່າ:

- ຖ້າໄດ້ແກ້ໄຂແລ້ວ ກໍເປັນການດີ, ດຽວນີ້ໃຫ້ພວກທ່ານລາຍງານໃຫ້ພວກຂ້າພະເຈົ້າໄດ້ຊາບ ໂດຍມີຄະນະປະທ້ວງເຂົ້າຟັງນໍາ, ພວກຂ້າພະເຈົ້າ ກໍໄດ້ຮັບສິດຈາກນາຍົກລັດຖະມົນຕີ ມາເຮັດໜ້າທີ່ຢູ່ນີ້, ມີຫຍັງພວກທ່ານຈົ່ງຮີບຮ້ອນລາຍງານມາ...

- ເລື່ອງລາຍງານນີ້ກໍໄດ້ຢູ່, ແຕ່ວ່າຫົວໜ້າ ແລະ ຄະນະປະທ້ວງ ໑໑ ຄົນ ໄດ້ສົ່ງໄປສະໜັບສະໜູນເຂດແລ້ວ, ສ່ວນ ໒໕ ຄົນຮັກສາໄວ້ຢູ່ນີ້ບໍ່ແມ່ນຄະນະປະທ້ວງ.

- ເອີ! ຄັນຊັ້ນເອົາ ໒໕ ຄົນມາຟັງນໍາກໍໄດ້.

ເຈົ້າແຂວງບົວໂຮມ ເຮັດໜ້າຫຍຸ້ງ ຄິ້ວສົນ ເຂົ້າເຫິງເຕີບແລ້ວຈຶ່ງເວົ້າວ່າ :

- ເລື່ອງນີ້ໃຫ້ພວກຂ້າພະເຈົ້າ ຂໍເວລາຄົ້ນຄວ້າກ່ອນສາ, ກະວ່າມື້ໜ້າຈະຕອບໃຫ້ຮູ້...

ການປຶກສາຫາລືກັນບໍ່ໄດ້ຜົນ, ແຕ່ລະບັນຫາລ້ວນແຕ່ຖືກຝ່າຍວຽງຈັນບິດບ້ຽວ ແລະ ຫລີກລ່ຽງແບບມະລຸ້ມມະລ້ວຍ; ໃນມື້ນັ້ນທັງສອງຝ່າຍຈໍາຕ້ອງເລີກລາເມືອ, ສະພາບເມືອງທ່າແຂກ ຍັງ ສັບ ສົນ ວຸ່ນ ວາຍ ຢູ່, ທ່ານເພົ້າບຸນນະຜົນເອງກໍບໍ່ຮູ້ວ່າທ່າແຂກພວມເປັນຈັ່ງໃດ ! ມື້ໜ້າເຂົາຈະເວົ້າແນວໃດ ແລະ ຈະແກ້ໄຂໄດ້ຫຍັງແດ່ ? ຄວາມ

ຄອງຄອຍໄດ້ມາເຖິງ, ຮຸ່ງເຊົ້ານີ້ລຸນມາເວລາ ໗ ໂມງຊຶ່ງ ເປັນໂມງນັດຫລັງຈາກພົບກັບປູ່ທີ່ໂຮງການແຂວງ ເຈົ້າແຂວງບົວໂຮມ ໄດ້ຕອບໃຫ້ຮູ້ວ່າ . ສ່ວນຊາວຫ້າຄົນນັ້ນ ໄດ້ປ່ອຍໃຫ້ເຂົາເຈົ້າ ກັບຄືນເມືອ ຫາຄອບຄົວ ຫມົດແລ້ວ... ເມື່ອສະພາບເປັນແນວນັ້ນ ທ່ານເພົ້າ ບຸນນະພົນ ໄດ້ສະເຫນີໄປເບິ່ງສະພາບປູ່ຫນອງບົກ (ເມືອງເຊບັ້ງໄຟ) ແຕ່ກໍ່ຖືກເຂົາສະກັດກັ້ນ, ເຂົາເວົ້າວ່າ: ໄປບໍ່ໄດ້ບໍ່ມີຄວາມປອດໄພ ແລະ ກໍບໍ່ມີເລື່ອງຫຍັງແລ້ວ, ດຽວນີ້ປະຊາຊົນຊາວໄຮ່ນາພາກັນທຳມາຫາກິນສະດວກສະບາຍຄືດັ່ງແຕ່ເກົ່າແຕ່ຫລັງ...

x x

x

* **ຢູ່** ຫນອງບົກ, ເມື່ອໄດ້ຮັບຂ່າວວ່າ ຄ-ປ-ສ ລົງມາຮອດທ່າແຂກຜູ້ໃດກໍ່ຄອງຄ່ອຍ, ຄວາມຄອງຄອຍ ແລະໃຝ່ຝັນຢູ່ໃນດວງໃຈໄດ້ຜ່ານພົ້ນໄປຫລາຍມື້ແລ້ວ ແຕ່ບໍ່ສາມາດ ກາຍເປັນຄວາມຈິງຂຶ້ນມາໄດ້, ຫມົດມື້ນີ້ຕໍ່ໃສ່ມື້ອື່ນ, ຫມົດມື້ອື່ນຕໍ່ໃສ່ມື້ຫນ້າເລື້ອຍໆ ບັງບໍ່ເຫັນພວກເພິ່ນລົງມາ, ຊາວເມືອງເຊບັ້ງໄຟເມື່ອຄິດເຖິງເລື່ອງນີ້ແລ້ວ

ໃຍໆ ກໍຮ້ອນນິກຕຶກໃຈວ່າດ້ວຍເຫດໃດພວກເພິ່ນຈຶ່ງນິດ ຫມີ່ຢູ່, ຢ່າງໃດກໍຕາມບໍ່ເຫັນພວກເພິ່ນລົງມາ, ກາບຄົບ ງັນ, ຫລົບມ່ວນຊື່ນລື່ນເລີງ ແລະ ຮັກສາສິບຜູ້ເສຍຊີວິດໄວ້ ກໍຍັງເຮັດດັ່ງເດີມຢູ່, ດົກນາງຕອບທ່ຽງຄືນ ຂອງ ນີ້ ຫນຶ່ງ ພວກບາງພິດສະໄຫມຈັກໄປຫລົບແຈໃດມາກໍບໍ່ຮູ້, ເຂົາເອົາ ສາດນາປູໃສ່ຂ້າງທີ່ບສິບແລ້ວສີ່ຫ້າຄົນ ພາກັນແອ່ວໃຫ້ ຈາບບິນເລົ້າເລື່ອງສູ່ຟັງ, ເຂົາບັ້ງອ້ອມເປັນວົງມົນແລ້ວຊູຊີ ຢູ່ບໍ່ແລ້ວບໍ່ຢ່າ. ຈາບບິນຖາມຂຶ້ນວ່າ:

– ພວກຫລານມັກຟັງເລື່ອງໃດ ?.

– ມັກຟັງເລື່ອງບາວ !

– ມັກຟັງເລື່ອງຜີ !

– ມັກຟັງເລື່ອງຕໍ່ສູ້ !.

– ມັກຟັງເລື່ອງຕີຝະລັ່ງ ! ແຕ່ລະຄົນມັກຟັງເລື່ອງ ຕ່າງກັນ.

– ເອີ ! ໄດ້ແລ້ວລຸງຊິເລົ່າເລື່ອງບາວໆສູ່ຟັງເນີ !

ພວກບາງພິດສະໄຫມ ພາກັນປິ່ນຫນ້າເຂົ້າຫາເພິ່ນ, ຫລັງຈາກດູດຢາ ສອງສາມປົກ ແລ້ວ ເພິ່ນເລີ່ມຕົ້ນເລົ່າ ເລື່ອງຫນຶ່ງວ່າ:

– ວັນທີ ໒໑ ມີນາ ໑໙໔ປີ, ສະຫນາມຮົບຢູ່ເມືອງທ່າ

ແຂກພວມກ້າວຂຶ້ນສູ່ຍອດສູງ, ທະຫານຝະລັ່ງ, ທະຫານລາວຂາຍຊາດແລະທະຫານບໍລິວານປະເທດຕ່າງໆ ພວມເປີດບັ້ນບຸກໂຈມຕີເຂົ້າທ່າແຂກຢ່າງຮຸນແຮງ ແລະ ຟີດເດືອດທີ່ສຸດ, ພວກເຂົາໃຊ້ກຳລັງທະຫານລາບ ບຸກເຂົ້າພາຍຫນ້າກັນ, ເອົາປືນໃຫຍ່ຍິງສົມທົບໃສ່ບໍ່ຂາດ, ຢູ່ເທິງຟ້າກໍມີຍົນຂົນເອົາຫນາກແຕກມາຖິ້ມໃສ່ລຽນຕິດ. ເວລານັ້ນ ກຳລັງທະຫານ ຂອງຝ່າຍກຳລັງທີ່ຮັກຊາດ ກໍໄດ້ຕ້ານຄືນຢ່າງອົງອາດກ້າຫານ. ເຂົາເຈົ້າໄດ້ຂຸດຂຸມຄອງ ແລະແຈກຢາຍກຳລັງ ອ້ອມເມືອງທ່າແຂກສາມຊັ້ນ, ເມື່ອທະຫານຝະລັ່ງ ເຄື່ອນທັບເຂົ້າມາ ກໍຖືກຕີຊ ໃຫ້ຖອຍອອກໄປຫຼາຍເທື່ອ.

ການສູ້ຮົບໄດ້ດຳເນີນໄປຫລາຍມື້ຫລາຍຄືນແລ້ວ ກຳລັງທະຫານຂອງບັນດາກຳລັງຮັກຊາດ ກໍມ່ຈະຫມົດລູກປືນ, ເຮືອບິນຖິ້ມລະເບີດຂອງຝະລັ່ງນັບເປັນສິບໆ ລຳຍັງບິນເຂົ້າມາຊ່ວຍຫນູນບໍ່ຂາດໄລຍະ, ຢູ່ນອກເມືອງ ເຂົາຍັງຂົນເອົາທະຫານມາໂດດຈ້ອງລົງຫລາຍກອງພັນແລ້ວປິດລ້ອມເມືອງທ່າແຂກໄວ້ ຢ່າງແຫນ້ນຫນາ, ເມື່ອສະພາບເປັນແນວນັ້ນ, ຊາວເມືອງທ່າແຂກບໍ່ວ່າຄົນລາວ, ຄົນຫວຽດນາມ, ຈີນຕ່າງດ້າວໄດ້ສົ່ງລູກຫລານຂອງຕົນ ຈັບປືນໄປສູ້

ຣົບ ແລະ ຕະລຸມບອນໄປລ່າລຽງລູກປືນ, ຂົນສະບຽງອາ
ຫານໃຫ້ທະຫານຢູ່ສະໜາມຣົບເປັນອັນໆຢູ່. ເວລານັ້ນບໍ່
ຈັກທະຫານ, ບໍ່ຈັກປະຊາຊົນສັບສົນກັນທີ່ສຸດ, ມີຜູ້ຖືກ
ບາດເຈັບ, ມີຜູ້ເສັຍຊີວິດຕະຫລອດທຸກໆວິນາທີ.

ຄາວນັ້ນເຖົ້າຊຽງຂຽນເຮົານີ້ຍັງເປັນໂສດຢູ່, ຕາມເຖົ້າ
ເລົ່າສູ່ຟັງວ່າ ມື້ໜຶ່ງຖືກໄປລ່າລຽງລູກປືນໃຫ້ສະໜາມ
ຣົບດ້ານເໜືອ. ຄ້ອມພໍດີເວລາທະຫານຝະລັ່ງຖືກຕີຖອຍ
ອີກ, ເຖົ້າຊຽງຂຽນແບກແກັດລູກປືນ ແລ່ນຜ່ານໄປໃກ້ຈີ
ຮອດສະໜາມຣົບຊັ້ນທີ່ສາມ. ບັງເອີນ ມີເຮືອບິນຖິ້ມລະ
ເບີດຝູງໜຶ່ງເຈີດລົງມາຕ່ຳພຽງປາຍໄມ້, ມັນແຜດສຽງ
ອອກມາຂົ້ນອູ່ຄືຟ້າຊີປົ້ນດິນຊີຫລຸບລົງທັນທີທັນໃດ, ຝູງ
ທຳອິດບິນກາຍໄປຕໍ່ມາບໍ່ຮອດນາທີ ຝູງທີ່ສອງພັດເຈີດມາ
ອີກ. ມັນໂຄ້ງຫົວຂຶ້ນສູງໆ ແລ້ວປັກຫົວລົງມາຕ່ຳໆ ກັນ,
ບານນັ້ນ ປະກົດໄດ້ຍິນສຽງແຊັດ ໆ ຢູ່ເທິງເວຫາເປັນໜ້າ
ວິຕົກ, ຄວັນດຳພຸ່ງອອກຈາກຫາງຍົນຕວດໆ, ບໍ່ພໍຄາວລະ
ເບີດກໍ່ແຕກມາບໆ ຂຶ້ນອ້ອມຂ້າງອ້ອມແອວ, ຄວັນມືດກຸບ
ທົບ ເຖົ້າຊຽງຂຽນລົ້ມພຸບລົງ, ຍ້ອນຖືກເຈັບສາຫັດຢູ່ກົກ
ຂາ ແລະ ເມົາຄວັນລະເບີດເຮັດໃຫ້ເພີນໝົດສະຕິໄປ, ເວ
ລານັ້ນທົບລູກປືນຍັງຍອງຢູ່ເທິງບ່າໄຫລ່ເບື້ອງຂວາ, ຂີ້ຝຸ່ນ

ຂື້ນປົນຖົມທົ່ວຕົນໂຕ. ການສູ້ຣົບໄດ້ກ້າວເຂົ້າສູ່ຄວາມດຸເດືອດໃນບັ້ນທ້າຍ ເນື່ອງຈາກເຫລັກຫລາຍກວ່າຖານທະຫານຝະລັ່ງຈຶ່ງເຂົ້າຍຶດເມືອງທ່າແຂກໄດ້.

ນັບວ່າເປັນເວລາຫລາຍຊົ່ວໂມງ ເຖົ້າຊຽງຂຽນທີ່ນອນສະຫລົບຢູ່ຈຶ່ງຄ່ອຍໆຟື້ນສະຕິຄືນມາ, ເພິ່ນຮູ້ສຶກປວດຂາເບື້ອງຊ້າຍ, ເພິ່ນເອົາມືມາລູບເບິ່ງມີເຫັນເລືອດຕິດແດງເຕັມມື" ຕາຍ! ຖືກບາດເຈັບ" ເພິ່ນຕົກໃຈບໍ່ຮູ້ໄດ້ຮ້ເຫນືອວ່າເປັນຫຍັງຈຶ່ງມານອນຢູ່ສວນກ້ວຍນີ້, ເພິ່ນຕັ້ງໃຈ ຈະຜຸດລຸກຂື້ນແຕ່ປະກົດວ່າມຶນເມົາໄປທົ່ວຮ່າງກາຍ ແລະ ຮູ້ສຶກອິດເມື່ອຍ ເພິ່ນບໍ່ສາມາດລຸກຂຶ້ນໄດ້. ໃນເວລາເພິ່ນພວມລັ້ງເລໃຈຢູ່ນັ້ນ ບັງເອີນມີຫລານສາວນ້ອຍຄົນຫນຶ່ງຍ່າງເຂົ້າມາຫາ. ນາງນັ້ນຫົວຕົນເຂົ້າ ແລະ ເຕົ້ານ້ຳນ້ອຍມານອບໃຫ້ ແລະ ນາງເລົ້າເລື່ອງສູ່ຟັງວ່າ : ໃນເວລາສູ້ຣົບກັນ ຫລານ ນ້ອຍ ຄົນ ນັ້ນ ພ້ອມ ກັບແມ່ກໍໄດ້ໄປສົ່ງເຂົ້າໃຫ້ທະຫານຢູ່ສະຫນາມຮົບດ້ານເຫນືອ. ນົບເສັ້ນທາງໄປໄດ້ພົບເຫັນເພິ່ນພວມນອນຂວ້ຳຫນ້າຫມູບໃສ່ດິນ ແຕ່ຫົວໃຈຍັງເຕັ້ນຢູ່, ນາງນ້ອຍພ້ອມກັບແມ່ຈຶ່ງຫາມເອົາມາເຊື່ອງໄວ້ຢູ່ທີ່ນັ້ນ...

ຫລັງຈາກຝະລັ່ງຄວບຄຸມ ເມືອງທ່າແຂກ ໄວ້ໄດ້ແລ້ວ

ພວກເຂົາໄດ້ສັ່ງໃຫ້ຊາວເມືອງທ່າແຂກ ຫາມເອົາຄົນເຈັບຄົນຕາຍໄປຖິ້ມລົງນ້ຳຂອງ, ເມື່ອຂົນອອກຫມົດແລ້ວ ທະຫານຝະລັ່ງໄດ້ສັ່ງວ່າ: "ດຽວນີ້ສົງຄາມສິ້ນສຸດລົງແລ້ວໃຫ້ພວກເຈົ້າໄປອາບນ້ຳ ລ້າງເລືອດຄົນ ແລະ ທຳຄວາມສະອາດຢູ່ແຄມຂອງພຸ້ນ..", ເມື່ອປະຊາຊົນລົງໄປຮອດນ້ຳຂອງແລ້ວ ພວກເຂົາໄດ້ຕັ້ງປືນກົນຢູ່ຕາຝັ່ງຍິງກວາດໃສ່ຊາວເມືອງທ່າແຂກ ສ່ວນເດັກນ້ອຍເຂົາກໍຫອບເອົາຍັດໃສ່ກະເປົາປ່ານຖິ້ມລົງນ້ຳຂອງ. ຈຳນວນຫນຶ່ງກໍໃສ່ຄົກມອງຕຳແລະ ຖິ້ມໃສ່ກອງໄຟຊຶ່ງໄດ້ເຮັດໃຫ້ດິນແດນເມືອງທ່າແຂກແລະ ລຳແມ່ນ້ຳຂອງເຕັມແຕ່ເລືອດ ຈົນກາຍເປັນສີແດງຊ້ຳ... ນັບແຕ່ມື້ນັ້ນມາເຖົ້າຊຽງຂຽນເລີຍບໍ່ຮູ້ຂ່າວຫຍັງຈາກຫລານນ້ອຍຄົນນັ້ນອີກ, ເພິ່ນຍັງຈື່ຊື່ນາງນ້ອຍວ່າ:

"ນາງຮວາ" ທໍ່ນັ້ນ.

ເລົາມາຮອດນີ້ ຈານນົນຢຸດຢູ່ບຶດຫນຶ່ງ ພວກນາງພິດສະໄຫມ ແລະ ຫມູ່ເພື່ອນໃຜກໍຍ້ອງວ່າເລື່ອງນີ້ມ່ວນກວ່າທຸກໆເລື່ອງທີ່ເຄີຍຟັງຜ່ານມາ ເຂົາພາກັນຖອນໃຈຍາວໆຮູດຫນຶ່ງເອົາແຮງແລ້ວຖາມວ່າ:

– ຕໍ່ໄປເດ່! ເລື່ອງນັ້ນເປັນແນວໃດ?.

– ເອົາລະມື້ນີ້ເລົາທໍ່ນີ້ສາກ່ອນ, ພວກຫລານໄປພັກ

ຜ່ອນສາ ! ນີ້ຫນ້າຈິງເລົາດໍ່... ຈາບບິນເວົ້າສຸດເຂົາກໍພາ
ແລ່ນອອກໄປຫລິ້ນແລະບັງຈົມເສບດາບປູ່.

x x
x

* ວັນເວລາຜ່ານພົ້ນໄປ ປຽບດັ່ງກະແສນ້ຳພອນ
ໄຫລ, ສາມສິບນີ້ສາມສິບຄືນແລ້ວທີ່ຊາວເມືອງເຊບັ້ງໄຟມີ
ຊີວິດຢູ່ໃນອົງມືຂອງພວກຂຸນເສິກ, ຄວາມຄອງຄອຍປາກ
ພົບຫນ້າພໍ້ຕາ ຄ–ປ–ສ ລົງມານັ້ນ ມາຮອດປານນີ້ຍັງມິດ
ຈີ່ລີ່ຢູ່, ຊາວໄຮ່ຊາວນາບາງຄົນເກີດມີແນວຄິດ ນ້ອຍໃຈ,
ຫງ່ອມເຫງົາ ເຂົາຄິດວ່າຈັກຊິຮັກສາສິບຂອງຜູ້ເສບຊີວິດ
ໄວ້ຮອດນີ້ໃດ ເພາະວ່າລຸກຂຶ້ນຕໍ່ສູ້ໄດ້ ໑ ເດືອນແລ້ວຍັງບໍ່
ທັນມີໂອກາດໃດໄດ້ຮັບຂ່າວຄາວທີ່ພາໃຫ້ພາກພູມໃຈ ຈັກ
ເທື່ອ, ຊາວເມືອງເຊບັ້ງໄຟພາກັນນັ່ງຄຶດນອນຄິດ, ຄຶດປາກ
ເຫັນຫນ້າ ຄ–ປ–ສ ແທ້ໆ, ຈັກວ່າເພິ່ນຈະນຸ່ງເຄື່ອງແບບ
ໃດ, ໃສ່ເຄື່ອງຫມາຍແນວໃດ, ຈິດໃຈຂອງສອງຝ່າຍຈະຄື
ກັນຫລືບໍ່ ?... ຟັງວິທະຍຸຝ່າຍປະເທດລາວກໍຮູ້ພຽງແຕ່ວ່າ
ລົງມາຮອດທ່າແຂກແລ້ວ ຍ້ອນມີຄົນກຸ່ມຫນຶ່ງຂັດຂວາງ
ຈຶ່ງເຮັດໃຫ້ພວກເພິ່ນປະສົບຄວາມຫຍຸ້ງຍາກ, ຈາກນັ້ນ

ນ່າຄືບໍ່ມີຂ່າວຄືບໜ້າອີກ.

ມື້ໜຶ່ງ ຕອນເຊົ້າປະມານເຈັດແປດໂມງ, ຢູ່ບົນທ້ອງຟ້າທິດເໜືອປະກົດມີຍົນເອເລກົບແຕສີຂຽວລຳໜຶ່ງ ບິນມຸ່ງໜ້າເຂົ້າມາສູ່ໜອງບົກ, ເວລານັ້ນໄພງກໍ່ທ້ອງ ຂຶ້ນ ແລະ ເອີ້ນກັນອອກມາເບິ່ງເຂົາຕິດຕາມເບິ່ງຍົນລຳນັ້ນບໍ່ຂາດໄລຍະ, ຊາວເມືອງເຊບັ້ງໄຟຢູ່ກາງເດີ່ນພາກັນໂບກມືໃສ່ ແລະ ບາງຄົນຍັງຊື່ມໃສ່ຫູກັນວ່າ: "ຄ-ປ-ສ" ລົງມາແລ້ວ, ເມື່ອຍົນບິນເຂົ້າມາຮອດໜອງບົກ ມັນເວີ້ນໄປມາຫລາຍຮອບຜິດປົກກະຕິ, ເຂົາຄອງຄອຍໃຫ້ຍົນບິນລົງສູ່ເດີ່ນກໍ່ບໍ່ລົງຈັກເທື່ອ, ໃນຂະນະທີ່ຄົນພວມສົງໃສ ຢູ່ ນັ້ນ, ເຮືອບິນເອເລກົບໄດ້ຫວ່ານເຈັ້ຍຂາວປ່ຽງນ້ອຍສ່ຳຝາ ມືລົງມາປິວຊະຊາຍຈົນເຕັມເດີ່ນຫຍ້າ, ເມື່ອຮູ້ຈັກບໍ່ແມ່ນເຮືອບິນຂອງ ຄ-ປ-ສ, ບາງພິດສະໄໝຈຶ່ງແລ່ນອອກມາຈາກຣົ່ມໄມ້ແລ້ວເອີ້ນຫາໝູ່ວ່າ:

– ໝູ່ເຮີຍ! ຮີບມາຊ່ວຍກັນເກັບໃບປິວແດ່! ມາໄວ, ມາໄວໆເດີ້!.

ເພື່ອນນັກຮຽນ ແລະເດັກນ້ອຍໃນບ້ານພ້ອມກັນຫຸ້ມໄປເກັບເອົາໃບປິວມາກອງໄວ້, ເມື່ອຂະບວນນັກ ຮຽນ ພວມຍາດກັນແຊວງ ຊຸມຜູ້ໃຫຍ່ຢູ່ກາງເດີ່ນກໍໄດ້ແຂ່ງຂັນກັນໄປ

ເກືອບເອົາມາຈູດຖິ້ມຈົນຫມົດ, ຍັງເຫລືອແຕ່ໃບດຽວບາງ ພິດສະໄຫມກໍາແລ່ນໄປຫາຈານນິນ ປູ່ ຂ້າງ ກົກ ບົກ ແຄມ ທົ່ງນາ.

– ລຸງເບິ່ງແມ້ໃບປີວ ?

– ຣື, ມັນຊຽນວ່າແນວໃດ ?

– ເວົ້າຫລາຍເລື່ອງລະບໍ ?

– ເອີ ! ອ່ານເບິ່ງດູຫັ້ນ !:

ຈານນິນຫາກໍມາຈາກບ້ານເຫນືອກໍຮູ້ແລ້ວ ແຕ່ ເພື່ອ ເອົາໃຈນາງເພິ່ນຈຶ່ງບອກໃຫ້ນາງອ່ານເບິ່ງອີກ. ນາງເລີ່ມ ຕົ້ນອ່ານວ່າ:

"ຄໍາສັ່ງທາງລາຊະການ ! ພວກຂ້າພະເຈົ້າເສນາທິ ການກອງທັບພາກສາມຕົກລົງເຕືອນໃຫ້ຮູ້ວ່າ ຄັນ ພວກ ເຈົ້າປາກນີ້ຊີວິດປູ່ ໃຫ້ເອົາຫີບສົບຂອງຄົນຕາຍໄປຖິ້ມສາ ແລະ ຈຶ່ງປຸດຕິການເຣັດປະທ້ວງພວກເຮົາພ້ອມແລ້ວຈະ ອະໄພໂທດໃຫ້... ກົງກັນຂ້າມ ຖ້າພວກເຈົ້າຫາກຍັງດື້ ດ້ານຮ້ອງໂຮປູ່ຕໍ່ໄປແລ້ວ ເຮືອນຊານບ້ານຊ່ອງຂອງ ພວກ ເຈົ້າຈະກາຍເປັນເຖົ່າຖ່ານ ແລະ ພວກເຈົ້າເອງຈະໄດ້ຟູມ ເລືອດແນ່ນອນ..."

* ເສນາທິການກອງທັບພາກສາມ.

ຫລັງຈາກປະສົບກັບການຂົ່ມຂູ່ດ້ວຍໃບປິວ, ຂະບວນຕໍ່ສູ້ຂອງຊາວເມືອງເຊບັ້ງໄຟຍິ່ງມີສະຕິລະວັງຕົວ ແລະ ປຸ້ນລຸນສາມັກຄີກັບຫມັ້ນຫນຽວກວ່າເກົ່າ. ບໍ່ວ່າຍາມໃດຄະນະປະຫົວງ ພວກເພິ່ນກໍ່ໄດ້ໂອ້ລົມອົບອຸ່ນປະຊາຊົນເລື້ອຍໆ. ເຖິງວ່າເວລາຜ່ານພົ້ນໄປເດືອນປາຍແລ້ວກໍ່ຕາມ, ວັດຖຸຊັບສິນປູ່ທາງບ້ານຖືກຕົກເຮ່ຍເສຍຫາຍ, ງົວຄວາຍນັບເປັນສິບໆເສຍໄປໃນພາບດຽວ, ເປັດໄກ່ໃນລົກກັ່ງງເອີດເຕີດ ຜົນລະປູກລູກໄມ້ປູ່ຕາມໄຮ່ນາຮົ້ວສວນກໍ່ຖືກທະຫານໄປຕັດໄປຣານ, ສິ່ງເຫລົ່ານັ້ນບໍ່ສາມາດເຮັດໃຫ້ຊາວເມືອງເຊບັ້ງໄຟອ່ອນກຳລັງໃຈ, ກົງກັນຂ້າມເຂົາຍິ່ງມີຄວາມຄຽດແຄ້ນ ແລະ ຫນ່າຍຊັງລະບອບປົກຄອງເພິ່ນຂຶ້ນ, ເຂົາມັກເວົ້າ, ມັກປະຕິຍານຕົວນຳກັນວ່າ: ວັດຖຸຊັບສິນ ແລະ ຊີວິດບໍ່ເປັນບັນຫາ, ທະແນນຂໍແຕ່ບ້ານເກີດເມືອງນອນຂອງພວກເຮົາບັງຄັງຕົວປູ່ກັພແລ້ວ... ຄວາມເດັດດ່ຽວຫນຽວແຫນ້ນຂອງຊາວເມືອງເຊບັ້ງໄຟ ຍາມໃດກໍ່ຍັງເປັນກະແສຟອງຟົດເດືອດ, ເຂົາເຈົ້າບໍ່ໄດ້ສະທ້ານຢ້ານກົວຕໍ່ອະນຸພາບຂອງຟ້າຝົນລົມແດງໃດໆທັງສິ້ນ. ເມື່ອເປັນແນວນັ້ນ ພວກໄມ້ມືປະຕິການບໍ່ທ່ອນຈະນັ່ງເບິ່ງປູ່ປ່າງເມີນເສີຍໄດ້, ພວກເຂົາພະຍາຍາມທຸກວິທີ ເພື່ອເຮັດໃຫ້ຂະບວນປະ

ເກ້ວງສະລາຍກົວລົງ.

ຕອນກາງຄືນຂອງມື້ຫນຶ່ງ ຢູ່ຮ້ານຂາຍເຄື່ອງດື່ມຂອງ ນາງດວງສີທີ່ຕັ້ງແປະແຄມທົ່ງ ປະກົດມີຊາຍຫນຸ່ມແປກຫນ້າສອງຄົນເຂົ້າໄປນັ່ງ, ຊາຍສອງຄົນນັ້ນໃສ່ເຄື່ອງຊີວິນສີຂີ້ເຖົາ, ເຂົາເປັນຄົນຫນ້າຄົມ, ຈ່ອຍຜອມຄ້າຍຄືກັນ. ເຂົາບໍ່ໃສ່ຫມວກ, ຫລັງຈາກດື່ມເຫລົ້າຂາວຜູ້ລະຈອກນ້ອຍແລ້ວ ຫນໍ ຫນຶ່ງ ພັດສັ່ງເອົາເຫລົ້າຟາງທອງອີກ. ສ່ວນຜູ້ນັ່ງຢູ່ເບື້ອງຂວາຂອງນາງ ເງີຍຫນ້າຂຶ້ນຫລຽວໄປຫລຽວມາບຶດຫນຶ່ງແລ້ວຄ່ອຍໆຖາມ :

– ນີ້ ! ນ້ອງສາວ, ບ່ອນມີຮູບຍາລຸງຊຽງຂຽນຕິດໄວ້ນັ້ນແມ່ນຫີບສິນປອມແມ່ນບໍ ?

– ຂ້ອຍບໍ່ຮູ້ຈັກນຳເພິ່ນ !

ເມື່ອເຫັນທ່າທີຜິດປົກກະຕິ, ດວງສີລະແວງສົງໄສແລ້ວເລີຍຖາມຄືນ :

– ພວກຍາອ້າຍມາແຕ່ບ້ານໃດບ່ !.

– ໃກ້ໆນີ້, ບ້ານຊຽງຫວາງນີ້ນາ !

ດວງສີເວົ້າເຫ້ແກມປອກອີກວ່າ :

– ຕິວະ ! ຄືບໍ່ເຄີຍເຫັນຫນ້າຈັກເທື່ອ !.

– ເອົາ ! ພວກຂ້ອຍກໍ່ມາງັນຢູ່ນີ້ເກືອບສູ່ຄືນເດ !.

– ຄັນຍາອ້າຍມາສູ່ຄືນແຮ່ງຊິຮູ້ບ່ອນມຸ້ງນສິບຂອງຍາລຸງຊຽງຂຽນລະຕີ!

ເວົ້າຮອດນີ້ ເຂົາຍິ່ງມີທ່າທີຕ່າງແລ້ວຟ້າວເວົ້າຂຶ້ນ:

– ໂອ່! ຖາມລອງໃຈເຈົ້າຊື່ໆດອກ! ເວົ້າແລ້ວເຂົາບິກນ້ຳຂຶ້ນສອງບົ່ວສັ່ງເອົາເບຍອີກສອງແກ້ວ.

ເຫັນທ່າທີຄົນຜິດປົກກະຕິ ຍິ່ງເຮັດໃຫ້ດວງສີຄັ້ນ. ຄິດສົງໄສໄປຫລາຍຢ່າງຫລາຍແບວ. ບາງທີອາດຈະແມ່ນ... ກະບໍ່ຈັກ, ຄົນເຄີຍມາບໍ່ທ່ອນຖາມແບບນີ້, ດວງສີຈັບຄໍແກ້ວເບຍຍື່ນໃຫ້ເຂົາ, ເບິ່ງດວງຕາຂອງເຂົາຄືກັບກັບຕາໄກ່ປ່າ. ເຂົາເຫລືອດຊ້າຍຫລຽວຂວາລຽນຕິດ, ເວລານັ້ນຈະຊອກຫາຄົນຕິດເຄືອງຫມາຍ "ປ້ອງກັນຄວາມສະຫງົບ" ກໍບໍ່ເຫັນໃຜຜ່ານມາ, ປູ່ອ້ອມແອ້ມພັດເຕັນແຕ່ແມ່ຍິງເດັກນ້ອຍ, ເວລາລ່ວງກາຍໄປຫ້າບາທີ, ສິບນາທີ ແລະ ດົນເຂົ້າ ນາງຍິ່ງຮ້ອນໃຈວູ່ງຄືໄຟເຜົາ

– ຂໍໂທດ! ຂໍເຜີ້ງບາອ້າຍເບິ່ງຮ້ານໃຫ້ແດ່ບຶດດຽວ!

ດວງສີລຸກຂຶ້ນ.

– ນ້ອງ! ຊິໄປໃສ? ຄົນຫນຶ່ງຖາມ.

– ໄປເອົາຂອງບຶດດຽວ!

ຊາຍສອງຄົນແນມນຳຫລັງ, ດວງສີໄປບໍ່ຮອດສິບແມັດ

ບັງເອີນມີຊາຍໜຸ່ມຜູ້ໜຶ່ງພາຍງ້າວຍ່າງມາແຕ່ໄກແລ້ວ ມຸ່ງໜ້າເຂົ້າຊີໂຕະຂອງນາງ, ຊາຍສອງຄົນນັ້ນລຸກຢືນ ຂຶ້ນດ້ວຍຄວາມລະມັດລະວັງ, ດວງສີເຫັນເປັນດັ່ງນັ້ນ ກໍ ຟ້າວຫລົບຄືນ.

– ທັງໝົດ ໗໕໐ ກີບ!.

ເຂົາຟ້າວຖົມເງິນລົງໃສ່ໂຕະ ແຕ່ແສງ ຕາ ຂອງ ເຂົາ ນານໃດກໍຈ້ອງມອງເບິ່ງຄົນຖືງ້າວ.

– ອຸ້ຍ, ນາອ້າຍ! ຍັງຂາດຫ້າສິບ! ດວງສີປາກໄຫ້ ເວລາແກ່ນາວ.

– ໃສຫວະ! ເຈົ້າຈິກົ້ມຂ້ອຍຊັ້ນບໍ?.

– ເຣີຍ! ຟ້າວກ່ອນ, ບໍ່ແມ່ນຂາດ. ມັນແມ່ນເຫລືອ, ເຫລືອ ໕໐ ອ້າຍ!.

ດວງສີເອີ້ນໃສ່ເຂົາ ແຕ່ປະກົດວ່າບໍ່ມີໃຜຫລຽວຄືນມາ, ດວງສີບຶງຮ້ອງແຮງຂຶ້ນ.

– ຊ່ວຍແດ່! ໂຈນ! ໂຈນ, ໂຈນເຂົ້າບ້ານ!!!.

ຊາວເມືອງເຊບັ້ງໄຟນັບເປັນຮ້ອຍໆຄົນຫຸ້ມເຂົ້າມາ ຫາ ສຽງຮ້ອງ, ຜູ້ຈັບຫອກ, ຈັບງ້າວ, ຈັບປືນແກັບປືນເພີງ ຫລັ່ງໄຫລໄປ ເຂົາໝາຍຈະຈັບຕົວຄົນຮ້າຍໃຫ້ໄດ້ຄາມືແຕ່ ຫາກຊ້າເກີນໄປ,ຊາຍໜຸ່ມແປກໜ້າສອງຄົນໄດ້ເຕັ້ນຂ້າມ

ຮົ້ວແລ້ວລົບເຂົ້າໄປຫາເງົາມືດ. ນັບແຕ່ມື້ນັ້ນມາການກວດ
ກາສາລະເວດຄົນເຂົ້າອອກບິ່ງເຄັ່ງຄັດ. ເຂົາຈັດຕັ້ງໜ່ວຍ
ເວນຍາມທາງລັບຂຶ້ນອີກ ແລະຮຽກຮ້ອງໃຫ້ທຸກຄົນເປັນຫູ
ເປັນຕາຊ່ວຍກັນຄັນຫາກມີເຫດຮ້າຍເກີດຂຶ້ນຕ້ອງຈັດການ
ໃຫ້ຮາບຄາບໂລດ.

ເປັນອັນວ່າຂະບວນຕໍ່ສູ້ຢູ່ເມືອງເຊບັ້ງໄຟໄດ້ຍືນຍົງ ຄົງ
ຕົວຢູ່ເປັນເວລາຍາວນານພໍສົມຄວນແລ້ວ, ຄວາມ ຄອງ
ຄອຍຕ້ອນຮັບ ຄ–ປ–ສ ລົງມາຍັງບໍ່ສິ້ນສຸດ, ຊາວເມືອງເຊ
ບັ້ງໄຟພັດມີຄວາມຫຍຸ້ງຍາກອັນໜຶ່ງເກີດຂຶ້ນ,ພວກນາຍ
ທະຫານຊັ້ນສູງຢູ່ທ່າແຂກ ໄດ້ວາງແຜນການເພີ່ມທະ ວີ
ການ "ທຳລາຍຊັບສົມບັດຂອງປະຊາຊົນ" ເປັນຈຸດໜັກ.
ເຂົາຄິດວ່າເມື່ອປະຊາຊົນເປັນຫ່ວງບໍາດ້ານນີ້ແລ້ວ ກໍຈະ
ສະລາຍຕົວລົງເອງ. ນັບແຕ່ວັນນັ້ນມາ, ຢູ່ບ້ານໃດກໍມີຂ່າວ
ບໍ່ດີເລື້ອຍໆ, ທະຫານພາກັນຂົນເອົາສັດລາກແກ່ໄປຂາຍ
ຢູ່ຝັ່ງໄທຄືນ ລ ໂຕ ໑໐ ໂຕ, ມີບາງຄອບຄົວມີງົວຄວາຍສີ່
ຫ້າໂຕກໍເສຍໝົດ. ມີຫລາຍເທື່ອເຈົ້າຂອງໄປພໍ້ເຂົາ ກໍ
ປ້ອຍດ່າ ແລະ ໃຊ້ປືນຍິງຂ້າມຫົວ, ສ່ວນພືດພັນຜົນລະ
ປູກແຄມເຊ, ແຄມຂອງໃນບາງບ້ານກໍຖືກຖາງ ແລະ ຈູດ
ມຸ່ນປານຮຳ. ຊັບສົມບັດ ແລະ ມູນມັງສັງຂະຫາຍາຂອງ

ປະຊາຊົນນັບມື້ນັບເສຍຫາຍຫນັກຂຶ້ນ, ໃນໄລຍະສະພາບເສດຖະກິດສັບສົນວຸ້ນວາຍຢູ່ນັ້ນ, ຄະນະປະທ້ວງໄດ້ແຕ່ງຄົນຂຶ້ນມາວຽງຈັນຫລາຍເທື່ອເພື່ອຈະລາຍງານໃຫ້ລັດຖະບານຮູ້, ແຕ່ວ່າບໍ່ມີຫົນທາງພໍອອກໄດ້. ສ່ວນຫົນທາງເຂົ້າສູ່ເມືອງທ່າແຂກແມ່ນຖືກຕັດຂາດເປັນຍ່ານເປັນຕອນ, ອີກຫົນທາງທີສອງແມ່ນຂຶ້ນຝັ່ງໄທແລ້ວໄປອອກໃສ່ວຽງຈັນ ກໍຫຍຸ້ງຍາກຫລາຍເພາະວ່າສາຍທາງສຳຄັນທີ່ໃສ່ແມ່ນ້ຳຂອງກໍຖືກພວກເຂົາເວນຍາມເຄັ່ງຄັດ, ຕະຫລອດຮອດຕຳຫລວດຂອງໄທຢູ່ຝັ່ງນັ້ນ ກໍໄດ້ສົມຮູ້ຮ່ວມຄິດກັບທະ ຫານລາວແລ້ວ ສົ່ງເຮືອຈັກມາຕ້ອນເອົາງົວ ຄວາຍ ຂ້າມ ຟາກເລື້ອຍໆ, ເຂົາປະກາດພາວະສຸກເສີນບໍ່ໃຫ້ຄົນລາວຂຶ້ນຝັ່ງເດັດຂາດ, ບໍ່ວ່າຖືກກົດໝາຍຫລືຜິດກົດໝາຍກໍຈະໄດ້ຈັບຕົວ. ເມື່ອເປັນແນວນັ້ນຊາວເມືອງເຊບັ້ງໄຟມີແຕ່ເສັ້ນທາງດຽວຄືບຶດຫມັ້ນຕໍ່ສູ້ຢູ່ບ່ອນເກົ່າຢ່າງບໍ່ມີກຳນົດເວລາ. ຢູ່ທີ່ໝັ້ນໜອງບົກບໍ່ວ່າໃນເວລາໃດສຽງປືນກະໂລກໍດັງສົ່ງສຽງອອກມາປຸກລະດົມມວນຊົນໃຫ້ປຸ້ນລຸກກັບຕໍ່ສູ້, ບັງ ມີ ຊີວິດຢູ່ຜູ້ດຽວກໍຕ້ອງຕໍ່ສູ້ຈົນຫົວຂາດຄາ ເພື່ອຍາດເອົາໄຊຊະນະໃນບັ້ນທ້າຍ.

x x

x

*ຢູ່ທ່າແຂກ ນັບແຕ່ນີ້ຂະບວນປະທ້ວງຖືກສະລາຍ ຕົວເປັນຕົ້ນມາ. ກຸ່ມຫ້ອງການທີສອງ (ກົມສືບ ລຳຊະການລັບ) ໄດ້ອອກເຄື່ອນໄຫວແຮງທີສຸດ. ເຂົາພະ ຍາຍາມສືບທາວຫາບຸກຄົນທີເປັນຕົວຕັ້ງຕົວຕີໃນຕອນປະ ທ້ວງ, ເມື່ອຮູ້ແລ້ວກໍ່ອອກຄຳສັ່ງໃຫ້ຕຳຫລວດໄປຈັບມາ ຄຸມຂັງ. ເບິ່ງສະພາບທ່າແຂກຢ່າງ ຜິວ ເຜີນ ເຫມືອນ ກັບ ວ່າບໍ່ມີຫຍັງເຄັ່ງຕຶງແລະພວມເຂົ້າສູ່ຄວາມເປັນປົກ ກະ ຕິ ແລ້ວ, ຕົວຈິງນັບດານັກຮຽນ ນັກສຶກສາ, ກຳມະກອນ ແລະ ຄົນຜູ້ຮ່ວມເຮັດປະທ້ວງແມ່ນມີ ຊີວິດຢູ່ດ້ວຍຄວາມຝືດເຄືອງ ທີສຸດຄັນຫາກໄດ້ ລົງ ຈາກ ເຮືອນ, ຈະ ແມ່ນ ໄປ ຫລິ້ນ ໄປ ທ່ຽວນຳຫມູ່ຄູ່ຫລືທຳມາຫາກິນປະກອບອາຊີບກໍຕາມ ເວ ລາໃດກໍ່ມີຕຳຫລວດລັບເອົາໃຈໃສ່ຕິດຕາມ. ໃນໄລ ຍະ ນັ້ນ ມີຫລາຍຄົນໄດ້ຖືກຈັບຂັງຄຸກ, ຫລາຍຄົນຖືກທຸບຕີທໍລະ ມານແຕ່ວ່າ ກໍລະນີທີຫນ້າສັງເວດກວ່າຫມູ່ ໄດ້ເກີດຂຶ້ນມີ ຢູ່ເສື່ອງຫນຶ່ງຄື :

ນີ້ຫນຶ່ງມີກຳມະກອນໂຮງເລື່ອຍຜູ້ຫນຶ່ງຊື່ວ່າ ທ້າວບົວ ທອງ, ຫລັງຈາກໄດ້ຮັບຫນັງສືຂອງເມຍຝາກໃຫ້ໃນຕອນ ຫົວແລງແລ້ວ ເຂົາກໍກຽມເຄື່ອງຈະອອກເດີນທາງ, ບົວ

ທອງຍ່າງອອກຫວິດປະຕູບ້ານແລ້ວ ພັດຫລິບຄືນມາຫາຫ້ອງນອນ ຂອງ ຕົນ ອີກ. ເຂົານັ່ງເຫງົາຢູ່ໃນຫ້ອງເຮືອນອັນມືດງຽບຜູ້ດຽວ. ດົນໆເຂົາເຮັດຫນ້າຫຍຸ້ງ ຄິ້ວສົນ ແລະບິ່ນຫົວເຫມືອນກັບວ່າພວມຄິດຊອກຫາສິ່ງ ໃດ ສິ່ງ ຫນຶ່ງແຕ່ເຫລືອວິໄສນຶກຫນຶ່ງເຂົາ ເອົາ ມື ມາ ຈົກ ຖົງ ສົ້ງ ເບື້ອງຫລັງແລ້ວຫັບໃຈຍາວໆ.

"ນ້ຳມັນລົດສອງລິດພໍດີຮອດ. ສີ່ ລິດ ເຫລືອ ແລ້ວທັງໄປທັງກັບ... ນະ! ເມຍ ຫາ ກໍ ອອກ ລູກ ໃຫມ່ຍາມນີ້ຊິເອົາຫຍັງເມືອຕ້ອນນໍ... ເງິນຍັງເຫລືອພຽງແຕ່ ໑໐໐ ກີບ, ຄັນຊື້ໄດ້ຢາບຳລຸງກໍດີ. ຫາກຍັງເດັກນ້ອຍສອງສາມໂຕຫັ້ນເດໄປຮອດພັດຊິແອ່ວກິນຂະຫນົມອີກລະ. ນັບແຕ່ນີ້ເຮັດປະຫ້ວງມາກໍຫລາຍວັນແລ້ວບໍ່ໄດ້ໄປ ຢາມ ບ້ານ. ຄິດໄປຄິດມາກໍຍັງບໍ່ທັນຢາກໄປປານໃດ ເງິນ ເດືອນ ກໍ ບໍ່ ທັນ ໄດ້ ຮັບແລະ ຈັກ ວ່າ ສະ ພາບ ຢູ່ ທາງຫນອງບົກຊິເປັນແນວໃດ, ຫາກສອງສາມມື້ນີ້ຄືວ່າໄທບ້ານປ່າຕົວເຂົາກໍທຽວມາ.

ອັນນັ້ນແມ່ນເຂົາ, ຫາກໂຕເອງນີ້ດີ, ມັນຕ່າງຫມູ່, ກະຈິງຢູ່ວ່າໄດ້ເຮັດການບຳເຖົ້າແກ່ ເປັນກຳມະກອນຢູ່ຊູມື້ນີ້ຄືວ່າບໍ່ມີຫຍັງຫຍຸ້ງກ່ຽວທາງການເມືອງ, ຢູ່ພະແນກໂຍທາຫວ່າງແລ້ວກໍໄດ້ອອກຫນ້າອອກຕາພໍສົມຄວນ, ກາຍ

ວ່າເຂົາຈື້ຫນ້າ ຂອງວ່າໂຈນຕີເຂົາ ແລະ ປ້ອຍດ່າເຂົາ... ເລື່ອງນີ້ວານນີ້ຈັກບັກແສງມັນຮູ້ຂ່າວມາແຕ່ໃສ່ ຈິ່ງຖາມ ລັກສະນະເປັນຫ່ວງເປັນໄຍບໍາວ່າ ບໍ່ໄປເບິ່ງເມຍອອກລູກ ບໍ? ສໍ່າເປັນລັດຖະການຊັ້ນຕໍ່າເຕະຝຸ່ນປູ່ອ້ອມເມືອງກໍບໍ່ຮູ້ ເລື່ອງ ອັນນີ້ກໍ່ເປັນຫນ້າຄິດ.

– ກ໊ອກ ! ກ໊ອກໆ ! ສຽງເຄາະປະຕູດັງຂຶ້ນ.

ບົວທອງຍ່າງໄປເປີດປະຕູອອກ.

– ນີ້ ! ເຖົ້າແກ່ເພິ່ນບອກວ່າ ຄັນໂຕຊິໄປຢາມເມຍ ມື້ນີ້ໃຫ້ໄປຮັບເງິນ ເພິ່ນຊິໃຫ້ຢືມລະຫວ່າງ ໒໐.໐໐໐ ກີບ ວ່າຊັ້ນ !.

ຫລັງຈາກກໍາມະກອນຜູ້ຫນຶ່ງບອກໃຫ້ຮູ້ແລ້ວກໍ່ຂຶ້ນລົດ ຫນີໄປ. ບົວທອງຟ້າວຈັບເອົາຫມວກມາສຸບໃສ່ຫົວ ອັດ ປະຕູແລ້ວມຸ່ງຫນ້າໄປຫາບ້ານເຖົ້າແກ່ໃນເມືອງ. ເມື່ອໄດ້ ເງິນເຕັມຖົງສົ້ງ ບົວທອງກໍໄປເລາະເມືອງຊອກຊື້ເສື້ອ, ປາບໍາລຸງ, ຂະຫນົມ ແລະ ເຄື່ອງຂອງຈໍານວນຫນຶ່ງຕົກ ເປັນເງິນ ໑໐.໐໐໐ ກີບ, ຄັນຊິຈ່າຍຫລາຍພັດຢ້ານບໍ່ມີ ເງິນໃຊ້ເພິ່ນ. ເມື່ອໄດ້ຂອງແລ້ວ ບົວທອງກໍເລີ່ມຕົ້ນອອກ ເດີນທາງ. ຍາມນັ້ນຕາເວັນກໍໃກ້ຈະລັບຂອບຟ້າແລ້ວເຂົາ ບຶງຮ້ອນໃຈ, ເຂົາທັງແລ່ນລົດທັງຄຶດເປັນຫ່ວງຮອດບ້ານ,

ແນ່ນອນລະ ໄປຮອດນີ້ ພວກອີ່ນາງຊິແລ່ນອອກມາຕ້ອນເປັນປຸ້ມໃສ່ລະແນ້ ! ຢູ່ເຮືອນ ພື້ນດັງກໍ່ໃກ້ຊິຫມົດແລ້ວ, ຫວ່າງກ່ອນບ້ອນສະພາບຫຍຸ້ງຍາກ ບໍ່ໄດ້ເນື່ອຂົນພື້ນໄວ້ໃຫ້...

ບົວທອງທັງໄປທັງຄຶດເປັນຫ່ວງຫາລູກເມຍ ຢູ່ບ້ານ. ຟ້າໃກ້ຊິມືດ ເຂົາຍິ່ງເລັ່ງບ້າມັນລົດຈັກໃຫ້ໄວເຂົ້າຊັ້ກ ໃຊ້, ເມື່ອໄປໄກຈາກຕົວເມືອງ ໑໒ ຫລັກກໍພໍດີຮອດປ້ອມຍາມທະຫານ, ຢູ່ບ່ອນນັ້ນແມ່ນບ້ານນາແຮ່ ຊຶ່ງ ມີ ທະ ຫານ "ແນງເງົາ" ຮັກສາການ ໑ ກອງຮ້ອຍ, ບົວທອງຜ່ອນຄວາມໄວຂອງລົດລົງ ແລ້ວຈອດຢູ່ຕໍ່ຫນ້າໄມ້ຫ້າມຜ່ານ, ທະຫານຍາມຫນໍ່ຫນຶ່ງປ່ອນຄໍອອກຈາກປ້ອມຍາມ ເອີ້ນໃສ່:

- ເຈົ້າຊິໄປໃສ ?
- ໄປບ້ານ !
- ບ້ານເຈົ້າຢູ່ໃສ ?
- ພຸ້ນແລ້ວ, ໃກ້ງຫນອງບົກພຸ້ນ !
- ຊື່ເຈົ້າແມ່ນບົວທອງແມ່ນບໍ ?
- ບໍ່ ! ຊື່ຂ້ອຍເອີ້ນວ່າ ສີພອນ.

ທະຫານຍາມບໍ່ເວົ້າຫຍັງຕໍ່ໄປອີກ, ບົວທອງຕົກໃຈວຸບ

ບາດຫນຶ່ງເປັນຫຍັງເຂົາຈຶ່ງຖາມ... ແລະ ຮູ້ຊື່ດີແນວນີ້, ຫລຽວເບິ່ງທ້ອງຟ້າກໍເລີ້ມເຫັນຫມູ່ດາວສອງສາມຫນ່ວຍ ສ່ອງແສງເຫລື້ອມຍິບໆລົງມາ ຕາມຫົນທາງບໍ່ມີຄົນທ່ອງທ່ຽວ, ປູ່ອ້ອມແອ້ມມີແຕ່ປ່າໄມ້ງຽບເຫງົາ ຄັນເຂົາຈັບກໍແນ່ນເສັດ... ບົວທອງຫັນໃຈຍາວໆແລ້ວຫລຽວເບິ່ງຫນ້າຄົນຍານດ້ວຍຄວາມລະມັດລະວັງ, ບຶດຫນຶ່ງເຂົາເປີດໄມ້ອັດທາງຂຶ້ນເທິງຫົວ.

– ເອີ! ເຈົ້າໄປໄດ້ແລ້ວ!.

ບົວທອງຮູ້ສຶກອຸ່ນໃຈມາແດ່ເລັກນ້ອຍ ແຕ່ກໍຍັງແປກໃຈປູ່ເປັນຫຍັງເຂົາຈຶ່ງຖາມ "ບົວທອງ" ບົວທອງຕົກຈັກລົດແລ້ວແລ່ນວື່ເນື່ອທາງເບື້ອງຫນ້າ, ລົດແລ່ນໄປໄດ້ໄກປະມານ ໑໐ ແມັດ ບັງເອີນສຽງປືນແຕກຂຶ້ນສາມນັດຕິດໆກັນ, ທ້າວບົວທອງຟິ້ງອອກຈາກລົດຕົກລົງແຄມທາງ, ຍ້ອນຄວາມເຈັບປວດຈຶ່ງເຮັດໃຫ້ເຂົາກິ້ງເກືອກໄປມາສອງ ສາມພິກ ແລ້ວເອົາມືນຸບເອິກນອນຫມູບຫນ້າລົງດິນ ຕູບ ພູບ, ເລືອດສີແດງໄດ້ປູດອອກມາຈາກຊວງເອິກ ແລະ ສັນຫລັງແລ້ວໄຫລອາບຫົນທາງປານນ້ຳອອກບໍ່, ບົວທອງໄດ້ອຳລາຈາກໂລກເຮົາໄປຢ່າງກະທັນຫັນ ແລະ ບໍ່ມີວັນຈະກັບຄືນມາອີກ. ລົດຈັກຍີ່ຫໍ້ "ຮອນດາ ໑໒໕ ຊີຊີ" ກົງຫລັງຍັງ

ປິ່ນວົງມົນ, ສຽງຈັກດັງຫຶດໆຢູ່ຂ້າງຫາງ.

ເມື່ອສຽງປິ່ນດັງຂຶ້ນຜິດປົກກະຕິ, ໄທບ້ານ ນາ ແຮ່ ຢູ່
ຫ່າງຈາກບ່ອນນັ້ນບໍ່ໄກປານໃດ ໄດ້ແຕ່ງຄົນມາຈອບເບິ່ງ,
ເມື່ອຮູ້ເລື່ອງແລ້ວ ເຂົາກໍຫລັ່ງໄຫລອອກໄປໂຊມເອົາທ້າວ
ບົວທອງຂຶ້ນມາໄວ້ຢູ່ແຄມຖະຫນົນ, ໃນເວລານັ້ນມີຊາຍ
ຫນຸ່ມຜູ້ຫນຶ່ງໃນບ້ານເຫັນບົວທອງກໍເກີດມີແນວຄິດສົງໄສ
ຂຶ້ນ, ເຂົາຟ້າວໄປຈົກເອົາບັດປະຈຳຕົວອອກມາເບິ່ງຈຶ່ງຮູ້
ວ່າຄົນຜູ້ນັ້ນ ແມ່ນເຮັດການຢູ່ໂຮງເລື່ອຍຮ່ວມກັບ ກັບ ຕົນ,
ຊາຍຄົນນັ້ນຢືນຄຶດຢູ່ບຶດຫນຶ່ງ, ເຂົາຄຶດເຫັນກ່ອນນີ້ສາມ
ເດືອນໃນເວລາຖືກໄລ່ອອກການ ຖານຖືກ ຫາ ວ່າ ມີ ການ
ເຄື່ອນໄຫວໂຄ່ນລົ້ມຜູ້ອຳນວຍການໂຮງເລື່ອຍນັ້ນ ກໍມີ ບົວ
ທອງເປັນຜູ້ປົກປິດ ແລະ ຕໍ່ສູ້ຊ່ວຍ, ບົວທອງເປັນຄົນດີງ
ນາ! ຈິດໃຈຂອງເຂົາຍາມໃດກໍກວ້າງຂວາງ, ເພື່ອແຜ່
ຫມູ່ເພື່ອນ, ຮູ້ຈັກອັນຖືກອັນຜິດ ກຳມະກອນຜູ້ໃດກໍຮັກ
ແພງແລະນັບຖື... ຊາຍຄົນນັ້ນຄຶດແລ້ວກໍຍ່າງຈົກໆ ຂຶ້ນ
ເມືອຫາປ້ອມຍາມ.

– ເປັນຫຍັງພວກເຈົ້າຈຶ່ງຍິງຄົນຜູ້ບໍ່ມີຄວາມຜິດແນວ
ນີ້?

ຫມໍທະຫານຍາມເບະສົບໃສ່ ທຳທ່າຫມິ່ນປະຫມາດ

ແລ້ວເວົ້າຕັດຂຶ້ນ:

– ເຈົ້າຢ່າປາກ, ຫນີແມ້? ຫນີສິບຫລັກ!.

– ນີພວກເຈົ້າຈຶ່ງມີສິດປາກຫວະ? ຄືພິລຶກແທ້!.

– ຮ້ວາຍ! ກູບອກໃຫ້ຫນີບັງນາສ໌ອີກບໍ່ຮື? ຫມໍ່ທະຫານໂນໂຫ.

– ເຈົ້າຊິໃຫ້ຂ້ອຍຫນີໄປໃສ? ປູ່ນີ້ແມ່ນບ້ານເກີດເມືອງນອນຂອງຂ້ອຍເຈົ້າຮູ້ຈັກບໍ່?

ຄົນຍາມຜູ້ໃຈໂຫດ ພູດລຸກຂຶ້ນເອົາຝາມືຟາດຫນ້າ ແຕ່ຖືກຊາຍຫນຸ່ມຄົນນັ້ນເອົາແຂນກັ່ງໄວ້, ເຂົາອ້ງວໂຕກັບຄືນມາເບື້ອງຂວາ ແລ້ວໃຍນກຳປັ້ນອັນຫນັກແຫນ້ນ ຍັດເຂົ້າໃສ່ກົກຫູຫມໍ່ທະຫານຍາມ ຈົນເຊໄປລົ້ມຕູບພູບປູ່ຂ້າງຝາ, ເຂົາຄວາໄປໃສ່ປືນກົນທີ່ຕັ້ງໄວ້ ແຕ່ນາຍທະຫານສອງຄົນໂດດເຂົ້າມາຄຸບສອງແຂນແລ້ວໃສ່ກັບມື, ຊາຍຄົນນັ້ນຖືກນຳຕົວເຂົ້າຄ້າຍ, ຊາວບ້ານນາແຮ່ສາມສິບກວ່າຄົນ ເມື່ອເຫັນເລື່ອງເກີດຂຶ້ນ ກໍພາກັນໂຮ່ເຂົ້າຄ້າຍ ເພື່ອທວງໃຫ້ປ່ອຍຕົວຜູ້ຖືກຈັບ. ແຕ່ສຽງຮ້ອງໂຮຄັດຄ້ານຂອງຊາວບ້ານໄດ້ຖືກທະຫານສອງຫມວດເອົາອາວຸດສະກັດກັ້ນ ແລະທັບມ້າງຈົນສະລາຍຕົວ, ນາຍທະຫານຫມໍ່ຫນຶ່ງເປັນຄົນທ້ອງປຸ້ງຮ່າງຕ່ຳ, ຫມໍ່ຂັດປືນສັ້ນປ່ອນໆພຽງຫົວເຂົາ

ຍ່າງລົງມາແລ້ວຊີ້ມືໃສ່ຄົນຈຳນວນຫນຶ່ງ ທີ່ປືນຈຸ້ມປູ່ແຄມ ຖະຫາຫນົນ.

– ເອ້ ! ພວກເຈົ້າຊິມາສັງເກດເອົາອີຫຍັງຢູ່ນີ້ ? ເຂົາ ບອກປຸດບໍ່ປຸດເຂົາກໍບໍ່ງລະຕີ ຊິມີເລື່ອງຫຍັງ? ຣີບຫນີ!.

ໄທບ້ານບາແຮ່ ພ້ອມກັບໂຊມເອົາສົບ ຂອງ ທ້າວ ບົວ ທອງແລ້ວແຫ່ເຂົ້າໄປໄວ້ຢູ່ບ້ານ, ຮຸ່ງເຊົ້າມື້ລຸບມາເຂົາເຈົ້າ ຈຶ່ງເອົາຂຶ້ນລົດແລ້ວໄປສົ່ງໃຫ້ລູກ ແລະ ເມຍຢູ່ທີ່ບ້ານປ່າ ຕິ້ວ ເມື່ອຮູ້ຂ່າວວ່າບົວທອງຖືກເສຍຊີວິດແລ້ວ ຊາວບ້ານ ຜູ້ຢູ່ໃກ້ຄຽງກໍພ້ອມກັນຫລັ່ງໄຫລໄປເບິ່ງ ຈົນອັ່ງອໍເຕັມເດີ່ນ. ໄທບ້ານ ໄທເມືອງຜູ້ໃດໄປຮອດ ກໍສະແດງຄວາມອາໄລອາ ວອນ ແລະ ຜູກຄໍ່ຕໍ່ແຂນອົບອຸ່ນລູກເມຍຕາມຮີດຄອງປະ ເພນີ.

ຫລັງຈາກເອົາຊາກສົບຄົນເສຍຊີວິດ ໃສ່ໂລງຮຽບຮ້ອຍ ແລ້ວ, ພີ່ນ້ອງຕ່າງບ້ານຍັງສືບຕໍ່ຫລັ່ງໄຫລເຂົ້າໄປຢື້ຢາມ ຢູ່ບໍ່ຂາດ. ເຊົ້າມື້ນັ້ນໃນ ຂະ ນະ ທີ່ ຊາວ ບ້ານ ພວມ ຂຶ້ນ ລົງ ແລະ ສົນທະນາກັນເພື່ອໄຫວ້ທຸກຢູ່ໃນເຮືອນ, ບັງເອີນມີ ທະຫານຫມວດຫນຶ່ງຂີ່ລົດຈີບແລ່ນ ມາ ຈອດ ຈົກ ຢູ່ ຫນ້າ ບ້ານແລ້ວເຂົ້າປິດລ້ອມ, ຜູ້ເປັນນາຍ ແລະ ຜູ້ໃກ້ ຊິດ ສອງ ຄົນ ຟ້າວເຕັ້ນຂຶ້ນເມືອເທິງເຮືອນ ເຫມືອນດັ່ງເສືອໄລ່ເນື້ອ,

ທະຫານສອງຄົນຖືປືນຫນີບຂໍ້ແຮ້ຈ້ຢູ່, ເຂົາຫ້າມບໍ່ໃຫ້ໃຜປາກໃຜຕີງ, ບັກຖືປືນຫັນລີກໍເລືອເຂົ້າໃນຫ້ອງນອນໂລດ, ມັນຈົກເຄື່ອງຂອງ, ຄົ້ນຫີບແລະເສື້ອຜ້າຖິ້ມອອກຊະຊາຍເພື່ອຊອກຫາເອກະສານ, ຄົນຢູ່ໃນເຮືອນຖືກທ່າຣັຍບໍ່ມີໃຜກ້າປາກກ້າເວົ້າ, ສຽງເດັກນ້ອຍຮ້ອງໄຫ້ ແລະ ຫມາເຫົ່າແຊວໆເບື່ອງບັນຄັບບ້ານ, ເມື່ອເຂົາກວດຄົ້ນບໍ່ໄດ້ເລື່ອງໄດ້ລາວແລ້ວ ບັກເປັນນາຍກໍຍ່າງອອກມາຢືນຄ້ຳແອວຢູ່ປາກປະຕູແລ້ວເວົ້າວ່າ :

– ດຽວນີ້, ທ່ານນາຍພົນ (ບຸນເລີດ ຊະນີຈັນ) ສັ່ງໃຫ້ເອົາຜີຕາຍໄປຖິ້ມໃຫ້ໄວທີ່ສຸດ ຄັນຫາກກາຍກຳນົດມື້ນີ້ແລ້ວມີເລື່ອງເກີດຂຶ້ນຈະບໍ່ຮັບຜິດຊອບໄດ້ຍິນບໍ່ ?.

ເວົ້າສຸດມັນປິ້ນຫລັງໃສ່ແລ້ວ ຍ່າງລົງເຮືອນໄປຢ່າງຄຶກຄັກ. ທະຫານໄກ້ຊິດທັງສອງ ກໍຟ້າວແລ່ນເຕະເປະນຳຫລັງປານກັບຫມາພານໄປນຳເຈົ້າ. ຂ່າວທ້າວບົວທອງເສັຍຊີວິດ ແລະ ການທ້າທາຍຂອງພວກທະຫານ "ແມງເງົາ" ໄດ້ຮ້ອນໄປຮອດຫນອງບົກ, ຊາວບ້ານຊາວເມືອງທີ່ພວມໂຮມຊຸມນຸມຢູ່ເພື່ອປະທ້ວງນັ້ນ ໃຜໆກໍເສົ້າສະຫລົດໃຈ ແລະ ເຈັບແຄ້ນແທນນັ້ນໃຈທີ່ສຸດ, ເຂົາພາກັນເວົ້າວ່າເສັຍທ້າວບົວທອງແມ່ນເສັຍນັກຕໍ່ສູ້ຜູ້ອົງອາດຜູ້ຫນຶ່ງຂອງ

ເມືອງເຊບັ້ງໄຟ, ບົວທອງແມ່ນມີຊີວິດອັນດຽວ ແລະ ຕົກຢູ່ໃນຊ່າຕາກຳອັນດຽວກັນກັບເຖົ້າຊຽງຂຽນແຫ້ ເພື່ອຮັກສາຄວາມປອດໄພ ແລະ ກຽມເງືອນໄຂຕໍ່ສູ້ໄປເພື່ອຍາດເອົາໄຊຊະນະໃນບັ້ນໃຫມ່. ເຊົ້າມື້ລຸນມາເຂົາພາກັນຫລັ່ງ



ຫ້າມຈຳໜ່າຍ

4 ສົບຂອງບົວທອງ ຜູ້ຖືກທະຫານສັດຕູ ຍິງຕາຍຢູ່ກາງທາງ ທີ່ບ້ານນາແຜ່ ກໍໄດ້ເອົາເຂົ້າມາມ້ຽນໄວ້ຢູ່ຄຽງຂ້າງ ຂອງລຸງຊຽງຂຽນ (ບົວທອງເປັນໜຶ່ງໃນຈຳນວນ ຜູ້ທີ່ອອກໜ້າອອກຕາ ເຮັດປະທ້ວງ ຢູ່ທີ່ທ່າແຂກ)

ໄຫລໄປແຫ່ເອົາສົບຂອງທ້າວບົວທອງ ເຂົ້າມາໄວ້ຫາບອງບົກ, ເຂົາເຈົ້າເອົາສົບທ້າວບົວທອງ ປົງໃສ່ຄຽງຂ້າງສົບເຖົ້າຊຽງຂຽນແລ້ວເອົາແພຈ້ອງລາຍສີຂຽວ ສະຫລັບສີໃບ

ໄມ້ແຫ້ງ ແລະ ສີຂາວສອງແຜ່ນໃຫຍ່ໄປກັ້ງໄວ້ ເພື່ອບໍ່ໃຫ້ແດດສ່ອງ ຫລື ນ້ຳຫມອກຣຳ, ນັບແຕ່ນັ້ນມາຄົນໄປໄວ້ອາໄລ ແລະ ຄົນງັນບັນນີ້ນັບເພີ່ມທະວີ ຄັບຄາຫນາແຫນ້ນກວ່າເກົ່າ.

ນວນຊົນອັນໄພສານດຳເນີນການຕໍ່ສູ້ທາງ ການ ເມືອງ ແລະຄອງຄອຍ ຄ-ປ-ສ ລົງມານັ້ນໄດ້ກິນເວລາ ປີ໕ ນີ້ ປີ໕ ກືນແລ້ວ ແຕ່ບໍ່ມີຂ່າວຄາວຫຍັງຄືບຫນ້າ, ຊາວເມືອງເຊບັ້ງໄຟ ຫລາຍຄົນ ກໍອົດເມື່ອຍຫນ້າຫລ່າ ຕາເຫລືອງບ້ອນອຶດຫລັບອຶດນອນ, ໄຮ່ນາຮົ້ວສວນຫລາຍແຫ່ງໄດ້ເປັນປ່າຫຍ້າຮົກເຮື້ອ, ພືດພັນພົນລະປູກຖືກສັດສາວາສິ່ງເຂົ້າທຳລາຍ, ບໍ່ມີໂອກາດໄດ້ເຂົ້າໄປບົວລະບັດຮັກສາ ເກີດເປັນນີ້ນາມີແຕ່ພາກັນໄປເຝົ້າຢູ່ບ່ອນຄົນຕາຍເທົ່ານັ້ນ. ມື້ຫນຶ່ງຜູ້ຖືກເຈັບສິບເອັດຄົນໄດ້ກັບຄືນມາ, ເຂົາໄດ້ຮັບການປິ່ນປົວຢູ່ໂຮງຫມໍປິດລັບໃນບ້ານແຫ່ງຫນຶ່ງແຄມເຊບັ້ງໄຟ, ນີ້ນັ້ນຊາວເມືອງເຊບັ້ງໄຟໄດ້ຂ້າຫມູໃຫຍ່ສອງໂຕ ເຮັດ ພິທີ ສູ່ຂວັນໃຫ້ຄົນເຈັບແລະບາດມິດຜູ້ປະສົບເຄາະຮ້າຍ,ໄຫບ້ານໃຕ້ບ້ານເຫນືອຫລັ່ງໄຫລໄປຜູກຄໍ່ຕໍ່ແຂນຈົນຄັບຄັ່ງ, ເຂົາໄດ້ອວຍໄຊໃຫ້ພອນໃຫ້ພົ້ນຈາກໂລກໄພໄຂ້ເຈັບ, ມີເຫື່ອແຮງລຸກຂຶ້ນຕໍ່ສູ້ຕໍ່ໄປຈົນກ່ວາຈະໄດ້ຮັບໄຊຊະນະ, ນີ້ນັ້ນຊາວ

ເມືອງເຊບັ້ງໄຟໄດ້ຈັດພາເຂົ້ານ້ອຍ ຕ້ອນຮັບນັກຮົບຜູ້ຖືກ
ບາດເຈັບຢູ່ກາງເດີນຫນ້າໂຮງການເມືອງ ຄົນຫາ ກໍ່ ບັ່ງ
ອ້ອມພາເຂົ້າບໍ່ຮອດບາທີພວກ "ແນງເງົາ" ພັດເຂົ້າໄປ
ບຽດບຽນອີກ, ພວກເຂົາຕັ້ງປືນກົນໃສ່ຄັນບາຫລັງບ້ານບົງ
ປືນໄຟຂ້າມຫົວເພື່ອນາບຂູ່, ສຽງປືນດັງຟົດສະຫນັ່ນຫວັ່ນ
ໄຫວໄປທົ່ວປ່າດົງ, ລູກປືນສີແດງບິນລວ່ານ ສົນ ຢູ່ ເທິງ
ທ້ອງຟ້າຍາບໆບໍ່ຂາດໄລຍະ,ເວລານັ້ນກໍາລັງຮັກສາຄວາມ
ສະຫງົບນັບເປັນພັນໆຄົນ ສ່ວນຫລາຍແມ່ນຊາວຫນຸ່ມໄດ້
ຍົກທັບໄປປະຈໍາຊຸມຄອງຢູ່ແຄມຮົ້ວ, ເຂົາເຈົ້າມີອາວຸດພື້ນ
ເມືອງຄົບມື. ສຽງຂອງໂຄສົກໄດ້ປ່າວເຕືອນໃຫ້ທຸກຄົນຢູ່ໃນ
ທ່າກຽມພ້ອມ ຄັນຫາກມີກໍາລັງພາຍນອກບຸກລຸກເຂົ້າມາ
ຕ້ອງພ້ອມກັນດັບສູນດ້ວຍມັດແລກມັດ. ສຽງປືນຂອງຂ້າ
ເສິກຍັງບໍ່ທັນປຸດຕື່ນມວນຊົນອັນຫນາແໜນບັນໄດ້ຕັ້ງຫມັ້ນ ຢູ່
ໃນຈິດໃຈເດີມ, ຄືນມື້ນັ້ນຜ່ານພົ້ນໄປ ເຊົ້າມື້ໃຫມ່ໄດ້ວຽນມາ
ເຖິງບັງເອີນມີຄົນຫນຸ່ມຜູ້ຫນຶ່ງເອົາຂ່າວສານປະເທດ ລາວ
ສະບັບຫນຶ່ງເຂົ້າໄປ ຍື່ນ ໃຫ້ ຄະ ນະ ປະ ທ້ວງ, ຂ່າວ ວ່າ
ຄ-ປ-ສ ໄດ້ເດີນທາງອອກຈາກວຽງຈັນແລ້ວກະວ່າຈະມາ
ເຖິງທ່າແຂກແລະໜອງບົກໃນໄວໆນີ້, ມວນຊົນອັນໄພສານ
ພາກັນມິດຟັງຂ່າວຈົນບໍ່ມີໃຜປາກໃຜຕົງສຽງມິກກະໂລໄດ້

ກະຈ່າຍຂ່າວແຕ່ຕົ້ນຈົນປາຍ. ເມື່ອຮູ້ຂ່າວດີແນວນັ້ນ ສຽງໄຊໂບໄຮ່ຮ້ອງກໍດັງຟົດຂຶ້ນ, ຊາວບ້ານຊາວເມືອງໃພງກໍອຸ່ນໃຈຂຶ້ນມາຮຸ່ນໆ ເພາະວ່າໃນເວລາບໍ່ນານ ຄ-ປ-ສ ຈະລົງມາຮອດ ແລະ ການຕໍ່ສູ້ກໍຈະປຸດຕິລົງຢ່າງມີໄຊ.

x x

x

ຕອນແລງຂອງມື້ຫນຶ່ງ (*) ຕາເວັນໃກ້ຈະລັບຂອບຟ້າແລ້ວ, ແດດບານແລງໄດ້ສົ່ງແສງທອງເຮືອເຮືອງລົງມາເປັນສີເຫລືອງແອ່ມແຕ່ມ, ຍາມນັ້ນຊາວເມືອງເຊບັງໄຟ ພວມສົນລະວົນນຳວຽກຢ້າວການເຮືອນ ແຕ່ງຢູ່ຄົວກິນເກືອເປັດເກືອໄກ່, ພາກສ່ວນຄ້າຂາຍ ກໍກຽມເຄື່ອງ ຊຸກລ້ເຂົ້າເດີນໂຮງການເມືອງ (**) ແລະ ພວກນ້ອງນ້ອຍນັກຮຽນຈຸຫ້າຈຸຫົກຫາກໍໄປແຜ່ເຂົ້ານຳຊາວບ້ານກັບມາເວລານັ້ນ ຄ-ປ-ສ ໄດ້ເດີນທາງມາຮອດຢ່າງບັງເອີນ. ຫລັງຈາກລົດພິເສດຂອງຕຳຫລວດເຂົ້າຈອດຢູ່ໃກ້ປະຕູໂຂງ, ບັງເອີນສຽງກອງສັກສິດ (ກອງຫນາກແຄ້ວງ) ໄດ້ດັງຂຶ້ນສາມຮູດ ເພື່ອປ່າວເຕືອນວ່າ ເຫດຮ້າຍໄດ້ເກີດຂຶ້ນແລ້ວ, ຢູ່ທີ່ບ້ານ

(*) ໃນວັນທີ 18.2.1975, ນີ້ ຄ.ປ.ສ ລົງໄປຮອດຫນອງບົກ.

(**) ເມື່ອຮອດຕອນກາງຄືນມາ ພໍ່ຄ້າຊາວຂາຍ ເອົາສິນເຄື່ອງ ສິນຂອງເຂົ້າໄປຂາຍຕາມຮ້ານເພື່ອນຕັ້ງງານບຸນຕ່າງໆ.

ຫນອງບົກເມື່ອໄດ້ຍິນສຽງສັບຍາບຫນາກຫົວໃຈຂອງຊາວເມືອງນັບເປັນພັນເປັນຫມື່ນກໍຕຳເຂົ້າຕຶກໆ ແລະ ຮ້ອນວູ່ງປານໄຟເຜົາ ເຂົາເຈົ້າຟ້າວຖີ້ມກະໂລ່ງເກືອໄກ່ອອກຈາກມື, ຟ້າວປົດຫາບນ້ຳອອກຈາກບ່າ, ມອດໄຟປູ່ໃນເຕົາທີ່ພວມຫນື້ງເຂົ້າຕົ້ມແກງ ແລ້ວຄວາໃສ່ຫອກໃສ່ງ້າວ, ຈັບເອົາຫນ້າຫນ້ອງປືນເພີງແລ້ວ ຟ້າວຟັ່ງຫລັ່ງໄຫລເຂົ້າສູ່ໂຮງການເມືອງ, ບາມນັ້ນ ສຽງຄົນເອີ້ນຫາຜົວ ຫາເມຍ, ເອີ້ນຫາພໍ່ແມ່ບາດມິດ ແລະ ລູກເຕົ້າສົມໃສ່ສຽງສັດບ້ານແຕກຕື່ນຈົນເມືອງນັ້ນໄປທົ່ວປ່າແລະທ້ອງທົ່ງນາ. ຄົນຢູ່ບ້ານຫ່າງໄກກໍສືບຕໍ່ເຕື່ອນກຳລັງເຂົ້າມາບໍ່ຂາດ, ຂະບວນລົດແທັກຊີ, ລົດໂດຍສານ, ລົດຈັກ ແລະ ລົດສ່ວນຕົວຂົນເອົາຄົນໄປຈອດໄວ້ຈົນອັ່ງຖະຫນົນ (***) ບໍ່ຮອດ ໑໐ ນາທີ ຜູ້ຄົນເປັນຈຳນວນພັນໆໄດ້ຢືນຈົ່ງທ່າປູ່ເດີນຫຍ້າວ້ອນຄວາມລະມັດລະວັງ, ເວລານັ້ນສຽງມິກກະໂລໄດ້ດັງຂື້ນ:

– ອາໂລ ! ອາໂລ ! ພີ່ນ້ອງທຸກຄົນກຽມຕົວສູ້ຮົບ, ປະຈຸບັນມີຂ່າວ ຄ-ປ-ສ ລົງມາຮອດເມືອງເຮົາແລ້ວ ແຕ່ວ່າຕ້ອງສືບສວນເບິ່ງໃຫ້ຄັກ, ມັນແມ່ນ ຄ-ປ-ສ ປອມ ຫລື

(***) ສອງສາມມື້ລ່ວງວ່າ ອ.ຟ.ສຊີວີງມາຮອດທົ່ງ "ໜອງເງົາ", ພາກັນພົກເຂົ້າປ່າພໍອັນເປັນໂອກາດໃຫ້ຂຶ້ນຂອງດາວງຸຊສົມ.

ຄ-ປ-ສ ແທ້; ຄັນແມ່ນ ຄ-ປ-ສ ປອມໃຫ້ຈັດການດ່ວນ. ຖ້າແມ່ນ ຄ-ປ-ສ ແທ້ໃຫ້ເຊີນພວກເພິ່ນເຂົ້າມາ ແລະ ຕ້ອນຮັບຢ່າງສົມກຽດ...

ສຽງນິກກະໂລກະຈາຍຊຸດທຳອິດປຸດຕິລົງ ກຳລັງມະ

ຫາຊົນທີ່ຈັບອາວຸດຫອກ, ງ້າວ, ປືນລ່າເນື້ອ ຫນ້າຫນ້ອງ ກ້ອງສືດນ້ຳເຄີນັ້ນເປັນຫມື່ນໆ ດວງໄດ້ຊ້ອງໆອອກມາໃສ່ ຄ-ປ-ສ ຢ່າງເປັນຕາຢ້ານ, ບໍ່ຮູ້ວ່າເມື່ອໃດອາວຸດເຫລົ່າ ນັ້ນ ຈະພຸ່ງເຂົ້າມາໃສ່ຕຳເອິກຕຳອາງ, ຜູ້ຄົນທີ່ຢູ່ໃຈກາງ

ກໍໄດ້ອ້ອມລ້ອມເອົາຫີບສົບໄວ້ຫລາຍຊັ້ນ ເຫມືອນ ດັ່ງແມ່ເຜິ້ງຫວງຮັງ, ເຂົາຂັນອາສາຈະເຮັດທຸກສິ່ງທຸກຢ່າງເພື່ອບໍ່ໃຫ້ຫີບສົບຕົກຢູ່ໃນກຳມືຂອງຄົນຮ້າຍ.

ຫລັງຈາກຄົນຍາມ ຢູ່ປາກປະຕູໂຂງສືບສວນ ເປັນເວລານານ ແລະ ຮູ້ຄັກແນ່ແລ້ວ ໂຄສົກໄດ້ປະກາດ ໃຫ້ຄົນບະທາງອອກ ເຊີນພວກເພິ່ນເຂົ້າມາ, ຄ-ປ-ສ ຜ່ານປະຕູບ່າງເຂົ້າມາ ດ້ວຍບາດກ້າວຊ້າໆ, ເວລານັ້ນ ປາຍຫອກ, ປາຍງ້າວທີ່ເຫລື້ອມມາບໆມືບໆໄດ້ຖືກປົດລົງ ປ້າຍຄຳຂວັນຈຳນວນຫລວງຫລາຍໄດ້ຊູຂຶ້ນສູງກາຍຫົວ, ມວນຊົນອັ່ງຢູ່ສອງຟາກທາງດີໃຈບໍ່ຈັກເຕັ້ນຈັກດິດ ແລະ ຮ້ອງໂຮຂຶ້ນຢ່າງຫນັກແຫນ້ນວ່າ:

- ສັນຕິພາບຈົ່ງຈະເລີນ!
- ລັດຖະບານປະສົມຊົ່ວຄາວຫມັ້ນຍືນ!
- ຄະນະມົນຕຣີປະສົມການເມືອງເຂັ້ມແຂງ!
- ພວກປະຕິການຈົ່ງຈິບຫາຍ!

ສຽງໂຊໂຍໂຮ່ຮ້ອງ ອັນກຶກກ້ອງ ໃນຍາມນັ້ນໄດ້ຟົດສະຫນັ່ນສັ່ນສະເທືອນ ໄປທົ່ວພື້ນແຜ່ນດິນອັນກວ້າງຂວາງທີ່ປາກນີອິດສະຫລະເສລີ, ມັນໄດ້ກາຍເປັນສັນຍາລັກອັນແນ່ນອນເພື່ອປ່າວເຕືອນໃຫ້ຊາວເມືອງເຊບັ້ງໄຟແຕ່ເຫນືອຕະ

ຫລອດໄດ້ຮູ້ວ່າ ໄຊຊະນະໄດ້ຕົກຢູ່ໃນກຳມືຂອງຊາວຜູ້ອອກແຮງງານແລ້ວ, ການຕໍ່ສູ້ໃກ້ຈະສິ້ງສຸດລົງແລ້ວ, ຊາວເມືອງຈະໄດ້ ມີຊີວິດໃຫມ່ ແລະ ຣົມເຢັນເປັນສຸກຕະຫລອດການະນານ...

ເມື່ອ ຄ-ປ-ສ ເຂົ້າໄປຮອດທີ່ພັກແລະ ກົ້ມຫົວໄຫວ້ອາໄລແກ່ດວງວິນຍານ ຂອງຜູ້ເສັຍຊີວິດແລ້ວ ຄະນະປະທ້ວງໄດ້ເລົ່າເລື່ອງລາຍໃຫ້ພວກເພິ່ນຟັງແຕ່ຕົ້ນຈົນປາຍ, ຈາກນັ້ນໂຄສົກກໍໄດ້ປະກາດ ໃຫ້ຊາວເມືອງບະອອກເປັນຮູບວົງມົນ, ເຂົາເຈົ້າຫາມເອົາໂຕະນ້ອຍສອງສາມຫນ່ວຍມາຈຸໃສ່ກັນແລ້ວເຊີນ ຄ-ປ-ສ ແລະ ຄະນະປະທ້ວງເຂົ້າໄປນັ່ງເຈລະຈາກັນຢູ່ໃຈກາງ; ສ່ວນມວນຊົນອ້ອມລ້ອມຢູ່ຂ້າງນອກປ່າງຫນາແຫນ້ນການປຶກສາຫາລືໄດ້ເລີ່ມຕົ້ນ, ກ່ອນອື່ນຄະນະປະທ້ວງ ໄດ້ສະເຫນີ ຄວາມມຸ່ງມາດປາດຖະຫນາຂອງຊາວເມືອງເຊບັ້ງໄຟໃຫ້ພວກເພິ່ນຮູ້ເມື່ອສັງເກດເຫັນວ່າຂໍ້ສະເຫນີ ໔ ຂໍ້ ແລະ ຂໍ້ເພີ່ມເຕີມອີກ ໑ ຂໍ້ສົມເຫດສົມຜົນແລ້ວທ່ານ ແຈ້ງ ໄຊຍະວົງ (*) ກໍເຫັນດີເຫັນພ້ອມແຕ່ວ່າເວລານັ້ນພັນເອກລຸນ ສີສຸນົນ (**) ພັດຍົກມືຂຶ້ນມີຄວາມເຫັນວ່າ:

(*) ອ.ປ.ສ ຝ່າຍຂົບວນກຳລັງຮັກຊາດ.

(**) ອ.ປ.ສ ຝ່າຍວຽງຈັນ.

– ຕາມຂ້າພະເຈົ້ານີ້ ເຫັນວ່າບາງຂໍ້ຍັງບໍ່ທັນເໝາະສົມປານໃດຄືວ່າ "ສ້າງແຂວງຄຳມ່ວນໃຫ້ມີສັນຕິພາບແລະ ໃຫ້ປະຊາຊົນມີສິດເສລີພາບ" ນັ້ນກະດຽວວ່ານັບແຕ່ນີ້ມີສັນຍາ, ອະນຸສັນຍາ ຈັດຕັ້ງ... ມາຮອດດຽວນີ້ສົງຄາມຂ້າຟັນລັນແທງກັນກໍໄດ້ຢຸດຕິລົງແລ້ວ ໝາຍຄວາມວ່າບໍ່ມີເສິກມີເສືອກໍມີສັນຕິພາບລະຕິຊິເຮັດແນວໃດອີກ? ນັບຫານີ້ ຄວນສັງເກດນຳກັນ ໃຫ້ຄັກເບິ່ງ! ທ້າວກຸມພົນ (***) ຊົມຊື່ນແລ້ວເວົ້າວ່າ:

– ຕາມທັດສະນະຂອງຂ້ານ້ອຍ ແມ່ນເຫັນວ່າຖ້າມີສັນຕິພາບ, ເສລີພາບແບບຊູມນີ້ບໍ່ອາດມີໃຜຈະດຳລົງຊີວິດຢູ່ໄດ້ ເພາະວ່າອຳນາດອິດທິພົນເຖື່ອນຍັງມີຢູ່. ການກົດຂີ່ຂູດຮີດ, ການຂົ່ມເພີ່ນບໍ່ໂດ ແບບຕີນຊ້າງຢຽບປາກນົກ, ການສໍ້ລາດບັງຫລວງແບບຜູ້ກິນງວພໍ່ຮາກຜູ້ປາກງວພໍ່ຕາຍຍັງມີຢູ່, ປະຊາຊົນບໍ່ມີສິດ, ບໍ່ມີຄວາມສະຫງົບອຸ່ນອຽນປະກອບອາຊີບແລ້ວຈະເອີ້ນວ່າສັນຕິພາບແບບໃດ? ຖ້າສົງຄາມຍັງຄືກປັ່ນປ່ວນວຸ້ນວາຍການລັກລອບກອບໂກຍ, ປຸ້ນຈີ້ການຂ້າກັນຍິງກັນຍັງມີຢູ່ແລ້ວ ສັນຕິພາບຈະຍືນຍົງຢູ່ໄດ້ບໍ່ຂະນ້ອຍ?...

(***) [illegible].

ຫລັງຈາກທ້າວກຸນພົນເວົ້າສຸດລົງ ນວນຊົນອັນໄພສານທີ່ຄອຍຟັງປູ່ນັ້ນ ກໍພ້ອມກັນຮ້ອງໂຮຂຶ້ນສະຫນັບສະຫນູນເພື່ອນໆ, ເມື່ອຄວາມເລິກລັບຖືກເຜີຍແຜອອກ ມາພັ້ນເອກລຸນ ສີສຸນິນ ຍັງເວົ້າຕໍ່ໄປວ່າ:

– ຂໍ້ຫນຶ່ງອີກທີ່ຂ້າພະເຈົ້າປາກເວົ້າ ເຊັ່ນວ່າໃຫ້ໃຊ້ຄ່າເສຍຫາຍແກ່ຜູ້ຖືກບາດເຈັບນັ້ນ, ດຽວນີ້ບາດແຜຂອງເຂົາກໍດີຫມົດແລ້ວ, ບັນຫານີ້ຂ້າພະເຈົ້າບໍ່ປາກໃຫ້ມາເວົ້າຕື່ມອີກ ແລະ ບັນຫາທີ່ສອງກ່ຽວກັບການໃຊ້ຄ່າສັດສາວາສິ່ງເສຍຫາຍ ຊຶ່ງພວກທ່ານວ່າແມ່ນທະຫານເປັນຜູ້ລັກເອົາໄປຂາຍຝັ່ງໄທນັ້ນອັນນີ້ອາດຈະບໍ່ມີຄວາມຈິງເພາະວ່າປະຈຸບັນນີ້ ບ້ານເມືອງເຮົາມີຜູ້ຮ້າຍຊາຍໂຈນ ລັກປຸ້ນຢູ່ບໍ່ຂາດ ຄັນຊິຖິ້ມໃສ່ທະຫານກໍບໍ່ຖືກ, ຄັນຊິເວົ້າເລື່ອງທະຫານນັ້ນແມ່ນທະຫານຂອງໃຜ? ນັ້ນແມ່ນລູກຫລານຂອງພໍ່ແມ່ປະຊາຊົນນີ້ແລ້ວ, ເຂົາເປັນທະຫານກໍເພື່ອປົກປັກຮັກສາບ້ານເມືອງ, ປະເທດໃດກໍຕ້ອງສ້າງກອງທະຫານຂຶ້ນ, ທະຫານປຽບດັ່ງເປັນຮົ້ວຂອງຊາດ, ຄັນບໍ່ມີທະຫານປົກປ້ອງຊາດ ພໍ່ແມ່ພີ່ນ້ອງຈະຢູ່ບໍ່ໄດ້. ດັ່ງນັ້ນຂ້າພະເຈົ້າປາກໃຫ້ໂຈະສາຊີດີກວ່າບໍ່?.

ທ່າມກາງບັນຍາກາດອັນງຽບສະຫງັດ, ບໍ່ມີຄົນປາກ

ຄົນດຶງ ບັງເອີນທ້າວສຳລີ (*) ໄດ້ລຸກຂຶ້ນຂໍອອກສຽງ:

– ເລື່ອງນີ້ ຖ້າບໍ່ໃຊ້ຄ່າເສຍຫາຍ ແມ່ນບໍ່ໄດ້ເດັດຂາດ, ຂ້ານ້ອຍນີ້ເອງ ເຄີຍໄດ້ຍິນກັບຫູ ໄດ້ດູກັບຕາມາຫລາຍຄັ້ງແລ້ວ, ຕົວການ (ທະຫານ) ຜູ້ລັກເອົາງົວຄວາຍອາດຈະເວົ້າໄດ້ຮອດຊື່, ຈື່ຮອດຫນ້າ ບາງຄົນ ຈົນຮູ້ຈັກຮອດບ້ານເກີດຂອງມັນພຸ້ນລະ! ພວກຂ້ານ້ອຍເຄີຍເຫັນເຂົາຈູງໄປເປັນຈຸເປັນຫມວດ, ເມື່ອພົບກັບເຈົ້າຂອງແລ້ວກໍເອົາປືນບີ່ງຂ້າມຫົວບາບຊູ່. ອັນນີ້ຊິເອີ້ນວ່າ ເປັນຮົ້ວປ້ອງກັນຊາດປູ່ບ່ອນໃດ? ຄັນຊິເວົ້າງ່າຍ ໆ ຄືພໍ່ເຖົ້າຊຽງຂຽນ ແລະ ທ້າວບົວທອງແມ່ນໃຜ ແລະ ຕາຍບ່ອນໃຜ? ຂ້ານ້ອຍຮູ້ດີວ່າທ່ານນັ້ນ ເຄີຍນອນສູບຝິ່ນ ກິນກັນຊາ, ເຄີຍຫລິ້ນແສ້ພານສາວສະເຫວີຍຄວາມສຸກ ປູ່ວຽງຈັນພຸ້ນ ບໍ່ໄດ້ລົງມາ ຢຽບດິນຫນອງບົກຈັກເທື່ອ ເຮັດແນວໃດ ຊິຕວງຖືກກວ່າ ພວກຂ້ານ້ອຍ... ຕາມຂ້ານ້ອຍຄິດວ່າ ຄັນມີທະຫານແບບນີ້ ແຫນງບໍ່ມີບັງດີ ປະໄວ້ໃຫ້ປະຊາຊົນ ຈັດຕັ້ງກັນຮັກສາຄວາມປອດໄພເອົາເອງ ກໍບັງດີກວ່າ ເພາະວ່າ ບໍ່ເປືອງເງິນຂອງລັດ ແລະ ປະຊາຊົນ ກໍຈະບໍ່ໄດ້ແບກຫນັກ ຄືຊູ່ມື້ນີ້...

ສຽງຕົບມືໄຊໂຍໂຮ່ຮ້ອງອັນພິລຶກຄຶກກືນຂອງມວນຊົນ

(*) ອະນະປະຫ້ອງ.

ໄດ້ສັ່ນສະເທືອນຂຶ້ນອີກຄັ້ງໜຶ່ງ, ພັນເອກລຸນ ສີສຸບິນໜ້າ ແດງວິດໆຂຶ້ນ ເໝືອນດັ່ງກ້ອນເຫລັກໜ້ງງຖືກໄຟເຜົາ, ເຂົາບັ່ງຄຶດຊຶງລຶງປູ່ບຶດໜຶ່ງ ແລ້ວຫາເຫດຜົນມາເວົ້າແກ້ ເກີ້ຕົນອີກວ່າ :

-- ກ່ງວກັບຂໍ້ສະເໜີ ຂອງພວກທ່ານນັ້ນ ຂ້າພະເຈົ້າ ເຫັນພ້ອມໝົດແລ້ວ, ຂ້າພະເຈົ້າພ້ອມແລ້ວຈະລົງລາຍ ເຊັນ, ກ່ອນຈະເຊັນຫຍໍ້ ເພື່ອລໍຖ້າ ລັດຖະບານ ລົງມາຮັບ ຮອງເອົານັ້ນ ຢາກໃຫ້ພວກທ່ານເອົາສົບຂອງຜູ້ເສຍຊີວິດ ນີ້ໄປສົ່ງສະການສາກ່ອນ, ທັງນີ້ຂ້າພະເຈົ້າຄິດເຫັນອີກ ເຫັນໃຈພໍ່ແມ່ພີ່ນ້ອງ ທີ່ໄດ້ຕໍ່ສູ້ມາ ເປັນເວລາບານແລ້ວ ແນ່ນອນຈະອິດເມື່ອຍເໜື່ອຍແຄນ, ບັນຫາສໍາຄັນແມ່ນ ປະປ້າວເຮືອນ, ປະຖິ້ມຖານບ້ານຊ່ອງ ແລະ ໄຮ່ນາ ຮົ້ວສວນ ບໍ່ມີຜູ້ເຝົ້າ, ຜູ້ຮ້າຍຊາຍໃຈບ ແຮ່ງຊິບຸທ່າງເຄື່ອນໄຫວລັກ ປຸ້ນ, ປ້ານພີ່ນ້ອງ ປະສົບກັບຄວາມເສຍຫາຍ ຫລາຍຂຶ້ນ ຕື່ມ ອັນນີ້ຂ້າພະເຈົ້າວ່າ ເຫັນຄວນແຫ້...

ຫລັງຈາກເວົ້າປຸດຕິລົງ, ຈານບັນຊົມ ຂັນ ຂໍອອກຄໍາ ເຫັນ :

– ພວກຂ້ານ້ອຍຢາກເວົ້າໃຫ້ທ່ານຮູ້ຈັກອີກເທື່ອໜຶ່ງ ວ່າ : ຄວາມມຸ່ງມາດປາດຖະໜາ ຂອງຊາວເມືອງເຊບັ້ງ

ໄຟແມ່ນປູ່ນຳຂໍ້ສະເໜີເຫລົ່ານີ້ແລ້ວ, ພວກຂ້ານ້ອຍສູ້ຊົນ ທົນທຸກມາເປັນເວລາເດືອນກວ່າ ກໍຈຸດປະສົງປາກໄດ້ຕາມ ເນື້ອໃນ ດຸະແຫລງການນີ້, ສ່ວນສິບ ຂອງຜູ້ເສຍຊີວິດນັ້ນ ພວກຂ້ານ້ອຍປາກຮັກສາໄວ້ໃຫ້ລັດຖະບານເບິ່ງນຳ ເພື່ອ ໃຫ້ເພີ່ນເຫັນ ຮ່ອງຮອຍຕໍ່ສູ້ ແລະ ໄວ້ເປັນສັກຂີພິຍານ, ຄວາມທຸກ, ຄວາມລຳບາກຍາກແຄ້ນພໍທົນປູ່ໄດ້, ເລື່ອງ ສັດສາວາສິ່ງ ແລະ ຊັບສິນບັດຕິກເຮ່ຍເສຍຫາຍ ບໍ່ຖືເປັນ ສິ່ງສຳຄັນດອກ ! ຄັນມີຄວາມຈ່າເປັນ ຊາວເມືອງເຊບັ້ງໄຟ ຂັບອາສາເສຍສະຫລະຫມົດທຸກຄົນກໍໄດ້...

ພັນເອກລຸນຖືກອັດປາກເລີຍນັ່ງເຫງົາຊັອກງັອກປູ່ບໍ່ມີ ທາງແກ້, ມວນຊຶນອັນຫນາແຫນ້ນ ພັດຮ້ອງໄຮຂຶ້ນ ສະ ຫນັບສະຫນູນ ຈົນພັດສະຫນັ່ນຫວັ່ນໄຫວ ຈາກນັ້ນທ່ານ ແຈ້ງໄຊຍະວົງໄດ້ກ່າວວ່າ :

– ຂ້າພະເຈົ້າເຫັນວ່າສົມຄວນ ລົງລາຍເຊັນນຳກັນ ສາ! ດຽວນີ້ຟ້າກໍມືດແລ້ວ, ພໍ່ແມ່ພີ່ນ້ອງຜູ້ໃດກໍປະເຮືອນ ປະຊານ ແລະ ປາກກິນເຂົ້າກິນແລງ, ສ່ວນຂໍ້ສະເໜີນັ້ນ ມີເຫດມີຜົນຄົບຖ້ວນແລ້ວຕະຫລອດຮອດລັດຖະບານກໍໄດ້ ສຶກສາເບິ່ງວ່າບໍ່ມີຫຍັງຜິດກັບສັນຍາ, ອະນຸສັນຍາ...

ເມື່ອທ່ານແຈ້ງເວົ້າສຸດ, ພັນເອກລຸນປິດໜວກອອກ

ວາງໄວ້ເທິງໂຕະ ເກົາຫົວບ້ອກງຶກມີສິ່ງຄັບຄາຍ, ເຂົາບັ້ງ ກົ້ມໜ້າຢູ່ດົນເຕີບ ແລ້ວຈຶ່ງຕັດສິນໃຈ. ພິທີລົງນາມໄດ້ ເລີ້ມຕົ້ນ, ລາຍຊື່ຂອງສາມຝ່າຍ ໄດ້ຖືກບັນທຶກໄວ້ໃນໜ້າ ເຈ້ຍ ເພື່ອເປັນຫລັກຖານພິຍານ, ຄ່ຳຄືນຂອງມື້ນັ້ນຫລັງ ຈາກກິນແລງແລ້ວ ຊາວເມືອງເຊບັ້ງໄຟ ແຕ່ເໜືອຕະ ຫລອດໃຕ້ໄດ້ຫລັ່ງໄຫລເຂົ້າສູ່ໂຮງການເມືອງອີກຄັ້ງໜຶ່ງ. ເຂົາເຈົ້າພາກັນໄຕ້ຕະກຽງ ແລະ ຈູດທູບທຽນຂຶ້ນແຈ້ງສະ ຫວ່າງ ເໝືອນດັ່ງກາງເວັນແລ້ວ ວົງດົນຕີກໍເລີ້ມເປີດສາກ ຊາຍໜຸ່ມ ນິງໜຸ່ມຕະຫລອດຮອດຜູ້ເຖົ້າ ຜູ້ແກ່ພາກັນ ມ່ວນຊື່ນຂັບລຳ ແລະ ຟ້ອນສະຫລອງໄຊຢ່າງຄຶກຄື້ນ.

ຕໍ່ມາຮອດວັນທີ ໒໑ ກຸມພາ ໑໙໗໕, ເຮືອບິນເອເລ ກົບສີຂຽວ ພິເສດລຳໜຶ່ງ ໄດ້ປະກົດຕົວ ຢູ່ເທິງທ້ອງຟ້າ ເມືອງເຊບັ້ງໄຟຢ່າງບັງເອີນ,ສຽງນິກກະໂລຂອງໂຄສົກໄດ້ ປ່າວເຕືອນໃຫ້ຮູ້ວ່າ ຄະນະຜູ້ຕາງໜ້າຂອງລັດຖະບານໄດ້ ເດີນທາງມາຮອດແລ້ວ, ມວນຊົນຢູ່ບ້ານຕ່າງໆ ພາກັນດີ ຄ້ອງຕີກອງ ອອກມາຄອຍຢູ່ເດີ່ນ, ສຽງຮ້ອງໂຮຊົມເຊີຍໄຊ ຊະນະ ຈົນກ້ອງຟ້າ ສະເທືອນດິນ, ຍາມນັ້ນ ເບິ່ງໃບໜ້າ ຂອງຊາວເມືອງເຊບັ້ງໄຟໃຜໆ ກໍມີແຕ່ຮອຍຍິ້ມແລະຊື່ນອົກ ຊື່ນໃຈບໍ່ມີແນວປຽບ, ຄົນຫລັ່ງໄຫລອອກມາອັ່ງອໍ ຈົນລົ້ນ

ເດີນຫຍ້າ, ເຂົາພາກັນຊູປ້າຍຄຳຂວັນຈຳນວນ ຫມື່ນໆ ແຜ່ນຂຶ້ນສູງໆທັງເຕັ້ນທັງດີດ ແລະກັວດແກ່ວງຊໍ່ດອກໄມ້

ພາຍຫຼັງຜູ້ຕາງໜ້າ ລັດຖະບານປະສົມຊົ່ວຄາວ ລົງໄປຮັບຮອງຂໍ້ສະເໜີຂອງຊາວເມືອງແລ້ວ ບິນເສັ້ນທາງກັບຄືນເມືອງວຽງຈັນ ມວນຊົນພາກັນຫລັ່ງໄຫລອອກໄປສົ່ງແລະມອບຊໍ່ດອກໄມ້ຢູ່ຕໍ່ໜ້າເຮືອບິນເອເລກົບແຕ.

ໄຊໂບ, ນີ້ຝູງຜູ້ເຖົ້າຜົມຫງອກເປັນຈຸສິບ ຈຸຊາວຕີຄ້ອງຕີກອງຂຶ້ນແລ້ວພ້ອມກັນຟ້ອນພ້ອມກັນເຊີ້ງ ແລະພ້ອມກັນຫົວສະອຶກສະອ້ອນຈົນເຫື້ອຍ້ອຍເຫື້ອຍັ້ງ.

ທ່າມກາງສຽງໄຊໂຍໂຮ່ຮ້ອງອັນກຶກກ້ອງຂອງມວນຊົນ, ຈານນິນ, ແມ່ບຸນ, ສຳລີ, ກຸມພົນ ແລະ ຜູ້ອື່ນໆ ໃນຄະນະປະ

ຫຼັງຈາກໄຊຊະນະຕົກມາຢູ່ກຳມືຂອງປະຊາຊົນແລ້ວ ຊາວເມືອງເຊບັ້ງໄຟກໍພາກັນຫາມເອົາສົບຜູ້ເສຍຊີວິດໄປສົ່ງສະການ.

ທ້ວງໄດ້ຍ່າງອອກໄປຢືນຢູ່ແປະຮົ້ວແຄມຖະໜົນ ເພື່ອສັງເກດເບິ່ງບົນເອເລກົບຈະລົງສູ່ເດີ່ນ, ເວລານັ້ນເພິ່ນຢືນຄ້ຳແອວ ແລະປົດຫມວກໃບອອກມາວີວາບໆຢູ່ປ່າງສະຫງ່າ

ຜ່າເພີຍ, ມື້ນີ້ເພິນຈຶງເຫັນວ່າໄມ້ແຕ່ລະອັນ ແລະ ຫລັກຮົ້ວແຕ່ລະລຳທີ່ຝັງດິນໄວ້ເປັນກຳແພງ ປ້ອງກັນເທະຫານນັ້ນ ຈົນວ່າປົງຫນໍ່ຈໍ່ໃບຂຽວຂຶ້ນ, ນົກນ້ອຍສອງຕົວເຕັ້ນໄຕ່ໄປມາເປັນຫນ້າອອນຊອນ, ນັບແຕ່ນັດນີ້ເປັນຕົ້ນໄປຊາວເມືອງເຊບັ້ງໄຟຈະເລີ່ມມີຊີວິດໃຫມ່ແລ້ວ ຈາວນົນປ້ອນມື



ກ່ອນຈະເປົາສົບຜູ້ເສຍຊີວິດທີ່ປ່າຊ້າ ຊາວເມືອງພາກັນຄອຍຟັງການອ່ານປະຫວັດເສຍກ່ອນເພື່ອລະນຶກເຖິງດວງວິນຍານຂອງພວກເພິ່ນ ຢ່າງອາໄລອາວອນ.

ຂຶ້ນມານັບມືເບິ່ງໄລ່ແຕ່ມື້ລຸກຂຶ້ນຕໍ່ສູ້ຈົນຮອດມື້ລັດຖະ ບານລົງມາ ເປັນເວລາຫນຶ່ງເດືອນປາຍສິບເຈັດມື້ ໝາຍວ່າມີ ໔໗ ມື້ ໔໗ ຄືນ.

ບັນທຶກທີ່ຍັງເຫຼືອໄວ້

«ແສງແດດອ່ອນ ຄ່ອຍເຮື່ອລົງມາ ອາບຫນ້າບ້ານ ຫນອງບົກໃນຕອນງາຍ, ປາດນ້ຳຄ້າງກ້ານພ້າວແຕ່ຄືນ ຂ້ອນແຈ້ງສືບຕໍ່ລົ່ນລົງຊະໆ ບໍ່ຂາດສາຍ. ຂ້ອຍພາຍກະ ເປົານ້ອຍຫນ່ວຍຫນຶ່ງເລາະບ້ານ ຕັ້ງແຕ່ແຄມນາຮອດ ກາງເມືອງຈົນເມື່ອຍຍັງບໍ່ເຫັນຄົນຍ່າງຜ່ານຫນ້າ; ພາບປູ່ ອ້ອມຂ້າງຂ້ອຍນັ້ນ ສະຫງົບງຽບ ຄ້າຍກັບວ່າເປັນບ້ານ ຮ້າງເມືອງເຮື້ອ ໄດ້ຍິນແຕ່ສຽງໄກ່ຕັອກຄູ່ຫນຶ່ງ ຮ້ອງສົ່ງສຽງ ມາຈາກຖະຫນົນສາຍຫລັງບ້ານທີ່ໂຮຍປູໄປດ້ວຍກີບດອກ ຈຳປາ. ເປັນຫຍັງ ຈຶ່ງເປົ່າປ່ຽວດຽວດາຍແນວນີ້ນໍ! ອາດ ຈະເປັນບຳ ມາເຖິງຫນອງບົກ ສວຍເກີນໄປບໍ ຊາວບ້ານ ເຂົາພາກັນ ອອກສູ່ພື້ນຖານການຜະລິດ ຫມົດແລ້ວ...

ຂ້ອຍປົງກະເປົາລົງດິນແລ້ວນັ່ງເປະລົງໃສ່ເຫງົ້າສານ

ສາຂ້າງຄືວລິດແຄມທາງປ່າງວັ່ງເວ ບັງເອີນມີສາວນ້ອຍສອງຄົນ ຫາມກະບຸງຫມາກບັດ ຍ່າງມາທາງຫົວບ້ານ, ຫລຽວເບິ່ງຫມາກບັດຫນໍ້ເຕັມກະບຸງຈິນສວດ ເຮັດໃຫ້ໄມ້ຄານ ກ່ອງກາງເນື່ອດງ ຄືຊິຫັກ, ໂດຍບໍ່ປ່ອຍໃຫ້ໂອກາດເສຍໄປຂ້ອຍຟ້າວເອີ້ນໄປໃສ່:

– ເຮີຍ! ນ້ອງສາວ! ຂໍຖາມແດ່... ໂຮງຫມໍເມືອງປູ່ໃສເນາະ?

ແທນທີ່ຈະໄດ້ຮັບຄຳຕອບງ່າຍໆ ປ່າງຂ້ອຍໄດ້ກະຕວງແຕ່ແລ້ວເຂົາພັດສົ່ງຄຳຖາມຄືນມາຫາຂ້ອຍອີກ:

– ຂໍໂທດ, ອ້າຍແມ່ນໃຜເກາະ? ມາແຕ່ໃສ? ປາກພົບໃຜ? ມີຫນັງສືເດີນທາງບໍ?

– ໂທ! ເຂົາເປັນກອງຫລອນຫມົດບ້ານນີ້ຫວະ? ຂ້ອຍຄິດ ແຕ່ເພື່ອຄວາມ ກະຈ່າງແຈ້ງ ຂ້ອຍຕ້ອງເຮັດຕາມຫລັກການ, ພາຍຫລັງນາງສາວຜູ້ແກ້ມແດງ ອິງຕິງນັ້ນອ່ານໃບເດີນທາງສຸດແລ້ວນາງທັງເວົ້າທັງຊີ້ມືໄປທາງທິດໃຕ້:

– ຫລັງປູ່ຕໍ່ຫນ້າ ມີຕົ້ນດອກຈຳປາຫັ້ນເດີ! ເອື້ອຍເພີ່ນຈິດກໍປູ່ຫັ້ນລະ! ນີ້ ນີ້ ເພີ່ນຖືກຍາມຄົນເຈັບ...

– ລາໄປກ່ອນ!

– ຂໍຂອບໃຈເດີ !

ສາວນ້ອຍຄົນນັ້ນຍົກໄມ້ຄັນຫາມຂຶ້ນໃສ່ບ່າ ພາກັນຫົວອີກໆຂຶ້ນແລ້ວສືບຕໍ່ລົມກັນອຸ່ນອື່ມ ຍ່າງລ້ຽວໄປສູ່ເສັ້ນທາງນ້ອຍໃກ້ໂຮງຮຽນມັດທະຍົມ.

ພໍແຕ່ປວງຕີນກ້າວຂຶ້ນຂັ້ນໄດ ຂັ້ນທີສອງ, ບັງເອີນມີສຽງຂອງແມ່ຍິງຄົນຫນຶ່ງ ຈວາດມາຈາກຫ້ອງເຮືອນທາງໃນຢ່າງກະຕຸກເສັ້ນ.

– ຕາຍ !... ນ້ອງມານີ້ໃດ ?

ຂ້ອຍບໍ່ທັນຕອບ, ເອື້ອຍເພີນຈິດ ຟ້າວແລ່ນອອກມາເດ່ມືລົງຈັບແຂນຂວາ ຂອງຂ້ອຍ ດຶງຂຶ້ນຫົວຂັ້ນໄດ ແລ້ວສອງເອື້ອຍນ້ອງພວກຂ້ອຍ ພ້ອມກັນຫລີບເຂົ້າໄປໃນຫ້ອງຮັບແຂກ. ຢູ່ໃນຕຶກເກົ່າແກ່ຫລັງນັ້ນ ຢູ່ເບື້ອງຫລັງຂ້ອຍແມ່ນຫ້ອງນອນສຳຫລັບນາງແພດ ແລະ ອີກສົ້ນຫນຶ່ງທາງໃຕ້ ຖັດຈາກຫ້ອງຮັບແຂກ ມີສາມສີ່ຫ້ອງເປັນບ່ອນພະຍາບານຄົນເຈັບ ຊຶ່ງເວລາຂ້ອຍຍ່າງຜ່ານມາຍັງເຫັນຄົນເຈັບຊາວໄຮ່ຊາວນາ ທັງຍິງທັງຊາຍ ແລະ ເດັກນ້ອຍນອນເຕັມຢູ່. ຫລັງຈາກປົດກະເປົາອອກຈາກບ່າໃຫ້ຂ້ອຍແລ້ວເອື້ອຍເພີນຈິດກໍຟ້າວໄປລາກເອົາເກົ້າອີ້ຫນ່ວຍຫນຶ່ງແລະ ຟ້າວໄປຍົກຈອກນ້ຳສອງຫນ່ວຍມາຕັ້ງໄວ້ເທິງໂຕະ

ໃຫ້ຂ້ອຍ. ເພິ່ນເຮັດຄືວ່າຂ້ອຍເປັນແຂກທີ່ຫາບ້ານບໍ່ຖືມາ ຈາກແດນໄກ. ຂ້ອຍເກືອບຈະເວົ້າວ່າ:

"ເອື້ອຍຢ່າກັງວົນ"

– ດື່ມນ້ຳແມ້ນ້ອງ!

ສຽງເວົ້າຂອງເພິ່ນສັ່ນສາຍ ແລະ ອາລົມຜິດປົກກະຕິ. ເຂົາຫລຽວເບິ່ງຂ້ອຍຕັ້ງແຕ່ຫົວສຸດຕີນ, ເວລານັ້ນຂ້ອຍຕົກສະເງີ້ປື້ນແຂງກະດ້າງທັງໂຕ ໃນເນື້ອແນມເຫັນ ດວງຕາທັງຄູ່ຂອງລາວມີແວວເສົ້າໂສກ, ຄວາມທຸກໂສກທີ່ລາວລະບາຍອອກມາ ສູ່ດວງໃຈຂອງຂ້ອຍ ແຕ່ລະວິນາທີນັ້ນລ້ວນແຕ່ໄດ້ບັນຈຸເຕັມໄປດ້ວຍຄວາມຂົມຂື່ນ ແລະ ຊອກຊ້ຳລະກຳໃຈບໍ່ມີສິ່ງໃດຈະມາປຽບປານໄດ້. ເວລານັ້ນລາວຈົນເວົ້າຫຍັງກໍບໍ່ອອກຍ້ອນເຫັນຫນ້າຂ້ອຍຢ່າງບັງເອີນ ແຕ່ຮ່ວງນຶກຂອງລາວເໝືອນກັບວ່າ ປາກຮ້ອງຂໍຄວາມກະລຸນາຈາກຂ້ອຍ, ຂໍໃຫ້ຂ້ອຍບົກໂທດໃຫ້ອະໄພ ແລະ ເຫັນອົກ ເຫັນໃຈຈາກເລື່ອງໃດ ເລື່ອງຫນຶ່ງໃນຊີວິດທີ່ໄດ້ລ່ວງກາຍມາ...

– ນ້ອງ... ມື້ນີ້ນ້ອງກິນເຂົ້າ... ນຳ... ເອື້ອຍ... ກ່ອນ, ເວົ້າບໍ່ທັນສຸດ ເອື້ອຍເພິ່ນຈິດທີ່ຍັງນັ່ງຢູ່ຂອບຕຽງຟ້າວກົ້ມຫນ້າລົງໃສ່ຕັກ, ສຽງສະອື້ນໄຫ້ຄ່ອຍແຮງຂຶ້ນ, ນ້ຳຕາແຫ່ງ

ຄວາມໂກດແຄ້ນ ເລີມຕົ້ນຊຶມອອກມາຈາກປໍ່ຕາ ໂຮມກັນ ເຂົ້າເປັນເມັດນ້ອຍໆແລ້ວປາດລົງໃສ່ພວງເອິກ ຈົນເຮັດໃຫ້ ເສື້ອສີນອນໄຂ່ເປັນຮອຍຊ້ຳ; ນ້ຳຕາທີ່ອາໄລອາວອນແຕ່ລະ ປົດຫລົ່ນລົງຢູ່ຕໍ່ຫນ້າຂ້ອຍນັ້ນ ໄດ້ເຮັດໃຫ້ຂ້ອຍບໍ່ສາມາດ ຈະນັ່ງຢູ່ ຢ່າງມີຄວາມສຸກໄດ້ອີກແລ້ວ, ຂ້ອຍຫລຽວເບິ່ງ ຫນ້າເພິ່ນຫລາຍເທື່ອຄຶດປາກຫ້າມ, ປາກເວົ້າ... ປາກ ເວົ້າຫລາຍສິ່ງຫລາຍຢ່າງໃຫ້ເພິ່ນເຂົ້າໃຈ ແລະເຊົາສະອື້ນ ໄຫ້. ແຕ່ແລ້ວພາບເບື້ອງຫລັງມັນໄດ້ແລ່ນເຂົ້າມາຕຳຫົວ ໃຈຂອງຂ້ອຍຢ່າງກະທັນຫັນ. ຂ້ອຍກໍເວົ້າບໍ່ອອກມີແຕ່ນັ່ງ ນຶກຄືນຊຶມສິ່ງສາຍຕາລອດປ່ອງປ້ຽມຫົວນອນ ໄປສູ່ຫນ້າ ບ້ານ. ຢູ່ຫນ້າບ້ານເວລານັ້ນຍັງເປົ່າແປນ ແລະ ມິດງຽບບໍ່ ມີຫຍັງຕິ່ງ, ດົນໆເກສອນດອກຝາງແດງ ຊຸຫລົ່ນປົວລົງ ເປັນສາຍເມື່ອມີລົມອ່ອນມາພານຕ້ອງ, ຝູງນົກນ້ອຍຮ້ອງ ຢູ່ປາຍສູງ ສິ່ງສຽງອັນເສາະໃສ ລອດເຂົ້າມາເຈາະເຈ້ຍຫູ ຂອງຂ້ອຍເປັນບາງຄັ້ງຄາວ, ຍາມນັ້ນຄ້າຍກັບວ່າ ມີແຕ່ ຂ້ອຍພຽງຄົນດຽວ ທີ່ມີຊີວິດຢູ່ບົນຫນ່ວຍໂລກດວງຂຽວນີ້, ຂ້ອຍຫລຽວໄປເບິ່ງເອື້ອຍເພິ່ນຈິດອີກເທື່ອຫນຶ່ງ "ເອື້ອຍ..." ເພິ່ນຄ່ອຍໆ ເງີຍຫນ້າຂຶ້ນຈົກເອົາແພມົນຢູ່ກະຕ່າມາຈ້າ ແກ້ມທີ່ມີເມັດນ້ຳຕາ ແລ້ວຜູດລຸກຂຶ້ນຍ່າງເມືອທາງເຮືອນ

ຄິວ.

... ພັກຜ່ອນຢູ່ຕຽງພຸ້ນຖ້າເອື້ອຍເນີ !

ຂ້ອຍຈາກເອື້ອຍເພິນຈົດໄປເປັນເວລານານ, ມື້ນີ້ເພິນເກືອບຈື່ຂ້ອຍບໍ່ໄດ້ ແທບທີ່ຂ້ອຍຈະມີຄວາມສຸກເມືອມີໂອກາດໄດ້ມາພົບຫນ້າເພິນ ແຕ່ກົງກັນຂ້າມຂ້ອຍບໍ່ສາມາດຈະນັ່ງຢູ່ຢ່າງອຸ່ນອຽນໄດ້ອີກ, ຂ້ອຍຮູ້ສຶກມຸດມິດ ໃນດວງໃຈໃນເມື່ອນີ້ສິ່ງເສົ້າໂສກຂອງເຂົາ ກໍາເນີດຂຶ້ນມາ ປະທະກັບຂ້ອຍ, ຄວາມເສົ້າ ສະຫລົດໃຈເຫລົ່ານັ້ນ ເຖິງລາວບໍ່ເວົ້າອອກມາພຽງຄໍາດຽວ ແຕ່ຂ້ອຍກໍພໍເດົາຮູ້ສ່ວນເລິກຂອງຫົວໃຈຂອງລາວ ຢ່າງລະອຽດໄດ້ ເພາະແມ່ນຂ້ອຍ ນີ້ເອງເປັນຜູ້ຕິດພັນກັບເລື່ອງຫນຶ່ງໃນອະດີດ ຊຶ່ງເລື່ອງນັ້ນມັນໄດ້ລ່ວງລັບໄປກ່ອນຫນ້ານີ້ຫລາຍປີແລ້ວ.

ຂ້ອຍຍັບລົງໄປນັ່ງ ຢູ່ຕຽງນອນ, ເມື່ອໄດ້ປື້ມບັນທຶກນ້ອຍສີຂຽວຫົວຫນຶ່ງອອກມາ, ພາບປະທັບໃຈຂອງຂ້ອຍເທື່ອທໍາອິດຄືຕົວຫນັງສືໃຫຍ່ ຂຽນໄວ້ຢ່າງຕ່າງປະຫລາດວ່າ: "ຊີວິດ... ພິດສະໄຫມໄຊຍະກຸມມານ" ຮູບຖ່າຍເຖິງໂຕຂອງເຂົາຍັງຕິດໄວ້ກ້ອງຕົວອັກສອນຢ່າງແທນັ້ນ, "ໂຫເອີຍ! ດວງໃຈຂອງຂ້ອຍ..." ຂ້ອຍຫລົງອຸທານອອກມາຢູ່ໃນຫ້ອງພຽງຄົນດຽວຢ່າງລືມຕົວ; ໃນຫນ້າອັນຂາວນວນ

ຮູບໄຂ່ຂອງນາງ ຍັງສົ່ງຮອຍຍິ້ມອອກມາສູ່ໂລກເຫມືອນມະນຸດມີວິນຍານ, ດວງຕາທັງຄູ່ຍັງມີແວວປະກາຍແຫລມຄົມ ຢ່າງມີສະເຫນ່, ນວຍພົມອັນດົກຫນາ. ເປັນຄື້ນ ຄືຟອງທະເລຂອງນາງ ຍັງສວຍສະຫງ່າລົງຈຸບ່າໄຫລ່ ບໍ່ຕ່າງຫຍັງ ກັບມື້ສຸດທ້າຍ ທີ່ຂ້ອຍໄດ້ເຫັນ ແລະ ໄດ້ຈາກນາງ ໄປສູ່ມຸມໂລກແຫ່ງຫນຶ່ງທີ່ໄກແສນໄກ... ຂ້ອຍຄິດຄືນແຫນງລະແຄງໃຈແທ້ໆ ດັ່ງຄວາມຫວັງ ຫາກເປັນໄປແລ້ວ ມື້ນີ້ຂ້ອຍຈະມີຄວາມສຸກພຽງໃດນໍ! ມື້ນີ້ທ້ອງຟ້າເຂດເມືອງເຊບັ້ງໄຟມີສີຄາມປາສະຈາກເມກຫມອກ ແລະກໍເປັນມື້ທີ່ບ້ານເກີດເມືອງນອນ ໄດ້ຮັບການປົດປ່ອຍແລ້ວ. ຂ້ອຍຈະພ້ອມກັບເຂົາ ຄຽງຂ້າງກັບໄປຢາມ ພໍ່ ແມ່ ອ້າຍເອື້ອຍ ແລະ ຍາດມິດທຸກຄົນຢູ່ທາງບ້ານ. ພວກຂ້ອຍຈະຂໍສາລະພາບຄວາມຈິງຕໍ່ຜູ້ບັງເກີດເກົ້າ ແລະ ຜູ້ໃຫ້ກໍາເນີດແກ່ນາງ ແຕ່ແລ້ວຂ້ອຍຕ້ອງຕົກຢູ່ໃນມ່ານໂສກ ເພາະບໍ່ມີໂອກາດໄດ້ພົບນາງ. ນາງໄດ້... ຈາກຂ້ອຍໄປເສຍແລ້ວ.

ກ່ອນຫນ້ານີ້ເກືອບສີ່ປີ ຂ້ອຍໄດ້ເດີນທາງມາເຖິງດິນແດນທີ່ພິລະອາດຫານ ແລະ ລືນາມແຫ່ງນີ້. ຂ້ອຍບໍ່ນຶກບໍ່ຝັນວ່າຈະຮູ້ຈັກກັບນາງ. - ຈັກແມ່ນໂຊກ ຫລື ແມ່ນຊວຍ

ແນວໃດບຸ ຈຶງຮູ້ຈັກກັບນາງ, ນັບແຕ່ນີ້ສຳເຫລັດຫນ້າທີ່ ແລະ ສົ່ງລາຈາກກັບມາເຖິງມື້ນີ້ ຍັງບໍ່ທັນເຖິງເວລານັດພົບ ຂອງພວກຂ້ອຍເທື່ອ, ບໍ່ແມ່ນເປັນນຳຂ້ອຍມາຢ່າງບັງເອີນດອກ ຈຶງບໍ່ໄດ້ພົບນາງ ແຕ່ຫາກເປັນນຳເຄາະຮ້າຍ... ມື້ນີ້ຂ້ອຍໄດ້ພົບແຕ່ພໍ່ແມ່, ເອື້ອຍອ້າຍຂອງນາງ ແລະ ຊຸມຜູ້ເຖົ້າຜູ້ແກ່ໃນບ້ານມາຕ້ອນຮັບຂ້ອຍຢ່າງຄືນຫນ້າຄືນຕາ, ແຕ່ລະເທື່ອທີ່ເຂົາຖາມຂ່າວຄວາມສຸກທຸກຂອງຂ້ອຍ ລ້ວນແຕ່ໄດ້ສິ່ງຄຳອວຍພອນ ອັນປະເສີດ ໃຫ້ຂ້ອຍ ຊຶ່ງຄຳອວຍພອນນັ້ນມີທັງຮອຍຍິ້ມ ແລະ ມີທັງປາດນ້ຳຕາ...

ຂ້ອຍສືບຕໍ່ໄຂປຶ້ມ ເບິ່ງຫນ້າທີສອງ, ຮອຍນ້ຳເມິກ ສີແດງເລີ່ມຕົ້ນດ້ວຍຫົວຂໍ້ວ່າ, "ມື້ລຸງຊຽງຂຽນຖືກບິງ".

ອາຍຸຂອງຂ້ອຍພວມປ່ວາງເຂົ້າສູ່ປີທີ ໑໕, ມັນເປັນເທື່ອທຳອິດໃນຊີວິດຂອງຂ້ອຍ ທີ່ໄດ້ອອກສູ່ສະຫນາມຮົບທາງການເມືອງ, ຂ້ອຍໄດ້ເຂົ້າຮ່ວມຂະບວນປະທ້ວງເມືອງເຊບັ້ງໄຟ (ຫນອງບົກ) ເຄື່ອນທັບທາງໄກໄປສູ່ເມືອງທ່າແຂກ, ຈາກດອນຂຽວເຫນືອ, ເຖິງທ່າແຂກນັ້ນບໍ່ແມ່ນໃກ້ປານໃດ, ສາມສິບກວ່າຫລັກກິໂລແມັດ ພວກຂ້ອຍອາໄສການຍ່າງຄາດວ່າຕ້ອງກິນເວລາສອງມື້, ຂ້ອຍບໍ່ຮູ້ສຶກ

ວ່າມັນເມື່ອຍເລີຍ ເພາະຫລາຍຄົນມັນມ່ວນ, ໄດ້ຍິນແຕ່ສຽງແຄນ, ສຽງຮ້ອງໂຮ ຂອງພວກຜູ້ໃຫຍ່ ຊຶ່ງມີທັງປ້າຍຄຳຂວັນ ແລະ ທຸງຊາດວົງເດືອນ ປິວສະບັດ ໄປສຸດສາຍທາງ ໂທ! ຄົນນັບເປັນຮ້ອຍ ເປັນພັນຍ່າງບໍ່ກັນຈົນຄັບຫົນທາງ, ຂ້ອຍບໍ່ເຄີຍເຫັນປາງບຸນໃຫຍ່ແຫ່ງໃດ ຈະພືລຶກຄຶກຂຶ້ນຄືນີ້ ໃນຫລາຍໆປີທີ່ລ່ວງກາຍມາ ສຽງຊ່າລືວ່າບຸນທາດຫລວງຢູ່ວຽງຈັນ ມ່ວນທີ່ສຸດ ຄົນຫລາຍທີ່ສຸດແຕ່ຂ້ອຍບໍ່ເຄີຍໄປວຽງ, ຈັກວ່າບຸນທາດຫລວງນັ້ນຊິມ່ວນແບບນີ້ຫລືວ່າບໍ ? ຄົນຊິຫລາຍສໍ່ານີ້ຫລືບໍ່ ? ? ?.

ຂ້ອຍຄຶດກິນແໜງ ແລະ ເສຍດາຍເຫັ້ງຍັງອີກບໍ່ພໍເທົ່າໃດຊົ່ວໂມງກໍ່ຈະເຖິງປະຕູເຂົ້າເມືອງທ່າແຂກແລ້ວນ່າ! ຂ້ອຍແນ່ໃຈວ່າຕ້ອງໄດ້ພົບອ້າຍບົງ ແລະ ຜູ້ອື່ນໆທີ່ພວມເຮັດປະທ້ວງຢູ່ພະແນກໂຍທາ (ທາງໄປສະໜາມບິນ). ຄ່ຳນີ້ນີ້ລະ! ຕາມພວກໄທບ້ານວ່າສອງກຳລັງໄດ້ນັດພົບກັນ ແລະ ຈະພ້ອມກັນລຳວົງຢ່າງໃຫຍ່ຢູ່ກາງເດີ່ນຕໍ່ໜ້າໂຮງການ ເພື່ອສະຫລອງໄຊຊະນະ, ແຕ່ແລ້ວຢູ່ຕໍ່ໜ້າໄທບ້ານພັດເຕັມແຕ່ທະຫານ "ແມງເງົາ" (ທະຫານພາກສາມເນື່ອກ່ອນ) ຈັບປືນອັດທາງໄວ້, ຂ້ອຍບໍ່ຮູ້ຈັກຫຍັງ? ຈັກວ່າໄທບ້ານເຂົາຕໍ່ວ່າຕໍ່ຂານກັບແນວໃດ ກັບພວກທະ

ຫານ ປູ່ບໍ່ປູ່ໄດ້ຍິນແຕ່ສຽງປືນແຕກຂຶ້ນເປັນຮຸດຍາວໆ ຈົນດັບຫູນິ່ງໆ, ຂ້ອຍເອົານິ້ວມືສອງເບື້ອງ ຂຶ້ນມາອັດຫູໄດ້ຍິນແຕ່ສຽງໃຜບຸສັ່ງວ່າ: "ນອນລົງ", ຊິນອນດ້ວຍວິທີໃດ ? ປ່າຫຍ້າ ແລະ ດິນແດງເປື້ອນມະຫາເປື້ອນ, ຂ້ອຍເຫັນແມ່ບຸນບັ້ງຄຸເຂົ່າແລ້ວກົ້ມຫນ້າລົງຈົນຫນ້າຜາກຈຸດິນ, ຂ້ອຍກໍ່ເຮັດຕາມເພິ່ນເພາະການທະຫານເຂົາເວົ້າວ່າສູ້ຣົບຕ້ອງນອນເພື່ອຫລີກລູກປືນ ແລະ ລະເບີດ...

ຂ້ອຍປູ່ເຄິ່ງກາງ ຍາມນັ້ນບໍ່ແນມເຫັນຫຍັງອີກແລ້ວ, ປູ່ອ້ອມຂ້າງຂ້ອຍມີແຕ່ຄວັນລະເບີດ ແລະ ຂີ້ຝຸ່ນສີແດງຈົນມືດຄຶ້ນໄປທົ່ວປ່າ, ຂ້ອຍຮູ້ສຶກຫົວໃຈຝືດ ແລະ ພະຍາຍາມຄືບຄານໄປຫນ້າເລີຍກອດເອົາແຄ່ງໃຜກະບໍ່ຈັກ, ຂີ້ມູກນ້ຳຕາໄຫລອອກມາ, ໝາຍວ່າຂ້ອຍຕ້ອງໄຫ້,ໄຫ້ຂຶ້ນເພື່ອເຮັດຫຍັງ? ບໍ່ແມ່ນພິດໄຫ້ເພື່ອປ້ານຕາຍ, ບໍ່ແມ່ນໄຫ້ເພື່ອແຂ່ງຂັບສຽງລະເບີດ, ຄາວນັ້ນ ພິດບໍ່ຮູ້ຈັກຄວາມຕາຍ ເພາະບໍ່ມີໂອກາດຈະໄດ້ຄຶດເຖິງມັນ, ແຕ່ຫາກແມ່ນພິດໄຫ້ຍ້ອນສັງການຂອງລູກຜູ້ຍິງຕ່າງຫາກ, ຜູ້ຍິງຄືຂ້ອຍນັບແຕ່ມີ ຊີວິດໄຫຍ່ຂຶ້ນມາ ໄສຊີໄດ້ຍິນສຽງປືນສຽງລະເບີດຈັກເທື່ອ ? ໄສຊີໄດ້ຕົກທຸກໄດ້ຍາກ ຍາມຢູ່ໃນອ້ອມອົກ ຂອງ ພໍ່ ແມ່ ? ຂ້ອຍເປັນລູກສາວຫລ້າ, ພໍ່ແມ່ອ້າຍເອື້ອຍໃຜກໍ່ຮັກແພງ

ຖະນຸຖະຫນອມຂ້ອຍຄືດັ່ງດວງຕາ...

ນັບວ່າເປັນເວລາເຫິງນານພໍສົມຄວນ ສຽງປືນສຽງລະເບີດງຽບລົງ. ຂ້ອຍຫມູບຢູ່ກ້ອງກົກໄມ້ເປືອຍແຄມຖະຫນົນຫລວງຈົນເມື່ອຍ, ຄວາມມືດຂອງຄວັນຫມົ້ໄດ້ຄ່ອຍໆຈາງຫາຍຂຶ້ນເມື່ອທ້ອງຟ້າ, ຫລຽວເບິ່ງໄທບ້ານໄທເມືອງໃຜງກໍເຕັມແຕ່ຂີ້ຝຸ່ນຂີ້ດິນ ແລະ ໃບໄມ້ຖິ້ມແຕ່ຫົວຈົນຮອດຕີນ, ປູ່ເບື້ອງຫນ້າຂອງຂ້ອຍໄດ້ຍິນເຂົາດ່າທະຫານວ່າ "ພວກຊາດຊົ່ວ, ພວກໝາພານ, ພວກຂ້ອຍຂ້າ, ເປັນຫຍັງຈຶ່ງຂ້າຄົນຜູ້ບໍ່ມີຄວາມຜິດແລະບໍ່ມີອາວຸດ..." ຂ້ອຍຈຳໄດ້ດີສຽງນັ້ນເປັນສຽງເວົ້າຂອງອ້າຍສຳລີ, ແຕ່ວ່າຄຳເວົ້າ "ຂ້າຄົນ" ຂ້ອຍຕົກໃຈ "ປານ" ເຫມືອນມີມີດປາຍແຫລມມາສຽບເຂົ້າໃສ່ຫມາກຫົວໃຈຂອງຂ້ອຍ. ລຸງຊຽງຊຽນເສຍຊີວິດແລ້ວ, ອີກ ໑໐ ກວ່າຄົນຖືກບາດເຈັບສາຫັດ, ຟ້າເອີຍ! ເລືອດຂອງຄົນໄຫລອອກມາໃສ່ກາງຖະຫນົນ ຈົນເປັນບວກເປັນວັງ, ຂ້ອຍບໍ່ເຄີຍເຫັນ, ຂ້ອຍບໍ່ເຄີຍພົບເຫດຮ້າຍແບບນີ້ຈັກເທື່ອນັບແຕ່ກຳເນີດເປັນມະນຸດຂຶ້ນມາ. ຂ້ອຍຢູ່ແຕ່ໄກຍັງສາມາດຫລຽວເຫັນຮູລູກປືນ ຖືກລຸງຊຽງຊຽນຢູ່ຫົວນົມເບື້ອງຊ້າຍແລ້ວຊອດອອກບ່າໄຫລ່ ຈົນເສື້ອດຳນ້ຳນົນໂປດເປັນຮູ, ຊຸມຜູ້ເຖົ້າຜູ້ແກ່ຫລາຍຄົນຮ້ອງໄຫ້ຂຶ້ນບ່ອນຄວາມ

ແຄ້ນ, ຂ້ອຍຫ່ວງຫາດວງວິນຍານຂອງເພິ່ນປ່າງອາໄລອາວອນ, ຂ້ອຍອົດບໍ່ໄດ້ແລ້ວກໍໄຫ້ນຳ... ໃນເວລາ ໑໐ ນາທີຕໍ່ມາລົດຂົນທະຫານສາມຄັນຈາກທ່າແຂກ ກໍແລ່ນມາຮອດເຂົາປາຍກຳລັງອ້ອມໄທເມືອງ ແລະ ຕັນທາງໄວ້, ເຂົາໃຊ້ກະບີປາຍປືນບຸກເຂົ້າມາຂັບໄລ່ພວກຂ້ອຍ ໃຫ້ກັບຄືນເມືອບ້ານ.

ລະດູຫນາວຂອງຕົ້ນປີ (ປີ ໑໙໗໕) ດິນຟ້າອາກາດປູ່ເຂດເມືອງເຊບັ້ງໄຟກໍຫນາວເປັນພໍສົມຄວນ ຂ້ອຍຕ້ອງໄດ້ຕຸ້ມເສື້ອຄຸມຜືນໃຫຍ່ ຂອງອ້າຍ ເພື່ອປູ່ຮ່ວມຄົບງັນສົບຂອງລຸງຊຽງຂຽນ, ນັບແຕ່ມື້ນັ້ນມາເຖິງມື້ຂ້ອຍຕ້ອງຈົດຈຳໃນບັນທຶກຕອນທີສອງນີ້ ກິນເວລາ ໒໐ ມື້ແລ້ວ ທີ່ຂ້ອຍໄດ້ເຂົ້າຮ່ວມຂະບວນປະທ້ວງ ມາບຶດຫນັ້ນ ປູ່ກາງເດີນຫຍ້າໂຮງການເມືອງ, ທຸກໆ ມື້ຂ້ອຍພ້ອມກັບບັນດາເພື່ອນນັກຮຽນ ໄດ້ຊ່ວຍເຫລືອຂະບວນດັ່ງກ່າວ ຫລາຍສິ່ງ ຫລາຍປ່າງໂດຍສະເພາະແມ່ນຕັກນ້ຳ, ຄົວກິນ, ຫາຟືນ, ໄປສົ່ງຈົດຫມາຍ, ໄປຕຳເຂົ້າ, ຂໍແຜ່ເຂົ້າ ແລະ ອື່ນໆ... ເມື່ອຕອນກາງຄືນມາ ເດືອນມືດ ຈຳເປັນຕ້ອງໄດ້ດັງໄຟ ກອງໃຫຍ່ຂຶ້ນ (ຍ້ອນບໍ່ມີໄຟຟ້າ ຄືທ່າແຂກ) ປູ່ກາງເດີນອັນກວ້າງຂວາງທີ່ມີຮົ້ວ ຫນາມຫນາກຈັບອ້ອມ ແຕ່ທາງລົດ ໜ້າບ້ານ

ຈົນຈອດແຄມນານັ້ນ ເຕັມແຕ່ຄົນ, ບໍ່ຈັກເດັກນ້ອຍໄລ່ຫລິ້ນ ຫມາກລີ້ແຊວໆ, ບໍ່ຈັກພວກແມ່ຄ້າຊາວຂາຍ, ບໍ່ຈັກຊຸມ ຜູ້ເຖົ້າຜູ້ແກ່ ພາກັນໄປສາງແຫ ສານມອງ, ສານກະບຸງ ກະຕ່າ ແລະ ເລົ່າເລື່ອງໃອ້ລົມກັນໃນຕອນກາງຄືນ. ແຕ່ ສຳລັບຂ້ອຍພັດມັກຮ້ອງເພງ ແລະ ສະແດງລະຄອນ ແຕ່ ລະເທື່ອທີ່ຂ້ອຍຂຶ້ນເວທີ ໄດ້ຮັບຄວາມຍ້ອງຍໍຊົມເຊີຍຈາກ ຫມູ່ເພື່ອນ ແລະ ໄທບ້ານປ່າງກວ້າງຂວາງທີ່ສຸດ, ເຂົາ ວ່າຂ້ອຍເຮັດຄືຫລາຍ, ຮ້ອງເພງປະຕິວັດ ກໍມ່ວນຫລາຍ ວ່າຊັ້ນ, ແຕ່ຈັກວ່າເຂົາເວົ້າຄວາມຈິງບໍ ? ຫລືແມ່ນໃຫ້ກຳ ລັງໃຈຂ້ອຍຊື່ໆ. ສຳຫລັບຂ້ອຍແລ້ວ ແມ່ນສັງເກດຍາກ ເຕັມທີ ເພາະເບິ່ງໂຕເອງບໍ່ເຫັນ ຫມູ່ວ່າມ່ວນ ວ່າງາມ ກໍ ສືບຕໍ່ເຮັດໄປຊັ້ນລະ ! ຕາງສ້າງບັນຍາກາດແດ່.

ຂ້ອຍຢາກເວົ້າສະເພາະໃນມື້ດຽວຄືມື້ຫນຶ່ງ ຫລັງຈາກ ດວງ ຕາ ເວັນ ຫມົ່ນ ຫົວ ຂຶ້ນມາຈາກໂງ່ນເມກອັນຕຶບຫນາ ເບື້ອງຕາເວັນອອກແລ້ວ, ທ້ອງຟ້າຍາມ ຊ-ລ ໂມງເລີ້ມ ມີປ່ອງສີຄາມ ເປັນຈຸດເປັນຕອນ, ບັງເອີນ ປູ່ຂອບຟ້າ ທິດ ເຫນືອ ປະກົດມີເຮືອບິນເອເລກັບແຕລຳຫນຶ່ງບິນມຸ່ງຫນ້າ ເຂົ້າມາສູ່ດິນແດນອັນສັກກະລະບູຊາຂອງຂ້ອຍ ໄທບ້ານໄທ ເມືອງຫລາຍຄົນ ເອົາມືກັ້ງໂກບຄອຍຖ້າເບິ່ງເຮືອບິນ ຍາມ

ມັນຫຍັບເຂົ້າມາໃກ້. ມີບາງຄົນເວົ້າວ່າ ເຮືອບິນຂອງ ຄ.ປ.ສ. ໄດ໋ຫັ້ນ! ແມ່ນແລ້ວ! ແມ່ນແລ້ວ! ເຮືອບິນທະຫານ... ໄດ້ຍິນໝູ່ເວົ້າຫລາຍຂ້ອຍຄິດວ່າ "ບາງທີ..." ຊາວມື້ຊາວຄືນແລ້ວເດ່ທີ່ຄອຍຖ້າ ຄ.ປ.ສ. (໑) ລົງມາມື້ໃດກໍ່ວ່າມື້ນັ້ນ, ຫາກບໍ່ເຫັນລົງມາຈັກເທື່ອ, ຫລືເປັນບໍາ ຄະນະລັດຖະບານປະສົມຢູ່ວຽງຈັນ ຮູ້ຂ່າວນີ້ຊັກຊ້າບໍ່? ຫລືເປັນບໍາພວກປະຕິການ ຂັດຂວາງບໍ່ໃຫ້ລົງມາ ເພື່ອເອົາປາກ ບີບຂະບວນປະທ້ວງ ໃຫ້ຕາຍຄາມືໂດຍທາງອ້ອມ...ຝູງເດັກນ້ອຍສືບຕໍ່ແລ່ນເປັນພືງ ມາຢືນຢູ່ບ່ອນແປນ ແລ້ວຮ້ອງໂຮ ແລະໂບກມືໄປໃສ່ອີກກະທິກ. ເຮືອບິນເອເລກິບສີຂຽວໃບໄມ້ ເຈີດລົງຕ່ຳພໍປະມານ, ມັນອ້ອມໄປວຽນມາຫລາຍຮອບ ແຕ່ບໍ່ເຫັນລົງສູ່ພື້ນດິນ, ໃນຮອບສຸດທ້າຍ ຂ້ອຍສາມາດແນມເຫັນມັນຖິ້ມຫຍັງບຸ ເປັນປຸ້ມອອກມາຈາກຍົນ ແລ້ວແຕກຊະຢູ່ກາງຫາວ ຕົກລົງມາເປັນສາຍ, ແລ້ວເຮືອບິນລຳນັ້ນກໍບິນມຸ່ງໜ້າກັບຄືນເມືອທ່າແຂກວັ້ງໆ ບໍ່ເຫັນຕ່າວຄືນມາອີກ. ສຽງຜູ້ໃຫຍ່ເອີ້ນໃສ່ກັນວ່າ "ໃບປິວ! ໃບປິວ!" ແມ່ນ "ໃບປິວຂອງໃຜ" ຂ້ອຍຄິດ. ການເກັບໃບປິວ ເປັນພາລະຂອງນັກຮຽນນັກທະຍົນ ພວກຂ້ອຍບອກກັບຊຸມເດັກນ້ອຍ.

(1) ຄະນະປະສົມສູນກາງເພື່ອປະຕິບັດສັນຍາ.

ພວກຂ້ອຍຍາດກັບປານເຮັດຫລິ້ນ, ຂ້ອຍບໍ່ທັນອ່ານມີແຕ່ຫ້ອນໂຮມມາໄວ້ຈົນກອງຈຸ່ມພູ່ມ, ນາງພູວີຜູ້ເປັນເພື່ອນເອີ້ນໃສ່ຂ້ອຍ " ເອົາກັບໄຟມາທະແມ້ ! " ຂ້ອຍຈູດຈົນບໍ່ເສດບໍ່ເຫລືອຈັກໃບ, ຍັງແຕ່ໃບດຽວທີ່ຮັກສາໄວ້ໃຫ້ລຸງຈານນິນ, ກ່ອນຈະສົ່ງໃຫ້ເພິ່ນ ຂ້ອຍຟ້າວອ່ານເບິ່ງຊຶ່ງເປັນໂຕພິມຂຽນວ່າ:

"ຄຳສັ່ງທາງອາຊະການ ! ພວກຂ້າພະເຈົ້າເສນາທິການກຳລັງທັບພາກສາມຕິກລິງເຕືອນໃຫ້ຮູ້ວ່າ ຄັນພວກເຈົ້າປາກມີຊີວິດຢູ່ໃຫ້ເອົາທົບສົບຂອງຄົນຕາຍໄປຖິ້ມສາ ! ແລະ ຈົ່ງປຸດຕິການເຮັດປະທ້ວງພວກເຮົາພ້ອມແລ້ວຈະອະໄພໂທດໃຫ້... ກົງກັນຂ້າມຄັນຖ້າພວກເຈົ້າຫາກຍັງດື້ດ້ານຮ້ອງໂຮຢູ່ຕໍ່ໄປແລ້ວ ເຮືອນຊານບ້ານຊ່ອງຂອງພວກເຈົ້າຈະກາຍເປັນເຖົ່າຖ່ານ ແລະ ພວກເຈົ້າເອງຈະໄດ້ຟູມເລືອດແນ່ນອນ... ເສນາທິການກຳລັງທັບພາກສາມ ".

ຂ້ອຍຮູ້ສຶກນ້ອຍໃຈໃນເມື່ອໄດ້ອ່ານໃບປີວສະບັບນັ້ນ ຄັນຊັ້ນໝາຍຄວາມວ່າ ຄ-ປ-ສ ທີ່ຂ້ອຍຄອງຄອຍຈຳຕ້ອງພິດຫວັງ, ຂ້ອຍປາກໄປຖາມລຸງຈານນິນ, ຖາມແມ່ບຸນເພື່ອປາກຮູ້ຄວາມຈິງວ່າ "ຊິເຮັດແນວໃດ?" ຄັນຫາກສືບຕໍ່ເຮັດແນວນີ້ຕໍ່ໄປແລ້ວ ບາງເທື່ອເຂົາປ່ວງບ້າຈະເອົາເຮືອບິນເຕ

໒໗ ນາຖິ້ມລະເບີດລົງໃສ່ກໍເປັນໄດ້, ເມື່ອນັ້ນລະ ! ໄທເມືອງຈະພາກັນຕາຍກືງຕາຍກອງ... ", ສຳຫລັບເຈົ້າຫັ້ນເປັນເດັກນ້ອຍ " ຂ້ອຍຮູ້ສຶກລະອາຍໃຈໃນເມື່ອອ້າຍສຳລີເວົ້າໃຫ້ຂ້ອຍ, ຂ້ອຍຍັງເຕືອນຕົວເອງວ່າບໍ່ຕ້ອງປ້ານແລະຕ້ອງຟັງຄຳເວົ້າຂອງຜູ້ໃຫຍ່.

ວັນເວລາໄດ້ຜ່ານໄປຊັກໃຊ້. ຫມົດມື້ນີ້ແລ້ວຕໍ່ໃສ່ມື້ອື່ນ ຂ້ອຍໄດ້ຮ່ວມສຸກ ຮ່ວມທຸກນຳໄທບ້ານໄທເມືອງເປັນເວລາເດືອນປາຍແລ້ວ ຍັງບໍ່ເຫັນ ຄ-ປ-ສ ລົງມາແກ້ໄຂເທື່ອ, ສະຫນາມຮົບຕໍ່ສູ້ທາງການເມືອງຂອງພວກຂ້ອຍ ມັນເປັນຈັ່ງຊີ້ລະ ! ມັນມີທັງຄຳເວົ້າອັນມ່ວນ, ມັນມີທັງຄຳປ້ອຍດ່າ, ມີທັງສຽງຫົວ, ມີທັງສຽງຮ້ອງໄຫ້ ແລະ ມີທັງການເສຍຊີວິດ ແລະ ເລືອດເນື້ອເພື່ອແລກເອົາສັນຕິພາບ, ເອກະລາດ ແລະສິດເສລີພາບຂອງປະຊາຊົນ. ຂ້ອຍຮູ້ສຶກອິດເມື່ອຍກວ່າອາທິດກ່ອນທີ່ກາຍມາ, ຫນ້າຕາຫລ່າເຫລືອງ ແລະ ລຳແຂນອັນຕຶ່ງເຕັນກໍ່ຄືແວບເຂົ້າ.

– ໃນວັນທີ ໑໘ ເດືອນກຸມພາ ໑໙໖໕ ເປັນມື້ ຄ-ປ-ສ ສອງຝ່າຍໄດ້ເດີນທາງມາເຖິງ, ມື້ນັ້ນເປັນຍາມແລງ, ຟ້າເອີຍ ! ຂ້ອຍບໍ່ນຶກບໍ່ຝັນຈັກດີ້ວ່າພວກເພິ່ນຕ້ອງມາປ່າງບັງເອີນແນວນີ້, ຂ້ອຍດີໃຈຈົນບອກບໍ່ຖືກ, ຂັ້ນຕົ້ນໄທບ້ານໄທ

ເມືອງຄືດວ່າ ແມ່ນ ຄ–ປ–ສ ປອມຊັ້ນດອກ, ຄິດແລ້ວກໍ ເປັນຫນ້າປາກຫົວ, ໃຜໆກໍຈັບຫອກຈັບງ້າວ, ຫນ້າຫນ້ອງ ປືນເພິງ, ມ່ວນຊຶບພໍ່ສີ່ຫ້າພັນຄົນມາອ້ອມສິບລຸງຊຽງຂຽນ ຈົນມືດອື້ຕື້, ເປັນອັນວ່າມື້ນີ້ເປັນເທື່ອທຳອິດໃນຊີວິດ ທີ່ໄດ້ ເຫັນຫນ້າອ້າຍນ້ອງ, ໂອຍ! ຈັ່ງແມ່ນເພິ່ນງາມບໍ! ສົ້ງເສື້ອ ສີຂຽວແກ່ ມີປອກແຂນສີຟ້າສວມໃສ່ເບື້ອງຊ້າຍ ຂຽນວ່າ "ຄ-ປ-ສ" ພວກເພິ່ນຖືກຫມວກແງັບຕິດກາທຸງຊາດວົງ ເດືອນ, ຜົມສັ້ນ, ໃບກໍອ້ວນພີດີງາມ, ໃສ ? ເມື່ອກ່ອນນີ້ເຂົາ ເຄີຍເລົ່າລືກັນວ່າອ້າຍນ້ອງຜົມຍາວ, ແຂ້ວໃຫຍ່, ຕາໂກນ, ຮ້າຍກາດຄືເຜດຄືຜີ ແຕ່ແລ້ວພວກເພິ່ນໃຜໆກໍມີທ່າທາງ ສະຫງົບສະຫງ່ຽມຄ່ຽມຄົມ, ພວກເພິ່ນມັກໂອ້ລົມຜູ້ເຖົ້າ, ນັບຖືແມ່ຍິງ ແລະ ຮັກແພງເດັກນ້ອຍ. ຂ້ອຍພະຍາຍາມ ຍ່າງໄປໃກ້ໆ ພາຍຫລັງທີ່ຄ້ອງພວງມະໄລ ແລະ ມອບຊໍ່ ດອກໄມ້ໃຫ້ພວກເພິ່ນແຕ່ບໍ່ກ້າຈະເວົ້າຫຍັງ ນຳ ເພາະ ຂ້ອຍອາຍທັງຈິ່ງຈຽມ ຂ້ອຍໄດ້ແຕ່ຍິ້ມ.

ຕອນນີ້ຂ້ອຍບໍ່ປາກເວົ້າລາມໄປຫລາຍ ວ່າພວກເພິ່ນ ຕ້ອງພົບປະເຈລະຈາກັບຄະນະປະທ້ວງ ແນວໃດ ຂໍ້ຂັດ ແຍ່ງລະຫວ່າງຝ່າຍວຽງຈັນກັບຝ່າຍບັນດາກຳລັງຮັກຊາດ ແນວໃດ ? ຂ້ອຍອົດໄວ້ບໍ່ໄດ້ທີ່ຈະຕ້ອງຈົ່ມຕໍ່ອີພູວົ ແລະ ຈະ

ຕ້ອງລັກຈົດຈຳໄວ້ໃນບັນທຶກຫົວນີ້ກ່ຽວກັບ "ຊາຍຄົນນັ້ນ". ຂ້ອຍໄດ້ຖາມພູວີ ຫລາຍຫລົບຫລາຍຕ່າວ "ຊາຍຄົນນັ້ນ" ເຂົາແມ່ນໃຜເກາະຫື! ເປັນຫຍັງເຂົາບໍ່ໃສ່ເຄື່ອງແບບ? ເຂົາມາຈາກໃສ? ຊື່ແນວໃດ? ບ້ານເກີດເມືອງນອນຂອງເຂົາເດ! ເຂົາຮັບການສຶກສາມາຈາກປະເທດໃດ? ເຈົ້າຮູ້ບໍ່? ເຈົ້າບ້າບໍ້? ໃຜຊິຮູ້ຈັກ! ແມ່ນໃຜປູ່ໃສ? ອີພູວີຍັງບໍ່ທັນເຫັນຄັກ, ຂ້ອຍຫລິງຊື່ນີ້ໄປໃສ່ວ່າຜູ້ຫົ່ມເສື້ອຂາວແຂນສັ້ນແລະສົ້ງສີດິວຫມາກຄໍ້ຫັ້ນເດ່!

– ເອົ້າ! ກະເປັນນັກຂ່າວຕະວາ!

– ນັກຂ່າວຂອງໃຜເກາະ!

– ໄດ້ຍິນວ່າຂອງອ້າຍນ້ອງ!

– ຕາຍ! ຕາຍອ້າຍນ້ອງຜູ້ງາມໆກໍ່ມີເນາະ!

– ງາມລະຕິ! ພູວີເວົ້າຖືກ, ອ້າຍນ້ອງຈຸ່ນີ້ເຂົາເປັນຄົນສຸພາບແທ້ໆ ເວົ້າຈາອ່ອນຫວານ, ໃຈກວ້າງມັກປາກມັກລົມ, ໃຜໆພວກເພິ່ນກໍ່ຖືເປັນຄືພໍ່ແມ່, ອ້າຍເອື້ອຍ, ນ້ອງນຸ່ງລູກຫລານໃນຄອບຄົວດຽວ ແຕ່ວ່າສຳຫລັບຂ້ອຍແລ້ວ ແມ່ນເຫັນອ້າຍ "ອັນນັ້ນ" ມີອັນຕ່າງພິເສດ, ເຂົາເປັນຄົນຍັງຫນຸ່ມຢູ່, ການປາກເວົ້າຄືຈັ່ງວ່າມີລົດຫວານກວ່າ, ມີສະເຫນ່ກວ່າ ແລະ ອາຍຸກໍ່ຄືຊິອ່ອນກວ່າ...

ມື້ນັ້ນ ຂ້ອຍຫລຽວເຫັນດວງຕາເວັນຄ່ອຍ ໆ ລອຍລົງຕ່ຳພຽງຂອບຟ້າ ຟັ່ງຂອງເມືອງໄທ. ກ້ອນເມກອັນມະຫາສານ ຫລັ່ງໄຫລບ້ອຍໆເຂົ້າມາບໍ່ຂາດສາຍ ຈົນທ້ອງຟ້າທົ່ວເມືອງຖືກບັງບົດແລ້ວ ຄວາມມືດຂອງເດືອນແຮມກໍຄືບຄານເຂົ້າມາແທນທີ່. "ຣີ" ຄືຈັ່ງວ່າຄ່ຳໄວແທ້ (ຂ້ອຍຄິດ) ຄ.ປ.ສ. ສອງຝ່າຍກັບຄະນະປະທ້ວງເພິ່ນເວົ້າຫຍັງນຳກັນແດ່? ພວກຂ້ອຍບໍ່ໄດ້ຮູ້ນຳ ເພາະບໍ່ໄດ້ຟັງລະອຽດມີແຕ່ເມົາແລ່ນຍໍນ້ຳຍໍໃນ ແລະ ອື່ນໆໃຫ້ພວກເພິ່ນ. ເຖິງໂມງທີ່ພວກເພິ່ນຈະຕ້ອງກັບເມືອ ໄທເມືອງ ພາກັນຍະຫາງອອກ ໃຫ້ພວກເພິ່ນອອກໄປສູ່ລົດ. ຂ້ອຍຟ້າວແລ່ນອອກໄປຢູ່ປາກປະຕູໂຮງ ທັນເຫັນແຕ່ອ້າຍ... ຂັບລົດ "ສະກາວ" ນຳຕຳຫລວດຄັນໜຶ່ງອອກໜ້າ ຊຶ່ງເວລານັ້ນລົດພວມແລ່ນພຸ່ງໄປຕາມສາຍທາງຫລວງ ມຸ່ງໜ້າເຂົ້າສູ່ເມືອງທ່າແຂກ ເຫັນແຕ່ແສງໄຟແດງ ສາມດອກຢູ່ຫລັງລົດແຕກຍາບໆ ສະທ້ອນຄືນມາ... ຂ້ອຍຮ້ອນໃຈ ຟ້າວຫລົບຄືນມາແລ້ວໄປຫາລຸງຈານບົນໂລດ.

– ມື້ອື່ນນີ້ພວກເພິ່ນຍັງຊິມາອີກບໍ?

– ເລື່ອງບັງບໍ່ແລ້ວ... ລຸງຈານບົນເຮັດໜ້າຫຍຸ້ງ, ຄິ້ວສົນຂົ້ນ ແລ້ວຈົກປາດູດອອກມາພ້ອມ, ປູ່ຕ່ຳໜ້າເພິ່ນ ມີ

ໂຕະ ແລະ ເອກະສານເດບລະດາດ, ຂ້ອຍພະຍາຍາມຈອບເບິ່ງບ້ງບໍ່ມີລາຍເຊັນຂອງ ຄ.ປ.ສ. ເທື່ອ.

– ກະ ບັງ ໄດ ແບ່ ດອກ ພວກເພິ່ນບັງສືບຕໍ່ທ່ຽວມາເພື່ອຈະໄດ້ມີໂອກາດລົງຫນ້າກັນແດ່, ມື້ອື່ນນີ້ພວກເພິ່ນຈະລົງມາຕອນເຊົ້າ, ຄວນເອົາຫຍັງເປັນຂອງຕ້ອນຫັ້ພູວີ?

– ເອີ ! ຂ້ອຍຄິດອອກແລ້ວ, !

– ລອງເວົ້າເບິ່ງດູ !

– ບໍ່ ! ມື້ອື່ນຈິ່ງບອກ...

ຄ່ຳຄືນຂອງມື້ນັ້ນປູ່ທົ່ງຫຍ້າ ຕໍ່ ຫນ້າ ເດີນ ໂຮງ ການເມືອງທີ່ກວ້າງຂວາງພໍ່ສົມຄວນນັ້ນ ປະກົດວ່າມີບັນຍາກາດ ແລະ ແສງໄຟຮຸ່ງເຮືອງຂຶ້ນຜິດປົກກະຕິ. ປູ່ໃຈກາງມີໄຟກອງໃຫຍ່, ນອກແຄມຮົ້ວເບື້ອງທາງຖະຫນົນ ແລະແຄມນາມີແຕ່ທູບທຽນ ຕິດປູ່ເປັນແຖວ, ຊຸມແມ່ຄ້າຊາວຂາຍກໍພາກັນໄຕ້ກະບອງບັ່ງຂາຍເຂົ້າຕົ້ມເຂົ້າຫລາມ, ປີ້ງໄກ່, ເຄື່ອງຫວານ ຫມາກໄມ້ສົ້ມ ແລະ ອື່ນໆດ້ວຍລາຄາຖືກກ່ວາຍາມທໍາມະດາຄືນເທົ່າ ຊຸມຜູ້ບ່າວຜູ້ສາວພາກັນໄປຕັກນ້ຳສ້າງມາໄວ້, ບາງພາກສ່ວນຫໍ່ເຂົ້າຕົ້ມ, ຕໍາເຂົ້າ, ຄົວກິນ... ຊຸມເດັກນ້ອຍໄລ່ຢອກກັນຫລິ້ນຫມາກລີ້ ເມື່ອຍແລ້ວໄປຟັງຜູ້ເຖົ້າເລົ່ານິທານ. ຊຸມແມ່ຕູ້ເອົາຜ້າພາດບ່າ

ໄປນັ່ງຈຸ້ມກັນຄ້ຽວຫມາກ ຢູ່ລຽບລະບຽງໂຮງການ, ພວກພໍ່ເຖົ້າຜົມຂາວກໍພາກັນນັ່ງຈັກຕອກ, ສາວແທສາວນອງສານກະບຸງກະຕ່າ ຢູ່ກ້ອງກົກບົກແຄມຮົ້ວ. ຢູ່ປາກປະຕູໂຂງມີຄົນທຽວເຂົ້າອອກບໍ່ຂາດສາຍໂດຍຜ່ານຕໍ່ຫນ້າຂອງຄົນຍາມ, ຂ້ອຍກັບອີພູວີກໍໄດ້ເຮັດວຽກຫນຶ່ງ ຄືຮັບພາລະຕັດເຈ້ຍເຮັດຊໍ່ດອກໄມ້ ແລະ ເຮັດພວງມະໄລເພື່ອໄວ້ຕ້ອນຮັບມື້ ຜູ້ຕາງຫນ້າລັດຖະບານປະສົມ ຊີລົງມາ. ສອງຄົນພວກຂ້ອຍເປັນເພື່ອນກັນຢູ່ໃນບ້ານດອນຂຽວເຫນືອ ແລະເຂົ້າໂຮງຮຽນຫ້ອງດຽວ. ໄປໃສ, ຢູ່ບ່ອນໃດ ຄົນເຫັນຂ້ອຍຕ້ອງເຫັນຫນ້າອີພູວີ ຈົນເຂົາເວົ້າວ່າສອງຄົນນີ້ແມ່ນເອື້ອຍນ້ອງກັນບໍ ຫລື ເປັນລູກຝາແຝດ.

ມື້ໃຫມ່ໄດ້ວຽນມາ ແສງແດດຍາມເຊົ້າຄ່ອຍໆເຮືອລົງມາອາບຫນ້າບ້ານ ແລະ ທົ່ງນາເປັນສີເຫລືອງອ່ອນ, ຝູງນົກອ້ຽງສັ້ງກາຮ້ອງສົ່ງສຽງ ມາຈາກປາຍຍາງ ແຄມ ປ່າແຊວງ ຄ້ອມພໍດີມັນເປັນເວລາທີ່ຂະບວນລົດຂອງ ຄ.ປ.ສລົງມາຮອດອີກເທື່ອທີ່ສອງ, ສຽງໂຫລະໂຄ່ງປະກາດເປັ້ງໆໃຫ້ມວນຊົນຕົບມື ແລະ ຮ້ອງໂຮຊົມເຊີຍ, ຂ້ອຍກັບອີພູວີຫິ້ວກະບຸງຫມາກພ້າວໄຟໄປປົງໄວ້ຢູ່ຂ້າງປະຕູໂຂງ, ຂ້ອຍປາຍໃຫ້ພວກເພິ່ນເພື່ອເປັນຂອງຕ້ອນຜູ້ລະຫນ່ວຍ ແຕ່ວ່າ

ອ້າຍ "ນັກຂ່າວ" ຂ້ອຍໃຫ້ເພິ່ນສອງເພື່ອເປັນຄູ່, ຂ້ອຍເກືອບຈະເວົ້າວ່າ! "ນີ້ໝາຍວ່າອ້າຍ ແລະ ເອື້ອຍຫລືອ້າຍ ແລະ ແຟນ". ແນ່ນອນລະ! ເພິ່ນເປັນນັກຂ່າວເພິ່ນຕ້ອງຮູ້ຄວາມໝາຍເລິກກ່ວາພວກເຮົາ...

ນີ້ນີ້ການພົບປະເຈລະຈາກໍໄດ້ສືບຕໍ່, ຂ້ອຍຢາກໄປຟັງທີ່ສຸດ ແຕ່ນ້ອງເນົານົວນໍາເຮັດວຽກນຸ່ງນ່ອຍຫລາຍ ໂພດຈຶ່ງບໍ່ມີໂອກາດໄດ້ໄປຢູ່ໃກ້ຄຽງພວກອ້າຍເຫລົ່ານັ້ນ, ຕອນນີ້ຂ້ອຍບໍ່ສາມາດຂຽນໄວ້ຢ່າງລະອຽດ ຫາກໄດ້ຍິນແຕ່ໄທບ້ານເວົ້າວ່າເຈລະຈາຫນົດເຊົ້າບໍ່ໄດ້ເລື່ອງນ້ອນ ຄ-ປ-ສ ຝ່າຍວຽງຈັນເປັນຜູ້ຂັດຂວາງໂດຍແມ່ນຫນໍພັນເອກ ລຸນສີສຸບິນເປັນຕົວການຫລິ້ນລິ້ນປີ້ນຄວາມ, ຕອນນີ້ ຂ້ອຍ ຈະຂຽນໄວ້ແຕ່ຍາມຈັດແຈງອາຫານທ່ຽງແກ່ພວກເພິ່ນ ຂ້ອຍຮູ້ລາຍຊື່ຂອງ ຄ-ປ-ສ (ຝ່າຍອ້າຍນ້ອງ) ທຸກຖ້ວນຫນ້າຄືອ້າຍແຈ້ງໄຊຍະວົງ, ອ້າຍເພັດສະໜອນ, ອ້າຍທັດສະດີ, ອ້າຍສິນບຸນ, ແລະ ຜູ້ອື່ນໆອີກຊຶ່ງເປັນພາກສ່ວນໂທລະເລກ. ສະເພາະອ້າຍນັກຂ່າວນັ້ນເຂົາເອີ້ນວ່າ "ສີ" ເຂົາບໍ່ຍອມບອກຫນົດປະໂຫຍກ, ຫມາຍວ່າພິດຕ້ອງຮູ້ຈັກແຕ່ຕອນປາຍ. ອ້າຍສີຈັ່ງແມ່ນມັກປາກມັກລົມ, ມັກມ່ວນ ແລະ ມັກເວົ້າຕະຫລົກ ຈົນຂ້ອຍກັບພວກຜູ້ຍິງ ແລະ ຜູ້ເຖົ້າ

ໄດ້ຫິວບໍ່ຂາດໄລຍະ. ອ້າຍນ້ອງກໍຮູ້ເວົ້າພິລຶກ ປານນີ້ເດ ເນາະ! ຜ່ານມາພິດເຄີຍໄດ້ຍິນເຂົາເວົ້າວ່າ ອ້າຍນ້ອງເປັນຄົນປ່າ, ບໍ່ໄດ້ຮັບການສຶກສາ, ກິນຫມາກໄມ້ຕາງເຂົ້າ, ບໍ່ຮູ້ຫນັງສື ແລະອື່ນໆຢ່າງເຫລືອເຊື່ອແຕ່ແລ້ວມັນໄກຄວາມຈິງຫລາຍ ໄກຫລາຍແທ້ໆ.

ຍ້ອນອິດເມື່ອຍຫລາຍ ຂ້ອຍກັບອີ່ພູວີຊວນ ກັບ ນອນຫລົ້ນຢູ່ໃນເຮືອນຫນຶ່ງເພື່ອປຽດແອວ, ກະວ່າ ລະ ຫວ່າງສາມສິບນາທີຈະລຸກຂຶ້ນມາດື່ມນ້ຳ, ເວລານັ້ນຂ້ອຍເຊືອນຫລັບໄປຢ່າງບໍ່ຮູ້ສຶກຕົວ, ບັງເອີນໄດ້ຍິນສຽງປາກໄຫເຫືອລອດເຂົ້າມາເຈາະເຈ້ຍຫູຂອງຂ້ອຍ, ຂ້ອຍພະຍາຍາມມືນຕາຂຶ້ນ ແລ້ວສ່ອງເບິ່ງປ່ອງນ້ອຍຫົວນອນ, ຕາຍ! ອ້າຍສີ, ອ້າຍສີກັບແມ່ບຸນເພິ່ນພວມລົມກັນເລື່ອງປະທ້ວງ. ເພິ່ນແນະນຳຄະນະປະທ້ວງ ແລະ ສະພາບສັດຕູ, ເຫັນອ້າຍສີຖອດປຶ້ມນ້ອຍອອກຈາກຖົງສົ້ງມາຈົດ, ເວົ້າໄປເວົ້າມາເລີຍອອກຊື່ "ນາງພິດສະໄຫມ", ນາງເດັ່ນແທ້ໄດ! ນາງເປັນຜູ້ນຳຫນ້ານັກຮຽນມັດທະຍົມເຂົ້າຮ່ວມການປະທ້ວງ. ນາງບໍ່ຢ້ານສັດຕູໃນຍາມເຂົານາບຂູ່ຢູ່ກາງບ້ານຫລືບົນເສັ້ນທາງໄປສົ່ງຈົດຫມາຍລັບ, ນາງເຮັດທຸກສິ່ງທຸກຢ່າງ ຕາມທີ່ພວກແມ່ຕ້ອງການໃຊ້, ຄຶດວ່າເພິ່ນຈະເວົ້າໄປໃນຮູບນັ້ນກໍ

ແລ້ວໄປແຕ່ແມ່ບຸນພັດເສີມຕື່ມວ່າ "ນາງທັງເປັນຄົນງາມ ອີກຄັນພວກລູກທັງສອງຫາກເຫັນກໍປ້ານຫົວໃຈຈະຫລົບລົງໃສ່ຫ້ອງຖຽວກັບຢູ່ດອກ... ເພາະພວກລູກຄ້າຍຄືກັນ."

"ແມ່ຕູ້ຮ່າ!" ຂ້ອຍເຫລືອວິໄສລັກຮ້າຍຢູ່ໃນໃຈ, ບໍ່ມີໃຜເຫັນຫນ້າຂ້ອຍດອກ ແຕ່ພິດຮູ້ສຶກລະອາຍໃນຫນ້າ ຮ້ອນວູ່ໆ ແລະ ຫົວໃຈຕຳເຂົ້າຕຶກໆຄືຄົກມອງ.

– ພິດສະໄໝ!

– ຈ້າວ! ອຸ້ຍຈົນຕື່ນ.

– ຂ່າວດີຂ່າວດ່ວນ, ອີພູວີແລ່ນມາ.

– ແມ່ນຫຍັງ?

– ແມ່ບຸນກັບລຸງຈານນິນບອກວ່າສອງໂມງນັກ ຂ່າວຈະມາພົບ.

ອີພູວີບອກແລ້ວບັງເບັ້ຍຂ້ອຍອີກ, ຂ້ອຍຟ້າວແລ່ນໄປຕົບຫລັງມັນດັງ "ໂປ້ະ" ແລະຫລົງດ່າມັນວ່າ "ຜີບ້າ".

ຍັງເວລາອີກ ໕ ນາທີຈະແມ່ນຍາມນັດ, ຂ້ອຍຟ້າວຈົກເອົາແວ່ນນ້ອຍໃນກະຕ່າອອກມາແປງຜົມ ແລະຄໍເສື້ອ. ຄວາມຈິງຂ້ອຍຕ້ອງແຕ່ງຕົວໃຫ້ສຸພາບກວ່ານີ້ເພາະປ້ານເພິ່ນຊິຖ່າຍຮູບ, ແຕ່ວ່າໄສຊິມີເຄື່ອງນຸ່ງ, ເຄື່ອງນຸ່ງທັງໝົດປະໄວ້ຢູ່ບ້ານດອນຂຽວພຸ້ນ. ຫົ່ມເສື້ອແຂນສັ້ນ ລາຍດອກ

ພືບນີ້ກໍໄດ້ແລ້ວເພາະ ຂ້ອຍລັກຖາມໂຕເອງ.

ເວລາບັດນາເຖິງອ້າຍສີກໍຂື້ນມາເຮືອນໂລດ. ຫລັງຈາກປົງເຄື່ອງອັດສຽງໄວ້ເທິງໂຕະແລ້ວ ເພິ່ນກໍຖາມຂ່າວຂ້ອຍ, ມື້ນີ້ເພິ່ນນຸ່ງສົ້ງສີດຳ, ຫົ່ມເສື້ອສີເຫລືອງອ່ອນແຂນຍາວ, ເກີບຫນັງສີແດງຊ້ຳຂອງເພິ່ນ ເຕັມແຕ່ຂີ້ຝຸ່ນ ຈົນໂຫມ່ນໂອກໂຫລກ, ຄືວ່າຫັ້ນແລ້ວບໍ່ຄືຢູ່ໃນເມືອງ. ຂ້ອຍໄດ້ເຫັນເພິ່ນຄັກ, ເພິ່ນເປັນຄົນສີເນື້ອຂາວເຫລືອງ ແລະ ສູງພໍດີ. ເວລາຢືນຕ້ອນຮັບຢູ່ປາກປະຕູ ຂ້ອຍເດົາ ໆ ເອົາຫົວຂອງຂ້ອຍຄືຊິສູງພຽງຫູຂອງເພິ່ນ. ເພິ່ນ ເລີມ ຕົ້ນ ຖາມ ຂ້ອຍ, ຂ້ອຍ ໄດ້ຕອບເພິ່ນຂໍ້ທຳອິດ ແມ່ນສາຍຕາ ກັບຮອຍຍິ້ມ. ສອງຄົນພວກຂ້ອຍນິດຢູ່ເທິງເຕີບຂ້ອຍຈຶ່ງເລົ່າຕາມເລື່ອງຈິງ ຄືນັບແຕ່ມື້ເລີ່ມຕົ້ນເຮັດການປະທ້ວງຂ້ອຍໄດ້ເຂົ້າຮ່ວມແນວໃດ. ຈຸດສຳຄັນແມ່ນລະດົມນັກຮຽນເຂົ້າຮ່ວມ, ໄປແຜ່ເຂົ້ານຳໄຫບ້ານ, ໄປສິ່ງຈົດຫມາຍລັບຢູ່ໃນປ່າ. ບາງເທື່ອພົບສັດຕູບາບຂູ່ກວດຄົ້ນ, ບາງເທື່ອໄປກາງຄືນ, ຂ້ອຍໄດ້ເຮັດທຸກສິ່ງທຸກຢ່າງ ຕາມຄະນະປະທ້ວງ ມອບຫມາຍໃຫ້... ຂ້ອຍເລົ່າໄປແບບເພິນໆ. ແຕ່ອ້າຍສີຈັ່ງແມ່ນຖາມເຈາະຖາມຈົ້ມ ທັງຫລຽວເບິ່ງຫນ້າຂ້ອຍ, ຂ້ອຍຈົນອາຍແລະ ໄດ້ຫລົບແສງຕາ

ຂ້ອຍບໍ່ເຄີຍປ້ານບໍ່ເຄີຍອາຍໃຜຈັກເທື່ອຕະຫລອດເຈົ້ານາຍຜູ້ໃຫຍ່ຫລາຍຄົນປູ່ເຂດນີ້ກໍເປັນທຳມະດາ ແຕ່ເມື່ອພົບອ້າຍສີເປັນຫຍັງຂ້ອຍຮູ້ສຶກປູ່ບາກຫື ? ບໍ່? ບໍ່ຄວນຕັ້ງຄຳຖາມຂຶ້ນແບບນີ້ ທັງ ໆ ທີ່ ພົດ ຮູ້ ຈັກ ໃຈ ຂອງ ຕົນ ເອງແລ້ວ...

ຫລັງຈາກເລົ່າເລື່ອງສູ່ເພິ່ນຟັງລະອຽດແລ້ວ, ພວກຂ້ອຍກໍໄອ້ລົມກັນເທົ່ງເຕີບ, ສ່ວນອີພູວີ, ເອື້ອຍຄຳບູ່, ເອື້ອຍເພີນຈີດພວນຕ່ຳແຈ່ວ ແລະ ຄົວກີນປູ່ຫ້ອງໃນ ພາກັນລັກເຮັດຕາຫວານທັງບີກຄ້ວມາໃສ່ຂ້ອຍ ດີແຕ່ອ້າຍສີຫາກບໍ່ເຫັນນຳ. ຄັນເສຍລັບແມ່ນຂ້ອຍເປັນລົມຄັກ. ສອງອ້າຍນ້ອງພວກຂ້ອຍໄດ້ລົມກັນຫລາຍສິ່ງຫລາຍແນວ ແຕ່ມີບາງອັນຂ້ອຍຕ້ອງສະຫງວນໄວ້ສາກ່ອນ. ຂ້ອຍຈະບໍ່ຂຽນໃສ່ທີ່ນີ້, ມີແຕ່ຈະຈົດໄວ້ປູ່ໃນດວງໃຈເທົ່ານັ້ນ.

ສີ່ມື້ແລ້ວທີ່ ຄ.ປ.ສ ຫງວໄປຫງວມາ ແຕ່ຍັງບໍ່ທັນຕົກລົງກັນໄດ້, ພັນເອກລຸນສີສຸ ນົນ ບໍ່ ຍອມ ຮັບ ຂໍ້ ສະ ເໜີຂອງຄະນະປະທ້ວງບາງຂໍ້ ທີ່ສຳຄັນຄື : ບໍ່ຍອມໃຊ້ຄ່າເສຍຫາຍໃຫ້ແກ່ຜູ້ເສຍຊີວິດ ແລະ ຜູ້ຖືກບາດເຈັບ, ບໍ່ຍອມໃຫ້ທ່າແຂກ – ເມືອງເຊບັ້ງໄຟ ຂຶ້ນກັບເຂດກວດກາຂອງລັດຖະບານປະສົມໂດຍກົງ, ໃຫ້ເຜົາສົບຜູ້ເສຍຊີວິດ ກ່ອນ

ນີ້ຜູ້ຕາງໜ້າລັດຖະບານລົງມາ ແລະ ອື່ນໆ... ສີ່ນີ້ທີ່ກາຍ
ມາ ເປັນສີ່ນີ້ທີ່ທັງສອງຝ່າຍ ໄດ້ໂຕ້ຖຽງກັນ ດ້ວຍຄວາມ
ຫຍຸ້ງຍາກລຳບາກ ແລະ ກໍເປັນສີ່ ນີ້ ທີ່ຂ້ອຍໄດ້ດຳລົງຊີວິດ
ຢູ່ຮ່ວມກັບອ້າຍ ຄ.ປ ສ. ຂອງອ້າຍນ້ອງ ຈົນລື້ງໜ້າໝົດ
ທຸກຄົນ ພວກເພິ່ນກໍຖືຄືນ້ອງນຸ່ງໃນຄອບຄົວດຽວ ໂດຍບໍ່
ໄດ້ຈົ່ງຈຽມຫຍັງທັງໝົດຂ້ອຍກໍເອີ້ນພວກເພິ່ນວ່າ "ອ້າຍ"
ຊຶ່ງບໍ່ໄດ້ເອີ້ນ "ຍາອ້າຍ" ຫລື "ທ່ານ" ພວກເພິ່ນກໍເອີ້ນ
ຂ້ອຍແບບງ່າຍໆວ່າ: "ນາງ" ມີແຕ່ອ້າຍສີເອີ້ນຂ້ອຍວ່າ
"ນ້ອງ" ສີ່ນີ້ທີ່ກາຍມາ ຂ້ອຍຮູ້ສຶກມ່ວນຊື່ນທີ່ສຸດໃນຍາມ
ເຮັດວຽກຫລື ໄອ້ລົມຢູ່ໃກ້ຖຽງພວກເພິ່ນ ແຕ່ວ່າຍາມຫົວ
ຄ່ຳພວກເພິ່ນ ຈາກເມື່ອທ່າແຂກແລ້ວທຸກໆຄືນຂ້ອຍຮູ້ສຶກ
ວ່າຄິດຮອດອ້າຍສີຜິດປົກກະຕິ, ເວລາທີ່ຄິດຫລາຍກວ່າ
ໝູ່ໝົດແມ່ນຍາມນອນ, ຂ້ອຍມັກສຳນຶກເຫັນໃບໜ້າ
ຂອງເພິ່ນມາປະກົດຕົວຢູ່ໃນມະໂນຈິດ ຂ້ອຍຈື່ຈຳຄຳເວົ້າ
ຂອງເພິ່ນບາງຄຳ. ຍາມໃດຂ້ອຍກໍຢາກພົບເພິ່ນ, ຢາກ
ຢູ່ຖຽງຂ້າງເພິ່ນຕະຫລອດໄປ, ມີຫລາຍຄືນຂ້ອຍຕ້ອງພົບ
ເພິ່ນໃນຄວາມຝັນ, ຝັນວ່າເພິ່ນເອົາໃຈຂ້ອຍ ແລະ ເຮັດ
ທຸກສິ່ງທຸກຢ່າງ ຕາມທີ່ຂ້ອຍຕ້ອງການ. ຂ້ອຍພະຍາຍາມ
ບັງຊາຫົວໃຈຕົນເອງ ໃຫ້ລືມບັນດາຄຳເວົ້າເຫລົ່ານັ້ນ ເພື່ອ

ບໍ່ປາກພົບກັບຄວາມເສົ້າ ແລະ ປ້ານພວກເອື້ອຍ ຫລື ພວກເພື່ອນຈະປອກ ແຕ່ກໍລືມບໍ່ໄດ້.

ຕອນແລງມື້ທີ່ຫ້າການເຈລະຈາໄດ້ປຸດຕິລົງ, ພັນເອກ ລຸນສີສຸບິນຈິນຕາແຈບໍ່ມີທາງແກ້, ພິທີລົງນາມຮັບຮອງ ຂໍ້ສະເໜີຂອງຊາວເມືອງໄດ້ເລີ່ມຕົ້ນ, ສາມ ຝ່າຍ ໄດ້ ລົງ ນາມຂອງຕົນໃສ່ສົ້ນເອກະສານຄື ຄ.ປ.ສ. ສອງຝ່າຍ ແລະ ຄະນະປະທ້ວງ ໂຄສົກປະຈຳ ໂທ ລະ ໂຄ່ງ ປະ ກາດ ວ່າ: ພວກເຮົາໄດ້ຮັບຜົນສຳເລັດອັນງົດງາມ ແລະລໍຖ້າອີກສອງ ມື້ຜູ້ດາງຫນ້າລັດຖະບານປະສົມຈະລົງມາຮອດ".

ໂທ! ໂລກເອີຍ! ໄທບ້ານໄທເມືອງຈັ່ງແມ່ນຮ້ອງໂຮບໍ່ ຈັກເຕັ້ນຈັກດີດ, ເຂົາດີໃຈປານຕາຍໄປແລ້ວໄດ້ກັບຄືນມາ ເກີດໃຫມ່, ຂ້ອຍພ້ອມກັບຊາວຫນຸ່ມ ແລະເດັກນ້ອຍໄດ້ຮັບ ຄຳສັ່ງໃຫ້ເຮັດອະນາໄມ, ນັບແຕ່ທາງຫລວງຫນ້າ ບ້ານ ຫນອງບົກຈົນທົ່ວທຸກບ່ອນໃນເດີ່ນຫຍ້າບໍ່ໃຫ້ມີເຈັ້ຍເສດ ພໍ ໃບ, ປູ່ຕໍ່ຫນ້າປະຕູໂຂງກໍປຸກຕົ້ນດອກໄມ້ເພື່ອປະດັບຄວາມ ງາມໄວ້ຕ້ອນຮັບພວກເພີ່ນລົງມາ. ຄ່ຳຄືນມື້ນັ້ນພວກຂ້ອຍ ຕ້ອງຈັດຕັ້ງກັບມ່ວນຊື່ນສະແດງລະຄອນ,ຂັບລຳທ້ອງຖິ່ນ, ຮ້ອງເພງ ແລະ ລຳວົງອ້ອມກອງໄຟກອງໃຫຍ່ທີ່ພວມຮຸ່ງ ກະຈາຍຄັບທີບ, ພວກຂ້ອຍບຸທ່າງຫລິ້ນມ່ວນຊື່ນໂດຍບໍ່

ໄດ້ປ້ານສັດຕູຈະມາອາລະວາດຄືຫລາຍນີ້ກ່ອນ ຄ-ປ-ສ ຈະລົງມາ, ເວົ້າທົ່ວໄປແລ້ວຄືນນີ້ນັ້ນເປັນຄືນທີ່ມ່ວນ ແລະ ພິດພື້ນກ່ວາທຸກໆ ຄືນທີ່ຜ່ານມາ. ຂ້ອຍກໍປະກອບສ່ວນ ເຕັມປ່ຽມແຕ່ວ່າຂ້ອຍເສຍໃຈເທີບໍ່ມີພວກອ້າຍ ຄ-ປ-ສ ຢູ່ ຮ່ວມນຳ, ທຸກໆຄືນພວກເພິ່ນຕ້ອງໄປນອນທ່າແຂກເພື່ອ ຄວາມປອດໄພ, ຄັ້ນຫາກໄດ້ລຳວົງສາມັກຄີນຳກັນຍິ່ງຈະ ເຮັດໃຫ້ບັນຍາກາດຄຶກຄື້ນກ່ວານີ້, ຂ້ອຍຄຶດຮອດ ຄ-ປ-ສ ແລະ ຄຶດຮອດອ້າຍສີແຫ້ງ...

ສອງມື້ຕໍ່ມາ ເຮືອບິນເອເລກົບສີຂຽວລຳໜຶ່ງໄດ້ປະກົດ ຕົວຢູ່ທາງຫົວເມືອງແລ້ວໂປດລົງທົ່ງນາແຄມເມືອງ ກະ ແສລົມພັດຂີ້ຝຸ່ນຂີ້ເຫຍື້ອປິວອູ່ຂຶ້ນສູ່ເວຫາ, ກ້ານພ້າວ, ງ່າ ໄມ້ໃບຫຍ້າຖືກລົມຕີ ຄືຊິຫັກຊິປິ້ນ ເວລານັ້ນໄທບ້ານໄທ ເມືອງ ໄດ້ເຂົ້າໄປໂຮມກັນຢູ່ເດີ່ນຈົນຄັບ ຄາ ຫນາ ແຫນ້ນ, ເຫິງພໍປະມານ ຜູ້ຕາງຫນ້າລັດຖະບານປະສົມກໍລົງຈາກ ບິນຍ່າງເຂົ້າມາສູ່ປະຕູໂຂງ. ຂ້ອຍເປັນຜູ້ນຳພາເອື້ອຍນ້ອງ ມອບຊໍ່ດອກໄມ້ ແລະ ຄ້ອງພວງມະໄລໃສ່ຄໍໃຫ້ພວກເພິ່ນ. ໂອ່ຍ! ຈັ່ງແມ່ນເພິ່ນຍິ້ມແຍ້ມແຈ່ມໃສ, ໂດຍສະເພາະແມ່ນ ທ່ານເດືອນສຸນນະລາດ ລັດຖະມົນຕີຊ່ວຍວ່າການກະຊວງ ມະຫາດໄທ, ຕົວແທນຂອງຝ່າຍບັນດາກຳລັງຮັກຊາດເປັນ

ຜູ້ບ່າງກ່ອນ, ເພິ່ນໄດ້ແຕ່ຫົວບຸ້ນໆ ແລະ ໃບກມືໃສ່ນວບ ຊິບທີ່ພວນຮ້ອງໂຮຊິນເຊີບຈົບສຸດສາຍເກາງ. ສ່ວນຝ່າຍ ວຽງຈັນນັ້ນ ພວກເພິ່ນກໍພະຍາຍາມບີບຫົວໃຈເພື່ອເພີຍ ຮອຍຍິ້ມອອກມາແຕ່ຮອຍຍິ້ມ ນັ້ນຄືຈັ່ງແຫ້ງໆ ແລະ ເຮັດ ຕາຫີບເຂົ້າຈັ່ງແມ່ນຫວານຮ້າຍກ່ວາລະຄອນຕະລົກ. ເຖິງ

ໝາກພ້າວໄພ ຈະເລືອກເອົາໄປຕ້ອນ ພວກອ້າຍ ບັນດາກຳລັງຮັກຊາດ

(ນັກຮຽນມັດທະຍົມໝອງບົກ)

ຢ່າງໃດກໍຕາມ ພວກຂ້ອຍຍາມໃດກໍໃຫ້ກຽດເພິ່ນຢູ່ດອກ, ເປັນຕົ້ນແມ່ນຊຸມຜູ້ຍິງພວກຂ້ອຍ, ຂ້ອຍເຄີຍເຕືອນໝູ່ວ່າ

ກໍຄວນຄ້ອງພວງມະໄລ ໃຫ້ເພິ່ນດີໃຈແດ່ ຈັກສອງສາມ
ຮອບ.

ໃນເວລາຕໍ່ມາ, ທ່ານເດືອນຂຶ້ນເວທີກ່າວຄຳປາໄສຈັ່ງ ແມ່ນດັກ, ເບິງພວງມະໄລປ່ອນລົງເຕັມເອິກຈົນ ບໍ່ເຫັນ ຮອດກາລະວັດ, ເພິ່ນເວົ້າອອກມາຄຳໃດແດກດັນໃສ່ປະຕິ ການ ແລະ ອຸ້ມຊູບູ້ຫານບູຊາວເມືອງໂລດໄດ້ໃຈແທ້ໆ. ໃຫ ບ້ານໃຫເມືອງຕົນມີຈົນມີແດງ ແລະ ຮ້ອງໂຮຈົນຄໍແຫບ, ຂ້ອຍຈະບໍ່ຂຽນຕໍ່ໄປອີກ ວ່າພວກເພິ່ນຮັບຮອງຂໍ້ສະເໜີ ຂອງຄະນະປະທ້ວງແນວໃດ ? ພວກເພິ່ນມາຮອດແລ້ວ ໝາຍຄວາມວ່າສັນຕິພາບໄດ້ກັບຕ່າວຄືນມາ, ບ້ານເມືອງ ຈະສະຫງົບສຸກແລະ ປະຊາຊົນຈະເລີ່ມ ໄດ້ຊົມໃຊ້ສິດເສລີ ພາບຂອງຕົນ.

ພາຍຫລັງຜູ້ຕາງໜ້າລັດຖະບານປະສົມກັບຄືນ ເມືອ ເມືອງວຽງຈັນແລ້ວ ຄ-ປ-ສ ຍັງຢູ່ຕື່ມອີກມື້ໜຶ່ງເພື່ອ ຮ່ວມສົ່ງສະການລຸງຊຽງຂຽນ ແລະ ລຸງບົວທອງຊຶ່ງຫາກໍ່ ຖືກຍິງຕາຍກ່ອນ ຄ-ປ-ສ ລົງມາສີ່ຫ້າມື້. ມື້ສຸດທ້າຍທີ່ ພວກອ້າຍ ຄ-ປ-ສ ຈະອຳລາຈາກດິນແດນເມືອງເຊບັ້ງ ໄຟກັບຄືນເມືອ, ຂ້ອຍຍາດເວລາໄປພົບອ້າຍສີບົດໜຶ່ງ, ມື້ນັ້ນຂ້ອຍຈຳໄດ້ລະອຽດ, ມັນເປັນເວລາຂອງຍາມແລງ,

ພະອາທິດດວງແດງຄ່ອຍໆລອຍລົງຈຸປາຍຄ້ແຄມນາທົວບ້ານ, ແສງແດດສີທອງບັງສ່ອງເຂົ້າມາຕ້ອງ ຫລັງຄາເຮືອນບ້ານໜອງບົກກະຈ່າງແຈ້ງເປັນບາງຕອນ. ຂ້ອຍປີນຄຽງຂ້າງອ້າຍສີແຄມປະຕູ (ໂຮງການເມືອງ) ເມື່ອສ່ຳພັດກັບແສງຕາເວັນຂອງລະດູໜາວ ກໍຮູ້ສຶກວ່າອຸ່ນຮຸ່ນໆໄປທົ່ວກາຍ, ແນ່ນ! ຂ້ອຍອົບອຸ່ນທັງກາຍແລະຈິດໃຈຍາມເມື່ອເຂົາຍິ້ມພ້ອມກັບສົ່ງສາຍຕາ ທີ່ມີ ຄວາມ ໝາຍ ມາມອບໃຫ້ຂ້ອຍ, ແຕ່ອະນິຈາ! ຂ້ອຍຕ້ອງພົບກັບຄວາມເສົ້າຍາມອ້າຍສີສັ່ງລາເພາະຍັງອີກ ໑໕ ນາທີເຂົາຈະຈາກຂ້ອຍໄປແລ້ວ, ເຂົາຈະຈາກຂ້ອຍໄປນານແສນນານ ບາງເທື່ອໂຊກບໍ່ດີຈະບໍ່ມີວັນໄດ້ກັບຄືນມາເຫັນຫນ້າກັນອີກ.

– ອ້າຍສີ! ອ້າຍຄິດຫຍັງບໍ່ ກ່ອນອ້າຍຈະຈາກນ້ອງໄປວຽງຈັນ? ເພີນບໍ່ປາກ ແລະ ນິດຢູ່ຄາວຫນຶ່ງແລ້ວສັກແສງຕາໄປໃສ່ກົກຫມາກເທັນກາງເດີ່ນ ຄືກັບວ່າເພີນພວມຄົ້ນຄິດຫາເລື່ອງໃດເລື່ອງຫນຶ່ງ ດ້ວຍຄວາມລຳບາກຍາກຊາ: ປູ່ທີ່ນັ້ນແມ່ນຫໍຂ່າວ ຂອງຂະບວນປະທ້ວງ, ຕາມຫນ້າເຈັ້ຍແຂວງມີໃບຂ່າວ. ມີຮູບແຕ້ມສຽດສີ ພວກປະຕິການແລະ ອື່ນໆຕິດເດຍລະດາດຢູ່.

– ພິດ! ເພີນເອີ້ນຂ້ອຍສຽງເບົາໆ ຂ້ອຍເບີກສາຍ

ຕາເບິງຫນ້າເພິນ ໃນທ່າມກາງບັນຍາກາດແຫ່ງຄວາມໂສກ... ອ້າຍຄິດວ່ານ້ອງເຂົ້າໃຈແລ້ວ !

– ຍ້ອນຫຍັງອ້າຍຈຶ່ງບໍ່ປາກເວົ້າຖືກຣືອ້າຍ ? ອ້າຍບໍ່ຕ້ອງການເພື່ອອົບອຸ່ນຈິດໃຈຂອງຜູ້ປູ່ນີ້ເລີຍແມ່ນບໍ່ອ້າຍ!.

– ເຫັນໃຈອ້າຍແດ່ເທາະພີດ ! ເວລາສັ້ນອ້າຍຂໍເວົ້າ



ພາບແຕ້ມເລົ່າຄືນໂທດກຳຂອງພວກປະຕິການ ເພື່ອສ້າງຄວາມຄຽດແຄ້ນ
(ຫໍໜັງສືພິມຕິດຝາໄດ້ສ້າງປຸກຂຶ້ນຢູ່ທີ່ເດີ່ນຫຍ້າໂຮງການເມືອງໜອງບົກ)

ແຕ່ວ່າອ້າຍຄຶດຮອດນ້ອງ ແລະ ຫ່ວງນ້ອງຢູ່ທຸກບາດລົມຫາຍໃຈ.. ນ້ອງເດ!

– ອ້າຍສິເຣີຍ! ນ້ອງບໍ່ຢາກໃຫ້ອ້າຍ ຈາກນ້ອງໄປ

ເລີຍ, ເພາະວ່າອ້າຍຈາກນ້ອງໄປແລ້ວສິ່ງທີ່ຍັງເຫລືອໄວ້ ບໍ່ານ້ອງຊິມີຫຍັງ ນອກຈາກຄວາມທຸກທໍລະມານ ແລະ ຄວາມເສົ້າ. ນ້ອງຈະເສົ້າ ແລະ ໂສກຍາມເມື່ອບໍ່ມີອ້າຍ ຢູ່ໃກ້ຄຽງ.

– ທີ່ຮັກ ! ເພິ່ນເອົາມືມາປົບຂີ້ເຫຍື້ອຢູ່ຕີນຜົມອອກ ໃຫ້ຂ້ອຍ. ຄັນເວົ້າວ່າ "ຮັກ" ແລ້ວໝາກຫົວໃຈຂອງອ້າຍ ກໍບໍ່ແມ່ນເຫລັກກ້າເພາະອ້າຍກໍມີ "ຫ່ວງ" ແຕ່ວ່າຍ້ອນ ພາລະກິດປະຕິວັດ, ຍ້ອນໜ້າທີ່, ຍ້ອນວຽກງານຮຽກຮ້ອງ ອ້າຍຈໍາໃຈຈາກນ້ອງ ແລະ ຈະຈາກໄປໃນໄລຍະຍາວ. ນັບ ແຕ່ນີ້ ອີກບໍ່ເມື່ອໜ້າ ອ້າຍກັບນ້ອງຈໍາໄດ້ດໍາລົງຊີວິດຢູ່ຄົນ ລະເຂດແດນ ແຕ່ນ້ອງຢ່ານ້ອຍໃຈເທາະ ອະນາຄົດ ອ້າຍ ຈະຄືນມາຫານ້ອງອີກ...

– ອ້າຍແນ່ໃຈແທ້ບໍ່ວ່າຄວາມສຸກໃນອະນາຄົດນັ້ນ ຈະ ຕົກເປັນສົມບັດຂອງເຮົາທັງສອງ ?

– ພິດ ! ນ້ອງບໍ່ຮູ້ວ່າໂລກເຮົານີ້ມັນກົມ.

– ມັນກົມ – ມັນກົມແຕ່ມັນກວ້າງອ້າຍເອີຍ ! ຍ້ອນ ມັນກວ້າງ ຈະເຮັດໃຫ້ວັນເວລາ ທີ່ອ້າຍໝູນວຽນມາຫາທີ່ ເກົ່ານັ້ນ ແກ່ຍາວ ເວລານັ້ນ ອ້າຍຈະຮູ້ບໍ່ວ່ານ້ອງຜູ້ຄອງຄອຍ ນີ້ ມັນທົນທຸກທໍລະມານຫົວໃຈຂະໜາດໃດ ?

– ທຳມະດາທີ່ສຸດນ້ອງ ! ຄວາມສຸກອັນລ້ຳຄ່າ ມັນລ້ວນແຕ່ກຳເນີດຈາກຄວາມທຸກຍາກລຳບາກ ແລະ ການເສຍສະຫລະທັງມວນ... ເອົາລະ ! ຍັງອີກ ໕ ນາທີອ້າຍຈະໄປສັ່ງລາຄະນະປະທ້ວງ ແລະ ຊຸມຜູ້ເຖົ້າຜູ້ແກ່ເພາະລິດລໍຖ້າ "ຂໍລາກ່ອນ"

ຂ້ອຍ ສຳ ພັດ ນີ້ ກັບ ອ້າຍສີຢ່າງໜ່ວງໜ່ຽວ, ອະນຸພາບແຫ່ງອາຍອຸ່ນທີ່ອົ້ງນີ້ ເກືອບຈະເຮັດໃຫ້ນ້ຳຕາຂອງພິດ ໄຫລ ອອກ ... ອ້າຍສີເປັນຊາຍຜູ້ທຳອິດໃນຊີວິດທີ່ພິດອະນຸຍາດນອກຈາກຜູ້ເປັນອ້າຍຮ່ວມອຸທອນ. ຕອນນີ້ຂ້ອຍຈະຂຽນໄວ້ພຽງທົ່ນີ້ກໍພໍແລ້ວ. ຂ້ອຍ ຈະ ບໍ່ ບັນ ລະ ຍາຍຄວາມຮູ້ສຶກຂອງຕົນອອກມາເກີນຂອບເຂດ. ຍ້ອນຫຍັງ ? ບັນທຶກເປັນເພື່ອນຂອງພິດບ່າ ! ເປັນເພື່ອນທີ່ດີຂອງພິດແຕ່ຈະເປັນໜ້າເຊື່ອບໍ່ວ່າ ເຮັດເພື່ອນນຳວັດຖຸທີ່ບໍ່ມີວິນຍານ. ວິນຍານຂອງມັນແມ່ນຂຶ້ນຢູ່ນຳພິດ ຄັນວິນຍານຫາກໜີຈາກພິດແລ້ວກໍໝາຍວ່າມັນຈະກາຍເປັນເພື່ອນຂອງທຸກໆຄົນທີ່ມາຄົ້ນພົບ.

ເອີ ! ຄັນຊັ້ນຈະເວົ້າຕອນອ້າຍສີປິດເອົາຫລຽນກາຈາກເອິກ (໑) ມອບໃຫ້ຂ້ອຍແລ້ວ ອວຍພອນໃຫ້ຂ້ອຍສຸກສະ

---

(1) ເຄື່ອງໝາຍສູງສົ່ງເຫລືອມຂອງແນວລາວຮັກຊາດ.

ຫວັດດີ, ຮ່ຳຮຽນໃຫ້ເກັ່ງ ແລະ ສືບຕໍ່ສ້າງແນວຄິດໃຫ້ເປັນຄົນຮັກຊາດຮັກຄວາມກ້າວໜ້າ... ເວລານັ້ນຂ້ອຍຄິດຮອດພາບແຜ່ນໜຶ່ງຢູ່ບ້ານເປັນຮູບດອກ "ຈຳປາແດງ" ຄູ່ໜຶ່ງສວຍງາມ, ເພື່ອເປັນການຕອບແທນກັນກະວ່າໃນໂອກາດບຸນປີໃໝ່ລາວທີ່ຈະມາເຖິງນີ້ ຂ້ອຍຈະຝາກໃຫ້ແກ່ອ້າຍສີ່, ຂ້ອຍຈະຂຽນວ່າ ຄັນອະນາຄົດຫາກບໍ່ມີຄວາມຫວັງແລ້ວ "ລູກກົກຂອງອ້າຍຈິ່ງຕັ້ງນາມອັນນີ້ໃຫ້ມັນໄດ້ບໍ່?".

ຂ້ອຍຂໍພາຍກະເປົາຊ່ວຍອ້າຍສີ ໃນເວລາເພິ່ນຍ່າງໄປຫາລົດຊຶ່ງຕຳຫລວດເປັນຜູ້ຂັບພວມລໍຖ້າຢູ່ແຄມປະຕູໂຂງ.

ອ້າຍສີ ! ໄປຮອດທ່າແຂກ ໃຫ້ອ້າຍໄປຢາມອ້າຍບົງ ແລະ ເອື້ອຍພາແດ່ເນີ ! ນັ້ນແມ່ນອ້າຍ ແລະ ເອື້ອຍໃພ້. ອ້າຍບົງຫາກໍ່ຖືກປ່ອຍຕົວມາຈາກວຽງ. ຕອນປະທ້ວງນັ້ນນ້ອງເປັນຫ່ວງເພິ່ນທີ່ສຸດ ເພາະພວກປະຕິການຖືເພິ່ນເປັນເປົ້າໝາຍທີ່ສຳຄັນ ໃຫ້ອ້າຍໄປອົບອຸ່ນເພິ່ນແດ່...

ກ່ອນຈະຂຶ້ນລົດ ອ້າຍສີ ຫລຽວເບິງໜ້າຂ້ອຍດ້ວຍສາຍຕາເສົ້າໂສກ. ຄຳເວົ້າປະໂຫຍກສຸດທ້າຍເປັນສຽງບາງໆ.

– ນ້ອງ ! ເມື່ອໃດປະເທດຊາດໄດ້ຮັບການປົດປ່ອຍສົມບູນແລ້ວເມື່ອນັ້ນອ້າຍຈະກັບຄືນມາ...

ລົດ "ສະກາວ" ຂອງຕຳຫລວດຄັນເກົ່ານັ້ນແລ່ນວູດອອກໄປທາງຫລວງແລ້ວ ມຸ່ງຫນ້າເຂົ້າສູ່ເມືອງທ່າແຂກ ທ່າມກາງແສງເດືອນຮູບກ່ຽວ ພວມກະຈາຍລົງມາທົ່ວພິພົບ

ສະໜາມຮົບທາງການເມືອງສ້ຽງສຸດລົງແລ້ວ, ຊາວເມືອງຜູ້ເຖົ້າຜູ້ແກ່ ແລະ ເດັກນ້ອຍ ພາກັນຟ້ອນພາກັນເຊີ້ງ ເພື່ອຊົມຊື່ນຕໍ່ໄຊຊະນະຂອງຕົນຢູ່ ກາງເດີ່ນຫຍ້າ.

ປູ່ທົ້ຫນອງບົກນີ້ຕໍ່ມາໄທເມືອງພາກັນຂ້າຄວາຍ, ຂ້າຫມູ ອຶກກະທຶກ ເພື່ອຈັດການກິນລ້ຽງໃຫຍ່ສະຫລອງໄຊ

ຊະນະ ແລະ ຈະດຳເນີນໄປສາມມື້ສາມຄືນ. ຄົນເກືອບທຸກ ໆ ບ້ານໃນທົ່ວເມືອງ ມາໂຮມກັນຢ່າງຄັບຄັ່ງທັງເວັນແລະ ຄືນ. ໔ກ ມື້ ໔ກ ຄືນ ແຫ່ງການຕໍ່ສູ້ທາງການເມືອງທີ່ເຕັມໄປດ້ວຍ ຄວາມທຸກຍາກລຳບາກ ແລະ ການເສຍສະຫລະ ຂອງຊາວເມືອງໄດ້ສິ້ງສຸດລົງແລ້ວ, ຊຸມຜູ້ເຖົ້າຜູ້ແກ່ຊາຍສະກັນ ພາກັນຍົກຈອກເຫລົ້າຕຳກັນ ແລະ ໂຊໂຍ...

ນັບແຕ່ມື້ນັ້ນມາ, ຂ້ອຍບໍ່ຄ່ອຍສະບາຍປານໃດ, ຍາມໃດກໍອິດເມື່ອຍ, ມັກເຈັບມັກໄຂ້ໂດຍສະເພາະແມ່ນມັກເປັນວິນ, ຈຳພວກລຸງ, ປ້າ ແລະ ຄະນະປະທ້ວງທຸກຄົນເຫັນດີໃຫ້ພິດໄປພະຍາບານຕົວຢູ່ທ່າແຂກ ກ່ອນຈະສືບຕໍ່ເຂົ້າໂຮງຮຽນ, ເວລານັ້ນພິດເຄີຍຕໍ່ສູ້ແນວຄິດສອງຢ່າງຄື "ໄປຫລືຢູ່" ແຕ່ຄິດໄປຄິດມາອັນຫນຶ່ງແມ່ນຊີວິດ ແລະ ອັນສອງແມ່ນການຮ່ຳຮຽນ ຄວນເລືອກເອົາອັນໃດກ່ອນ ?.

ຢູ່ໂຮງຫມໍທ່າແຂກ ຂ້ອຍໄດ້ຮັບການເບິ່ງແຍງ ແລະບົວລະບັດ ຈາກ ນາຍ ແພດ ນາງພະຍາບານເປັນຢ່າງດີ, ເຂົາໄດ້ກວດພະຍາດແລ້ວໃຫ້ກິນຢາ, ສັກຢາຫລາຍຢ່າງແລະ ຕິດຕາມຂ້ອຍທຸກວັນ ແລະ ຄືນ ຕາມການປົ່ງປົ້ນຂອງແພດໃນຫລາຍມື້ຕໍ່ມາວ່າ ຂ້ອຍບໍ່ມີເຊື້ອພະຍາດໄຂ້ປ່າ, ເປັນນຳ ເສັ້ນປະສາດອ່ອນເພຍ ຈຶ່ງພາໃຫ້ມັກເຈັບ

ປ່ວຍ. ຂ້ອຍບໍ່ປາກເຊື້ອປານໃດເພາະແພດເວົ້ານຳຄົນເຈັບຍາມໃດ ກໍເຕັມໄປດ້ວຍ ຄວາມເວົ້າບຸດທະສາດ. ນັບແຕ່ນີ້ເລີ້ມຕົ້ນນອນໂຮງຫມໍ ຂ້ອຍໄດ້ເລົ່າອາການເຈັບ ໃຫ້ພວກເພິ່ນຟັງລະອຽດ, ຄວາມຈິງ ພະຍາດຂອງຂ້ອຍ ເລີ້ມເຈັບຫລັງຈາກມື້ລຸງຊຽງຂຽນຖືກຍິງ, ອາດຈະເປັນນຳຄວັນລະເບີດມື້ນັ້ນບໍ? ຄວັນລະເບີດ ບາງເທື່ອມີອາຍພິດເຄມີ ກໍເປັນໄດ້, ຂ້ອຍຄິດໆ ແລະ ສົງໃສຢູ່ບໍ່ມີວັນລືມ.

ຂ້ອຍພະຍາບານຕົວຢູ່ໂຮງຫມໍສອງອາທິດ ຮູ້ສຶກວ່າໄດຫລາຍ ຈາກນັ້ນກໍໄດ້ຮັບອະນຸຍາດຈາກແພດໃຫ້ພັກຜ່ອນ ໑໕ ມື້, ຂ້ອຍສວຍໂອກາດໄປຢາມ ແລະ ຢູ່ນຳອ້າຍບົງ, ໃນເວລາຖາມຂ່າວ ສຸກທຸກເຖິງຊີວິດຂອງເພິ່ນໆ ກໍເວົ້າແຕ່ວ່າດີ, ອາດຈະແມ່ນເພິ່ນເອົາໃຈຂ້ອຍບໍ? ເພິ່ນໄດ້ເລົ່າເລື່ອງນັບແຕ່ມື້ຖືກຈັບຢູ່ພະແນກໂປທາ ຍາມເຮັດປະທ້ວງ ຕະຫລອດຍາມຕິດຄຸກ ຢູ່ສະຫວັນ ແລ້ວສົ່ງໄປວຽງຈັນຈົນມາຮອດມື້ຖືກປ່ອຍເປັນອິດສະຫລະແບບເພິ່ນໆທຳມະດາ, ຕອນນັ້ນພິດຮູ້ຂ່າວວ່າເພິ່ນພ້ອມເພື່ອນຮ່ວມງານ ໑໐ ກວ່າຄົນຖືກທໍລະມານ ແລະ ຂັງຄຸກມືດ. ເພິ່ນປະຕິເສດ, ແຕ່ອາດຈະແມ່ນຄວາມຈິງ ເພາະເພິ່ນຮັກຂ້ອຍຈຶ່ງບໍ່ເວົ້າ, ໃນຫນ້າເພິ່ນຫລ່າເຫລືອງ, ຈ່ອຍຜອມ, ຫນວດກໍ

ບາວ ແລະ ບໍ່ອ້ວນຄືແຕ່ກ່ອນ.

– ອ້າຍບົງ! ພວກອ້າຍ ຄ-ປ-ສ ໄດ້ມາປານບໍ?

ໃນຄາບເຂົ້າແລງນີ້ສຸດທ້າຍ ຂ້ອຍຕັດສິນໃຈຖາມອ້າຍ ແລະ ຕໍ່ໜ້າເອື້ອຍພາ, ພວກເພິ່ນເວົ້າວ່າ:

– ກະນາລະຕີ!

– ປານນີ້ພວກເພິ່ນຄົງປ່ວງງຈັບແລ້ວເນາະ?

– ບໍ, ພວກເພິ່ນສືບຕໍ່ໄປປັກຫລັກໝາຍຢູ່ແດນມະຫາໄຊພຸ້ນເດ!

ຮຸ່ງເຊົ້ານີ້ໃໝ່ໄດ້ວຽນມາ ຂ້ອຍຈາກເອື້ອຍອ້າຍກັບຄືນເມືອສູ່ຫນອງບົກ ແລະ ເຂົ້າໂຮງຮຽນ, ຂ້ອຍຂາດໂຮງຮຽນເປັນເດືອນ ສະນັ້ນຈຶ່ງເປັນການລຳບາກທີ່ຈະຕ້ອງທວນບົດຮຽນຄືນໃຫ້ທັນຫມູ່, ຍາມນັ້ນມັນເປັນເວລາໃກ້ຈະສອບເສັງປິດພາກຮຽນແລ້ວ, ຂ້ອຍຕ້ອງເບິ່ງບົດຮຽນຄືນໃດກໍ່ຈົນເດິກ ໑໒ ໂມງ ຫລື ໑ ໂມງຈຶ່ງນອນ. ບາງຄືນອິດເມື່ອຍຫລາຍ ຈົນຫລັງນອນຫລັບປະຕະກຽງນ້ອຍໄວ້ຫົວ ບ່ອນຊອດແຈ້ງ. ຍາມນັ້ນຄຶດໃສ່ແຕ່ຄຳເວົ້າອ້າຍສີເພິ່ນເວົ້າວ່າ, "ຄັນນ້ອງຫາກຄຶດຮອດອ້າຍ ຕ້ອງຮຽນໃຫ້ເກັ່ງ" ຄັນພິດຫາກຮຽນບໍ່ເກັ່ງແລ້ວ ໝາຍວ່າເພິ່ນຕ້ອງດີລາຄາພິດເປັນຄົນບໍ່ມີຄວາມຈິງ... ຍາມນັ້ນພິດຮູ້ສຶກເມື່ອຍ, ໜັກສະ

ຫນອງ, ແລະຈ່ອຍລົງອີກ ແຕ່ກໍຕ້ອງອົດທົນຜ່ານຜ່າຄວາມຫຍຸ້ງຍາກລຳບາກເພື່ອໄປສູ່ຄວາມສຸກ, ນີ້ສຸດທ້າຍພາຍຫລັງພິທີສອບເສັງສິ້ນສຸດລົງ ພິດໄດ້ລຽງລາຍຊື່ຢູ່ລຳດັບ ໑ ແລະ ໄດ້ຮັບໃບຍ້ອງຍໍ ຂອງຄະນະອຳນວຍການໂຮງຮຽນມັດທະຍົມຕົ້ນອີກ.

ພັກແລ້ວ ຂ້ອຍຂຽນຫນັງສືໄປຢາມອ້າຍສີຢູ່ວຽງຈັນ, ເມື່ອຮູ້ຂ່າວນີ້ເພິ່ນຕອບຈົດຫມາຍ ແລະ ສັນລະເສີນຂ້ອຍ. ປີຕໍ່ມາຂ້ອຍຄິດວ່າຈະອອກຈາກບ້ານເກີດເມືອງນອນແລ້ວໄປສຶກສາຕໍ່ທີ່ເຂດປົດປ່ອຍ ໂດຍສະເພາະແມ່ນອ້າຍເອື້ອຍໃຜໆກໍເຫັນດີໃຫ້ໄປເມືອງວຽງໄຊ ແຕ່ສຳຫລັບອ້າຍສີແລ້ວພັດມີຄຳເຫັນຕ່າງ, ເພິ່ນວ່າບໍ່ຈຳເປັນ, ອີກບໍ່ດົນພວກເຮົາຈະຢຶດອຳນາດທົ່ວປະເທດດອກ, ເວລານັ້ນຢູ່ແຫ່ງໃດກໍຈະເປັນໂຮງຮຽນປະຕິວັດ ອັນນີ້ອາດຈະເປັນຄວາມຈິງ.

ອີກອັນຫນຶ່ງຍາມນັ້ນພິດຮູ້ຂ່າວອ້າຍສີລະອຽດ, ເພິ່ນຕອບສະຫນອງພິດ ແລະ ຢຶດຫມັ້ນຕໍ່ຄຳປະຕິຍານເພິ່ນໄດ້ເຮັດວຽກຂຸ້ນຂ້ຽວທັງເວັນ ແລະ ຄືນ, ບາງມື້ກໍອົດຫລັບອົດນອນ, ບາງມື້ໄປວຽກນອກກໍໄດ້ຍ່າງ, ບາງຕອນລໍຖ້າເອົາຂ່າວຈົນທ້ອງແຫ້ງ, ເພິ່ນກໍຈ່ອຍ ແລະ ອິດເມື່ອຍຮູ້ຂ່າວນີ້ພິດແຫ່ງອິດູດົນອ້າຍສີຍິ່ງຂຶ້ນ.

ວັນເວລາໄດ້ຜ່ານພົ້ນໄປບໍ່ພໍເທົ່າໃດເດືອນຕໍ່ມາ, ປະຊາຊົນທົ່ວແຂວງຄຳມ່ວນໄດ້ລຸກຮືຂຶ້ນປົດອຳນາດ ແລະ ໂຄ່ນລົ້ມລະບອບເກົ່າລົງແລ້ວ ຈັດຕັ້ງອຳນາດການປົກຄອງປະຕິວັດຂຶ້ນແທນ, ຂ່າວວ່າປູ່ທ່າແຂກມີການຈັດຕັ້ງງານໂຮມຊຸມນຸມໃຫຍ່ເພື່ອສະແດງກຳລັງ ແລະ ປະກາດຕົວຈະເດີນຕາມເສັ້ນທາງສັນຕິພາບ, ເອກະລາດ ປະຊາທິປະໄຕຈາກນັ້ນ ກໍໄດ້ດຳເນີນການປ່ອນບັດຄັດເລືອກ ອຳນາດການປົກຄອງໃໝ່. ເວລານັ້ນ ພິດໄດ້ຈາກບ້ານເກີດເມືອງນອນໄປຢູ່ເຂດປົດປ່ອຍແລ້ວ... ພິດຮູ້ສຶກເສຍໃຈ ແລະ ກິນແຫນງທີ່ສຸດທີ່ບໍ່ຟັງຄວາມອ້າຍສີບອກ. ພິດໃຈຮ້ອນໂພດແທນທີ່ຈະໄປເມືອງວຽງໄຊພັດໄປຮຽນຢູ່ເມືອງມະຫາໄຊ(ແຂວງຄຳມ່ວນ) ຄັນບໍ່ດັ່ງນັ້ນຢ່າງໜ້ອຍ ພິດຕ້ອງໄດ້ປະກອບສ່ວນສ້າງຜົນງານຕື່ມອີກໃນການປົດອຳນາດຂອງນັ້ນທ້າຍອີກບໍ່ໜ້ຳ ເວລາຈາກມາກໍບໍ່ໄດ້ຂຽນຈົດໝາຍໃຫ້ອ້າຍສີຮູ້ຂ່າວຊ້ຳ ຈັກເພິ່ນຊິຄິດແນວໃດນໍ ? ຢ່າງໃດກໍຕາມໄດ້ຕັດສິນໃຈແລ້ວ ຄິດໃສ່ຄຳເວົ້າຂອງອ້າຍເອື້ອຍບານນັ້ນ ແຕ່ພວກເພິ່ນວ່າຄັນແມ່ນຢູ່ເຂດປົດປ່ອຍແລ້ວ ຢູ່ບ່ອນໃດກໍມີໂອກາດໄດ້ຝຶກຝົນຫລໍ່ຫລອມຕົນເອງດີກວ່າຢູ່ພີ້... ອີກອັນໜຶ່ງ ເວລາຮຽນຢູ່ຫນອງບົກກໍຫຍຸ້ງຍາກຫລາຍ ເພາະ

ພິດຕ້ອງລະມັດລະວັງ ຕາມຄະນະປະທ້ວງບອກວ່າພິດກໍ ເປັນເປົ້າຫມາຍແຫ່ງສາຍຕາຂອງພວກປະຕິການ.

ເວລາໄດ້ລ່ວງກາຍໄປໂດຍບໍ່ມີບ່ອນຈັ້ງຈອດ, ຫມິດມື້ນີ້ ແລ້ວຕໍ່ໃສ່ມື້ອື່ນ ພິດດຳລົງຊີວິດຢູ່ໂຮງຮຽນມັດທະຍົມ ປີທີ ສາມ ທີ່ເມືອງນະຫາໄຊ ດ້ວຍຄວາມສະຫວັດດີພາບ, ພິດ ໄດ້ຮັບການເອົາໃຈໃສ່ເບິ່ງແຍງຈາກການຈັດຕັ້ງເປັນຢ່າງດີ ໂດຍສະເພາະແມ່ນການຮ່ຳຮຽນ, ກິນນອນ, ນຸ່ງຖື, ໄປມາບໍ່ ມີສິ່ງໃດຈະຂັດຂ້ອງ. ເຖິງແມ່ນໂຮງຮຽນ ຈະຕັ້ງຢູ່ໃນປ່າກໍ ຕາມ ພິດຮູ້ສຶກມ່ວນຊື່ນ ແລະ ໄດ້ຮັບຄວາມອົບອຸ່ນເຫມືອນ ຢູ່ໃນອ້ອມອົກຂອງຜູ້ເປັນແມ່ໃນອະດີດຕະການ ໂອ ! ພູຜາ ປ່າໄມ້ໃນລະດູຫນາວຈັ່ງແມ່ນອອນຊອນແທ້ນໍ! ລະດູໜາວ ເປັນລະດູໃບໄມ້ຫລົ່ນແລ້ວກໍເລີ່ມແຕກດອກອອກໃບ ຊຶ່ງປ່າ ໄມ້ແຕ່ລະຊະນິດມີຫລາຍສີສັນຕ່າງກັນ. ຍາມເຊົ້າເມື່ອ ດວງຕາເວັນເລີ່ມຂຶ້ນທ້ອງຟ້າເປັນປ່ອງສີຄາມ, ຫລືບນ້ຳ ຫມອກບາງໆຄ່ອຍເລື່ອນໄຫລກ້ຽວເປິ້ນພູ ເປັນສາຍເປັນ ໂງ່ນຄືບອງຝ້າຍ ແລ້ວປິວເມືອສູ່ເວຫາອັນສູງລິ່ວ. ຍາມ ເມື່ອອຸນຫະພູມເພີ່ມທະວີ, ຢູ່ໃນປ່າມີດອກເຜິ້ງ, ດອກຈິກ. ດອກຮັງ, ດອກທອງ ແລະ ດອກໄມ້ປ່າ ຫລາຍຊະນິດ ແຂວນງ່າໄມ້ໂຕ້ນເຕັ້ນ ປ່ອນລົງເປັນພວງ ຢ່າງສວຍງາມ

ແລະ ຫອມຫວນ. ແມງພູ່ ເຜິ້ງສົ່ງສຽງຮ້ອງອູ່ ໆ ເປັນໝູ່ ບິນຕອມເກສອນ ແລະ ກີບດອກ ເປັນເມັດນ້ອຍໆ ຊຸຫລົ່ນ ຖະຫລາລົງໃສ່ເດີ່ນຫນ້າບ້ານ ແລະ ຫລັງຄາໂຮງຮຽນຈົນ ເປັນເປັນສີຫມົ່ນ. ຫມູ່ນົກນ້ອຍໄລ່ປອກກັນປູ່ເທິງປາຍສູງ ຈໍແຈເບື້ອງບັນໄປທົ່ວປ່າ, ຂ້ອຍກັບອີພູວີ ແລະ ຫລານ ສາວມຸບທາມັກເກາະແຂນກັນໄປທົ່ງປ່າ ຍາມແລງຫລື ວັນອາທິດ, ເວລານັ້ນພູວີມັກເວົ້າເລື່ອງຕອນປະທ້ວງ, ເວົ້າ ໄປເວົ້າມາ ພັດກ້ຽວໃສ່ເລື່ອງອ້າຍສີ. ມີບາງຄັ້ງຂ້ອຍຮູ້ສຶກ ຄິດຮອດ ບ້ານເກີດເມືອງນອນ. ຄິດຮອດພໍ່ແມ່, ຄິດຮອດ ເພື່ອນຝູງ ປູ່ຫນອງບົກ ແລະ ບາງຄັ້ງ ກໍຄິດຮອດອ້າຍສີ ປູ່ວຽງຈັນ.

ເກືອບຫນຶ່ງປີ ທີ່ພິດຈາກບ້ານ ໄປຮຽນປູ່ເມືອງມະຫາ ໄຊ ຕະຫລອດໄລຍະດັ່ງກ່າວ ພິດບໍ່ມີໂອກາດໄດ້ເມືອປາມ ບ້ານ ແລະ ບໍ່ຮູ້ຂ່າວອ້າຍສີຈັກເມັດເລີຍ, ວັນເວລາຜ່ານ ໄປ ອາຍຸຂອງພິດກໍເພີ່ມຂຶ້ນ ຫມາຍວ່າພິດຕ້ອງເປັນສາວ ອ່າວໃຫຍ່ແດ່ແລ້ວ. ຊຸມຜູ້ຊາຍມັກໂອ້ລົມ ແລະ ສຽດສີພິດ ດ້ວຍຮູບການຕ່າງໆນາໆສາລະພັດ. ແຕ່ ພິດ ຄິດ ວ່າ ນັ້ນ ມັນເປັນເລື່ອງທຳມະດາຂອງສັງຄົມ ແລະ ຊີວິດ.

ມື້ຫນຶ່ງ ມີຄຳສັ່ງວ່າໃຫ້ນັກຮຽນຈຳນວນຫນຶ່ງ ໄປ ທ່າ

ແຂກເພື່ອຮັບເຄື່ອງ (ຂົນເຄື່ອງຂຶ້ນລົດ) ພິດດີໃຈຣູ່ມງຢູ່ຄົນດຽວ ໃນນັ້ນແນ່ນອນລະຕ້ອງມີ ຊື່ພິດສະໃໝ່ຜູ້ຫນຶ່ງແຕ່ແລ້ວເມື່ອແບ່ງປັນ ພິດພັດຖືກຢູ່ໄປແບກໄມ້ມາຕັ້ງເຮືອນຄົວໝາຍວ່າພິດຕ້ອງຜິດຫວັງ, ທ່ຳອິດຄິດວ່າຈະຕັດສິນໃຈໄປຂໍນຳອ້າຍຄູໄປທ່າແຂກ ເຫດຜົນວ່າຈະສວຍໂອກາດແວ່ປາມອ້າຍເອື້ອຍແຕ່ສິ່ງສຳຄັນ ຄັນຫາກຕົກທ່າແຂກແລ້ວບາງເທື່ອຈະໄດ້ຮັບຈົດໝາຍຂອງອ້າຍສີ ແລະ ຈະຂາດເວລາຂຽນຈົດຫມາຍ ໃຫ້ເພິ່ນຮູ້ສະພາບ ຂອງ ພິດ, ພາຍຫລັງທີ່ຕໍ່ສູ້ແນວຄິດຢູ່ເປັນເວລານານ ແລະ ຄິດໃສ່ຄຳເວົ້າຂອງອ້າຍສີ ມື້ນັ້ນ, ເພິ່ນເວົ້າວ່າຍາມໃດກໍຕ້ອງຖືວຽກງານສ່ວນລວມຢູ່ລະດັບຫນຶ່ງຈາກນັ້ນຈຶ່ງແມ່ນ "ສ່ວນຕົວ" ເພິ່ນຍັງເວົ້າຫລາຍສິ່ງຫລາຍຢ່າງບໍ່ໃຫ້ເປັນຫ່ວງວ່າຄົນລະບອບໃຫມ່ບໍ່ແມ່ນຈະໃຈນ້ອຍ, ຍາມໃດ "ໝາກຫົວໃຈຍັງເຕັ້ນ" ຍາມນັ້ນແມ່ນຍັງສັດຊື່ຕໍ່ຄຳຫມັ້ນສັນຍາຫາລະອຸ່ນອຽນເຣັດວຽກ ແລະ ຮ່ຳຮຽນ, ສະນັ້ນພິດຕ້ອງຢູ່ເຮືອນໄປຂົນໄມ້.

ຄວາມຈິງ ສຸກຂະພາບຂອງພິດບໍ່ຄ່ອຍສະບາຍປານໃດ, ນັບແຕ່ມື້ຈາກບ້ານເກີດເມືອງນອນໄປຢູ່ເມືອງມະຫາໄຊກໍມັກເປັນວິນ, ເຫື່ອໃດເປັນແຮງໄຂ້ພ້ອມຈົນສະຫລົບ,

ມີຫລາຍເທື່ອເຈັບເປັນເລັກໆ ນ້ອຍໆ ພິດບໍ່ສູ່ເວົ້າໃຫ້ໃຜຮູ້ ເພາະປ້ານບໍ່ໄດ້ພົບງານ. ມື້ນັ້ນກໍ່ເປັນມື້ທີ່ພິດເຈັບອີກແຕ່ ພິດກໍ່ຕ້ອງໄປ. ຄັນອ້າຍສີຫາກຮູ້ສະພາບລະອຽດແນ່ນອນ ຫລາຍຢ່າງ ເພີ່ນຕ້ອງສັນລະເສີນ ແລະ ກໍ່ມີບາງຢ່າງເພີ່ນ ຕ້ອງຕຳນິຕິຕຽນ. ຕົວຈິງທຸກໆອາທິດ ພິດຕ້ອງຖືກເລືອກ ເປັນຕົວແບ້ນ ຄັນບໍ່ແມ່ນ ປະເພດຫນຶ່ງ ກໍ່ແມ່ນ ປະເພດ ສອງ ຫລື ສາມ. ເວລາສະຫລຸບຄະແນນປະຈຳເດືອນ ກໍ່ ຄືກັນ ມີແຕ່ຫນຶ່ງລົງມາຫາທີສາມ.

ກ້າວເຂົ້າສູ່ບັ້ນສອບເສັງປິດພາກຮຽນກໍ່ຕ້ອງເອົາໃຈໃສ່ ຄົ້ນຄ້ວາຮ່ຳຮຽນຢ່າງບໍ່ອ່ອນແຕ້ນ, ພາຍຫລັງພິທີສອບ ເສັງສິ້ນສຸດລົງ ພິດກໍ່ໄດ້ເປັນທີ່ຫນຶ່ງ ແລະ ໄດ້ຮັບໃບຍ້ອງ ຍໍຄຸນງາມ ຄວາມດີ ຂອງຄະນະປົກຄອງເມືອງມະຫາໄຊ ອີກ.

ຫລັງຈາກຈັດງານລ້ຽງ ປິດພາກຮຽນບໍ່ພໍເທົ່າໃດມື້, ນັກຮຽນໃນໂຮງຮຽນກິນນອນພວກຂ້ອຍໄດ້ຮັບອະນຸຍາດ ໃຫ້ ເມືອຢາມບ້ານເປັນເວລາສອງອາທິດ. ຂ້ອຍ, ພູວິ ແລະ ຫລານສາວມຸນທາພ້ອມກັນຂຶ້ນລົດ ແລ້ວມຸ່ງຫນ້າເຂົ້າສູ່ ເມືອງທ່າແຂກ ມື້ນັ້ນທ້ອງຟ້າເມືອງທ່າແຂກຜ່ອງໃສຂຽວ ງາມ ທີ່ປາສະຈາກ ເມກ ເຝື້ອ, ສາຍລົມ ຂອງທ້າຍລະດູ

ໜາວພັດມາເບົາໆ ເຮັດໃຫ້ກ້ານພ້າວງ່າມ່ວງເປື້ອງປົ່ນໂອນເອນໄປມາ. ບັນດາດົ໊ບດອກຈຳປາ, ດອກເຈ້ຍ, ດອກຮັກ ແລະ ອື່ນໆປູ່ໜ້າບ້ານຫລືແຄມທາງຫລວງພວມຈູມດອກ ແລະ ພ່ອງກໍເບັ່ງບານ ແນງກະເບື້ອງຈຸສອງສາມໂຕບິນຕອມເຈີດເຈີ້ຍເປັນໜ້າອອນຊອນແທ້! ໜຶ່ງປີປາຍ ທີ່ພິດໄດ້ພັດພາກຈາກດິນແດນແຫ່ງ ເມືອງ ທ່າແຂກ ເພື່ອໄປສຶກສາຮ່ຳຮຽນເອົາວິຊາຄວາມຮູ້, ຕະຫລອດໄລຍະດັ່ງກ່າວ ພິດບໍ່ມີໂອກາດໄດ້ກັບຕ່າວຄືນມາ, ຈົນມາເຖິງມື້ນີ້ ພິດຈຶ່ງໄດ້ເຫັນ ພາບປະທັບຕາເຫລົ່ານັ້ນ ມີອັນປ່ຽນແປງ ຈົນເກືອບຈຳຄວາມຫລັງບໍ່ໄດ້. ກ່ອນຈະໄປສູ່ບ້ານດອນຂຽວເໜືອເພື່ອປານພໍ່ແມ່ ຂ້ອຍຕ້ອງແວ່ເຮືອນອ້າຍບົງກ່ອນ, ເວລານັ້ນຕົວເມືອງທ່າແຂກໄດ້ປົກຄຸມໄປດ້ວຍບັນຍາກາດ ແຫ່ງຄວາມມ່ວນຊື່ນ ລື່ນເລີງ ຊຶ່ງຊາວເມືອງພວມເປີດບັ້ນຣົບ ເຮັດອະນາໄມທຳຄວາມສະອາດ, ປົວແປງເຮືອນຊານບ້ານຊ່ອງທີ່ເປ່ເພ, ຊຸມບ່າວສາວພາກັນປູກດົ໊ບດອກໄມ້ປະດັບຄວາມງາມແລະທັດແອບໜ່ວຍສີລະປະວັນນະຄະດີ, ໄປບ່ອນໃດ ກໍໄດ້ຍິນແຕ່ ສຽງດົນຕີ. ສຽງເພງ ແລະ ສຽງຂັບລຳຂອງພວກອ້າຍບ່າວນາງສາວ, ໂອ! ຊາວເມືອງພວມສ້າງຊີວິດໃໝ່... ມັນຊ່າງຕ່າງກັນ

ກັບເວລານັ້ນ (ກ່ອນການປົດອຳນາດ) ຊຶ່ງທ່ານແຂກຍານນັ້ນລ້ວນແຕ່ຕົກຢູ່ໃນຄວາມເສົ້າຫມອງ ແລະ ຄວາມແຈບຈົມ.

ຂ້ອຍພັກຢູ່ເຮືອນເອື້ອຍອ້າຍທີ່ທ່ານແຂກສາມສີ ນີ້ແລ້ວຈຶ່ງຂຶ້ນລົດສືບຕໍ່ເດີນທາງໄປ ບ້ານ, ຂ້ອຍຕ່າງປະຫລາດແທ້ໆ ໄປບ່ອນໃດຍາດຕິພີ່ນ້ອງ, ໄທບ້ານ ແລະ ຄອບຄົວໃຜໆ ກໍ່ເວົ້າວ່າ ພົດໃຫຍ່ສູງກ່ວາເກົ່າຫລາຍເນື້ອຫນັງຂາວແດງຄືຝະລັ່ງ, ອ້ວນພີສີກ້ຽງ ແລະ ສວຽງາມກ່ວາເກົ່າຫລາຍວ່າຊັ້ນ, ພົດຮູ້ສຶກລະອາຍ ເພາະຢູ່ໂຮງຮຽນຊຸມຜູ້ບ່າວນ້ອຍກໍ່ມັກເອີ້ນພົດວ່າ " ຂວັນໃຈມະຫາໄຊ " ຕົວຈິງເກືອບສອງປີທີ່ຈາກອ້າຍສີ ແລະ ຫນຶ່ງປີປາຍສາມເດືອນທີ່ພັດພາກຈາກບ້ານເກີດເມືອງນອນ ພົດໄດ້ຄ່ຽງເຕີບໃຫຍ່ຂຶ້ນຢູ່ເຂດປົດປ່ຽເກົ່າເມືອງມະຫາໄຊທັງກາຍ ແລະ ໃຫຍ່ຂຶ້ນທັງຄວາມຮັບຮູ້ດ້ານຕ່າງໆ ຈາກການສຶກສາຮ່ຳຮຽນ. ດຽວນີ້ ພົດຕ້ອງຮູ້ຈັກເສັ້ນທາງເດີນຂອງການປະຕິວັດ, ຮູ້ຈັກບຸນຄຸນຂອງພັກ, ຂ້ອຍໄດ້ເລົ່າເລື່ອງທຸກສິ່ງທຸກຢ່າງສູ່ພໍ່ແມ່ ແລະ ອ້າຍເອື້ອຍຟັງ ເປັນຕົ້ນແມ່ນການສຶກສາຮ່ຳຮຽນ. ກິນຢູ່, ນຸ່ງຖື, ໄປມາແລະຄວາມກ້າວຫນ້າຊຶ່ງພົດໄດ້ເຂົ້າເປັນສະມາຊິກຂອງຊາວຫນຸ່ມ" ລາວຮັກຊາດ "ແລ້ວ,

ໃນ ພາກ ຮຽນ ທີ່ສອງ ພິດ ກໍ່ ໄດ້ ຮັບ ເລືອກ ເປັນ ຄະ ນະ ຫນ່ວຍຊາວຫນຸ່ມໂດຍແມ່ນຕົວແທນຂອງ ເພດ ຍິງ. ພີ່ນ້ອງແລະໄທບ້ານໃຜກໍໄປຢື້ປາມຖາມຂ່າວ, ຂ້ອຍກໍເລົ່າເລື່ອງສູ່ຟັງໃຜໆກໍສັນລະເສີນ ແລະມ່ວນຊື່ນນຳຂ້ອຍ.

ໃນເວລາພັກຢູ່ບ້ານ ຂ້ອຍໄດ້ຮັບຈົດຫມາຍຂອງອ້າຍສີສົງມາແຕ່ຕົ້ນປີກາຍ ຊຶ່ງແມ່ນແມ່ເປັນຜູ້ຮັກສາໄວ້ໃຫ້ນາມພິດບໍ່ຢູ່, ພິດຟ້າວແລ່ນໄປຈົກຊອງຈົດຫມາຍ ທີ່ຍັງອັດແຈບຢູ່ໃນສ້ວມພຽງຄືນດຽວ. ເນື້ອໃນເພິ່ນໄດ້ເລົ່າສະພາບວຽງຈັນສູ່ຟັງລະອຽດ, ເທື່ອນີ້ເພິ່ນເວົ້າການເມືອງຫລາຍ, ໂດຍສະເພາະແມ່ນ ການສ້າງສາປະເທດຊາດກ້າວຂຶ້ນສູ່ລັດທິສັງຄົມນິຍົມ ຊຶ່ງເສັ້ນທາງດັ່ງກ່າວ ລ້ວນແຕ່ຫຍຸ້ງຍາກລຳບາກ ແລະ ເຕັມໄປດ້ວຍການເສຍສະຫລະ.

ຂ້ອຍຮູ້ສຶກພາກພູມໃຈ ໃນເມື່ອເຫັນຮູບເພິ່ນອ້ວນພີກວ່າເກົ່າ ແລະ ຮູ້ຂ່າວວ່າເພິ່ນໄດ້ຈາກວຽກງານຂ່າວສານປະເທດລາວມາຮຽນບົດຕ່າງ ໆ ສະເພາະໃຫ້ຫນັງສືພິມ "ສຽງປະຊາຊົນ" ແຕ່ຂ້ອຍນ້ອຍໃຈ ດຽວນີ້ຈັກວ່າເພິ່ນຍັງຢູ່ວຽງຈັນຫລືບໍ່? ເວລາກັບຄືນທ່າແຂກຂ້ອຍຟ້າວໄປຖ່າຍຮູບ ແລະ ຝາກຈົດຫມາຍເມືອວຽງຈັນດ່ວນ. ຂ້ອຍໄດ້ຖາມຂ່າວເຖິງພວກອ້າຍແຈ້ງ ໄຊຍະວົງ, ອ້າຍເພັດສະຫນອນ

(ອະດີດ ຄ.ປ.ສ)ແລະຜູ້ອື່ນໆແຕ່ບໍ່ເຫັນເພິ່ນຕອບມາເລີຍ. ເວລານັ້ນອາການເຈັບຂອງພິດພັດກໍາເລີບຂຶ້ນອີກ ເທື່ອນີ້ ຮູ້ສຶກວ່າເຈັບແຮງກວ່າທຸກໆເທື່ອ ຈົນໄດ້ນອນໂຮງຫມໍເປັນ ເວລານານ. ຍາມຢູ່ໂຮງຫມໍແຕ່ລະມື້ມີຫມູ່ເພື່ອນ, ຍາດ ຕີພີ່ນ້ອງ, ອ້າຍຄູໃພງກໍ່ໄປຢາມ ແລະ ມີຂອງຕ້ອນໄປໃຫ້ ພ້ອມ ແຕ່ພະຍາດຂອງພິດຄືບໍ່ເຫັນມັນດີຂຶ້ນ. ທຸກວັນ ແລະ ຄືນ ຂ້ອຍຄິດຮອດ ແລະ ຫ່ວງຫາອ້າຍສີແຮງເພາະ ເພິ່ນບໍ່ທັນຕອບ ຈົດຫມາຍ, ອີກບໍ່ດົນກໍຈະໄດ້ກັບຄືນສູ່ ເມືອງມະຫາໄຊແລ້ວ. ສອງສາມມື້ຕໍ່ມາ ຂ້ອຍໄດ້ຮັບອະນຸ ຍາດໃຫ້ເຂົ້າໄປຫ້ອງກວດພະຍາດຕາມເວລານັດ ແຕ່ວ່າ ບໍ່ເຫັນອ້າຍແພດນັ່ງຢູ່ໃນຫ້ອງ. ເວລານັ້ນຢູ່ເທິງໂຕະມີປຶ້ມ ຂຽນຫົວຫນຶ່ງໄຂໄວ້, ມີຕອນຫນຶ່ງຂຽນວ່າ : " ໄດ້ຊອກເຫັນ ເຊື້ອພະຍາດຊະນິດຫນຶ່ງ ຢູ່ໃນຮ່າງກາຍຂອງພິດສະໄຫມ. ເຊື້ອພະຍາດນັ້ນ ອາດຈະແມ່ນກໍາເນີດມາຈາກລະເບີດເຄ ມີ..." ພິດຕົກໃຈວູບບາດຫນຶ່ງແລ້ວນໍ້າຕາກໍເລີ່ມຕົ້ນໄຫລ ນ້ອຍນອງແກ້ມ. ຂ້ອຍຮ້ອງໄຫ້ສະອື້ນແຮງຂຶ້ນທຸກວິນາທີ, ຂ້ອຍຄິດໆ ສົມມຸດວ່າ ຫາກຈາກໂລກນີ້ໄປ ພິດຮູ້ສຶກກົບ ແຫນງ ແລະ ເສຍດາຍທີ່ຄວາມຫວັງບໍ່ເປັນໄປຕາມການ ກະຕວງໄວ້, ເມື່ອນັ້ນອ້າຍສີຈະເປັນແນວໃດ ? ນໍ້າຕາເພິ່ນ

ຈະໄຫລລືນລົງບໍ່? ອະນາຄົດຂອງເພິ່ນ... ບາດວີພີ່ນ້ອງ, ພໍ່ແມ່ປູ່ທາງບ້ານເດ! ປະເທດຊາດທີ່ແສນຮັກຈະເປັນແນວໃດ? ຂ້ອຍບໍ່ທັນປາກຕາຍ, ບໍ່ປາກຕາຍກ່ອນນີ້ປະເທດຊາດບໍ່ທັນໄດ້ຮັບການສ້າງສາ ແລະ ກ່ອນນີ້ອ້າຍສິຈະລົງມາ...

ພວກອ້າຍແພດໄດ້ມາລະດົມໃຈຂ້ອຍວ່າ ຈະພະຍາບານປິ່ນປົວໃຫ້ດີ ແລະ ບໍ່ຕ້ອງຕົກໃຈ.

ຕອນຫົວຄ່ຳຂອງມື້ນັ້ນ ຫລັງຈາກສັກຢາສອງເຂັມປູ່ຫ້ອງນອນ, ເອື້ອຍແພດຜູ້ຫນຶ່ງເອົາຈົດຫມາຍມາຍື່ນໃຫ້ຂ້ອຍແສນດີໃຈຫາສິ່ງປຽບບໍ່ໄດ້ໃນເມື່ອຮູ້ວ່າເປັນຂອງອ້າຍສີ, ເວລານັ້ນພົດຮູ້ສຶກມີແຮງແດ່ເລັກນ້ອຍ ແລະ ກິນເຂົ້າກໍແຊບ. ຈົດຫມາຍວັງກ່າວເພິ່ນຂຽນວ່າຍັງຮັກຂ້ອຍ, ຈະສືບຕໍ່ຮັກຂ້ອຍ ແລະ ສືບຕໍ່ສ້າງຜົນງານ, ສ້າງຕົວເອງເພື່ອອະນາຄົດຂອງປະເທດຊາດ ກໍຄືຄວາມສຸກຂອງພວກເຮົາທັງສອງ...

ຂ້ອຍນັ່ງອ່ານ ບັນ ທຶກ ປູ່ຕຽງນອນຈົນເມື່ອຍ, ເອື້ອຍເພິ່ນ ຈຶ່ງເຂົ້າໄປເອີ້ນຂ້ອຍອອກມາກິນເຂົ້າ, ສອງເອື້ອຍນ້ອງພາກັນນັ່ງອ້ອມພາເຂົ້າທີ່ມີແກງໄກ່ ແລະ ແຈ່ວບອງເພິ່ນທັງຄີບຕ່ອນໄກ່ ແລະ ໄລ່ແນງວັນໃຫ້ຂ້ອຍບຶດຫນຶ່ງ

ຈຶ່ງເວົ້າວ່າ:

– ຄຳສີ! ໄປຢາມພິດສະໄຫມແດ່ເນີ! ເພິ່ນເກັບດູກໄວ້ປູ່ທີ່ວັດບາໄບ (ທ່າແຂກ)... ບາງພູວົກໍເສຍຊີວິດແລ້ວໃນລັກສະນະດຽວກັບນ້ອງສາວຂອງເຮົາ...

ນ້ຳຕາແຫ່ງຄວາມຂົມຂື່ນຂອງເອື້ອຍເພິ່ນຈຶ່ງໄດ້ຫລັ່ງລົງມາອາບແກ້ມອີກເທື່ອໜຶ່ງ.

ພິມທີ່ ໂຮງພິມແຫ່ງຊາດ
ພິມຈຳນວນ 10.000 ຫົວ ຂະໜາດ 13×18,4
ພິມແລ້ວ ວັນທີ 30-9 79

ລາຄາ 150 ກີບ